ລ້າງເລືອດດ້ວຍເລືອດ

ບັນທຶກຊີວິດ ເຈ ເກວາຣາ

ບຸນທະນອງ ຊົມໄຊຜົນ

ບຸນທະນອງ ຊົມໄຊພົນ

ບົນຖະໜົນວັນນະຄະດີທີ່ໄດ້ເດີນທາງມາເປັນເວລາກວ່າ 50 ປີ ທ່ານ ບຸນທະນອງ ຊົມໄຊພົນ ມີຜົນງານການຂຽນ ລວມເປັນປຶ້ມແລ້ວ 15 ເຫລັ້ມໃນນັ້ນມີທັງເລື່ອງສັ້ນ, ບົດກະວີແລະນະວະນິຍາຍຫລາຍບົດຫລາຍເລື່ອງທີ່ຖືກນຳໄປແປເປັນພາສາໄທ, ຍີ່ປຸ່ນ, ຝລັ່ງແລະອັງກິດ.

ນອກຈາກການຂີດຂຽນແລ້ວ ທ່ານ ບຸນທະນອງ ຊົມໄຊພົນ ຍັງມີຜົນງານຢ່າງໃຫຍ່ຫລວງໃນວົງການໜັງສືພິມ ຄື ທ່ານໄດ້ປະກອບສ່ວນສຳຄັນໃນການກໍ່ຕັ້ງ "ສະໂມສອນນັກຂຽນໜຸ່ມ" "ສະມາຄົມນັກປະພັນລາວ" ກໍ່ສ້າງໜັງສືພິມ "ແມ່ຍິງລາວ" "ໜຸ່ມນະຄອນຫລວງ" "ໄວໜຸ່ມ" "ໜຸ່ມລາວ" "ວັນນະສິນ" "ສຽງແຄນ" "ວຽງຈັນທຸລະກິດສັງຄົມ" "ຫລວງເມືອງລາວ"...

"ດ້ວຍສະໝອງແລະສອງມື ຊຶ່ງຟ້າດິນປະທານໃຫ້ມາ ຂ້າພະເຈົ້າຫາຄວາມສຸກໄດ້ດ້ວຍການອ່ານ, ການຂຽນ, ການເດີນທາງໃນແຕ່ລະວັນແລະມີຄວາມມຸ່ງຫວັງຕັ້ງໝັ້ນອັນດຽວໃນຊີວິດຄື ໄດ້ບັນທຶກເລື່ອງລາວປະກອບສ່ວນທາງຄວາມຄິດປັນຍາໃຫ້ກັບສັງຄົມໃຫ້ກັບເພື່ອນມະນຸດ" ນັ້ນຄືອຸດົມຄະຕິໃນການດຳລົງຊີວິດຂອງທ່ານ.

ລ້າງເລືອດ ດ້ວຍເລືອດ

ຮຽບຮຽງເລື່ອງ ໂດຍ ບຸນທະນອງ ຊົມໄຊພົນ

ລ້າງເລືອດດ້ວຍເລືອດ

ບັນທຶກຊີວິດ ເຈ ເກວາຣາ

© ສະຫງວນລິຂະສິດ

ບຸນທະນອງ ຊົມໄຊຜົນ

- ພິມຄັ້ງທີ 1: ສິງຫາ 1978 ຈຳນວນ 10.000 ເຫລັ້ມ

  ສຳນັກພິມ ສປປລ

- ພິມຄັ້ງທີ 2: ມິຖຸນາ 1983 ຈຳນວນ 5.000 ເຫລັ້ມ

  ສຳນັກພິມ ສປປລ

- ພິມຄັ້ງທີ 3: ມັງກອນ 2009 ຈຳນວນ 1.500 ເຫລັ້ມ

  ສຳນັກພິມ ສປປລ

- ອອກແບບຈັດໜ້າ: ພູມະລິນ ຊົມໄຊຜົນ ·

  ອຸດົມການ ຊົມໄຊຜົນ

- ຕິດຕໍ່ພົວພັນ:

  ກຸ່ມສິລະປິນລາວດວງເດືອນ

  ຕູ້ ປ.ນ 4547

  ໂທ: 020 5408783

ລາວດວງເດືອນ production

ສາລະບານ

- ຄຳນຳ: ຄວາມຕາຍນັ້ນ ຜ່ານໄປ 30 ປີ
  ແຕ່ເຈ ເກວາຣາຍັງມີຊີວິດຢູ່ ໜ້າ 1
- ອາລຳພະບົດ ໜ້າ 15

1 ໄວເຍົາຂະບົດ ໜ້າ 17

2 ບົນເສັ້ນທາງແຫ່ງການສະແຫວງຫາ ໜ້າ 23

3 ຮ່ວມການປະຕິວັດກູບາ ໜ້າ 33

4 ນັກກໍ່ສ້າງສັງຄົມນິຍົມ ໜ້າ 49

5 ນັກຣົບສາກົນນິຍົມ ໜ້າ 61

6 ກໍ່ສົງຄາມກອງຫລອນທີ່ໂບລີວີ ໜ້າ 67

7 ການຕາຍຂອງເຈເຮັດໃຫ້ໂລກສັ່ນສະເທືອນ ໜ້າ 87

8 ຄຳກ່າວໄວ້ອາໄລຂອງຟີແດນ ກາສໂຕຣ ໜ້າ 95

9 ນັກທິດສະດີສົງຄາມກອງຫລອນ ໜ້າ 117

10 ນັກທິດສະດີປະຕິວັດ ໜ້າ 139

11 ນັກສາກົນນິຍົມຊົນຊັ້ນກຳມາຊີບ ໜ້າ 155

ເຖິງຢ່າງໃດ! ເລືອດເຂົາຕ້ອງລັ່ງ!
ເຖິງຢ່າງໃດ, ຄວາມຕາຍຕ້ອງເກີດຂຶ້ນແກ່ພວກເຂົາ!
ນັ້ນລະຄືສິ່ງທີ່ພວກເຂົາ ຄາດຄະເນໄວ້!
ນັ້ນລະຄືເປົ້າໝາຍ ຂອງພວກເຂົາ!
ເຂົາຈະບີບ...
ເຂົາຈະຄັ້ນ...
ເຂົາຈະກັ່ນຈະຕອງເອົາເລືອດສີແດງເຂັ້ມຂອງເຂົາ
ນັ້ນລະອອກມາຂຽນຄຳວ່າ "ປະຊາທິປະໄຕ"!
ຄວາມຕາຍຂອງວິລະຊົນຜູ້ພິລະອາດຫານ
ນັ້ນເອງທີ່ຈະປະກອບສ່ວນທ້ອນໂຮມເຂົ້າເປັນ
ຄຳຂວັນ "ອິດສະຫລະພາບ"
ມີແຕ່ຄວາມຮຸນແຮງເທົ່ານັ້ນທີ່ຈະຮຽກຮ້ອງເອົາສິ່ງທີ່
ສູນເສຍໄປຄືນມາໄດ້...
ມີແຕ່ເລືອດເທົ່ານັ້ນທີ່ຈະສະສາງລ້າງສວ່າຍສັງຄົມ
ໃຫ້ບໍລິສຸດຜຸດຜ່ອງໄດ້!
ໜາມປັກ ກໍຕ້ອງເອົາໜາມບົ່ງ
ໜີ້ເລືອດ, ມັນກໍຕ້ອງຊົດໃຊ້ດ້ວຍເລືອດ!

"ໂດຍໄດ້ຮັບຜົນສະທ້ອນຈາກແບບຢ່າງຂອງ
ເຈ ເກວາຣາ, ບັນດານາຍແພດກູບາໄດ້ຜ່ານຜ່າອຸປະສັກ
ຮ້ອຍແປດພັນປະການເພື່ອຮັບໃຊ້ປະຊາຊົນແລະການປະ
ຕິວັດລາວຢ່າງຈິງຮັກພັກດີ"

ປະທານໄກສອນ ພົມວິຫານ

Prince Rupert
Edmonton
C A N A D A
Pt. Churchill
Baie d'Hudson
Vancouver
Seattle
Winnipeg
ÉTATS UNIS
Montréal
San Francisco
Denver
Ottawa
Halifax
Chicago
New York
Los Angeles
St. Louis
Philadelphie
Washington
El Paso
Nouv. Orléans
MEXIQUE
Golfe du Mexique
Miami
BAHAMAS
Is. Bermudes
(G.-B.)
Tampico
Mérida
La Havane
CUBA
México
Belmopan
HAÏTI
RÉP. DOMINICAINE
Guatemala
JAMAÏQUE
Porto Rico (E.-U.)
DOMINICA
Tegucigalpa
Martinique
(Fr.)
S. Salvador
BARBADE
Managua
GRENADA
I. Clipperton
(Fr.)
San José
Caracas
Panama
VENEZUELA
GUYANE
SURINAM
Guyane Française
Bogota
COLOMBIE
Quito
Is. Galapagos
(Equat.)
ÉQUATEUR
Amazone
Manaus
Belém
B R É S I L
PÉROU
Lima
BOLIVIE
Brasilia
La Paz
Corumba
Iquique
Sucre
PARAGUAY
São Paulo
Asunción
CHILI
ARGENTINE
I. de Pâques (Chil.)
Santiago
URUGUAY
Valparaiso
Buenos Aires
Montevideo
Bahia Blanca
Pto. Montt
N
I Q U E

ຄໍານໍາ

ຄວາມຕາຍນັ້ນ ຜ່ານພົ້ນໄປກວ່າ 30 ປີ

ແຕ່ ເຈ ເກວາຣາ ຍັງມີຊີວິດຢູ່

ນັກສຶກສາປັນຍາຊົນລາວໄດ້ຮຽນຮູ້ເລື່ອງລາວຊີວິດການຕໍ່ສູ້ຂອງ ເຈ ເກວາຣາ ໃນ ຕອນຕົ້ນຂອງຊຸມປີ 70 ຈາກປຶ້ມພາສາໄທທີ່ມີຊື່ວ່າ "ເຊ ກູວາຣາ: ນາຍແພດນັກປະຕິວັດຜູ້ຍິ່ງໃຫຍ່ ຮຽບຮຽງໂດຍ ສຣີອຸບົລ"

ແກນນໍາຂອງຂະບວນນັກສຶກສາຫົວກ້າວໜ້າທີ່ເຄື່ອນໄຫວສະໜັບສະໜູນລັດຖະບານປະສົມແລະ ການປະຕິບັດສັນຍາອະນຸສັນຍາສັນຕິພາບຕ່າງກໍ່ໄດ້ຜັດປ່ຽນວຽນມືກັນອ່ານ ປຶ້ມຫົວດັ່ງກ່າວເພາະມີຈໍານວນຈໍາກັດເປັນການສ້າງແບບຢ່າງແລະຂວັນກໍາລັງໃຈໃນການ ເຄື່ອນໄຫວທາງການເມືອງສະໜັບສະໜູນການປະຕິວັດແລະ ຂັບໄລ່ຈັກກະພັດອາເມຣິກາອອກຈາກແຜ່ນດິນລາວ.

ໃນການໂຮມຊຸມນຸມຂອງ 21 ອົງການທີ່ສະໜາມກິລາແຫ່ງຊາດ *ຄຳໃສ ສຸລິນທອນ* ຜູ້ນຳສະຫະພັນນັກສຶກສາຂຶ້ນກ່າວປາໄສໂດຍໃສ່ໝວກເບເຣດຳແລະເສື້ອຍ້ອມຄາມ.

ຂ້າພະເຈົ້າໄດ້ອ່ານປຶ້ມຫົວດັ່ງກ່າວຕໍ່ຈາກ *ເປຍສີ ຣາຊພົນ* ແລະ *ຄຳໂພ ອິນສີຊຽງໃໝ່* ສອງສະຫາຍຜູ້ລະດົມຂ້າພະເຈົ້າເຂົ້າເຄື່ອນໄຫວທາງການເມືອງກັບສະຫະພັນນັກສຶກສາ (ກ່ອນຈະໄດ້ຮູ້ຈັກຮັກແພງກັບ *ຄຳຮ້ອຍ-ສີລາ ອິນທະວົງ* ໃນເວລາຕໍ່ມາ).

ເມື່ອການອ່ານປຶ້ມຫົວດຽວບໍ່ອາດສະໜອງຄວາມຢາກໄດ້ ຂ້າພະເຈົ້າຈຶ່ງຕິດຕໍ່ຫາໝູ່ຄູ່ພີ່ນ້ອງຢູ່ຕ່າງປະເທດຝາກປຶ້ມຂອງ ເຈ ເກວາຣາມາໃຫ້ອີກຫລາຍຫົວ:

ອ້າຍກາຍແກ້ວ ວໍຣະຣາດ ພວມສຶກສາຢູ່ບາງກອກໄດ້ຝາກມາໃຫ້ສອງເຫລັ້ມ:

- ❖ ເຊ ກູວາຣາ: ນາຍແພດນັກປະຕິວັດຜູ້ຍິ່ງໃຫຍ່.
- ❖ ທິດສະດີສົງຄາມກອງໂຈນ: ເຊ ກູວາຣາ (ກິຕຕິກຸລ).

ເພື່ອນຍິງ *Viviane Nelet* ພວມສຶກສາຢູ່ Paris ໄດ້ຝາກປຶ້ມ :

- ❖ E. che Guevara oeuvres I, II, III, IV

ເພື່ອນ *ຄຳສິງ ມິດທິຣາວົງ* ພວມສຶກສາຢູ່ Australia ໄດ້ຝາກປຶ້ມ :

- ❖ Reminiscences of the cuban Revolutionary War.
- ❖ Che Guevara: Guerrilla Warfare

ນອກນັ້ນກໍ່ຍັງໄດ້ປຶ້ມມາຈາກຫ້ອງສະໝຸດສະຖາບັນກົດໝາຍແລະການປົກຄອງ:

- ❖ E. Che Guevara: le socialisme et l'homme
- ❖ Che's Guerrilla War: Regis Debray

ພ້ອມທັງປຶ້ມແລະຮູບພາບຫລວງຫລາຍຈາກຫນັງສືພິມ Granma ຂອງສະຖານທູດກູບາປະຈຳນະຄອນຫລວງວຽງຈັນ ຊຶ່ງເປັນຂໍ້ມູນໃຫ້ຂ້າພະເຈົ້າມາເລີ່ມແປຮຽບຮຽງປຶ້ມ "ລ້າງເລືອດດ້ວຍເລືອດ" ນັບແຕ່ໄຕມາດທີ່ 2 ຂອງປີ 1976.

"ລ້າງເລືອດດ້ວຍເລືອດ" ເປັນຫນັງສືຜ່ານແດນຂອງຂ້າພະເຈົ້າເຂົ້າສູ່ວັນນະຄະດີປະຕິວັດ.

ເມຍເກີດລູກຫົວສາວເວລາ 3 ໂມງເຊົ້າ ວັນທີ 15 ເມສາ 1976 ໃນຂະນະຊຶ່ງຂ້າພະ ເຈົ້າຍັງນັ່ງຂຽນປຶ້ມ "ລ້າງເລືອດດ້ວຍເລືອດ" ຢູ່ຫ້ອງການ.

ຕ້ອງໃຊ້ເວລາເຖິງ 2 ປີ ປຶ້ມ "ລ້າງເລືອດດ້ວຍເລືອດ" ຈຶ່ງໄດ້ພິມຈຳຫນ່າຍ (ເດືອນ ສິງຫາ 1978) ເປັນຈຳນວນ 10.000 ຫົວ ແລະຈຳຫນ່າຍໄປທົ່ວປະເທດໂດຍຮ້ານຂາຍປຶ້ມຂອງລັດ.

ຈາກເວລານັ້ນເປັນຕົ້ນມາຮູບພາບແລະແບບຢ່າງ ເຈ ເກວາຣາ ກໍປະກົດເຫັນໃນຂະບວນການອອກແຮງງານວັນເສົາແດງ, ການຂຸດເຫມືອງຝາຍຊົນລະປະທານຕ້ານໄພແຫ້ງແລ້ງແລະນ້ຳຖ້ວມ, ຂະບວນການປ້ອງກັນເວນຍາມຕາມບ້ານເມືອງຕ່າງໆ. ນອກຈາກພາບແຕ້ມໃສ່ເສື້ອຍືດ ໃສ່ປຶ້ມບັນທຶກແລ້ວຍັງມີຊາວຫນຸ່ມບາງຄົນສັກຮູບ ເຈ ເກວາຣາ ໃສ່ແຂນຂາຫລືຫນ້າເອິກເຊັ່ນກໍລະນີຂອງ *ຟອງສະຫມຸດ ໄກຍະວົງສາ* ຈາກເມືອງຄົງເຊໂດນ ຊຶ່ງປົດປ່ອຍໃຫມ່ໆນັ້ນອຳນາດການປົກຄອງປະຕິວັດຍັງບໍ່ທັນເຂັ້ມແຂງ, ກຳລັງປະຕິການກໍ່ແຊກຊຶມຜັດປ່ຽນກັນເຂົ້າມາປຸກລະດົມມວນຊົນ *ຟອງສະຫມຸດ* ເສຍລັບຍ້ອນສັກເຈໃສ່ແຂນຈຶ່ງຢູ່ບ້ານບໍ່ໄດ້ ໂຕນຫນີເຂົ້າມາຢູ່ວຽງຈັນແລະມາເພິ່ງໃບບຸນຜູ້ຂຽນປຶ້ມ "ລ້າງເລືອດດ້ວຍເລືອດ" ຢູ່ຫລາຍປີ.

ໃນລະຫວ່າງ ປີ 75-80 ກອງຕະລຸມບອນ (ມັດແຂນແດງ) ຂອງ

ຊາວໜຸ່ມຕາແສງໂພນໄຊ ເມືອງໄຊເຊດຖາກໍໄດ້ສ້າງຜົນງານດີເດັ່ນໃນການປັ້ນປຶງທາດຫລວງໃຫ້ກາຍເປັນທົ່ງນາ. ຊາວໜຸ່ມໄຊເຊດຖາກໍາທຸງໄຊຢູ່ຫລາຍປີຊ້ອນກັນ *ຖາວອນ ກິດນະວົງ* ແລະແກນນໍາຂະບວນການຫລາຍຄົນໃສ່ໝວກເບເຣດໍາຕະຫລອດ 5 ປີ, ຕະຫລອດເວັນແລະຄືນປະກົດວ່າຍາມນອນກະບໍ່ປົດ.

ຍັງມີເລື່ອງລາວອີກຫລາຍຢ່າງມາກມາຍກ່ຽວກັບຜົນສະທ້ອນຂອງແບບຢ່າງ "ນັກ ປະຕິວັດສາກົນ ເຈ ເກວາຣາ" ທີ່ມີອິດທິພົນຕໍ່ຊາວໜຸ່ມລາວ.

ພາບພົດຂອງ ເຈ ເກວາຣາ

ໃນບັນດາຮູບຖ່າຍຂອງ ເຈ ເກວາຣາ ປະກົດມີຮູບດຽວທີ່ເປັນທີ່ຄຸ້ນຫູຄຸ້ນຕາແລະໂດ່ງດັງທີ່ສຸດເປັນທີ່ຮູ້ຈັກຂອງຄົນທົ່ວໂລກ. ເປັນຮູບຂອງຊາຍຜົມຍາວໜວດເຄົາລຸງລັງໃສ່ໝວກເບເຣສີດໍາມີດາວຕິດນຸ່ງເສື້ອໜັງມີຊິບຮູດຜ່າກາງ.

ຮູບຖ່າຍນີ້ແມ່ນນັກຖ່າຍຮູບອິດສະຫລະຄົນກູບາ Alberto KORDA ຖ່າຍເມື່ອວັນທີ 5 ມີນາ 1960. ມື້ນັ້ນການນໍາປະຕິວັດກູບາໄດ້ມາຮ່ວມພິທີສົ່ງສະການຜູ້ເສຍຊີວິດ (100ກວ່າຄົນ) ຈາກການລະເບີດຂອງເຮືອຝຣັ່ງເສດ La Courbre ຊຶ່ງຂົນອາວຸດຊຶ່ງແບນຊິກຂາຍໃຫ້ກູບາ ມາຮອດທ່າເຮືອແລ້ວແຕ່ຖືກວາງລະເບີດ. *ຟີແດນ ກາສໂຕຣ* ກ່າວປະນາມການກະທໍານີ້ວ່າເປັນສີມືຂອງຊີໄອເອແລະຮຽກຮ້ອງການຕໍ່ສູ້ຂອງປະຊາຊົນດ້ວຍຄໍາຂວັນ "ປິຕຸພູມຫລືຄວາມຕາຍເຮົາຕ້ອງຊະນະ" ແຕ່ເວລານັ້ນເປັນຕົ້ນມາ.

ມື້ນັ້ນ ເຈ ໄປຮ່ວມງານດ້ວຍການນຸ່ງຖືຜິດປົກກະຕິແທນທີ່ຈະໃສ່ເສື້ອທະ

ຫານ 4 ຖົງ ແຕ່ເຂົານຸ່ງເສື້ອໜັງແລະເວລາທີ່ຢືນຢູ່ເທິງເວທີຄຽງຂ້າງຜູ້ນຳຄົນອື່ນໆ ນັ້ນເຂົາກໍປະກົດມີສະຫງ່າລາສີກວ່າໂດຍສະເພາະໃບໜ້າແລະສາຍຕາທີ່ເຄັ່ງຂຶມ ແຄ້ນເຄືອງຢ່າງແສນສາຫັດຕໍ່ຈັກກະພັດ... ພາໃຫ້ຕາກ້ອງຂອງ KORDA ຈັບຢູ່ທີ່ເຂົາຄົນດຽວ. KORDA ບອກວ່າຮູບແຜ່ນນັ້ນເປັນຮູບທີ່ເຂົາມັກທີ່ສຸດເທົ່າທີ່ຖ່າຍຮູບ ເຈ ເກວາຣາ. ໜ້າເສຍດາຍແຕ່ບັນນາທິການໜັງສືພິມປະຕິວັດຂອງກູບາປະຕິເສດທີ່ຈະເອົາຮູບແຜ່ນນີ້ອອກໜ້າໜັງສືພິມດ້ວຍເຫດທີ່ວ່າ KORDA ເປັນຊ່າງພາບອິດສະຫລະ (ບໍ່ແມ່ນພະນັກງານຂອງລັດຖະບານ).

ຕ້ອງໃຊ້ເວລາອີກ 7 ປີ ຕໍ່ມາຄືໃນປີ 1967 ຫລັງການຕາຍຂອງ ເຈ ເກວາຣາ, ສຳນັກພິມຝ່າຍຊ້າຍຂອງອີຕາລີໄດ້ຈັດພິມປຶ້ມ "ບັນທຶກທີ່ໂບລີວີຂອງ ເຈ ເກວາຣາ" (The Bolivian Diary).

Giangiacomo FETRINELLI ຜູ້ເປັນບັນນາທິການຈຶ່ງໄດ້ຕິດຕໍ່ຂໍຊື້ຮູບແຜ່ນນີ້ນຳ KORDA ເພື່ອເອົາໄປໃສ່ໜ້າປົກປຶ້ມຫົວນັ້ນ. ພາຍຫລັງທີ່ປຶ້ມດັ່ງກາວຂາຍເປັນເທນ້ຳເທທ່າ, ໂປສເຕີ້ຈຳນວນນັບລ້ານໆແຜ່ນຂາຍໄປທົ່ວໂລກພາໃຫ້ສຳນັກພິມດັ່ງ ກາວມີລາຍໄດ້ກວ່າ 5 ລ້ານໂດລາ .

ພາບແຜ່ນນີ້ທາງການກູບາໄດ້ນຳມາໃຊ້ຄັ້ງທຳອິດໃນມື້ໂຮມຊຸມນຸມໃຫຍ່ເພື່ອໄວ້ອາໄລ ເຈ ເກວາຣາ ໃນວັນທີ 13 ຕຸລາ 1967. ຈາກນັ້ນກໍຖືກຕິດຕັ້ງໃສ່ຕຶກຂະໜາດແປດຊັ້ນຂອງກະຊວງພາຍໃນຢູ່ບໍລິເວນຈະຕຸລັດໂຮເຊມາຣຕີ. ຮູບແຜ່ນນີ້ຍັງມີໃຫ້ເຫັນໃນໃບເງິນ, ຫລຽນທອງແດງແລະຂອງທີ່ລະລຶກຕ່າງໆຢ່າງຫລວງຫລາຍພາຍມາກທັງໃນແລະນອກປະເທດ, ທັງໃນຄ້າຍສັງຄົມນິຍົມແລະທຶນນິຍົມ.

ພາບພົດແລະບຸກຄະລິກລັກສະນະຂອງ ເຈ ຖືກສຶກສາແລະວິເຄາະວິຈານໃນລະດັບສາກົນ. David Kunzle ໄດ້ຂຽນໃນປຶ້ມ "Che Guevara: Myth and Message" ວ່າ: "ການທີ່ ເຈ ເລືອກໃສ່ໝວກເບເຣນັ້ນເປັນສິ່ງທີ່ບໍ່ມີໃຜຮູ້ດອກວ່າຍ້ອນຫຍັງ. ແຕ່ບໍ່ວ່າ ເຈ ຈະສະເດືອກພໍ້ຫລືວ່າໝວກເບເຣນັ້ນສິ່ງ

ຜົມຕໍ່ບຸກຄະລິກກະພາບຂອງຄົນໃສ່ຫລືບໍ່? ແບບໃດ? ໝວກເບເຣທີ່ເຂົາສຸບໃສ່ຫົວຢູ່ເປັນປະຈຳນັ້ນ ເຮັດໃຫ້ເກີດເສັ້ນແບ່ງເທິງສ່ວນບົນຂອງໃບໜ້າຢ່າງແຈ່ມແຈ້ງ ຍິ່ງເຮັດໃຫ້ໃບໜ້າເຂົາໂດດ ເດັ່ນອອກມາເປັນຢ່າງຍິ່ງ ໝວກເບເຣຈຶ່ງເບິ່ງຄືເປັນວົງລັດສະໝີທີ່ສາດສ່ອງອອກມາພ້ອມ ກັນນັ້ນດວງຕາທີ່ຊືງສະເໜ່ຂອງ ເຈ ຍິ່ງສາຍແສງອອກມາຢ່າງແຈ່ມແຈ້ງ"

"ຜົມຍາວຂອງ ເຈ ນັ້ນກໍເປັນສັນຍາລັກຂອງການຕໍ່ຕ້ານວັດທະນະທຳພື້ນຖານໃນສັງຄົມສະໄໝໃໝ່ທີ່ວ່າຜູ້ຊາຍຕ້ອງຕັດຜົມສັ້ນຈຶ່ງຈະໄດ້ຮັບການຍອມຮັບນອກຈາກນັ້ນການຈຶ່ງຜົມຍາວຍັງບົ່ງບອກເຖິງຄວາມບໍ່ມີລະບຽບວິໄນບໍ່ຢູ່ພາຍໃຕ້ການຄວບຄຸມຂອງກົດເກນທາງ ສັງຄົມເປັນຄວາມສັບສົນທາງເອກະລັກທາງເພດ. ໃນຊຸມປີ 60 ນັ້ນການຈຶ່ງຜົມຍາວຂອງພວກຜູ້ຊາຍເປັນການສະແດງອອກໃນຄວາມຮັກສັນຕິພາບ, ການຕໍ່ສູ້ຕ້ານສົງຄາມແລະທຸລະກິດການຄ້າທຶນນິຍົມ (Camile PAGLIA: Sexual Personae)

"ສຳລັບດາວທີ່ຕິດຢູ່ເທິງໝວກຂອງເຈນັ້ນສະແດງເຖິງຕຳແໜ່ງຜູ້ນຳຂະບວນການປະຕິວັດ. ເປັນດາວທີ່ສ່ອງແສງແວວວາວນຳທາງໃຫ້ແກ່ການຕໍ່ຕ້ານລະບອບທຶນນິຍົມ" David Kunzle ວ່າດັ່ງນັ້ນ.

ນັກຄົ້ນຄວ້າຫລາຍຄົນໄດ້ສົມທຽບຮູບພາບຕອນຕາຍຂອງ ເຈ ເກວາຣາ ກັບຕອນຕາຍຂອງພຣະເຍຊູ (The Death of Christ) ຊຶ່ງແຕ້ມໂດຍ Andrea MONTEGNA.

ໃນເວລາລ້າງສ່ວຍສີບ ເຈ ນັ້ນພວກແມ່ຊີແລະ ພວກພະຍາບານຕ່າງອອກຄວາມຄິດເຫັນເປັນສຽງດຽວກັນວ່າ: "ເຈ ຄືກັບພຣະເຍຊູບໍ່ມີຜິດ" ຄໍາຊຸບຊິບນີ້ໄດ້ແຜ່ລະບາດອອກໄປພາໃຫ້ໄທບ້ານໄທເມືອງຈໍານວນຫລວງຫລາຍພາກັນແຫ່ມາເບິ່ງສົບຂອງເຂົາຫລາຍຄົນຂໍຕັດເອົາເສັ້ນຜົມຂອງເຂົາໄວ້ເປັນເຄື່ອງລາງນໍາໂຊກ. Guillermo Cabrera INFANTE ໄດ້ຂຽນໄວ້ໃນປຶ້ມ "Mea Cuba" ວ່າດັ່ງນີ້ :

"ການຕາຍຂອງ ເຈ ປຽບກັບການສິ້ນພະຊົນບົນໄມ້ກາງເຂນຂອງພຣະເຍຊູເປັນການຕາຍເພື່ອປົດປ່ອຍມະນຸດຊາດອອກຈາກບາບຫລືຄວາມທຸກຍາກພຽງແຕ່ພວກຄົນທີ່ ເຈ ຕ້ອງການປົດປ່ອຍກັບກາຍເປັນຜູ້ປົດປ່ອຍ ເຈ ໃຫ້ຫລຸດພົ້ນຈາກພັນທະນາມາປະການໃນໂລກ ໂດຍສົ່ງເຂົາໄປສູ່ປະຣະໂລກ . ຄວາມພະຍາຍາມທີ່ຈະປົດປ່ອຍເພື່ອນມະນຸດຂອງເຂົາຈະບໍ່ແຕກຕ່າງຈາກຄວາມພະຍາຍາມຂອງພຣະເຍຊູທີ່ຈະປົດປ່ອຍຊາວຍິວແຕ່ກັບຖືກຊາວຍິວຮຽກຮ້ອງໃຫ້ນໍາໄປຕຶງກາງເຂນໃນແງ່ນີ້ສັດຕູສໍາຄັນຂອງການມາປົດປ່ອຍອາດຈະເປັນຜູ້ຖືກປົດ ປ່ອຍເສຍເອງ".

"ມະນຸດທີ່ສົມບູນແບບທີ່ສຸດໃນຍຸກພວກເຮົາ"

ເຖິງແມ່ນພາບພົດຂອງ ເຈ ເກວາຣາ ຈະສະແດງເຖິງເສລີພາບຢ່າງເຕັມຂັ້ນເຕັມຂີດແຕ່ເຂົາກໍເປັນຄົນງ່າຍດາຍປະຫຍັດມັດທະຍັດແລະເຂັ້ມງວດກວດຂັນກັບຕົວເອງ.

ພາຍໃນຄອບຄົວ ເຈ ກໍໃຊ້ກົດລະບຽບດັ່ງດຽວກັບທີ່ສາທາລະນະ. ລົດປະຈໍາຕໍາແຫນ່ງຂອງເຂົາ ເຂົາກໍໃຊ້ຂີ່ໄປວຽກທາງການເທົ່ານັ້ນ, ມີຄັ້ງຫນຶ່ງລູກເຈັບເມຍຂໍໃຊ້ລົດປະຈໍາ ຕໍາແຫນ່ງແຕ່ຖືກປະຕິເສດໂດຍບອກວ່ານໍ້າມັນທີ່ໃສ່ລົດໃຫ້ເຂົາຂີ່ໄປການນັ້ນແມ່ນເງິນປະຊາຊົນ ສະນັ້ນເມຍຕ້ອງໄດ້ພາລູກຂຶ້ນລົດເມໄປໂຮງຫມໍ. ຄັ້ງຫນຶ່ງຫລັງການປົດປ່ອຍໃຫມ່ທາງການໄດ້ເຊີນພໍ່ແມ່ເຂົາມາຢາມ (ຈາກປະເທດອາກຊັງຕິນ). ເວລາພໍ່ແມ່ມາພັກເຊົານໍາຢາກໃຊ້ລົດປະຈໍາຕໍາແຫນ່ງເຂົາໄປທ່ຽວຊົມເມືອງເຂົາກໍບອກພໍ່ແມ່ວ່າຕ້ອງໄດ້ຈົກເງິນຊື້ນໍ້າມັນໃສ່ເອງ. ພວກລູກໆເຊັ່ນດຽວ

ກັນພຽງແຕ່ຜິດເລັກຜິດນ້ອຍເຂົາກໍເຄີຍເອົາລູກຂັງໄວ້ໃນຕູ້ເຄື່ອງນຸ່ງເພື່ອເປັນການດັດສັນດານ.

ເຈ ບໍ່ພຽງແຕ່ມີສະຕິຕໍ່ຜົນປະໂຫຍດສ່ວນລວມເທົ່ານັ້ນເຂົາຍັງເປັນຄົນບໍ່ເຫັນແກ່ໂຕບໍ່ໃຊ້ອະພິສິດສ່ວນຕົວ.ເຖິງແມ່ນທາງການຈະມີອັດຕາສ່ວນເພີ່ມໃຫ້ຄອບຄົວການນໍາແຕ່ໃນກະຊວງທີ່ ເຈ ຮັບຜິດຊອບນັ້ນເຂົາຕັດສິດພິເສດສ່ວນຕົວເຂົາອອກຫມົດ ແລະຂູ່ຈະປະຕິບັດວິໄນຕໍ່ພະນັກງານທີ່ຈະຍືບຍື່ນອັດຕາພິເສດໃຫ້ກັບຄອບຄົວເຂົາ. ຍ້ອນຄວາມອັດຕະຄັດຂັດສົນມີຫລາຍຄັ້ງຊຶ່ງເມຍເຂົາຕ້ອງໄດ້ຢືມເງິນອົງຄະລັກ (ຫນ່ວຍປ້ອງກັນ) ສ່ວນຕົວໃຊ້ຈ່າຍ. ມີຄັ້ງຫນຶ່ງເມຍເຂົາໄດ້ຮັບຂອງຂວັນຈາກຫມູ່ຄູ່ເປັນເກີບຫນັງຈາກປະເທດອີຕາລີ. ພໍ ເຈ ຮູ້ຈັກກໍບອກເມຍໃຫ້ເອົາເກີບໄປສົ່ງຄືນໂດຍໃຫ້ເຫດຜົນວ່າຊາວກູບາສ່ວນຫລວງຫລາຍບໍ່ມີໂອກາດໄດ້ໃສ່ຄືກັນ. ນັກຂ່າວຫນັງສືພິມປຣາວະດາຂອງໂຊວຽດປະຈໍາລາຮາວານເຄີຍວ່າ: ໃນງານລ້ຽງທີ່ສະຖານທູດໂຊວຽດປະຈະລາຮາວານຄັ້ງຫນຶ່ງເຈົ້າພາບ ເຖິງຂັ້ນໄດ້ລັກຫໍ່ອາຫານການກິນແລະລັກມອບໃສ່ມືໃຫ້ເມຍເຂົາເພາະຮູ້ວ່າສະພາບການເປັນຢູ່ຂະເຈົ້າຝືດເຄືອງ .

ສະຕິຕໍ່ຜົນປະໂຫຍດສ່ວນລວມຂອງ ເຈ ຍັງສະແດງອອກໃຫ້ເຫັນໃນຫລາຍໆດ້ານເວລາໄປຢ້ຽມຢາມລັດຖະກິດທີ່ຕ່າງປະເທດ ເຈ ກໍຄັດຈ້ອນຄະນະຜູ້ຕິດຕາມເຂົາໃຫ້ຫນ້ອຍເທົ່າທີ່ເປັນໄດ້. ແມ່ນແຕ່ເມຍເຂົາກໍຕັດລາຍຊື່ອອກ ຕັດລາຍຈ່າຍງົບປະມານແຫ່ງຊາດສໍາລັບສິ່ງທີ່ບໍ່ຈໍາເປັນ . ໃນເວລາທີ່ເຂົາເປັນປະທານທະນາຄານແຫ່ງຊາດມີໂຄງການສ້າງຕຶກທະນາຄານ 32 ຊັ້ນ ໂດຍມີລິຟລາຄາແພງເຂົາສະເຫນີໃຫ້ຕັດລາຍການລິຟນັ້ນອອກໂດຍໃຫ້ເຫດຜົນວ່າ: ເຂົາເປັນໂຣກຫືດຍັງສາມາດຍ່າງຂຶ້ນຂັ້ນໄດໄປຫາຫ້ອງການໄດ້ເປັນຫຍັງຕ້ອງຈ່າຍແພງເພື່ອຄວາມສະດວກສະບາຍທີ່ບໍ່ຈໍາເປັນນັ້ນ.

ໂດຍຜ່ານການໂອ້ລົມເປັນເວລາເຖິງ 6 ຊົ່ວໂມງ ໃນວັນທີ 12 ກັນຍາ 1962,. Marilyn Zeitlin ນັກຂ່າວຊາວອາເມຣິກາໄດ້ຂຽນເຖິງ ເຈ ວ່າ:

"ຂ້ອຍເຄີຍສຳພາດຄົນທີ່ມີຊື່ສຽງມາທຸກປະເພດຕັ້ງແຕ່ Ben GURION (ນາຍົກຄົນທຳອິດຂອງອິສຣາແອລ) ຈົນເຖິງ Bob DYLAN (ສິລະປິນອາເມຣິກາ) ແຕ່ບໍ່ເຄີຍມີຜູ້ໃດສ້າງຄວາມປະທັບໃຈໃຫ້ຂ້ອຍໄດ້ເຫມືອນ ເຈ ... ມັນເຫມືອນກັບມີພຣະເຍຊູ ໃນຕົວເຂົາຂ້ອຍມີຄວາມຮູ້ສຶກວ່າເມື່ອເຂົາເວົ້າລົມກັບຂ້ອຍເຂົາເວົ້າຄວາມຈິງ. ຂ້ອຍໄດ້ຖາມເຂົາຄວາມຫນຶ່ງ: ມີຂ່າວລືວ່າເຈົ້າມີເຮືອນສາມຫລັງທັງຍັງມີຄະລິຫາດຢູ່ຕ່າງແຂວງມີເຮືອນພັກແຄມທະເລທີ່ເມືອງວາຣາເດໂຣຕື່ມອີກໃນຂະນະທີ່ປະຊາຊົນກູບາຈຳນວນບໍ່ຫນ້ອຍຍັງບໍ່ມີຮອດຫລັງຄາມຸງຫົວອັນນີ້ແມ່ນແທ້ບໍ່? ເຈ ໄດ້ຕອບຂ້ອຍວ່າບໍ່ແມ່ນຄວາມຈິງ: ມັນເປັນພຽງຂ່າວລືມີຂ່າວລືບໍ່ອິດບໍ່ຢາກເທິງເກາະກູບາ".

Jean Paul SARTRE ແລະ Simone de BEAUVOIR ນັກປະພັນ-ນັກປຣັຊຍາທີ່ຍິ່ງໃຫຍ່ຂອງຝຣັ່ງເສດໃນສະຕະວັດທີ 20 ກໍມີໂອກາດໄດ້ພົບປະສົນທະນາກັບ ເຈ ໃນກາງປີ 1960. SARTRE ໄດ້ໃຫ້ນິຍາມ ກ່ຽວກັບ ເຈ ດັ່ງນີ້ "ມະນຸດທີ່ສົມບູນແບບທີ່ສຸດໃນຍຸກຂອງພວກເຮົາ. ເຈ ຮັກສາຄວາມເວົ້າເຮັດຄືທີ່ເວົ້າວິຖີຂອງເຂົາແລະວິຖີຂອງໂລກດຳເນີນໄປຢ່າງສອດຄ່ອງກັນ".

ແບບຢ່າງຂອງຄົນສະຕະວັດທີ່ 21

ໃນຍາມມີຊີວິດ ເຈ ເກວາຣາ ເຄີຍເວົ້າເຖິງຂຽນເຖິງຄົນໃຫມ່ສັງຄົມນິຍົມ-ຄົນຂອງສະຕະວັດທີ 21 .

ໃນປຶ້ມທີ່ມີຊື່ວ່າ "ລັດທິສັງຄົມນິຍົມ ແລະຄົນທີ່ປະເທດກູບາ" ເຂົາໄດ້ຂຽນໄວ້ວ່າ:

"ນັກສັງຄົມນິຍົມພວກເຮົາ, ເປັນຄົນທີ່ອິດສະຫລະເສລີທີ່ສຸດທັງນີ້ກໍເພາະວ່າພວກເຮົາຄົບຖ້ວນສົມບູນທີ່ສຸດ. ພວກເຮົາສົມບູນແບບທີ່ສຸດກໍເພາະພວກເຮົາອິດສະຫລະເສລີທີ່ສຸດ

ໂຄງກະດູກແຫ່ງເສລີພາບຂອງພວກເຮົາຖືກຫລໍ່ຫລອມຂຶ້ນມາຢ່າງສົມບູນແບບແລ້ວຍັງຄົງຂາດແຕ່ນ້ຳຫລໍ່ລ້ຽງ (Substance proteique) ແລະການຫຸ້ມຫໍ່ນຸ່ງຖືຊຶ່ງພວກເຮົາຈະຕ້ອງສ້າງຂຶ້ນມາ .

"ເສລີພາບຂອງພວກເຮົາ ແລະ ສິ່ງຄ້ຳຄູນປະຈຳວັນຂອງພວກມັນເປັນສີເລືອດ ແລະບັນຈຸໄວ້ຢ່າງເຕັມປ່ຽມດ້ວຍການເສຍສະຫລະ".

"ເຍົາວະຊົນປະກອບເປັນດິນດາກພື້ນຖານຂອງຜົນງານການກໍ່ສ້າງຂອງພວກເຮົາເຮົາໄດ້ຝາກຄວາມຫວັງໄວ້ກັບພວກເຂົາແລະກຽມພວກເຂົາໃຫ້ພ້ອມທີ່ຈະຮັບຜົນທຸງຈາກມືພວກເຮົາ" .

ດ້ວຍຄວາມເປັນນັກປະຕິວັດທີ່ໄຮ້ພົມແດນ ເປັນນັກສາກົນນິຍົມໂດຍແທ້ຈິງ, *ເຈ ເກວາຣາ* ເຄີຍປະກາດໃນຄຳປາໄສ, ໃນບົດຂຽນຕ່າງໆ. ສະນັບສະຫນູນການຕໍ່ສູ້ປົດປ່ອຍຊາດຂອງປະຊາຊົນສາມຊາດອິນດູຈີນ: ຫວຽດນາມ, ລາວແລະກຳປູເຈຍ. ເຂົາຮຽກຮ້ອງປະຊາຊົນໃນໂລກທີ 3 ໃຫ້ລຸກຂຶ້ນຕໍ່ຕ້ານຈັກກະພັດນິຍົມແລະທຶນນິຍົມໃນຂອບເຂດທົ່ວໂລກ "ສ້າງຫວຽດນາມທີ 2 ທີ 3 ແລະ ຫລາຍໆຫວຽດນາມ ..." ເພື່ອພ້ອມກັນດັບສູນລັດທິທຶນນິຍົມໃນທົ່ວໂລກ.

ໃນເວລາກ່າວປາໄສໃນງານໂຮມຊຸມນຸມມິດຕະພາບແລະສາມັກຄີກັບປະຊາຊົນ



24 / VII

ລາວເຊິ່ງຈັດຂຶ້ນໃນວັນທີ 13 ມັງກອນ 1976 ທີ່ Santiago de Cuba *ປະທານ ໄກສອນ ພົມວິຫານ* ໄດ້ກ່າວຕໍ່ໜ້າມວນຊົນແລະ *ຟີແດນ ກາສໂຕຣ* ວ່າ:

"ເຖິງແມ່ນປະເທດຊາດທັງສອງພວກເຮົາຈະຢູ່ໄກກັນຄົນລະຊີກໂລກກໍຕາມ. ບໍ່ວ່າທະວີບໃດມະຫາສະມຸດໃດກໍບໍ່ສາມາດຕັດແຍກພວກເຮົາອອກຈາກກັນ. ຍ້ອນວ່າປະຊາຊົນລາວແລະປະຊາຊົນກູບາມີສັດຕູໂຕດຽວກັນມີອຸດົມຄະຕິອັນດຽວກັນແລະສາຍພົວພັນລະ ຫວ່າງປະຊາຊົນສອງຊາດພວກເຮົາກໍສ້າງຂຶ້ນບົນພື້ນຖານແນວຄິດສາກົນນິຍົມຊົນຊັ້ນກຳມະຊີບ... ໂດຍໄດ້ຮັບຜົນສະທ້ອນຈາກແບບຢ່າງຂອງ *ເຈ ເກວາຣາ*, ບັນດານາຍແພດກູບາໄດ້ຜ່ານຜ່າອຸປະສັກຮ້ອຍແປດພັນປະການເພື່ອຮັບໃຊ້ປະຊາຊົນແລະການປະຕິວັດລາວຢ່າງຈິງຮັກພັກດີ".

"ບໍ່ວ່າທີ່ໃດກໍຕາມເມື່ອຄວາມຕາຍຈະອຸບັດຂຶ້ນ
ຢ່າງໜ້າຕື່ນເຕັ້ນສຳລັບເຮົາ ກໍຂໍໃຫ້ມັນເປັນ
ການຕາຍທີ່ມີປະໂຫຍດຕໍ່ມວນມະນຸດ. ການຕາຍ
ເຊັ່ນນັ້ນຈະເປັນການຮຽກຮ້ອງແລະຂະຫຍາຍ
ການຕໍ່ສູ້ຂອງເຮົາ ມັນຈະຊາບຊຶມເຂົ້າໄປໃນ
ແນວຄິດຈິດໃຈຂອງຄົນອີກຫລາຍຄົນ ແລ້ວມື
ຂອງພວກເຂົາເຫລົ່ານັ້ນກໍ່ຈະເດ່ອອກມາກຳອາວຸດ
ແທນເຮົາ ລົວປືນກົນໃສ່ສັດຕູປຸ່ນປຽບດັ່ງສຽງພະ
ຊັກອະນີຈາຕໍ່ໜ້າກອງຟອນຂອງເຮົາ. ຄົນໜຶ່ງ
ຕາຍໄປອີກຫລາຍສິບຫລາຍຮ້ອຍຄົນຈະລຸກຂຶ້ນ
ຕໍ່ສູ້ຈົນກາຍເປັນສົງຄາມ ໃຫຍ່ນຳໄປສູ່ໄຊຊະນະ".

"ນັກປະຕິວັດທີ່ແທ້ຈິງ ຕ້ອງປ່ຽມລົ້ນ ດ້ວຍຄວາມຮູ້ສຶກທີ່ຍິ່ງໃຫຍ່ຂອງ ຄວາມຮັກ. ນັກປະຕິວັດກອງຫນ້າ ພວກເຮົາຕ້ອງສ້າງແນວຄິດໃນຄວາມ ຮັກດັ່ງກ່າວຕໍ່ປະຊາຊົນ, ຕໍ່ເຫດຜົນ ອັນສັກກາລະບູຊາແລະເຮັດໃຫ້ສິ່ງ ເຫລົ່ານັ້ນເປັນອັນດຽວກັນຢ່າງຕັດ ແຍກອອກບໍ່ໄດ້"





ອາລຳພະບົດ

ພາຍຫລັງທີ່ທາງການກູບາປະກາດທີ່ຈະຈັດພິທີລະນຶກ 30 ປີ ແຫ່ງການຕາຍຂອງ *ເຈ ເກວາຣາ* ໃນວັນທີ 9 ຕຸລາ 1997 ຄະນະຊ່ຽວຊານຂຸດຄົ້ນກະດູກຈາກກູບາ ອາກຊັງຕິນແລະໂບລີວີໂດຍການຮ່ວມມືຂອງພົນເອກ *ມາຣີໂອ ວາຣກັສ ຊາລີນາສ* ນາຍພົນກະສຽນອາຍຸຂອງກອງທັບໂບລີວີ, ຜູ້ທີ່ເຄີຍອອກຄຳສັ່ງສັງຫານ *ເຈ ເກວາຣາ* ເມື່ອວັນທີ 8 ຕຸລາ 1967 ແລະເປັນຜູ້ດຽວທີ່ຮູ້ວ່າສົບຂອງ *ເຈ ກວາຣາ* ແລະສະຫາຍຖືກຝັງໄວ້ບ່ອນໃດ.

ຜ່ານຂັ້ນຕອນດຳເນີນງານກວ່າ 2 ປີ ... ກະດູກຂອງ ເຈ ແລະສະຫາຍ 6 ຄົນ ຖືກຂຸດຂື້ນມາເມື່ອວັນທີ 28 ມິຖຸນາ 1997. ທັງ 7 ຖືກຝັງໃນຂຸມດຽວກັນໂດຍທີ່ສົບຂອງ ເຈ ຝັງຢູ່ ໃຕ້ສຸດ.

ເປັນທີ່ຢັ້ງຢືນໄດ້ວ່າຊາກໂຄງກະດູກທັງ 7 ເປັນນັກປະຕິວັດກູບາ 3 ຄົນ, ໂບລີວີ 3 ຄົນ ແລະຜູ້ບັນຊາ *ເຈ ເກວາຣາ* ໂຄງກະດູກຂອງ ເຈ ຍັງມີເສື້ອກັນໜາວຫໍ່ກະໂຫລກຫົວໄວ້ສ່ວນຕີນກໍເປືອຍ(ບໍ່ມີເກີບ)ແລະກະດູກມືກ້ຳຂວາຂາດຫາຍໄປເພາະຫລັງຈາກທະຫານໂບລີວີສັງຫານເຂົາດ້ວຍລູກປືນ9ນັດແລ້ວຜູ້ບັນຊາຍັງສັ່ງໃຫ້ຕັດມືເຂົາກ້ຳໜຶ່ງຝາກໄປກູບາທ້າທາຍເຍີ້ຍຫຍັນ *ຟີແດນ ກາສໂຕຣ.*

ຮອດວັນທີ 15 ກໍລະກົດ 1997 ຊາກກະດູກຂອງ *ເຈ ເກວາຣາ* ແລະສະຫາຍນັກປະຕິວັດກູບາອີກສາມຄົນກໍຖືກສົ່ງກັບໄປກູບາ.

ພິທີຕ້ອນຮັບໂຄງກະດູກກັບຄືນບ້ານຈັດຂື້ນທີ່ສະໜາມບິນ *ຊານອັນໂຕນີໂອ* ນະຄອນຫລວງ*ລາຮາວານ* ໂດຍມີປະທານ *ຟີແດນ ກາສໂຕຣ* ແລະ ການນຳປະຕິວັດກູບາແລະມວນຊົນຄັບຄາໜາແໜ້ນຄອຍຕ້ອນຮັບ. ເມຍແລະລູກໆຂອງ ເຈ ກໍ

ຢູ່ກັບຄົບໜ້າຄົບຕາໂດຍສະເພາະ *ອິນດາ ເກວາຣາ* ລູກສາວຜູ້ເປັນລັດຖະມົນຕີກະຊວງວັດທະນະທຳກໍໄດ້ຂຶ້ນກ່າວສະແດງຄວາມຂອບອົກຂອບໃຈແກ່ທຸກຝ່າຍ.

ເປັນທີ່ແນ່ນອນແລ້ວວ່າສົບຂອງ *ເຈ ເກວາຣາ* ທີ່ຖືກປົກປິດເຊື່ອງຊ້ອນໄວ້ເປັນເວລາ 30 ປີ ນັ້ນຈະໄດ້ທຳພິທີຝັງໄວ້ທີ່ເມືອງ *ຊັນຕາກລາຣາ* ຖານທີ່ໝັ້ນເກົ່າຂອງການປະຕິວັດ ເປັນເຂດແຂວງຊຶ່ງ *ເຈ ເກວາຣາ* ໄດ້ບັນຊາການຕີປົດປ່ອຍແລະຍັງເປັນອະນຸສອນສະຖານ ຂອງເຂົາຕື່ມອີກ.

ຢູ່ປະເທດກູບາ *ແອຣເນສໂຕ ເຈ ເກວາຣາ* ຖືກເຊີດຊູເປັນນັກປະຕິວັດຜູ້ຍິ່ງໃຫຍ່ລະດັບ ທະວີບທຽບເທົ່າກັບ *ຊີໂມນ ໂບລີວາຣ* (Simon BOLIVAR) ແລະ *ເອມີລີໂອ ຊາປາຕາ* (Emilio ZAPATA).



1

ໄວເຍົາຂະບົດ

ຄວາມຂີ້ດື້ແລະມັກສ່ຽງໄພຫລືຈະເວົ້າວ່າຄວາມສາມາດໃນການເຕີມພັນກັບຄວາມຕາຍເປັນອຸປະນິໄສຂອງ ເຈ ຕັ້ງແຕ່ຍັງເປັນເດັກນ້ອຍແລະໄດ້ພັດທະນາຂື້ນເລື້ອຍໆຕະຫລອດຊົ່ວຊີວິດຂອງເຂົາ.

ນິດໄສດັ່ງກ່າວອາດເກີດມາຈາກຄວາມພະຍາຍາມທີ່ຈະເອົາຊະນະຂໍ້ຈຳກັດຂອງຕົວເອງທີ່ເກີດຈາກໂຣກຫືດຊຶ່ງເຂົາເລີ່ມເປັນຕັ້ງແຕ່ອາຍຸ ໒ ປີ.

ໄລຍະຕົ້ນລະດູຫນາວ 1930 ອາກາດຫນາວເຢັນແລະລົມແຮງແມ່ຂອງເຂົາໄດ້ພາໄປລອຍນ້ຳທີ່ສະໂມສອນເຮືອຢອັຊ. ຈາກມື້ນັ້ນມາເຈກໍເປັນຫືດມາຕະຫລອດ. ແພດພະຍາຍາມປິ່ນປົວຮັກສາແຕ່ໂຣກຮ້າຍດັ່ງກ່າວກໍບໍ່ທຸເລົາເບົາບາງລົງເລີຍ.

ອີງຕາມການແນະນຳຂອງນາຍແພດ ຄອບຄົວ *ເກວາຣາ* ໄດ້ຍົກຍ້າຍຈາກເມືອງໂຣຊາຣິໂອບ້ານເກີດເມືອງນອນຂອງເຈຂື້ນເຫນືອໄປຢູ່ເຂດພູພຽງອານຕາກຣາເຊຍເມືອງ ກໍຣໂດບາ (Cordoba) ນະຄອນຫລວງ ບົວໂນໄອເຣສ ຂອງປະເທດອາກຊັງຕິນ.

ເຈ ມີອຸປະນິໄສຄືແມ່ຂອງເຂົາບໍ່ມີຜິດ. ຍ້ອນເປັນໂຣກຫືດເຂົາບໍ່ສາມາດນັ່ງຮຽນຫນັງສືໃນຫ້ອງຮຽນຄືເດັກນ້ອຍທົ່ວໆໄປໄດ້ສະນັ້ນແມ່ຈຶ່ງເປັນນາຍຄູສ່ວນຕົວເຂົາຈົນເຂົາອາຍຸໄດ້ ໙ ປີ.

ທັງສອງແມ່ລູກມີນິດໄສມັກຫລິ້ນແບບສ່ຽງໄພ, ມີນິດໄສຂະບົດມີການຕັດສິນໃຈທີ່ແນ່ວແນ່ເດັດຂາດມັກສະແດງຄວາມຄິດເຫັນຢ່າງເປີດເຜີຍແລະ ມີຄວາມຈິງຮັກພັກດີຕໍ່ຜູ້ທີ່ໃກ້ຊິດສະຫນິດສະຫນົມແບບເປັນເລີດ.

ພໍ່ຂອງ ເຈ ເອງຍັງຄວບຄຸມທັງແມ່ທັງລູກບໍ່ໄດ້ ຍັງເຄີຍອອກປາກວ່າ: ເຈໄດ້ນິດໄສສ່ຽງໄພສ່ຽງຕາຍມາຕາມສາຍເລືອດທາງແມ່. ເຈ ເປັນຄົນບໍ່ຟັງຄວາມໃຜແລະມັກເຮັດແຕ່ແນວເຖື່ອນງຍານທີ່ພໍ່ຢາກຮ້າຍເຂົາກໍຫນີເຂົ້າໄປລີ້ໃນປ່າຈົນພໍ່ເຊົາຢາກຮ້າຍຈຶ່ງກັບມາເຮືອນ.

ໃນເວລາຮຽນຢູ່ຊັ້ນປະຖົມເຂົາກໍເຄີຍສະແດງຄວາມສາມາດແບບເຫນືອເດັກນ້ອຍທົ່ວໄປດ້ວຍການປີນໄຕ່ເທິງທໍ່ນ້ຳສູງໆການກິນນ້ຳມຶກສໍຂາວການເຂົ້າໄປໃນເຫມືອງຮ້າງທີ່ຄົນອື່ນບໍ່ກ້າເຂົ້າໃກ້ ນອກນັ້ນກໍມີການແຂ່ງຂັນຍິງດອກໄຟຟ້າຕາມແຄມທາງມີການຖິ້ມກະໂພກເຂົ້າໃສ່ງານລ້ຽງຂອງຄົນບ້ານໃກ້ເຮືອນຄຽງ. ຊາວບ້ານຕ່າງກໍຍົກໂປ້ໃຫ້ເຂົາເລື່ອງຄວາມເກເລ ຫມູ່ຄູ່ລຸ້ນລາວຄາວດຽວກໍຍົກໂປ້ໃຫ້ເຂົາເລື່ອງຄວາມເປັນຫົວໂຈກໃນການລ່າຫລີ້ນແບບສ່ຽງໄພແລະເຮັດໃຫ້ຜູ້ໃຫຍ່ລຳຄານ.

ຄອບຄົວ *ເກວາຣາ* ບໍ່ແມ່ນຜູ້ເຄັ່ງຄັດທາງສາສະຫນາຄືຊາວຄຣິສຕຽນທົ່ວໄປ. ແມ່ຂອງ ເຈ ຍັງແນະນຳນາຍຄູບໍ່ໃຫ້ສອນເລື່ອງສາສະຫນາໃຫ້ກັບລູກຊາຍຂອງນາງດ້ວຍເຫດດັ່ງກ່າວນັ້ນອາຣະຍະທັມທີ່ເປັນສິ່ງແວດລ້ອມອ້ອມຕົວເຂົານັບແຕ່ຈະເລີນເຕີບໂຕຂຶ້ນຈຶ່ງກັບກາຍເປັນສິ່ງປີລະປັກເປັນສິ່ງທີ່ເຂົາຢາກປັບປຸງປ່ຽນແປງໂດຍຕະຫລອດ.

ແອຣເນສໂຕ *ເຈ ເກວາຣາ* *(Ernesto CheGUEVARA)* ເກີດ ເມື່ອວັນທີ 14 ມິຖຸນາ 1928 ທີ່ເມືອງ ໂຣຊາຣີໂອ (Rosario) ເມືອງສຳຄັນເມືອງໜຶ່ງຂອງປະເທດອາກຊັງຕິນ(Argentina). ພໍ່ຂອງເຂົາມີຊື່ວ່າ: *ແອຣເນສໂຕເກວາຣາ ລິນຊ໌ (Ernesto GUEVARA Lynch)* ມີອາຊີບເປັນວິສະວະກອນໂຍທາສ່ວນແມ່ມີຊື່ວ່າ: *ເຊເລຍ ເດີລາ ແຊຣນາ (Celia de la SERNA)* ເຈ ມີນ້ອງສາວຄົນໜຶ່ງຊື່ວ່າ: *ອານນາ ມາເຣຍ (Ana Maria)* ແລະ ນ້ອງຊາຍສອງຄົນຊື່: *ໂຣແບຣໂຕ (Roberto)* ແລະ *ຮວນມາຣຕິນ (Juan Martin)*

ໃນຊັ້ນປະຖົມ ເຈ ໄດ້ຮຽນໜັງສືທີ່ໂຮງຮຽນ " *ໂຮເຊເດີຊານມາຣຕິນ (Jose' de san Martin)* " ແລະ ໂຮງຮຽນ "*ມານູເອລ ແບລກຣາໂນ (Manuel Belgrano)*" ຊຶ່ງເປັນໂຮງຮຽນຫລວງເທົ່ານັ້ນ.

ສໍາລັບຊັ້ນມັດທະຍົມນັ້ນເຂົາຮຽນຕໍ່ທີ່ໂຮງຮຽນ "*ນາຊີໂອນານ ດີນ ຟູເນສ (Nacional Dean Funes)*" ທີ່ເມືອງກໍຣໂດບາ (Cordoba)

ຕະຫລອດໄລຍະສຶກສາຮໍ່າຮຽນ ເຈ ມັກຮຽນພາສາຝຣັ່ງເສດແລະອ່ານບົດກະວີ. ເຂົາເປັນຕົວຂອງຕົວເອງເປັນຄົນສຸຂຸມຮອບຄອບ, ມັກອ່ານປຶ້ມແລະເປັນຄົນຕັດສິນໃຈຢ່າງເດັດຂາດ. ຍ້ອນມີຄວາມອົດທົນຢ່າງແໜ້ນໜາມຮວເຂົາຈຶ່ງຢູ່ເໜືອໂຣກປະຈໍາຕົວຂອງເຂົາໄດ້ແລະສາມາດຫລິ້ນກິລາຮ່ວມກັບ *ໂຣແບຣໂຕ* ນ້ອງຊາຍເຂົາໄດ້.

ສີມືດ້ານການກິລາຂອງ ເຈ ກໍບໍ່ແມ່ນທໍາມະດາເຂົາມັກຫລິ້ນຣັກບີ (Rugby) ແລະໄດ້ເຂົ້າສັງກັດສະໂມສອນການກິລາອາຕາລາຢາ (Atalaya) ເຖິງແມ່ນຈະຫລິ້ນໄປແລະຂໍເວລານອກມາໃຊ້ເຄື່ອງຊ່ອຍຫາຍໃຈເປັນບາງຄັ້ງບາງຄາວ.

ແຕ່ສາມາດເວົ້າໄດ້ວ່າກິລາຣັກບີ ແລະ ບົດກະວີຂອງ *ໂບເດີແລ (Baudelaire)* ໄດ້ຫລໍ່ ຫລອມກ່າຍໃຈເຂົາໃຫ້ເຂັ້ມແຂງເໜືອຄົນທໍາມະດາ .

ທ້າຍປີ 1946 ຄອບຄົວ *ເກວາຣາ* ຈໍາເປັນຕ້ອງຍົກຍ້າຍຈາກກໍຣໂດບາໄປຢູ່ບົວໂນໄອເຣສ ເພາະຫລັງຈາກຮຽນຈົບມັດທະຍົມປາຍ ເຈ ໄດ້ເສັງເຂົ້າຮຽນຕໍ່ທີ່ສະຖາບັນແພດສາດຊຶ່ງຕັ້ງຢູ່ໃນນະຄອນຫລວງ.

ໃນຖານະນັກສຶກສາແພດສາດນັ້ນ ເຈ ສົນໃຈພະຍາດຂີ້ທູດແລະໂຣກເຂດຮ້ອນຕ່າງໆ. ພໍແຕ່ມີໂອກາດມີເວລາວ່າງເຂົາມັກຈະຂີ່ລົດຖີບທ່ອງທ່ຽວໄປຕາມເຂດແຂວງຕ່າງໆທາງພາກເໜືອແລະພາກຕາເວັນຕົກຂອງປະເທດເພື່ອເປັນການຄົ້ນຄວ້າສຶກສາຫາຄວາມຮູ້ຕ່າງໆ.

ຂະນະສຶກສາຢູ່ໂຮງຮຽນແພດສາດເຂົາໄດ້ມີຄວາມສໍາພັນແບບຊູ້ສາວກັບຍິງຄົນໜຶ່ງຊື່ວ່າ *ຊີຊີນາ ເຟເຣຣາ (Cicina Ferrera)* ນາງເປັນຄົນງາມ ແລະມີຖາ

ນະຮັ່ງມີ. ຄວາມງາມທາງຮູບນອກຂອງນາງນັ້ນບໍ່ແຕກຕ່າງຫຍັງກັບດອກໄມ້ທີ່ມີໄວ້ເອ້ຫ້ອງຮັບແຂກ ເພາະຄວາມຄິດຈິດໃຈນາງນັ້ນຫລົງເຫັນແຕ່ຄວາມຮັ່ງມີສີສຸກໂດຍບໍ່ສົນໃຈວ່າຄົນອື່ນຈະທຸກຍາກປາກຫມອງເຂົ້າຂາດແລງແກງຂາດຫມໍ້ ແນວໃດ. ຄວາມສຳພັນນັ້ນເປັນໄປແບບໄລຍະສັ້ນໆເທົ່ານັ້ນເພາະເຈມອງເຫັນວ່ານາງເປັນພຽງດອກກຸຫລາບງາມທີ່ບໍ່ຫອມຫວນຊວນດົມຜູ້ຍິງທີ່ຈະມາເປັນຄູ່ຊີວິດເຂົານັ້ນຕ້ອງເປັນຜູ້ທີ່ມີຈິດໃຈກວ້າງຂວາງເອື້ອເຟື້ອເພື່ອແຜ່ ແລະມີອຸດົມຄະຕິທີ່ເປັນມະນຸສທັມເຫັນອົກເຫັນໃຈເພື່ອນມະນຸດ.

14594

2

ບົນເສັ້ນທາງແຫ່ງການສະແຫວງຫາ

ໃນວັນທີ 29 ທັນວາ 1951 ເຈ ໄດ້ເດີນທາງໄກຮ່ວມກັບ *ອັນແບຣໂຕ ກຣານາໂດ*, ເພື່ອນຮຽນໜັງສືຕັ້ງແຕ່ຄາວປີສຸດທ້າຍໂຮງຮຽນມັດທະຍົມ. ພວກເຂົາຂີ່ລົດຈັກໄປຕາມຝັ່ງມະຫາສະໝຸດປາຊີຟິກ. ເຈ ມີຄວາມປາຖະໜາຢາກທ່ອງທ່ຽວໄປທົ່ວທະວີບອາເມຣິກາ. ເພື່ອເບິ່ງຊົມແລະສຶກສາຄົ້ນຄວ້າກ່ຽວກັບຄວາມຮຸ່ງເຮືອງສີວິໄລຂອງຊາວພື້ນເມືອງແລະໂບຮານຄະດີ. ພວກເຂົາທັງສອງທ່ອງທ່ຽວໄປຮອດປະເທດຈີເລ, ບຣາຊີນ, ເປຣູ, ໂກລົມ ເບຍແລະເວເນຊູເອນລາ. ເງິນໃຊ້ຈ່າຍໃນການເດີນທາງນີ້ພວກເຂົາໄດ້ມາຈາກການຮັບຈ້າງໃນອາຊີບຕ່າງໆເຊັ່ນ: ກຳມະກອນທ່າເຮືອ, ຄົນແບກຫາມ, ພໍ່ຄ້າເຄື່ອນທີ່, ນາຍແພດຮັບຈ້າງລາຄາຖືກ, ເປັນນັກມຸດນ້ຳ, ເປັນຄູສອນບານເຕະແລະອື່ນໆ. ຕໍ່ມາເຂົາຖືກໝາຍເກາະໃຫ້ສະເໜີຕົວເພື່ອເຂົ້າຮັບໃຊ້ວິຊາທະຫານ, ແຕ່ພາຍຫລັງໝໍກວດສຸຂະພາບແລ້ວນາຍ ໝໍບອກວ່າເຂົາເປັນທະຫານບໍ່ໄດ້ເພາະມີໂຣກຫືດປະຈຳຕົວ. ການຮໍ່າຮຽນຕົວຈິງໃຫ້ຄວາມຮູ້ອັນລ້ຳຄ່າແກ່ເຈ, ເຂົາໃຊ້ເວລາໃນການກະກຽມເສັງພຽງບໍ່ເທົ່າໃດເດືອນກໍ່ສາມາດສອບເສັງຜ່ານພົ້ນ11-12 ວິຊາໄດ້ເປັນຢ່າງດີເຂົາໄດ້ຮັບປະລິນຍາແພດໃນເດືອນ ມີນາ 1953 ເມື່ອມີອາຍຸພຽງ 25 ປີ.

ສອງເດືອນພາຍຫລັງທີ່ ເຈ ໄດ້ຮັບປະລິນຍາເຂົາກໍເດີນທາງທ່ອງທ່ຽວໄປຍັງປະເທດ *ໂບລີວີ* ໂດຍບໍ່ຫ່ວງໃຍ່ນຳຕຳແໜ່ງໜ້າທີ່ຂອງນາຍແພດຜູ້ໄດ້ປະລິນຍາເລີຍ, ເຖິງແມ່ນພໍ່ຂອງເຂົາຕ້ອງການໃຫ້ເຂົາເປັນນາຍແພດກໍຕາມ. ປະເທດໂບລີວີໃນຂະນະນັ້ນ, ມີການປົກຄອງໂດຍຄະນະລັດຖະບານທີ່ມີນະໂຍບາຍປະຕິຮູບຢ່າງເດັດດ່ຽວທີ່ສຸດໃນປະຫວັດສາດຂອງຊາວໂບລີວີເຊັ່ນວ່າ: ໄດ້ໂອນເອົາສະຖານທີ່ຂຸດ

ຄືນບໍ່ແຮ່ເອກະຊົນມາເປັນຂອງລັດ, ພ້ອມດຽວ ກັນກໍແຈກຈ່າຍທີ່ດິນເປົ່າວ່າງໃຫ້ແກ່ຊາວອິນດຽນຜູ້ບໍ່ມີດິນສຳລັບປູກຝັງ. ເຖິງແມ່ນວ່າ ເຈ ຍັງບໍ່ມີແນວຄິດປະຕິວັດ, ຍັງບໍ່ຊື່ນຊາບລັດທິມາກເລນິນກໍຈິງ, ແຕ່ຈິດໃຈອັນຮັກຄວາມເປັນທັມຂອງເຂົາ, ຈິດໃຈອັນກວ້າງຂວາງຢາກຊ່ວຍຜູ້ຕົກທຸກໄດ້ຍາກ, ຜູ້ຖືກກົດຂີ່ນັ້ນເຮັດໃຫ້ເຂົາຕ້ອງພາກພູມໃຈເປັນຢ່າງຍິ່ງເມື່ອມີການປະຕິຮູບຄັ້ງນີ້.

ຕະຫລອດໄລຍະທາງແຫ່ງການທ່ອງທ່ຽວຂອງເຂົານັ້ນ, ເຂົາໄດ້ປະສົບພົບພໍ້ກັບຄວາມທຸກຍາກລຳບາກ, ການດຳລົງຊີວິດແບບຂາດແຄນ, ການກົດຂີ່ຂູດຮີດປາສະຈາກ ຄວາມຍຸດຕິທຳ, ເຂົາຄິດໃນໃຈວ່າ: ເຂົາຕ້ອງຮັບຜິດຊອບຕໍ່ຄວາມອະຍຸດຕິທຳທັງໝົດ, ເຂົາຕ້ອງຊອກຫາມູນເຫດແຫ່ງຄວາມອະຍຸດຕິທຳແລະຄວາມທຸກຍາກປາກໝອງໃນສັງຄົມ ທັງໝົດ.

ທີ່ປະເທດ *ໂບລີວີ* ນັ້ນ, ເຈ ໄດ້ຮູ້ຈັກກັບ *ຣິກາຣໂດ ໂຣໂຣ. ໂຣໂຣ* ໄດ້ເວົ້າໃຫ້ເຂົາຟັງວ່າ: ສະພາບການຢູ່ປະເທດ *ກວາເຕມາລາ* ກໍວຸ້ນວາຍສັບສົນຫລາຍທີ່ສຸດ. ໄດ້ຍິນແນວນັ້ນ, ເຈ ກໍສຸດທີ່ກັງວົນໃຈ . ເຂົາມີຄວາມຮູ້ສຶກຢາກຮູ້ການປະຕິວັດຂຶ້ນມາ, ແລ້ວໃນທີ່ສຸດເຂົາກໍຕັດສິນໃຈໄປປະເທດ *ກວາເຕມາລາ*. ເຈ ມາຮອດ *ກວາເຕມາລາ* ໃນທ້ອງເດືອນ ມັງ ກອນ 1954.

ໃນເວລານັ້ນ, ປະເທດ *ກວາເຕມາລາ* ມີລັດຖະບານຊຸດໃຫມ່ຂຶ້ນກຳອຳນາດໂດຍມີ *ຈາໂກໂບ ອາເບັນ* ເປັນຜູ້ນຳ, ແນວທາງນະໂຍບາຍຂອງລັດຖະບານຊຸດນີ້ແມ່ນກ້າວໜ້າປະຕິວັດຢ່າງແທ້ຈິງ. ລັດຖະບານຊຸດນີ້ໄດ້ຮັບຄວາມສະໜັບສະໜູນຈາກບັນດານາຍທະຫານໜຸ່ມແລະກຸ່ມປັນຍາຊົນ. ເນື່ອງຈາກວ່າລັດຖະບານຊຸດນີ້ໄດ້ໂອນເອົາດິນໄຮ່ດິນນາອັນກວ້າງໃຫຍ່ໄພສານ



ຂອງພໍ່ຄ້າເອກະຊົນຊາວອາເມຣິກາ ຫຸ້ນສ່ວນໃນບໍລິສັດ "*ຢູໄນເຕັດ ຟຣູດ*" ແລ້ວໄດ້ເອົາມາແຈກຈ່າຍໃຫ້ຊາວອິນດຽນຜູ້ຂາດດິນປູກຝັງ. ການກະທຳແບບນີ້ສ້າງຄວາມບໍ່ພໍໃຈແລະແຕະຕ້ອງເຖິງຜົນປະໂຫຍດສ່ວນໃຫຍ່ຂອງຈັກກະພັດອາເມຣິກາຜູ້ອາໄສກອບໂກຍກິນນຳດິນສ່ວນນີ້ຫລາຍທີ່ສຸດ. ບໍລິສັດດັ່ງກ່າວນີ້ແມ່ນບໍລິສັດຫຸ້ນສ່ວນຂອງພວກເສດຖີອາເມຣິກາ. ແມ່ນແຕ່ລັດຖະມົນຕີຕ່າງປະເທດສະຫະລັດອາເມຣິກາໃນສະໄຫມນັ້ນກໍຍັງມີສ່ວນຮ່ວມຢູ່ດ້ວຍ. ເມື່ອເລື່ອງມັນເກີດຂຶ້ນແນວນັ້ນ, ສະຫະລັດອາເມຣິກາໂດຍມີ *ໄອເຊັນ ຮາວ* ເປັນປະທານາທິບໍດີ, ກໍໄດ້ຕອບໂຕ້ການກະທຳຂອງລັດຖະບານກ້າວໜ້າໂດຍມີການມອບໝາຍໃຫ້ໜ່ວຍສືບລາຊະການລັບສູນກາງຫລືຊີໄອເອຖອກເທດອນລາຊື້ຈ້າງຈອບອອຍເອົາຄົນຂາຍຊາດຈຳນວນໜຶ່ງໃຫ້ກໍ່ການລັດຖະປະຫານຂຶ້ນ, ໂດຍສວຍໂອກາດເອົາເວລາຊຶ່ງສະພາບການກຳລັງຫຍຸ້ງຍາກ, ການຄອງຊີບປະຊາຊົນກໍພວມຝືດເຄືອງ, ສ້າງຄວາມປັ່ນປ່ວນກ່າວຫາບຖິ້ມໂຈມຕີລັດຖະບານຂອງ *ຈາໂກໂບ*, ກົນອຸບາຍອັນເລິກແລບຂອງພວກຈັກກະພັດນັ້ນສາມາດສ້າງຄວາມແຕກແຍກ, ຄວາມບໍ່ເຊື່ອໝັ້ນຂອງປະຊາຊົນຕໍ່ລັດຖະບານ. ຈົນຮອດວັນທີ 18 ມິຖຸນາ 1954, ກອງກຳລັງທະຫານຮັບຈ້າງພາຍໃຕ້ການນຳພາຂອງ *ກາສຕິນໂຢ ອາມາສ*, ໂດຍມີຊີໄອເອໜຸນຫລັງກໍເປີດສາກຮຸກຮານຢ່າງເປີດແປນ.



ນະທີ່ນີ້... ເຈ ໄດ້ຂຽນບົດຄວາມບົດໜຶ່ງຊື່

"ເຮົາໄດ້ເຫັນຄວາມຫລົ້ມຈົມຂອງ *ຈາໂກໂບ ອາເບັນ*" ໃນນັ້ນເຊົາໄດ້ສະແດງອອກຊຶ່ງເຈດຈຳນົງທີ່ຈະຕໍ່ສູ້ຄຽງບ່າຄຽງໄຫລ່ກັບຊາວອາເມຣິກາຕ້ານພວກຈັກກະພັດໃນກວາເຕມາລາ. ເຊົາມີຄວາມເຫັນຕື່ມອີກວ່າ: ຊາວອາເມຣິກາທັງຫມົດຕ້ອງສາມັກຄີເປັນຈິດຫນຶ່ງໃຈດຽວກັນຕໍ່ສູ້ກັບກຸ່ມປະຕິການແລະພວກນາຍທຶນຜູກຂາດອາເມຣິກາເຫນືອ, ພວກຈັກກະພັດ.ໃນການຕໍ່ສູ້ເພື່ອປົກປັກຮັກສາອຳນາດປະຕິວັດນັ້ນ, ເຈ ກໍເປັນຜູ້ຫນຶ່ງຊຶ່ງເຂົ້າຮ່ວມການຕໍ່ສູ້. ຍາມໃດເຊົາກໍປຸກລະດົມຈິດໃຈປະຊາຊົນໃຫ້ກ້າປືນຕໍ່ສູ້: "ພວກສະຫາຍຕ້ອງຕໍ່ສູ້ ! ພວກສະຫາຍຕ້ອງຕໍ່ສູ້ !"

ໃນລະຫວ່າງທີ່ມີການຖິ້ມລະເບີດໃສ່ຕົວເມືອງຢ່າງຫນັກຫນ່ວງນັ້ນ ເຈ ກໍໄດ້ຊ່ວຍລຳ ລຽງອາວຸດຢ່າງສຸດໄພທີ່ສຸດ. ເມື່ອບໍ່ສາມາດເຄື່ອນໄຫວໄດ້ດ້ວຍໂຕຜູ້ດຽວ, ເຈ ຈຶ່ງສົມທົບ ກັບນັກປະຕິວັດພະນັກງານໃນທູດ *ອາກຊັງຕິນ* ປະຈຳ *ກວາເຕມາລາ* ດຳເນີນການຮັກສາຫມາກຜົນອຳນາດການປົກຄອງຂອງ ຈາໂກໂບ. ທີ່ປະເທດ *ກວາເຕມາລາ* ນີ້, ເຈ ຍັງໄດ້ຮູ້ ຈັກກັບ *ອັນໂຕນີໂອ ໂລເປຊ ແຟຣນັນເດຊ* ນັກປະຕິວັດຜູ້ຫນຶ່ງຊຶ່ງເຄີຍຮ່ວມຂະບວນການຕໍ່ສູ້ ກັບ *ຟີແດນ ກາສໂຕຣ*, ໃນປະເທດກູບາມາແລ້ວ, ແຕ່ເນື່ອງຈາກຂະບວນການດັ່ງກ່າວບໍ່ປະ ສົບຜົນສຳເລັດນັກປະຕິວັດຫລວງຫລາຍຖືກຈັບ. ຈຳນວນຫນຶ່ງກໍຖືກຂ້າຕາຍ, ຈຳນວນຫນຶ່ງ ກໍໂຕນອອກມານອກປະເທດ *ອັງໂຕນີໂອ* ໄດ້ເລົ່າເຫດການຕ່າງໆລວມທັງເລື່ອງລາວຂອງ *ຟີ ແດນ* ໃຫ້ ເຈ ຟັງຢ່າງຈັບອົກຈັບໃຈ.







ໃນ *ກວາເຕມາລາ* ນີ້ , ເຈ ພະຍາຍາມທຸ່ມເທທັງກາຍແລະໃຈເພື່ອອຸ້ມຊູກຳລັງຂອງ ຈາໂກໂບ ຈົນສຸດກຳລັງ. ເຂົາບໍ່ຄອງຄອຍສິ່ງຕອບແທນໃດໆ, ຂໍພຽງໃຫ້ປະຊາຊົນໄດ້ຫລຸດພົ້ນອອກຈາກແອກແຫ່ງການກົດຂີ່,ແອກແຫ່ງຄວາມທຸກໂທດ. ເຖິງແມ່ນປະຕິວັດຈະເປັນຝ່າຍປະລາໄຊ, ເຖິງແມ່ນວ່າເຂົາຕ້ອງຫມົດຄວາມສາມາດທີ່ຈະເຮັດຫລ້ອນພາລະກິດອັນນີ້. ຫມາຍຄວາມວ່າການຕໍ່ສູ້ຄັ້ງນີ້ມັນເຮັດໃຫ້ເຂົາຕ້ອງລົ້ມຟຸບລົງ. ແຕ່ມັນເປັນລົ້ມລົງເທື່ອທີຫນຶ່ງເພື່ອລຸກຂຶ້ນໃຫມ່ໃນເທື່ອທີສອງ... ສາມແລະຕໍ່ໆໄປ.

ປະສົບການຄັ້ງນີ້ ໃຫ້ບົດຮຽນແກ່ເຂົາວ່າ: ການບໍ່ເຊື່ອຫມັ້ນຕໍ່ກຳລັງຂອງປະຊາຊົນແມ່ນຄວາມຜິດພາດ. ຖ້າປະຊາຊົນຖືກຕິດອາວຸດໃຫ້ປ້ອງກັນຊາດແລ້ວ, ບໍ່ມີກຳລັງອັນໃດຈະສາມາດແຫກຜ່າວົງລ້ອມຂອບເຂດປະເທດເຂົ້າມາໄດ້ເປັນອັນຂາດ. ຂະນະດຽວກັນເຂົາຍັງມີຄວາມເຊື່ອຫມັ້ນຢ່າງຕາຍໃຈວ່າ: ມີແຕ່ກຳປືນລຸກຂຶ້ນຕໍ່ສູ້ວິທີດຽວເທົ່ານັ້ນຈະສາມາດ ດັບສູນພວກຈັກກະພັດໄດ້.

ເມື່ອເຂົາບໍ່ສາມາດເຄື່ອນໄຫວໃນ *ກວາເຕມາລາ* ອີກຕໍ່ໄປແລ້ວ, ເຈຈຶ່ງຕັດສິນໃຈຂຶ້ນລົດໄຟມຸ່ງຫນ້າສູ່ປະເທດ *ເມັກຊິໂກ.*

ເຈ ໄດ້ເດີນທາງມາຮອດປະເທດ *ເມັກຊິໂກ* ໃນລະຫວ່າງເດືອນ ກໍລະກົດ-ສິງຫາ 1954.



ການພັກພາອາໄສໃນປະເທດ *ເມັກຊິໂກ* ນີ້ໄດ້ປ່ຽນໂອກາດໃຫ້ ເຈ ມີເວລາໃນການສຶກສາຄົ້ນຄວ້າທິດສະດີການເມືອງ, ທິດສະດີປະຕິວັດຕ່າງໆ. ເຂົາສາມາດຕິດອາວຸດແກ່ແນວຄິດຂອງເຂົາໃຫ້ກ້າແກ່ນແໜ້ນໜນຮອ. ປະເທດ *ເມັກຊິໂກ* ໃນເວລານັ້ນພວມກ້າວເດີນຕາມແນວທາງປະຕິຮູບສັງຄົມແບບຄ່ອຍເປັນຄ່ອຍໄປ, ເຖິງແມ່ນວ່າອຳນາດປະຕິວັດຈະມີມາເປັນເວລາສິບກວ່າປີແລ້ວ. ເຈໄດ້ເວົ້າວ່າ: "ການປະຕິວັດຂອງ *ເມັກຊິໂກ* ໄດ້ຕາຍໄປແລ້ວ, ມັນໄດ້ຕາຍໄປດົນນານຈົນເຮົາຊິລືມໄປວ່າ: *ເມັກຊິໂກ* ບໍ່ເຄີຍມີການປະຕິວັດມາກ່ອນ".

ໂຣກຫືດ, ເງົາທີ່ສອງຂອງເຂົານັ້ນເລີ່ມອາລະວາດອີກເທື່ອໜຶ່ງ. ມັນເຮັດໃຫ້ເຂົາ ຕ້ອງໄດ້ເຂົ້າຮັກສາໂຕໃນໂຮງພະຍາບານ. *ຮິນດາ* ເປັນນາງພະຍາບານສາວຊາວ *ເປຣູ* ຜູ້ປິ່ນ ປົວບົວລະບັດເຂົາຢ່າງເອົາໃຈໃສ່. ຄວາມໃກ້ຊິດສະໜິດສະໜົມແລະຄວາມພໍໃຈເຊິ່ງກັນແລະກັນນັ້ນມັນມັກພາໃຫ້ເກີດຄວາມຮັກສະເໝີ. ແລ້ວພວກເຂົາທັງສອງກໍ່ຮັກກັນ.

ເຖິງນາງຈະອາຍຸແກ່ກວ່າເຂົາແຕ່ອາຍຸບໍ່ມີຄວາມສຳຄັນຫຍັງສຳລັບຄົນທີ່ມີຄວາມຮັກຕໍ່ກັນແລະປາຖະໜາທີ່ຈະຢູ່ຮ່ວມກັນ.

ທີ່ປະເທດ *ເມັກຊິໂກ* ນີ້ , ເຈ ໄດ້ພົບກັບ *ອັນໂຕນີໂອ ໂລເປຊ ແຟຣນັນເດຊ* ອີກເທື່ອ



ໜຶ່ງ. *ອັນໂຕນີໂອ* ພາເຂົາໄປຮູ້ຈັກກັບ *ຣາອູນ ກາສໂຕຣ*, ນ້ອງຊາຍຂອງ *ຟີແດນ ກາສໂຕຣ* ແລະ ໃນເວລາຕໍ່ມາ ເຈ ກໍໄດ້ມີໂອກາດພົບກັບ *ຟີແດນ*. ພວກເຂົາໄດ້ນັ່ງລົມກັນໝົດຄືນຊອດແຈ້ງ. ຈົນຮອດຮຸ່ງອາຣຸນຂອງມື້ຕໍ່ມາ ເຈ ກໍກາຍເປັນສະມາຊິກໃໝ່ຜູ້ໜຶ່ງໃນຂະບວນການຟີແດນ. ເຈ ໄດ້ບັນທຶກກ່ຽວກັບເລື່ອງນີ້ວ່າ:

"ມັນເປັນຄວາມຈິງອີ່ຫລີວ່າ: ພາຍຫລັງຊຶ່ງເຮົາໄດ້ມີປະສົບການຈາກການທ່ອງທ່ຽວໃນອາເມຣິກາລາຕິນແລະຄັ້ງຫລ້າສຸດແມ່ນຢູ່ *ກວາເຕມາລາ*, ມັນບໍ່ຈຳເປັນຫຍັງທີ່ຈະໃຊ້ເວລາຍາວນານໃນການອອນເອົາເຮົາເຂົ້າຮ່ວມການປະຕິວັດບໍ່ວ່າບ່ອນໃດກໍຕາມທະແນມ ແຕ່ແມ່ນປາບປາມພວກກົດຂີ່ຂູດຮີດ, ເຖິງຢ່າງໃດກໍດີ. *ຟີແດນ* ກໍເປັນຜູ້ໜຶ່ງຊຶ່ງສາມາດເອົາຊະນະໃຈເຮົາດ້ວຍຄຸນລັກສະນະອັນຍອດຢ້ຽມຂອງເຂົາ"

ຟີແດນ ກາສໂຕສ ເປັນນັກກົດໝາຍທີ່ມີຊື່ເຕັມວ່າ: *Dr. Fidel castro Ruz.* ດ້ວຍໄວ 26 ປີ ເຂົາໄດ້ນຳພາຂະບວນນັກປະຕິວັດຈຳນວນ 125 ຄົນ ບຸກຍຶດຄ້າຍ

ມົງກາດາ (Moncada) ເມື່ອຕອນເຊົ້າມືດວັນທີ 26 ກໍລະກົດ 1953 ທີ່ແຂວງຕາເວັນອອກ (Oriente) ຂອງເກາະກູບາ. ຊຶ່ງມີກຳລັງທະຫານປະຈຳການຈຳນວນເຫນືອກວ່ານັບ 10 ກວ່າເທົ່າຕົວ. ການບຸກໂຈມຕີຄັ້ງນີ້ມີຄົນເສຍຊີວິດກວ່າ 80 ຄົນ.

ເຖິງແມ່ນການເປີດສາກປະຕິວັດດ້ວຍກຳລັງອາວຸດຈະບໍ່ປະສົບຜົນສຳເລັດ *ດຣ. ຟີ ແດນ ກາສໂຕຣ* ໃນຖານະຈຳເລີຍແລະ ທະນາຍຄວາມໃຫ້ກັບຂະບວນການກໍໄດ້ຕໍ່ສູ້ທາງດ້ານກົດໝາຍຈົນສາມາດປ້ອງກັນນັກປະຕິວັດທີ່ຖືກກັງຂັງປະມານ 1/3 ໃຫ້ລອດພົ້ນຈາກການຖືກປະຫານຖືກຕັດອິດສະຫລະພາບຕະຫລອດຊີວິດແຕ່ຖືກເນລະເທດໄປທີ່ປະເທດ *ເມັກ ຊີໂກ* .



24 / VII

ເຮືອປະຫວັດສາດກຣານມາ



3

ຮ່ວມການປະຕິວັດກູບາ

ໃນວັນທີ 25 ພະຈິກ1956 ກຸ່ມນັກປະຕິວັດຈຳນວນ82ຄົນໄດ້ລົງເຮືອ *ກຣານມາ* ທີ່ທ່າ*ຕຸກສະປານ* ປະເທດເມັກຊີໂກ. ຮອງຈາກ *ຟີແດນ* ສອງຄົນທຳອິດທີ່ອາສາສະໝັກລົງເຮືອກໍແມ່ນ *ເຈ* ແລະ*ຣາອູນ.* ເພື່ອພາລະກິດປະຕິວັດ ເຈ ຍອມເສຍສະຫຼະເມຍຄົນໜຶ່ງ. ການຈາກໄປຂອງເຂົາເພື່ອປົດປ່ອຍປະເທດກູບາເຮັດໃຫ້ເຂົາຕ້ອງຖິ້ມປະແມ່ຍິງຄົນໜຶ່ງຄື ນາງ*ຮິນດາ ກາເດຍ* ຊຶ່ງເປັນເມຍແລະເດັກນ້ອຍຜູ້ຍິງອີກຄົນໜຶ່ງຊຶ່ງເປັນລູກຂອງພວກເຂົາ.

"ຂ້ອຍບໍ່ເສຍໃຈເລີຍທີ່ຕ້ອງສູນເສຍຜົວໃຫ້ກັບການປະຕິວັດກູບາກົງກັນຂ້າມຂ້ອຍມີຄວາມພາກພູມໃຈໝາຍທີ່ສຸດ" ເມຍຂອງເຂົາວ່າດັ່ງນັ້ນ.

ການເດີນເຮືອຄັ້ງນັ້ນກິນເວລາ 7 ວັນໂດຍຜ່ານຂວ້າມອ່າວເມັກຊີໂກແລະທະເລກາຣີບຽນ. ມັນເປັນວັນຄືນທີ່ຫຍຸ້ງຍາກລຳບາກແລະໜ້າລຳຄານເພາະນອກຈາກຈະມີພາຍຸຝົນແລະຄື້ນຟອງທະເລແລ້ວເຂົາເຈົ້າຍັງຂາດຄວາມຊຳນານໃນການເດີນເຮືອ ສະບຽງອາຫານແລະຢຸກຢາກໍຖືກນ້ຳແຊ່ຈົນເສຍຄຸນຈຳເປັນຕ້ອງໄດ້ໂຍນຖິ້ມພວກນັກເດີນທາງຕ່າງກໍເມົາຄື້ນຮາກແອະຮາກແອ່ນປານໄກ່ເມົາຄ້ອນ.

ຮອດວັນທີ 2 ທັນວາ1956 ເຮືອ*ກຣານມາ*ຈຶ່ງເຂົ້າຈອດທຽບຝັ່ງ*ລາສ ໂກໂຣຣາດາສ* ຂອງແຂວງ*ໂອຣຽນເຕ* ປະເທດກູບາ. ຍ້ອນຂາດປະສົບການພໍແຕ່ຂຶ້ນຝັ່ງມາດ້ວຍຄວາມອິດອ່ອນຫິວໂຫຍພວກເຂົາກໍພາກັນນອນຢາຍເດຍລະດາດນຳຊາຍຫາດແລະປ່າອ້ອຍແຄມທະເລບາງຄົນກໍຍ່າງເລາະໄປມາປານນັກທ່ອງທ່ຽວ. ການປະຣອຍຕີນການຖິ້ມຂີ້ອ້ອຍແລະປະປ່ອຍໃຫ້ຊາວນາຜູ້ພາທາງໄປ

ມາຕາມໃຈຊອບໄດ້ກາຍເປັນຄວາມທາຍະນະອັນໃຫຍ່ຫຼວງຂອງພວກເຂົາໃນເວລາຕໍ່ມາ. ແນວຄິດຈິດໃຈອັນກ້າແກ່ນທົນຮວແໜ້ນແລະອຸດົມການອັນສູງສົ່ງເປັນປັດໄຈອັນສຳຄັນຂອງການຕໍ່ສູ້ ແຕ່ສິ່ງທີ່ຂາດບໍ່ໄດ້ອີກອັນໜຶ່ງກໍຄືຍຸດທະວິທີໃນການສູ້ຮົບນັ້ນເອງ.

ສາມວັນພາຍຫຼັງຂຶ້ນຍຮບຝັ່ງກຳລັງປະຕິວັດທີ່ຍັງອ່ອນເປ້ຍເພຍແຮງແລະຂາດສະຕິລະວັງຕົວກໍຖືກກຳລັງລັດຖະບານ *ບາຕິສຕາ* ໂຈມຕີທີ່ເຂດ*ອະເລເກຣຍ ເດີປີໂອ.* ຜົນຮ້າຍຕິດຕາມມາກໍຄືນັກປະຕິວັດໃໝ່ຈຳນວນ 60 ຄົນຖືກຂ້າຕາຍສ່ວນທີ່ເຫຼືອກໍແຕກກະຈັດກະຈາຍໄປຄົນທີ່ຄົນທາງ. ໃນໄລຍະເລີ່ມຕົ້ນສົງຄາມກອງຫຼອນນັ້ນ ເຈເປັນທັງນາຍແພດແລະນັກຮົບໄປພ້ອມກັນ. ພໍແຕ່ສຽງປືນສັດຕູທີ່ມາດັກສະກັດລ່ວງໜ້າທີ່ປ່າອ້ອຍແຕກຂຶ້ນ ເຈ ກໍປະສົບກັບບັນຫາໜັກໃນການຕັດສິນໃຈໃນຄວາມເປັນນາຍແພດແລະນັກຮົບ.ໃນເວລາມີການລະດົມຍິງເພື່ອດັບສູນກຳລັງປະຕິວັດໃນປ່າອ້ອຍນັ້ນນັກຮົບຜູ້ໜຶ່ງໄດ້ຖິ້ມປະຫີບລູກປືນໄວ້ກັບປາຍຕີນ ເຈ ທັງຫີບລູກປືນແລະຫີບຢາປົວພະຍາດຕ່າງກໍມີນ້ຳໜັກເກີນກວ່າຄົນຜູ້ດຽວຈະແບກເອົາໄປນຳໄດ້. ຜ່ານການຕໍ່ສູ້ໃນແນວຄິດຄາວໜຶ່ງ ເຈ ຕັດສິນໃຈເລືອກແບກເອົາຫີບລູກປືນ. ເຂົາເວົ້າໃນເວລາຕໍ່ມາວ່າ "*ກະສຸນປືນຈະເຮັດໃຫ້ນັກຮົບກອງຫຼອນລອດຊີວິດໄດ້ດີກວ່າການໃສ່ຢາ*".

ບັ້ນຮົບທຳອິດນີ້ ເຈ ບາດເຈັບແຕ່ພຽງເລັກນ້ອຍແຕ່ເຂົາກໍຄິດວ່າຕົວເອງເຈັບໜັກໜາສາຫັດຄືຈະເອົາຕົວບໍ່ລອດ.ເຂົານອນບໍ່ເໜັງບໍ່ຕີງຢູ່ຕັ້ງດົນ ແຕ່ພໍຄິດເຫັນການຕາຍຢ່າງວິລະຊົນຂອງຕົວລະຄອນເອກໃນນິຍາຍຂອງ *ແຈັກ ລອນດອນ* ເຂົາຈຶ່ງເກີດມີຄວາມຄິດຢາກຕໍ່ສູ້ຈົນລົມຫາຍໃຈຮູດສຸດທ້າຍ. ພາຍຫຼັງຕັ້ງສະຕິດີງແລ້ວເຂົາກໍພິກຂຶ້ນມາຍິງຕອບໂຕ້ສັດຕູ ກ່ອນທີ່ຈະແຫກວົງປິດລ້ອມ ໜີໄປທາງປ່າອ້ອຍພ້ອມກັບໝູ່ສີ່ຄົນ.

ເພື່ອເປັນການສະດວກໃນການຕິດຕາມຫາກຸ່ມຂອງ*ຟີເດນ* ທີ່ຫຼົງກັນໄປຄົນລະ









ທາງກຸ່ມຂອງເຈໄດ້ເອົາປືນເຫຼັກຍາວ8ກະບອກແລະຄົນເຈັບຜູ້ໜຶ່ງຝາກໄວ້ກັບຊາວນາຄອບຄົວໜຶ່ງ. ຈາກນັ້ນກໍປອມຕົວເປັນຊາວນາອອກຕິດຕາມຫາພັກພວກ. ຍ້ອນການອອກໜ້າພາທາງຂອງຊາວນາຄົນໜຶ່ງກຸ່ມຂອງເຈ ກໍຈຶ່ງໄດ້ພົບກັບກຸ່ມຂອງ *ພີແດນ* ໃນຂະນະທີ່ຊາວນາທີ່ປາກບອນຈຳນວນໜຶ່ງກໍປ່ອຍຂ່າວເລື່ອງຄົນເຈັບແລະປືນ8ກະບອກໃຫ້ທະຫານຝ່າຍລັດຖະບານຮູ້ຈັກກໍຈຶ່ງມາຈັບເອົາຄົນເຈັບແລະເກັບກວາດອາວຸດຍຸດທະພັນນັ້ນໄປໝົດ.

ພໍຊາບຂ່າວເລື່ອງນີ້ *ພີແດນ* ໂມໂຫສຸດຂີດ. ເຂົາສຳຫຼວດກຸ່ມຂອງ ເຈ ວ່າ: "*ພວກສູເຈົ້າຍັງບໍ່ໄດ້ຊຳລະລາຄາຄວາມຜິດພາດທີ່ພວກເຈົ້າໄດ້ກໍ່ຂຶ້ນໃນຄັ້ງນີ້ ເພາະລາຄາທີ່ຕ້ອງຊົດໃຊ້ໃນການປະຖິ້ມອາວຸດຂອງຕົນ ພາຍໃຕ້ສະພາບການທີ່ອັນຕະລາຍເຊັ່ນນັ້ນກໍຄືຊີວິດຂອງພວກເຈົ້າເອງ.ການຈະເອົາຕົວລອດຈາກເງື້ອມມືຂອງສັດຕູມີພຽງສິ່ງດຽວເທົ່ານັ້ນຄືປືນຂອງພວກເຈົ້າເອງ ສະນັ້ນການປະຖິ້ມມັນຈຶ່ງເປັນອາດສະຍາກຳແລະເປັນສິ່ງໂງ່ຈ້າທີ່ສຸດ*". ຄຳເວົ້າຂອງ*ພີແດນ*ປະໂຫຍກນີ້ຄຶງຝັງໄວ້ໃນຫົວ ເຈ ຮອດມື້ຕາຍ.

ຫຼັງຈາກນັ້ນໜ່ວຍກອງຫຼອນນ້ອຍໆກໍປັບປຸງຕົວເອງຂຶ້ນເລື້ອຍໆ. ພວກເຂົາໄດ້ເຄື່ອນໄຫວສ້າງເຂດທີ່ໝັ້ນຕາມບໍລິເວນສາຍພູ*ມາເອສຕຣາ*. ຊາວນາທັງຫຼາຍໄດ້ຮັບການປຸກລະດົມຂົນຂວາຍເຂົ້າຮ່ວມຂະບວນການປະຕິວັດນັບມື້ນັບຫຼາຍຂຶ້ນ. ໃນຕອນທ້າຍຂອງເດືອນ ມັງກອນ 1957 ນັ້ນ ພວກເຂົາໄດ້ຮັບໄຊຊະນະຄັ້ງທຳອິດໃນການ ບຸກໂຈມຕີຄ້າຍທະຫານນ້ອຍໆແຫ່ງໜຶ່ງຢູ່ທ້ອງຖິ່ນ *ລາປລາຕາ*. ຕໍ່ໄຊຊະນະໃນຄັ້ງນີ້ *ພີແດນ* ໄດ້ເວົ້າວ່າ: "*ແຕ່ກ່ອນພວກເຮົາມີປືນພຽງ7ກະບອກແລະກໍບໍ່ໄດ້ຮັບໄຊຊະນະແຕ່ປະການໃດ. ດຽວນີ້ພວກເຮົາມີປືນ12ກະບອກແລ້ວຈຶ່ງໄດ້ຮັບໄຊຊະນະອັນເປັນກຽດໃນປະຫວັດການ*".

ຜົນຂອງການສູ້ຮົບໃນຄັ້ງນັ້ນຄືຝ່າຍປະຕິວັດດັບສູນສັດຕູໄດ້2ຄົນໄດ້ຮັບບາດເຈັບ 5 ຄົນ ຈັບເປັນສະເລີຍ 3 ຄົນ ໜີໄປໄດ້ 5 ຄົນ ຍຶດອາວຸດໄດ້ 8 ກະ ບອກພ້ອມກະສຸນ

1.000ລູກ (ກະສຸນທີ່ໃຊ້ໃນການໂຈມຕີແມ່ນ500ລູກ. ສະເລີຍເສິກແລະທະຫານບາດເຈັບໄດ້ຮັບການປະຕິບັດຕໍ່ເປັນຢ່າງດີ. ຜ່ານການເຜີຍແຜ່ແນວທາງການຕໍ່ສູ້ສະເລີຍທັງໝົດຖືກປ່ອຍຕົວໄປມີຄົນໜຶ່ງໃນຈຳນວນນັ້ນເກີດຄວາມເຫຼື້ອມໃສການປະຕິວັດຈຶ່ງສະໝັກເຂົ້າຮ່ວມຂະບວນການ.ນັບວ່າເປັນການເລີ່ມຕົ້ນທີ່ດີ ເຈ ໄດ້ເວົ້າກ່ຽວກັບບັນຫານີ້ວ່າ: " *ສິ່ງທີ່ຍາກທີ່ສຸດກໍຄືການລະດົມເອົາສະມາຊິກໃໝ່ເຂົ້າມາຮ່ວມຂະບວນການດົນໆຈຶ່ງມີສອງສາມຄົນສະເໜີໜ້າເຂົ້າມາແຕ່ບາງຄົນເຂົ້າມາແລ້ວຊ້ຳພັດຂໍລາອອກຍ້ອນປະສົບກັບຄວາມລຳບາກກາກກຳ. ໃນການສູ້ຮົບຂັ້ນຕົ້ນມັນເປັນສິ່ງຫຍຸ້ງຍາກອີ່ຫຼີແຕ່ບັນຫາການປຸກລະດົມໃນໝູ່ຊາວນາກໍບໍ່ແມ່ນເລື່ອງງ່າຍຄືກັນ*".

ຍ້ອນແນວນັ້ນກຳລັງປະຕິວັດຈຶ່ງເຫັນຄຸນຄ່າຂອງນັກຮົບແຕ່ລະຄົນ. ໃນໄລຍະເລີ່ມຕົ້ນນັ້ນພວກເຂົາກໍພະຍາຍາມຫຼີກລ່ຽງການປະທະກັບກອງກຳລັງລັດຖະບານຢ່າງສຸດຂີດ ພວກເຂົາບໍ່ຍອມຕໍ່ສູ້ແບບສ່ຽງໄພ ແບບມອງບໍ່ເຫັນທາງຊະນະ.

ການສະໜັບສະໜຸນຂອງຊາວນາໃນໄລຍະເລີ່ມຕົ້ນນັ້ນເຖິງຈະມີໜ້ອຍແຕ່ກໍມີຄວາມໝາຍຫຼາຍທີ່ສຸດສຳລັບກຳລັງກອງຫຼອນ. ການທີ່ມີຊາວນາເຂົ້າຮ່ວມໃນຂະບວນການຍິ່ງເປັນການດີເພາະນອກຈາກມັນຈະເປັນການດຶງດູດເອົາສະບຽງອາຫານຈາກພໍ່ແມ່ພີ່ນ້ອງຂອງເຂົາແລ້ວ ມັນກໍຍັງເປັນການດຶງດູດການອຸ້ມຊູຍູ້ໜູນຈາກມວນຊົນຊາວໄຮ່ນາຕື່ມອີກ. ເມື່ອພວກເຂົາເປັນໃຈກຳລັງປະຕິວັດແລ້ວພວກເຂົາກໍຈະນຳຂ່າວຄາວຕ່າງໆມາບອກຢູ່ເລື້ອຍໆ.ການຕິດແທດພົວພັນກັບຊາວໄຮ່ນາເປັນທັງຄວາມສຳຄັນແລະຈຳເປັນທີ່ຂາດບໍ່ໄດ້ ເຈ ໄດ້ເວົ້າເຖິງບັນຫານີ້ວ່າ: " *ພວກເຮົາເລີ່ມມີຄວາມສຳນຶກຫຼາຍຂື້ນກ່ຽວກັບຄວາມຈຳເປັນໃນການປ່ຽນແປງການດຳລົງຊີວິດຂອງຊາວນາ. ການສະເໜີຄວາມຄິດເລື່ອງປະຕິຮູບທີ່ດິນເປີດແປນອອກເລື້ອຍໆການຮັດແໜ້ນຄວາມສາມັກຄີກັບຊາວໄຮ່ນາກໍທະວີຄູນຂື້ນເລື້ອຍໆ. ມັນບໍ່ແມ່ນການເລົ່າທິດສະດີອີກຕໍ່ໄປແລ້ວແຕ່ມັນເປັນການຫັນເຂົ້າສູ່ທາດແທ້ພື້ນຖານແຫ່ງການດຳລົງຊີວິດຂອງພວກເຮົາ. ກຳລັງປະຕິວັດແລະາວນາກໍຈະເຊື່ອມຍືງ*

ເຂົ້າກັນພ້ອມກັນຕໍ່ສູ້ເພື່ອອຸດົມຄະຕິອັນດຽວກັນບົນເສັ້ນທາງອັນຍາວໄກແລະລະອຽດລະອໍ້ຽວຂອງການປະຕິວັດ ໂດຍບໍ່ຄຳນຶງວ່າມື້ໃດການປະຕິວັດຈະສົມຫວັງບໍ່ຄຳນຶງວ່າມື້ໃດຄຳເວົ້າເຫຼົ່ານັ້ນຈະກາຍເປັນຈິງຂຶ້ນມາ".

ການສ້າງເຂດທີ່ໝັ້ນແລະປົກປັກຮັກສາເຂດຍຶດຄອງໄວ້ຈາກການບຸກໂຈມຕີຂອງສັດຕູ ນອກຈາກຈະເປັນການປະກາດສົງຄາມຢ່າງເປີດແປນກັບລັດຖະບານແລ້ວມັນຍັງເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ກຳລັງກອງຫຼອນຕື່ມອີກ.ພຽງໄລຍະສອງສາມເດືອນຕໍ່ມາ ກຳລັງກອງຫຼອນກໍສາມາດຂົນຂວາຍເອົາສະມາຊິກໃໝ່ໄດ້ຫຼາຍສິບຄົນຍ້ອນແນວນັ້ນຈຶ່ງມີການປະກາດໃຊ້ກົດໝາຍໃນເຂດປົດປ່ອຍຂອງຝ່າຍປະຕິວັດ. ການເຄື່ອນໄຫວຕົວຈິງເຖິງຈະເປັນພຽງໄລຍະສັ້ນໆແຕ່ກໍໃຫ້ບົດຮຽນອັນດີເດັ່ນແກ່ກອງຫຼອນທຸກຄົນກ່ຽວກັບເລື່ອງນີ້ ເຈ ຖອດຖອນບົດຮຽນໄວ້ວ່າ:

"ພາຍຫຼັງອາໄສຢູ່ເຊຍຣາມາເອສຕຣາໄດ້ພຽງສອງສາມເດືອນພວກເຮົາກໍມີຄວາມຊຳນິຊຳນານ. ພວກເຮົາມອງເຫັນຂໍ້ຂາດຕົກບົກຜ່ອງທີ່ພວກເຮົາເຄີຍມີມາໃນລະຫວ່າງການເລີ່ມຕົ້ນຕໍ່ສູ້ ການເອົາເຮືອກຣານມາຂຶ້ນຝັ່ງ.ຍາມນັ້ນພວກເຮົາຍັງຂາດ

ວິໄນ ເມື່ອຖືກໂຈມຕີຢ່າງບໍ່ຄາດຝັນກໍປັບຕົວເອງບໍ່ທັນ ນອກນັ້ນຍັງມີຄວາມຄອນແຄນບໍ່ເດັດບໍ່ຂາດ.ຄວາມແຕກຕ່າງລະຫວ່າງຕອນນັ້ນແລະຕອນນີ້ມອງເຫັນຢ່າງຈະແຈ້ງ.ດຽວນີ້ພວກເຮົາມີວິໄນມີຄວາມສາມັກຄີເປັນຈິດໜຶ່ງໃຈດຽວກັນມີຄວາມຊິນເຄີຍກັບສົງຄາມ. ສຳລັບນັກຮົບໃໝ່ນັ້ນພໍແຕ່ມາຮອດພວກເຂົາກໍລົ້ມປ່ວຍພວກເຂົາຍັງບໍ່ລຶ້ງກັບການກິນອາຫານວັນລະຄາບພວກເຂົາຍັງເລືອກຂອງຢູ່ຂອງກິນໃນເປ້ຂອງພວກເຂົາກໍມີແຕ່ສິ່ງໄຮ້ປະໂຫຍດຖ້າສຳພາລະໜັກຫຼາຍເຂົາກໍຈະໂຍນຖິ້ມເຊັ່ນວ່ານົມກະປ໋ອງຊຶ່ງພວກເຮົາຕ້ອງໄດ້ເກັບເອົາໄວ້".

ໄຊຊະນະເທື່ອໃໝ່ທີ່*ແອລຢູເວໂຣ* ໄດ້ສ້າງຄວາມເສຍຫາຍແກ່ຝ່າຍລັດຖະບານໜັກໜ່ວງສົມຄວນ. ພວກສັດຕູມີຄວາມຄອນແຄນແລະຫຼີບຫຼີກການປະທະກັບກຳລັງກອງຫຼອນ ພວກເຂົາໄດ້ຖອນອອກຈາກຖານທີ່ໝັ້ນຫຼາຍແຫ່ງຕາມສາຍພູ*ມາເອສຕຣາ* ປ່ອຍພື້ນທີ່ອັນກວ້າງໃຫຍ່ຕົກຢູ່ໃນກຳມືຝ່າຍປະຕິວັດ.

ໂສມໜ້າໃໝ່ຂອງເຂດປົດປ່ອຍປະກົດຂຶ້ນເມື່ອກຳລັງປະຕິວັດເຕີບໃຫຍ່ຂະຫຍາຍຕົວ. ພວກເຂົາໄດ້ສ້າງຄ້າຍອັນເຂັ້ມແຂງຂຶ້ນໂດຍມີລະບົບຈັດຕັ້ງຄັກແນ່ຄືມີທັງຄະນະບໍລິຫານ ມີກອງລຳລຽງ ມີຄັງສະບຽງອາຫານ ສຳຄັນກໍຄືການສ້າງໂຮງ

ງານອຸດສາຫະກຳເບົາເພື່ອຕອບສະໜອງຄວາມຕ້ອງການຂອງນັກຮົບຄືໂຮງງານເຂົ້າຈີ່ໂຮງງານຜະລິດອາວຸດ ໂຮງງານເຮັດເກີບ ໂຮງງານຕັດຫຍິບແລ້ວຍັງມີສະຖານີວິທະຍຸ ມີໂຮງພິມ ມີໂຮງໝໍ... ກົດໝາຍປະຕິວັດຖືກປະກາດໃຊ້ຄຽງຄູ່ກັນນັ້ນກໍຈັດຕັ້ງສານປະຊາຊົນຂຶ້ນ. ການໂຄສະນາອົບຮົມປຸກລະດົມແນວຄິດການເມືອງເປັນກິດຈະວັດປະຈຳວັນອັນໄດ້ຮັບຜົນດີ. ນັກຮົບກອງຫຼອນກໍນັບມື້ຄາຍຄືທະຫານປະຈຳການຫຼາຍຂື້ນ.

ໃນວຽກງານທັງໝົດທີ່ກ່າວມານັ້ນ ຄຸນງາມຄວາມດີສົມຄວນຕົກເປັນຂອງ *ເຈ* ເພາະເຂົາເປັນນັກຈັດຕັ້ງວາງແຜນທີ່ປີຊາສາມາດທີ່ສຸດ. ເວົ້າທາງດ້ານຄວາມສາມາດໃນການສູ້ຮົບນັ້ນ ພາຍຫຼັງໄຊຊະນະທີ່ *ແອລຢູເວໂຣ* ເຂົາຖືກແຕ່ງຕັ້ງໃຫ້ເປັນຜູ້ບັງຄັບບັນຊາແນວຮົບທີສອງແລະມີຍົດພັນຕີ.

ຣາຟາແອລ ຊາໂອ ນັກຮົບໃຕ້ບັງຄັບບັນຊາຂອງເຂົາຜູ້ໜຶ່ງເລົ່າວ່າ "*ເດິກດື່ນທ່ຽງຄືນ ເຮົາຍັງເຫັນເຂົານັ່ງຂຽນບັນທຶກຢູ່ໃນຄ້າຍ.ແຕ່ລະມື້ເຂົາຈະສຳຫຼວດວຽກປະຈຳວັນຂອງຕົນ.ຕາບໃດບໍ່ໄດ້ສຳຫຼວດວຽກປະຈຳວັນແລະບັນທຶກສິ່ງໃດສິ່ງໜຶ່ງລົງໄປເຂົາຈະບໍ່ຍອມນອນພັກຜ່ອນເລີຍ. ເຂົາເປັນຄົນມັກເວົ້າລົມເປີກສາຫາລືແລະໂຕ້ຖຽງບັນຫາຕ່າງໆ. ຂະນະທີ່ຄົນອື່ນນອນຫຼັບໝົດແລ້ວເຂົາຍັງຍ່າງເລາະຄ້າຍຊອກຫາຜູ້ເວົ້າລົມນຳ*".

ເຈ ໄດ້ແຕ່ງງານກັບນັກຮົບປະຕິວັດຜູ້ໜຶ່ງທີ່ຊື່ວ່າ *ອະໄລດາ ມາຣ໌ຊ.* ທັງສອງຈະໃຊ້ຊີວິດຮ່ວມກັນຕໍ່ມາອີກຫຼາຍປີແລະມີລູກຮ່ວມກັນເຖິງ4ຄົນ.

ກອງພັນພາຍໃຕ້ການບັນຊາຂອງ*ເຈ* ໄດ້ປ່ຽນຊື່ເປັນແນວທີ4ແລະເຄື່ອນໄຫວໃນເຂດ *ປີໂກຕູຣະກີໂນ.* ເບື້ອງຕົ້ນກອງພັນນີ້ໄດ້ເຂົ້າຍຶດຄອງບ້ານ*ບວຍສີໂຕ*ຕໍ່ມາກໍໄດ້

ບຸກໂຈມຕີຄ້າຍທະຫານ*ແອລຣອມບຣີໂຕ* ໃນວັນທີ 31 ສິງຫາ 1957 . ມັນເປັນຄ້າຍໃຫຍ່ສົມຄວນຄືມີທະຫານປະຈຳການເຖິງ140ຄົນ ຈຶ່ງຖືໄດ້ວ່າເປັນໄຊຊະນະທີ່ຍິ່ງໃຫຍ່ສຳລັບກຳລັງກອງຫຼອນ. ວັນທີ 16 ກັນຍາ*ເຈ*ໄດ້ບັນຊາການຮົບທີ່ *ປີໂນແດລອາກວາ.* ວັນທີ 29 ພະຈິກ ກໍນຳພາໂຈມຕີຄ້າຍ*ມາຣແວຣເດ.* ລະຫວ່າງລະດູໃບໄມ້ປົ່ງປີ1958 ຄືລະຫວ່າງເດືອນ ພຶດສະພາ ມິຖຸນາແລະກໍລະກົດ *ເຈ* ໄດ້ນຳກຳລັງໂຈມຕີຖານທີ່ໝັ້ນສັດຕູຫຼາຍແຫ່ງທີ່*ມີນາແດລຟຣີໂອ, ຈີບາກວາ, ລາສແມຣຊີ ເດສ...* ທຸກແຫ່ງທີ່ເຂົາປົດປ່ອຍໄດ້ກໍໄດ້ຈັດຕັ້ງອຳນາດການປົກຄອງ ສ້າງໂຮງງານອຸດສາຫະກຳຂະໜາດເບົາຂຶ້ນເພື່ອຜະລິດເຄື່ອງອຸປະໂພກບໍລິໂພກຮັບໃຊ້ກອງກຳລັງປະຕິວັດ. ນັກຮົບຫຼາຍຄົນໄດ້ເລົ່າເຖິງລັກສະນະພິເສດຂອງ*ເຈ*ໃນສະໝໍລະພູມວ່າ: "*ສຳລັບພວກເຮົາທຸກຄົນ ເຈປຽບສະເໝືອນອ້າຍກົກ. ຈິດໃຈຂອງເຂົາທຸ່ນທ່ຽງທີ່ສຸດເຖິງຈະຕົກຢູ່ໃນພາວະກັນດານປານໃດກໍຕາມ. ເຂົາເປັນຜູ້ທີ່ມີຄວາມຮັກອັນຍິ່ງໃຫຍ່ຕໍ່ເພື່ອນມະນຸດທຸກຄົນແລະເຂົາກໍຮູ້ເຮັດໃຫ້ທຸກຄົນຮັກເຂົາຄືກັນ. ໃນທຸກບັ້ນຮົບເຂົາມີນິດໄສຖອນຕົວອອກລຸນຫຼັງຄົນອື່ນສະເໝີບໍ່ວ່າຈະເປັນຍາມທີ່ຕົວເອງຖືກບາດເຈັບຫຼືຫິວທາງກໍຕາມ*".

ໃນວັນທີ21ສິງຫາ1958 ມີຄຳສັ່ງຈາກຜູ້ບັນຊາການສູງສຸດ*ຟີແດນ ກາສໂຕຣ* ໃຫ້*ເຈ* ນຳພາກອງກຳລັງ150ຄົນບຸກໂຈມຕີເມືອງ*ລາສວີນຢາສ.* ເນື່ອງຈາກລົດລຳລຽງຂາດນ້ຳມັນ *ເຈ* ຈຳຕ້ອງນຳພານັກຮົບຍ່າງລັດປ່າຝ່າດົງຂ້າມນ້ຳຂ້າມພູເປັນໄລຍະທາງ837ກິໂລແມັດ ໂດຍໃຊ້ເວລາ58ມື້ຢຸດພັກທັບ41ເທື່ອ. ອຸປະສັກໃນໃນການເຄື່ອນທັບກໍແມ່ນຮົ້ນຍູງຄວາມອຶດອ່ອນຫິວໂຫຍການຂາດນ້ຳຂາດອາຫານ



ນອກຈາກນັ້ນແລ້ວຍັງມີການປະທະກັບສັດຕູທີ່ເຂັ້ມແຂງກວ່າບໍ່ວ່າທາງດ້ານອາວຸດຍຸດທະພັນກໍ່ຕີທາງດ້ານຈຳນວນພົນ ເວົ້າສະເພາະຢູ່ເຂດ*ການາກວາຍ* ຝ່າຍປະຕິວັດຖືກສະກົດຮອຍຕາມໂດຍມີເຮືອບິນສອດແນມຄອຍຕິດຕາມບໍ່ຂາດທາງນັກຮົບຜູ້ໜຶ່ງໄດ້ເລົ່າວ່າ " *ນັກຮົບທີ່ເມື່ອຍທອບສຸດຂີດພາກັນຍ່າງທັງລົ້ມຟຸບລົ້ມຟາບແຕ່ກໍບໍ່ມີໃຜປ້ອຍດ່າວ່າຮ້າຍຫຼືຈົ່ມທຸກຈົ່ມຍາກຜູ້ທີ່ຍ່າງອອກໜ້າພວກເຂົາບໍ່ພຽງອິດເມື່ອຍແຕ່ຍັງຖືກໂຣກຫືດບັງບຽດກໍຍັງບໍ່ສະທ້ານຫວັ່ນໄຫວ-ນັ້ນລະ ແອຣເນສໂຕ ເຈ ເກວາຣາ* ". ສ່ວນນາຍແພດປະຈຳກອງພັນໄດ້ເວົ້າເຖິງເຈ ວ່າ " *ເຈມີຫົວໃຈນັກສູ້ທີ່ທໍລະຫົດຢ່າງບໍ່ໜ້າເຊື່ອ ເຂົາສາມາດບັນຊາແມ່ນກະທັ້ງໂຣກຫືດປະຈຳຕົວ. ໂຣກຫືດມີພິດສົງຮ້າຍແຮງບໍ່ແມ່ນທຳມະດາໂດຍສະເພາະໃນຍາມທີ່ມັນຂຶ້ນເຖິງຈຸດສຸດຍອດຈະພາໃຫ້ຜູ້ທີ່ມີໂຣກຊະນິດນີ້ຂາດອາກາດຫາຍໃຈແລ້ວຂາດໃຈຕາຍໄປເລີຍເຈມີຄວາມມຸ່ງຫວັງອັນແຮງກ້າທີ່ຈະເປັນນັກຮົບປະຕິວັດຫຼາຍກວ່າຈະເປັນແພດ*

ຖ້າໃຫ້ເປັນນາຍແພດເຂົາກໍຈະເປັນແພດທີ່ຊ່ຽວຊານທີ່ສຸດເພາະເຂົານັກສຶກສາຄົ້ນຄວ້າເຂົາເປັນນັກອ່ານທີ່ບໍ່ຈັກອິດບໍ່ຈັກເມື່ອຍແມ່ນກະທັ້ງຍາມເດີນທັບທາງໄກເຂົາກໍຍັງບໍ່ຍອມປະປຶ້ມອ່ານ ໃນຍາມຢຸດພັກເຊົາ້ນັກຮົບທີ່ອິດອ່ອນພາກັນນອນຢຽດແຜ່ພະຄະວາສ່ວນເຈຈະຈົກປຶ້ມອອກມານັ່ງອ່ານຄືບໍ່ອິດເມື່ອຍແຕ່ຢ່າງໃດ"

ການບຸກຍຶດເມືອງ*ລາສວິນຢາສ* ເປີດສາກດ້ວຍການໂຈມຕີຄ້າຍ*ກຸຍເນຍເດມີຣັນດາສ*, ຮອດວັນທີ 16-18 ທັນວາ ກໍບຸກຍຶດເມືອງ*ໂຟເມັນໂຕ* ,ລະຫວ່າງວັນທີ 23ຫາ 26 ທັນວາ ກໍຍຶດເມືອງ*ກາໄບກວານ*, *ປລາເຊຕາ*, *ເຣເມດີໂອສ* ແລ້ວມາຮອດວັນທີ 29 ທັນວາ 1958 ຫາວັນທີ 1 ມັງກອນ 1959 ກໍສາມາດຍຶດເມືອງ *ຊັນຕາກລາຣາ*.

ໃນການໂຈມຕີເມືອງ *ຊັນຕາກລາຣາ* ນີ້ ພັນຕີ *ເຈ ເກວາຣາ* ໄດ້ນຳພາກຳລັງດັກສະກັດຕີລົດໄຟຂະໜາດ12ຕູ້ຊຶ່ງບັນຈຸທະຫານລັດຖະບານຈຳນວນ401ຄົນພ້ອມທັງອາວຸດຍຸດທະພັນຫຼາຍຮ້ອຍໂຕນຊຶ່ງຈັກກະພັດອະເມຣິກາສົ່ງມາສະໜັບສະໜຸນຈອມຜະເດັດການ *ບາຕິສຕາ*. ການທຳລາຍລົດໄຟຂະບວນນີ້ຈຶ່ງຖືໄດ້ວ່າເປັນໄຊຊະນະທີ່ຍິ່ງໃຫຍ່ຂອງຝ່າຍປະຕິວັດ. ການບຸກຍຶດສອງເມືອງໃຫຍ່ຄື *ລາສວິນຢາສ* ແລະ *ຊັນຕາກລາຣາ* ກໍສົ່ງຜົນສະທ້ອນແຮງຕໍ່ການປົດປ່ອຍປະເທດກູບາ.

ດ້ວຍໄຊຊະນະທີ່ຍາດມາໄດ້ນີ້ເປັນສິ່ງພິສູດວ່າ*ເຈ* ເປັນຜູ້ມີຄວາມສາມາດໃນການ

ວາງແຜນການບັນຊາສູ້ຮົບແບບທາຜູ້ປຽບໄດ້ຍາກ. ເຖິງແມ່ນກອງກຳລັງໃຕ້ບັງຄັບບັນຊາຈະອ່ອນນ້ອຍແຕ່ເຂົາກໍສາມາດເອົາຊະນະສັດຕູທີ່ເໜືອກວ່ານັບສິບເທົ່າ.

ສະໜອງຄຳຮຽກຮ້ອງຂອງຜູ້ນຳການປະຕິວັດ *ຟິແດນ ກາສໂຕຣ* ກຳມະກອນຊາວຜູ້ອອກແຮງງານກູບາໄດ້ນັດຢຸດງານທົ່ວປະເທດໃນວັນທີ 1 ມັງກອນ 1959 ໃນໂອກາດດຽວກັນນັ້ນກອງກຳລັງປະຕິວັດທີ່ບັນຊາການໂດຍ *ເຈ ເກວາຣາ* ແລະອີກ ກອງພັນໜຶ່ງຊຶ່ງບັນຊາການໂດຍ *ກາມິນໂລ ຊຽນຟູເອໂກ* ກໍໄດ້ບຸກເຂົ້າຍຶດນະຄອນຫຼວງ *ລາຮາວານ* ໄດ້ສຳເລັດຜົນ.

ນັ້ນແມ່ນວັນໄຊຊະນະ ແມ່ນວັນຊຶ່ງປະເທດກູບາໄດ້ຮັບການປົດປ່ອຍຈາກອຳນາດຜະເດັດການ *ບາຕິສຕາ* ແລະເງື້ອມເງົາປົກຄຸມຂອງຈັກກະພັດອະເມຣິກາຢ່າງສິ້ນເຊີງ. ຖ້າຈະນັບແຕ່ມື້ສຽງປືນນັດທຳອິດຂອງສົງຄາມກອງຫຼອນແຕກຂຶ້ນຂະບວນການປະຕິວັດໄດ້ໃຊ້ເວລາພຽງ25ເດືອນປົດປ່ອຍປະເທດຊາດ.

ໃນປຶ້ມ "ລະນຶກເຖິງສົງຄາມປະຕິວັດກູບາ" *ເຈ ເກວາຣາ* ໄດ້ບັນທຶກການສູ້ຮົບໃນແຕ່ລະບັ້ນເຂົາໄດ້ຖອດຖອນບົດຮຽນຈາກປະສົບການ25ເດືອນເປັນຫຼັກໃຫຍ່ 3 ປະການຄື: *(1)ການສູ້ຮົບໃນພາກຕົວຈິງເປັນການສຶກສາທີ່ດີທີ່ສຸດສຳລັບນັກຮົບກອງຫຼອນທຸກຄົນ. ທິດສະດີຫຼວງຫຼາຍປານໃດກໍບໍ່ສາມາດເຮັດໃຫ້ເປັນນັກຮົບທີ່ດີໄດ້ມີແຕ່ຜ່ານການຕໍ່ສູ້ໃນສົງຄາມປະຕິວັດເທົ່ານັ້ນຈຶ່ງສາມາດຈຳແນກໃຫ້ເຫັນວ່າໃຜເປັນນັກຮົບກອງຫຼອນທີ່ແທ້ຈິງໃຜເປັນນັກເພີ້ຝັນຫຼືນັກຮົບພຽງຮູບນອກ. (2)ການຕໍ່ສູ້ໃນພາກຕົວຈິງເທົ່ານັ້ນສາມາດສ້າງຄົນໃຫ້ເປັນທັງນັກຮົບແລະນັກທິດສະດີໃນເວລາດຽວກັນ. ໃຜກໍສາມາດເຂົ້າຮ່ວມສົງຄາມກອງຫຼອນໄດ້ໂດຍບໍ່ຮູ້ທິດສະດີມາກ່ອນແຕ່ເຂົາຈະບໍ່ສາມາດເອົາຕົວລອດໄດ້ຖ້າເຂົາບໍ່ຮຽນຮູ້ທິດສະດີ.ມັນມີຄວາມຈຳເປັນທີ່ເຂົາຕ້ອງປັບປຸງຄວາມສຳນຶກທາງສັງຄົມຂອງຕົນໃຫ້ກ້າວຄຽງຄູ່ໄປກັບຄວາມຊຳນິຊຳນານທາງດ້ານການທະຫານອີກດ້ວຍ.ເພາະຖ້າມີຄວາມສາມາດພຽງແຕ່ໃນການສູ້ຮົບມັນກໍບໍ່ສາມາດເຮັດໃຫ້ເຂົາຜ່ານຜ່າຄວາມລຳບາກຍາກເຂັນໄດ້.ດ້ວຍເຫດນີ້ຜູ້ທີ່*

ເປັນນັກຮົບທີ່ດີທີ່ສຸດກໍຈຶ່ງເປັນນັກການເມືອງທີ່ດີທີ່ສຸດແລະເຂົາຜູ້ນັ້ນກໍເໝາະສົມທີ່ສຸດທີ່ເຮົາຈະເລືອກເອົາເປັນຜູ້ນໍາພາຍຫຼັງທີ່ການປະຕິວັດມີໄຊໃນທົ່ວປະເທດ.(3)ກໍາລັງກອງຫຼອນຈະຕ້ອງປະກອບດ້ວຍບຸກຄົນທີ່ມີຄວາມບຸກໜ້າບືນຕົວມີຄວາມກ້າຫານເສຍສະຫຼະແລະມີອຸດົມການອັນເດັດດ່ຽວໜັກແໜ້ນ.

4

ນັກກໍ່ສ້າງສັງຄົມນິຍົມ

ພາຍຫຼັງການປົດປ່ອຍອຳນາດການປົກຄອງໃຫມ່ປະເທດກູບາປະກອບດ້ວຍຄະນະປະຕິວັດແລະພັນທະມິດຈາກພັກການເມືອງທີ່ກ້າວຫນ້າທີ່ເຄີຍປະກອບສ່ວນເຂົ້າໃນການຕໍ່ຕ້ານລະບອບຜະເດັດການ*ບາຕິສຕາ.* ການຮວມຕົວກັນນີ້ມີອາຍຸພຽງໄລຍະສັ້ນໆກໍເກີດຄວາມຂັດແຍ່ງຂື້ນມາ.ມັນເປັນຄວາມຂັດແຍ່ງລະຫວ່າງຜູ້ມີແນວທາງການເມືອງແບບປະຕິວັດກັບຜູ້ມີແນວທາງປະຊາທິປະໄຕແບບເກົ່າແບບເດີມສາຍກາງ. ເພື່ອຕອບສະຫນອງຄວາມຮຽກຮ້ອງຕ້ອງການຂອງປະຊາຊົນເພື່ອປະຕິບັດຕາມສັນຍາທີ່ໃຫ້ໄວ້ກັບປະຊາຊົນ ຄະນະປະຕິວັດຈຳເປັນຕ້ອງກຳອຳນາດທັງຫມົດໄວ້ໃນກຳມືຕົນແລະສັບຊ້ອນນັກປະຕິວັດຈາກສາຍພູ*ມາເອສຕຣາ* ເຂົ້າແທນທີ່ນັກການເມືອງຈາກພັກພັນທະມິດຈາກນັ້ນ *ຟີເດນ ກາສໂຕຣ* ກໍໄດ້ຂື້ນເປັນນາຍົກຂອງລັດຖະບານປະຕິວັດ.

ກອງປະຊຸມຄະນະລັດຖະບານມີມະຕິຕົກລົງໃຫ້*ເຈ ເກວາຣາ* ເປັນພົນລະເມືອງກູບາຜູ້ຫນື່ງໃນວັນທີ9ກຸມພາ1959. ຕົກຮອດເດືອນມິຖຸນາເຂົາກໍເປັນຜູ້ນຳພາຄະນະຜູ້ແທນລັດຖະບານກູບາໄປຢ້ຽມຢາມສັນທະວະໄມຕີປະເທດຕ່າງໆໃນທະວີບອາຊີແລະອັຟຣິກາ. ໃນວັນທີ7ຕຸລາ1959 ເຂົາຖືກແຕ່ງຕັ້ງເປັນລັດຖະມົນຕີກະຊວງອຸດສາຫະກຳ ທັງເປັນຜູ້ຊີ້ນຳສະຖາບັນການປະຕິຮູບທີ່ດິນແຫ່ງຊາດ ນອກນັ້ນເຂົາຍັງມີຄວາມຮັບຜິດຊອບທາງການທະຫານຕາມຕຳແຫນ່ງຜູ້ບັນຊາການເຊັ່ນເດີມ.

ກູບາມີປະຊາກອນສ່ວນຫຼວງຫຼາຍເປັນຊາວໄຮ່ນາ ດ້ວຍເຫດນັ້ນລັດຖະບານຈຶ່ງຖືເອົາການປະຕິວັດຊາວໄຮ່ນາເປັນພື້ນຖານເອົາການປະຕິຮູບທີ່ດິນເປັນຕົ້ນຕໍ. ກົດຫມາຍທີ່ສຳຄັນທີ່ສຸດຊື່ງລັດຖະບານປະຕິວັດປະກາດໃຊ້ໃນເດືອນພຶດສະພາ1959 ກໍ

ແມ່ນກົດໝາຍປະຕິຮູບທີ່ດິນເທື່ອທີ1.ດິນໄຮ່ດິນນາຫຼວງຫຼາຍຂອງພວກປະຕິການຖືກໂອນມາເປັນກຳມະສິດຂອງລັດດິນຣົກເຮື້ອເປົ່າວ່າງຖືກຟື້ນຟູມາເຮັດການຜະລິດການກະສິກຳຖືກຫັນປ່ຽນຈາກການປູກພືດຊະນິດດຽວມາປູກຫຼາຍໆຢ່າງໂດຍມີເປົ້າໝາຍໃຫ້ທຸກຄົນມີວຽກເຮັດວຽກທຳຕະຫຼອດປີ. ນອກຈາກນັ້ນຍັງມີການຈັດຕັ້ງສະຫະກອນກະເສດ, ການເຮັດນາລວມ, ສ້າງນິຄົມກະເສດຂອງລັດຢ່າງກວ້າງຂວາງ. ສຳລັບຜູ້ທີ່ມີດິນນາເປັນຂອງຕົວເອງ ລັດກໍໃຫ້ເງິນກູ້ໂດຍບໍ່ຄິດໄລ່ດອກເບ້ຍທັງໃຫ້ຄຳແນະນຳແລະການບຳລຸງດ້ານວິຊາການປູກຝັງແບບທັນສະໄໝ. ກ່ຽວກັບການປະຕິຮູບທີ່ດິນເຈ ໃຫ້ທັດສະນະດັ່ງນີ້ *"ການປະຕິຮູບທີ່ດິນແບບຝ່າຍຊ້າຍເປັນວິທີດຽວເທົ່ານັ້ນທີ່ສາມາດແບ່ງປັນແຈກຈ່າຍທີ່ດິນໃຫ້ຊາວນາໄດ້ຢ່າງມີຜົນດີ.ວິທີການອັນນີ້ແນ່ນອນມັນຈະຂັດກັບຜົນປະໂຫຍດຂອງພວກຈັກກະພັດພວກປະຕິການເຈົ້າທີ່ດິນເຈົ້າໄຮ່ອ້ອຍແລະເຈົ້າຂອງຄອກສັດຂະໜາດໃຫຍ່ໂດຍກົງ. ມີແຕ່ພວກນາຍທຶນ ຊົນຊັ້ນກາງເທົ່ານັ້ນເກງກົວທີ່ຈະແຕະຕ້ອງຜົນປະໂຫຍດຂອງຄົນຈຳພວກນີ້ ສ່ວນກຳມະກອນຊາວຜູ້ອອກແຮງງານບໍ່ເປັນແບບວ່ານັ້ນ. ດ້ວຍເຫດນັ້ນຄະນະປະຕິວັດຈຶ່ງຍຶດໝັ້ນແລະຖືເອົາຄວາມສຳພັນລະຫວ່າງກຳມະກອນ-ຊາວນາເປັນພື້ນຖານ. ກຳມະກອນ-ຊາວນາເອງກໍຈຶ່ງມີຄວາມເຊື່ອໝັ້ນແລະຊື່ສັດຕໍ່ການປະຕິວັດອັນຈະເປັນຜົນດີຕໍ່ການປົກປັກຮັກສາໝາກຜົນຂອງການປະຕິວັດຕ້ານການບຸກລຸກຮຸກຮານກໍ່ຄວາມວຸ້ນວາຍຂອງພວກຈັກກະພັດແລະພວກທີ່ຢາກເຮັດການປະຕິວັດຊ້ອນ".*

ຕຳແໜ່ງໃໝ່ຊຶ່ງ *ເຈ* ໄດ້ຮັບໃນວັນທີ26ພະຈິກແມ່ນເປັນຜູ້ອຳນວຍການທະນາຄານແຫ່ງຊາດແລະຮັບຜິດຊອບຄັງຫຼວງຕື່ມອີກ. ໃນເດືອນຕຸລາ1960 *ເຈ* ໄດ້ນຳພາຄະນະຜູ້ແທນການຄ້າກູບາໄປເຈລະຈາດ້ານການຄ້າກັບບັນດາປະເທດສັງຄົມນິຍົມເຊັ່ນ: ໂຊວຽດ, ຈີນ, ເຊັກໂກສະໂລວາກີ, ເກົາຫຼີເໜືອ...

ໃນເດືອນກຸມພາ1961 ຈັກກະພັດອະເມຣິກາແລະລູກແຫຼ້ງຕີນມືໄດ້ຍົກກຳລັງຂຶ້ນ



ແລະຈຳເປັນຢ່າງຍິ່ງ. ສິ່ງສຳຄັນທີ່ສຸດຄືເວລາສ່ວນໜຶ່ງໃນຊີວິດຂອງຄົນໆໜຶ່ງນັ້ນຄວນອຸທິດໃຫ້ເປັນປະໂຫຍດແກ່ສັງຄົມແກ່ມວນມະນຸດໂດຍບໍ່ມີອັນໃດເປັນສິ່ງຕອບແທນທັງນັ້ນແຕ່ຫາກໃຫ້ຖືວ່າເປັນການເຮັດຫລ້ອນໜ້າທີ່ຊຶ່ງສັງຄົມມອບໝາຍໃຫ້. ສິ່ງເຫລົ່ານີ້ລະຈະນຳມາຊຶ່ງຄວາມກ້າວໜ້າທາງດ້ານເຕັກນິກດ້ານການເພີ່ມພູນແລະຄວາມພົວພັນທາງດ້ານການຜະລິດພາໃຫ້ເກີດຄວາມກ້າວໜ້າດີເດັ່ນທະວີຄູນຂຶ້ນໄປຈົນເຖິງຂັ້ນສຸດຍອດແລະກາຍເປັນສິ່ງທີ່ສະໜອງຄວາມຮຽກຮ້ອງຕ້ອງການຂອງສັງຄົມ. ຈະເຮັດໄດ້ແນວນັ້ນຈຳຕ້ອງ ຜ່ານຜ່າໄລຍະຂ້ວາມຜ່ານໄລຍະກ້າວເດີນເທິງສົມຄວນແລະມີແຕ່ຫລັງຈາກຜ່ານກາຍໄລຍະດັ່ງກ່າວເທົ່ານັ້ນຄົນຈຶ່ງຈະມີຄວາມຊິນເຄີຍໃນການອາສາສະໝັກເຮັດວຽກ ”.

ຈາກຄວາມຄິດດັ່ງກ່າວມານີ້ ເຈ ຈຶ່ງມີຄວາມມຸ່ງໝາຍທີ່ຢາກສ້າງແບບສະບັບຄົນໃໝ່ ຄົນທີ່ບໍລິສຸດ ຄົນທີ່ມີອິດສະຫລະຄົນທີ່ບໍ່ມີຮ່ອງຮອຍເປື້ອນເປິຈາກເສດເຫລືອຂອງສັງຄົມເກົ່າ. ເຂົາເນັ້ນໜັກໃສ່ທັບມ້າງການພົວພັນແບບເຫັນແກ່ຕົວຕາມແບບສະບັບຂອງລະບອບນາຍທຶນໂດຍອີງໃສ່ການລົບລ້າງວິທີການຕອບແທນດ້ວຍວັດຖຸມາເປັນການຕອບແທນດ້ານຈິດໃຈດ້ານສິລທັມ.

ຂະນະທີ່ນັ່ງເຮັດວຽກໃນຫ້ອງການໃນຖານະນັກການເມືອງນັກປົກຄອງໃນລະດັບການນຳ*ເຈ* ຍັງຄຶດຮອດຄຶດເຖິງວັນຄືນທີ່ບໍ່ອາດຍ້ອນກັບຄືນມາໄດ້ຂອງສົງຄາມປະຕິວັດທີ່ສາຍພູ*ມາເອສຕຣາ*. ເຂົາພົບກັບຄວາມສຸກອັນແທ້ຈິງໃນການຕໍ່ສູ້ໃນການເຮັດສົງຄາມປະຕິວັດ. ຄວາມສຸກໃຈນັ້ນເກີດມາຈາກຄວາມຄິດທີ່ວ່າ*ການປົດແອກໃຫ້ຜູ້ຖືກກົດຂີ່ທັງຫຼາຍກໍຄືການປົດແອກໃຫ້ຕົວເອງນັ້ນລະ.*

ນັບແຕ່ວັນທີ 25 ເມສາ1965 *ເຈ ເກວາຣາ* ຫາຍຕົວໄປຈາກເວທີການເມືອງຂອງປະເທດກູບາ. ການຫາຍຫາຍໄປນີ້ສ້າງຄວາມງຸນງົງຄວາມສົນໃຈແກ່ມວນຊົນໂດຍທົ່ວໄປຕະຫຼອດທັງສ້າງສຽງວິພາກວິຈານໄປຕ່າງໆນານາລວມທັງນັກຂ່າວຕາເວັນຕົກດ້ວຍ.

ຈົນຮອດວັນທີ 3 ຕຸລາ1965 ກຳມະການສູນກາງພັກກອມມຸຍນິດກູບາຈຶ່ງໄດ້ເຜີຍແຜ່ຈົດໝາຍສະບັບໜຶ່ງຕໍ່ມວນຊົນມັນເປັນຈົດໝາຍສັ່ງລາຂອງ*ເຈ* ທີ່ໄດ້ສົ່ງຫາ*ຟີແດນ ກາສໂຕຣ*. ເນື້ອໃນຈົດໝາຍໂດຍລະອຽດມີດັ່ງນີ້ :

"*ເຖິງ ຟີແດນ.*

ຟີແດນ ຮອດຄຣາວນີ້ເຮົາຍັງຈື່ຈຳຫຼາຍສິ່ງຫຼາຍຢ່າງໃນຕອນທີ່ພວກເຮົາຢູ່ລະຫວ່າງ







ການກະກຽມອັນເຄັ່ງຂຶມ ໃນຕອນທີ່ເຮົາໄດ້ພົບໂຕທີ່ເຮືອນຂອງ ມາເຣຍ ອັນໂຕເນຍ ເວລານັ້ນໂຕກໍໄດ້ຊັກຊວນອອນເຮົາມານຳ.

ມື້ຫນຶ່ງໃຜຜູ້ຫນຶ່ງອາດມາຖາມພວກເຮົາວ່າໃນກໍລະນີໃຜຜູ້ຫນຶ່ງລົ້ມຕາຍລົງເຮົາຈະສົ່ງຂ່າວໃຫ້ໃຜ? ແລ້ວຄວາມເປັນມາອັນແທ້ຈິງຂອງເຫດການອັນນີ້ກໍປະຈັກແຈ້ງແກ່ພວກເຮົາພວກເຮົາຕ່າງກໍຮັບຮູ້ແລ້ວວ່າໃນການປະຕິວັດທີ່ແທ້ຈິງນັ້ນບໍ່ວ່າເຮົາຈະມີໄຊຊະນະເຫຼືອກໍຕາມຜູ້ທີ່ຈະລົ້ມຫາຍຕາຍຈາກຕະຫຼອດໄລຍະທາງແຫ່ງການຕໍ່ສູ້ຍ່ອມຫຼີກເວັ້ນບໍ່ໄດ້ສິບຄົນຕາຍຍ່ອມຈະຍາຍຍັງເດຍລະດາດບົນເສັ້ນທາງສູ່ໄຊຊະນະ.

ຮອດມື້ນີ້ ທາງສຽງກ່ຽວກັບເລື່ອງນີ້ ສ້າງຄວາມຕື່ນເຕັ້ນຫນ້ອຍລົງເພາະພວກເຮົາຕ່າງກໍສຸກງອມຈາກປະສົບການໃນການສູ້ຮົບມາແລ້ວ ຊ້ຳບໍ່ຫນຳເຫດການນັ້ນກໍຊ້ຳຊາກຫມູນວຽນປ່ຽນໄປມາພໍສ່ຳນັ້ນ.

ເຮົາຮູ້ສຶກວ່າໄດ້ເຮັດຫນ້າທີ່ພາລະກິດສ່ວນຂອງເຮົາ ທີ່ຜູກມັດເຮົາໄວ້ກັບການປະຕິວັດກູບາເທິງແຜ່ນດິນກູບາເອງ ສະນັ້ນເຮົາຈຶ່ງຂໍລາໂຕພ້ອມທັງບັນດາສະຫາຍແລະປະຊາຊົນຂອງໂຕກໍຄືຂອງເຮົາເຊັ່ນດຽວກັນ.

ເຮົາຂໍສະຫຼະຕຳແຫນ່ງ ຫນ້າທີ່ຮັບຜິດຊອບທັງຫມົດໃນການນຳພັກໃນຫນ້າທີ່ລັດຖະມົນຕີໃນຍົດຊັ້ນພັນຕີແລະໃນເງື່ອນໄຂທີ່ເປັນຊາວກູບາຜູ້ຫນຶ່ງ. ບໍ່ມີຄວາມຖືກຕ້ອງຕາມກົດຫມາຍອັນໃດຈະຜູກມັດເຮົາໄວ້ກັບປະເທດກູບາມີແຕ່ຄວາມສຳພັນ

ແບບອື່ນຊຶ່ງບໍ່ສາມາດທຳລາຍໄດ້ຫລືລຶບລ້າງໄດ້ດ້ວຍຄຳສັ່ງຊີ້ເອກະສານໃດໜຶ່ງທາງລັດຖະການເທົ່ານັ້ນຜູກມັດເຮົາໄດ້.

ຖ້າຈະໃຫ້ເຮັດໃບສຳຫຼວດຜົນງານທັງໝົດໃນຊີວິດເຮົາແລ້ວເຮົາເຊື່ອໝັ້ນວ່າເຮົາໄດ້ເຮັດວຽກດ້ວຍຄວາມສຸດຈະຫຼິດພຽງພໍແລະກໍໄດ້ອຸທິດຊີວິດຈິດໃຈເພື່ອສ້າງຄວາມແຂງແກ່ນແກ່ໄຊຊະນະຂອງການປະຕິວັດ.

ຄວາມຫຼົງຜິດໜັກໜ່ວງສົມຄວນຂອງເຮົາກໍຄືວ່າໃນຕອນເລີ່ມຕົ້ນທີ່ເຊຍຣາມາເອສຕຣາ ນັ້ນເຮົາບໍ່ເຊື່ອໝັ້ນໂຕປານໃດແລະເຮົາກໍຍອມຮັບວ່າຕົນຮັບຮູ້ຊ້າເກີນໄປເລື່ອງຄວາມສາມາດໃນການນຳພາແລະຄຸນທາດປະຕິວັດຂອງໂຕ.

ວັນເວລາອັນສົດຊື່ນແຈ່ມໃສຄືເວລາທີ່ເຮົາໄດ້ຢູ່ຮ່ວມກັນແລະເຮົາກໍມີຄວາມທະນົງໃຈທີ່ສຸດທີ່ໄດ້ຢືນຄຽງຂ້າງໂຕໃນທ່າມກາງມວນຊົນໃນມື້ທີ່ສວ່າງສະໄຫວຕະຫລອດຮອດເວລາທີ່ຫຍຸ້ງຍາກສັບສົນທີ່ສຸດຂອງທະເລກາຣິບຽນ.ຍາກທີ່ສຸດທີ່ລັດຖະບຸລຸດຄົນໜຶ່ງຈະຮູ້ຈັກສ້າງຄວາມຮຸ່ງໃສແກ້ໄຂບັນຫາໃນພາວະແບບນີ້ເຮົາຮູ້ສຶກພາກພູມໃຈທີ່ໄດ້ຍ່າງຕາມຫຼັງໂຕໄປຢ່າງບໍ່ລັ່ງເລໃຈແລະໄດ້ເອົາແບບຢ່າງຂອງໂຕໃນການຄິດການເບິ່ງແລະການຕີລາຄາພະຍັນຕະລາຍພ້ອມດ້ວຍການກຳນົດຫຼັກການຕ່າງໆ.

ແຜ່ນດິນສ່ວນອື່ນຂອງໂລກຮຽກຮ້ອງການຊ່ວຍເຫຼືອຈາກກຳລັງວັງຊາອັນເລັກນ້ອຍຂອງເຮົາ. ເຮົາສາມາດເຮັດໄດ້ໃນຂະນະທີ່ໂຕບໍ່ສາມາດ ເພາະໂຕຍັງມີພາລະໜ້າທີ່ໃນການນຳພາປະເທດກູບາ.

ເວລາຊຶ່ງພວກເຮົາຈຳຕ້ອງພັດພາກຈາກກັນມາເຖິງແລ້ວ.

ຄວນຮູ້ໄວ້ວ່າເຮົາໄປດ້ວຍຄວາມຮູ້ສຶກຊຶ່ງມີທັງຄວາມດີໃຈແລະເສົ້າໃຈ.ບົນດິນ

ແດນແຫ່ງນີ້ເຮົາໄດ້ປະຖິ້ມຄວາມມຸ່ງມາດປາດຖະໜາອັນບໍລິສຸດຜຸດຜ່ອງຂອງນັກສ້າງຕັ້ງເຮົາໄດ້ຖິ້ມປະຜູ້ທີ່ແສນຮັກທັງຫຼາຍ ຖິ້ມປະພໍ່ແມ່ປະຊາຊົນທີ່ຮັບຕ້ອນເຮົາຄືລູກຊາຍຜູ້ໜຶ່ງສິ່ງເຫຼົ່ານີ້ຍັງຝັງເລິກໃນສ່ວນໃດສ່ວນໜຶ່ງຂອງຄວາມຄິດເຮົາ. ທີ່ສະໜາມຮົບແຫ່ງໃໝ່ນັ້ນເຮົາຍັງຈະຍຶດຖືສິ່ງທີ່ໂຕໄດ້ສິດສອນໃຫ້ເຊັ່ນວ່າແນວຄິດປະຕິວັດຂອງປະຊາຊົນເຮົາແລະຄວາມຮູ້ສຶກຢາກເຮັດໜ້ອນໜ້າທີ່ໃນການຕໍ່ສູ້ຕ້ານຈັກກະພັດບໍ່ວ່າມັນຈະຢູ່ແຫ່ງໃດກໍຕາມ.ສິ່ງດັ່ງກ່າວນີ້ແຫຼະຈະຜ່ອນຄາຍແລະປົວແປງບາດແຜອັນເຈັບແສບບອບຊ້ຳໃຫ້ທຸເລົາເບົາບາງລົງນັບເປັນຮ້ອຍໆເທື່ອ.

ເຮົາຂໍຢ້ຳຄືນອີກວ່າເຮົາປົດປ່ອຍກູບາດ້ວຍຄວາມຮັບຜິດຊອບແບບພິເສດຕາມຕົວຢ່າງອັນດີງາມຂອງປະເທດກູບາເອງ.

ຫາກວ່າເວລານີ້ເປັນໂອກາດສຸດທ້າຍກ່ອນທີ່ເຮົາຈະໄດ້ໄປຕົກຢູ່ກ້ອງແຜ່ນຟ້າປະເທດອື່ນຄວາມຄິດສຸດທ້າຍຂອງເຮົາກໍແມ່ນສິ່ງເຖິງປະຊາຊົນແຫ່ງນີ້ແລະໂດຍສະເພາະກໍແມ່ນໂຕເທົ່ານັ້ນ.

ເຮົາຂໍຈາລຶກບຸນຄຸນທີ່ໂຕໄດ້ສິດສອນໄດ້ໃຫ້ແບບຢ່າງອັນດີເລີດແລະຈະສືບຕໍ່ຈົງຮັກພັກດີຈົນກວ່າເຫດການສຸດທ້າຍຂອງຊີວິດຈະປະກົດຂຶ້ນ.

ຍາມໃດເຮົາກໍຈະດຳເນີນໄປຕາມນະໂຍບາຍຕ່າງປະເທດຂອງການປະຕິວັດພວກເຮົາບໍ່ວ່າຢູ່ໃສເຮົາກໍຈະສືບຕໍ່ດຳເນີນນະໂຍບາຍດັ່ງກ່າວເຮົາຈະຮູ້ສຶກຮັບຜິດຊອບຕໍ່ຖານະນັກປະຕິວັດກູບາຜູ້ໜຶ່ງເຮົາຈະເຮັດໃຫ້ສົມຖານະດັ່ງກ່າວ.

ເຮົາບໍ່ໄດ້ຖິ້ມປະຊັບສິນດ້ານວັດຖຸໃດໆໄວ້ໃຫ້ຄອບຄົວລູກເມຍຂອງເຮົາແຕ່ເຮົາກໍບໍ່ເສຍໃຈຫຼືກົນແໜງໃຈແຕ່ປະການໃດກົງກັນຂ້າມເຮົາພາກພູມໃຈທີ່ມັນເປັນໄປດັ່ງນັ້ນ. ເຮົາຈະບໍ່ຂໍຮ້ອງສິ່ງໃດສິ່ງໜຶ່ງເພື່ອພວກເຂົາ ເຮົາຮູ້ດີວ່າລັດຈະຕ້ອງເບິ່ງແຍງໃນການກິນຢູ່ແລະການສຶກສາຂອງພວກເຂົາ.

ເຮົາມີຫຼາຍສິ່ງຫຼາຍຢ່າງຢາກເວົ້າລົມກັບໂຕແລະປະຊາຊົນພວກເຮົາ ແຕ່ເຮົາຮູ້ສຶກວ່າຄວາມເວົ້າທີ່ຈະຂຽນລົງໄປນັ້ນເປັນສິ່ງບໍ່ຈຳເປັນເລີຍມັນບໍ່ສາມາດບັນຍາຍ

ຄວາມຮູ້ສຶກນຶກຄິດຂອງເຮົາໄດ້ໝົດດອກແລະມັນກໍບໍ່ມີປະໂຫຍດຫຍັງທີ່ຈະຂຽນໃຫ້ເປືອງໜ້າເຈ້ຍ.

ຈົນກວ່າຈະມີໄຊຊະນະ

ຍາມໃດກໍ "ປິຕຸພູມຫຼືຄວາມຕາຍ"

ຮັກແພງດ້ວຍຄວາມເຫຼື້ອມໃສສັດທາປະຕິວັດຂອງເຮົາທັງໝົດ

ເຈ 1965"





5

ນັກຮົບສາກົນນິຍົມ

ໃນການກ່າວປາໄສທີ່ສະມັດຊາໃຫຍ່ອົງການສະຫະປະຊາຊາດເມື່ອເດືອນ ທັນວາ 1964 *ເຈ ເກວາຣາ* ໄດ້ກ່າວປະນາມບັນດາປະເທດມະຫາອຳນາດຕາເວັນຕົກທີ່ໄດ້ແຊກແຊງກິດຈະການພາຍໃນຂອງປະເທດ*ກົງໂກ* ວ່າເປັນການກະທຳແບບຈຳແນກຜິວພັນ.

ໃນເດືອນ ເມສາ1965 *ເຈ* ເດີນທາງໄປຮອດ*ກົງໂກ* ໂດຍໃຊ້ປື້ມຜ່ານແດນອອກຊື່ *ຣາມອນ ເບນິເຕຊ*. ເປັນການເດີນທາງໄປສູ້ຮົບເພື່ອໂຄ່ນລົ້ມລັດຖະບານຜະເດັດການ *ມອຍເຊ ຊອມເບ* ໂດຍມີ *ໂຈເຊັບ ໂມບູຕູ* ເປັນຜູ້ບັນຊາການທະຫານສູງສຸດ.

ພະນັກງານສະຖານທູດກູບາປະຈຳ *ກົງໂກ* ເປີດເຜີຍວ່າ: *ຟີເດນ ກາສໂຕຣ ແລະການນຳກູບາຕ່າງກໍຮູ້ດີວ່າການໄປປະຕິບັດພາລະກິດຄັ້ງນີ້ຂອງເຈເປັນການທົດສອບກຸ່ມນັກຮົບສາກົນໃນການຈູດຂະບວນສົງຄາມກອງຫຼອນຂຶ້ນໃນທະວີບອັຟຣິກາທັງເປັນການປູທາງໃຫ້ແກ່ສົງຄາມປົດປ່ອຍຊາດຂອງບັນດາປະເທດໃນທະວີບອະເມຣິກາລາຕິນ.*

ຮອດວັນທີ 24 ເມສາ ມີນັກຮົບປະຕິວັດກູບາ13ຄົນທະຍອຍກັນໄປຮອດຈຸດທີ່ ໝາຍ. ຜູ້ນຳຂະບວນການປະຕິວັດ*ກົງໂກ* ມີຊື່ວ່າ *ໂລຣອງ ກາບີລາ*. ຕະຫຼອດເວລາສອງເດືອນໃນການກະກຽມແຕກສຽງປືນ *ເຈ* ໄດ້ນຳພາການເຝິກແອບວິຊາກອງຫລອນໃຫ້ແກ່ກອງກຳລັງປະຕິວັດກົງໂກ.ໃນປື້ມບັນທຶກປະຈຳວັນຂອງເຂົາ *ເຈ* ໄດ້ເລົ່າເຖິງສະພາບຄວາມບໍ່ມີລະບຽບວິໄນຂອງນັກຮົບປະຕິວັດໃໝ່ໃນທຸກລະດັບທຸກຄົນມັກດື່ມເຫຼົ້າຈົນເມົາເສຍສະຕິແມ່ນກະທັ້ງຜູ້ນຳຄື *ກາບີລາ* ເອງກໍເປັນຄົນເຈົ້າສຳ

ລານທີ່ມັກເຫຼົ້າແວງເປັນຊີວິດຈິດໃຈ. ນັກຮົບທົ່ວໄປກໍເຊື່ອຖືງົມງວາຍເຊື່ອເວດມົນຄາຖາ*ດາວະ* (ເປັນມົນຄົງກະພັນ ຜູ້ຂຽນເອງກໍສົງໃສຄືກັນວ່າມັນສິເປັນມົນຍິງບໍ່ແຕກ-ແທງບໍ່ຖືກ-ຖືກບໍ່ເຂົ້າ ສູດດຽວກັບຂອງຄົນລາວເຮົາຫຼືບໍ່) ນອກຈາກນັ້ນແລ້ວກອງກຳລັງປະຕິວັດກໍບໍ່ມີການເຄື່ອນໄຫວລາດຕະເວນຫາຕີສັດຕູນອກຈາກຈະເກັບເກນອາຫານການກິນຈາກຊາວໄຮ່ນາຜູ້ຊຶ່ງຫວາດກົວນັກປະຕິວັດຫຼາຍກວ່າຈະໃຫ້ການຮ່ວມມື.

ສຽງປືນປະຕິວັດແຕກຂື້ນເມື່ອວັນທີ 29 ມິຖຸນາ: ເປັນການແຕກສຽງປືນທີ່ສ້າງຄວາມບໍ່ພໍໃຈໃຫ້ກັບ*ເຈ ເກວາຣາ* ຫຼາຍທີ່ສຸດ ເພາະພໍແຕ່ເປີດສາກການຕໍ່ສູ້ເຂົາກໍສູນເສຍນັກຮົບປະຕິວັດກູບາໄປ4ຄົນ ສ່ວນນັກຮົບໃຫມ່ຊົນເຜົ່າ*ທຸດຊີ* ກໍໂຕນຫນີຈາກຖັນແຖວນັກຮົບກົງໂກຈຳນວນຫນຶ່ງກໍບໍ່ຍອມອອກໄປສູ້ຮົບ ຮ້າຍແຮງໄປກວ່ານັ້ນຊີໄອເອແລະກຳລັງຝ່າຍລັດຖະບານຍັງຈັບຫຼັກຖານໄດ້ຫຼາຍຢ່າງທີ່ບົ່ງບອກວ່າການປະຕິວັດກົງໂກໄດ້ຮັບການສະຫນັບສະຫນູນຈາກກູບາ.

ນັກຮົບກົງໂກຈຳນວນບໍ່ຫນ້ອຍໄດ້ຮັບການເຝິກຝົນເປັນຢ່າງດີຈາກສະຫະພາບ ໂຊວຽດ, ຈີນແລະບູນກາຣີ ແຕ່ພໍເຂົ້າສະຫນາມຮົບຕົວຈິງພວກເຂົາຊ້ຳພັດປະຕິບັດຕົນເຫມືອນທະຫານໃນກອງທັບຄືມີການລາພັກໄປຢ້ຽມຢາມຄອບຄົວຫຼືລາພັກໃນວັນບຸນຕ່າງໆເພື່ອມີໂອກາດໄປກິນເຫຼົ້າເມົາສຸລາເຮຮາແບບຊາວບ້ານໂດຍທົ່ວໄປ.

ຕົກຮອດເດືອນ ພະຈິກ 1965 ສະພາບການທາງການເມືອງລະຫວ່າງປະເທດມີການຜັນແປ ລັດຖະບານປະເທດ*ຕັງຊານີ* ແຈ້ງໃຫ້ລັດຖະບານກູບາຊາບວ່າຈະບໍ່ໃຫ້ການສະຫນັບສະຫນູນ "ຂະບວນການປົດປ່ອຍຊາດກົງໂກ" ອີກຕໍ່ໄປ.

ຟີເດນ ກາສໂຕຣ ໄດ້ແຈ້ງເຫດການຕ່າງໆໃຫ້ *ເຈ* ຊາບແລະມອບໃຫ້ເຂົາເປັນຜູ້ຕັດສິນໃຈເອງໃນທຸກເລື່ອງ.

ສະພາບການໃນກົງໂກເອງກໍສັບສົນໄປຫນ້າເມື່ອມາຮອດວັນທີ 18 ພະຈິກ *ໂມບູຕູ* ໄດ້ຍຶດອຳນາດແບບລັດຖະປະຫານຈາກປະທານາທິບໍດີ*ໂຈເຊັບ ກາຊາວູບູ, ເຈ* ພະ

ຍາຍາມຕິດຕໍ່ເອົາອາວຸດຍຸດທະພັນຕະຫຼອດທັງສະບຽງອາຫານນຳສະຖານທູດກູບາ ປະຈຳນະຄອນ*ດາເອສະລາມ* ແຕ່ທາງການຕັງຊານີບໍ່ຍອມປ່ອຍເຄື່ອງດັ່ງກ່າວໃຫ້ເຖິງມືຂະບວນການປະຕິວັດກົງໂກ.

ຈາກເວລາສຽງປືນແຕກນັ້ນຮອດປີ 1997 (ຄົບຮອບ30ປີແຫ່ງການຕາຍຂອງ *ເຈ*) ການປະຕິວັດກົງໂກຊຶ່ງນຳພາໂດຍ*ກາບີລາ* ຈຶ່ງສາມາດໂຄ່ນລົ້ມ*ມາບູຕູ* ຍຶດອຳນາດການປົກຄອງໄດ້.

ໜຶ່ງເດືອນກ່ອນທີ່*ເຈ* ແລະກຸ່ມນັກຮົບສາກົນຈະຖອນຕົວອອກຈາກກົງໂກ *ຟີເດນ ກາສໂຕຣ* ກໍໄດ້ເອົາຈົດໝາຍສັ່ງລາຂອງເຂົາອອກມາເປີດເຜີຍໃນກອງປະຊຸມສູນກາງພັກກອມມຸຍນິດກູບາ ເບິ່ງໃນແງ່ໜຶ່ງເໝືອນກັບວ່າ*ເຈ* ຖືກຕັດຂາດຢ່າງເປັນທາງການຈາກການປະຕິວັດກູບາ.

ເມື່ອບໍ່ສາມາດດຳເນີນສົງຄາມກອງຫຼອນໃນກົງໂກໄດ້ອີກຕໍ່ໄປ *ເຈ* ຈຶ່ງຖອນຕົວອອກໄປລີ້ໄພທີ່ສະຖານທູດກູບາປະຈຳຕັງຊານີເປັນເວລາຫລາຍເດືອນ.ຈົນຮອດຕົ້ນປີ 1966 *ອະໄລດາ ມາຣ໌ຊ*, ເມຍຂອງເຂົາກໍໄດ້ປອມຕົວໄປຫາເຂົາທີ່ນະຄອນດາເອສະລາມແລະໃຊ້ຊີວິດຮ່ວມກັນທີ່ນີ້ເປັນເວລາຫົກອາທິດ. ຫລັງຈາກນັ້ນ*ເຈ* ຕັດສິນໃຈກັບໄປກູບາແບບງຽບໆໂດຍຜ່ານທາງກຸງ*ປຣາກ(ເຊັກໂກສະໂລວາກີ)*. ຕະຫລອດໄລຍະເວລາທີ່ພັກຢູ່ກຸງປຣາກນັ້ນ*ເຈ* ພະຍາຍາມຕິດຕໍ່ປະສານງານກັບນັກຮົບສາກົນກູບາແລະພັກກອມມຸຍນິດ *ໂບລິວີ.*

ໃນປຶ້ມ "ເຈ ເກວາຣາ" *ຍືນ ລີ ອັນເດີສັນ* ໄດ້ຂຽນວ່າ: *ບຸກຄົນສຳຄັນທີ່ສຸດທີ່ພາໃຫ້ເຈ ເດີນທາງໄປໂບລິວີຄື ຟີແດນ ກາສໂຕຣ ນັ້ນເອງ. ນອກຈາກນັ້ນທາງການກູບາແລະພັກກອມມຸຍນິດໂບລິວີໄດ້ກຽມການ "ສົ່ງອອກນັກປະຕິວັດ" ຈາກກູບາໄວ້ເປັນທີ່ຮຽບຮ້ອຍແລ້ວ. ເວົ້າເຖິງຂະບວນການກອມມຸຍນິດສາກົນໃນຍາມນັ້ນກໍມີຄວາມແຕກແຫງໃນລະດັບສູງໂດຍສະເພາະຄືໂຊວຽດແລະຈີນແດງ ຄືຕ່າງກໍບໍ່ລົງຮອຍກັນໃນເລື່ອງແນວທາງການເມືອງແລະວິທີປະຕິບັດ. ສະຫະພາບໂຊວຽດຄັດຄ້ານ "ສົ່ງອອກການປະຕິວັດ" ໃນຂະນະທີ່ທາງຝ່າຍຈີນແດງພວມໃຫ້ການສະໜັບສະໜຸນໂລກທີສາມໃນການຕໍ່ສູ້ປົດປ່ອຍຊາດຕ້ານຈັກກະພັດນິຍົມ. ການປະຕິວັດໃນໂບລິວີກໍຈຶ່ງເປັນບັນຫາກືນບໍ່ເຂົ້າຄາຍບໍ່ອອກລະຫວ່າງປະເທດມະຫາອຳນາດສັງຄົມນິຍົມ. ພັກກອມມຸຍນິດໂບລິວີຍາມນັ້ນມີທັງພວກເດີນສາຍຈີນຊຶ່ງນຳພາໂດຍ ອອສກາ ຊາໂມຣາ ມີທັງພວກເດີນສາຍໂຊວຽດຊຶ່ງນຳພາໂດຍ ມາຣີໂອ ມົນເຣ. ມາຣີໂອ ມົນເຣ ໄດ້ເວົ້າໄວ້ວ່າ: ມື້ຫນຶ່ງຂະນະທີ່ຂີ່ເຮືອບິນກັບໄປກຸງລາຮາວານ ຟີແດນ ກາສໂຕຣໄດ້ເວົ້າກັບເຂົາວ່າ: "ພວກເຮົາຕ່າງກໍມີເພື່ອນຮ່ວມກັນຄົນຫນຶ່ງທີ່ຕ້ອງການກັບປະເທດຂອງເຂົາເພື່ອນຄົນນີ້ເປັນນັກປະຕິວັດຊັ້ນຍອດທີ່ບໍ່ມີໃຜປະຕິເສດໄດ້ແລະຫົນທາງທີ່ຈະກັບໄປປະເທດອາກຊັງຕິນທີ່ດີທີ່ສຸດກໍຄືໂບລິວີ"*



6

ກໍ່ສົງຄາມກອງຫຼອນທີ່ໂບລີວີ

ກ່ອນໜ້າທີ່ ເຈ ແລະພັກພວກນັກຮົບຈາກສາຍພູມາແອສະຕຼາຈະເດີນທາງໄປປະເທດໂບລີວີນັ້ນ, ພວກເຂົາໄດ້ໄປຮ່ວມຂະບວນການປົດປ່ອຍຊາດໃນປະເທດຄອງໂກ ໂດຍມີ *ມູເລເລ* ແລະ *ຊູມາລີໂອສ* ເປັນຜູ້ນຳພາເພື່ອຕໍ່ຕ້ານກັບກຸ່ມປະຕິການຂາຍຊາດ *ຊອມເບ.* ເຈ ພະຍາຍາມຈະເອົາບົດຮຽນຈາກການສູ້ຮົບຂອງຕົນໄປສິດສອນໃຫ້ແກ່ໜ່ວຍກອງຫລອນຊາວອັຟຣິກາເຫລົ່ານັ້ນແຕ່ເຂົາຕ້ອງພົບກັບຄວາມລຳບາກຫລາຍປະການ. ເຈ ພົບເຫັນວ່າແນວຄິດຈິດໃຈຂອງພວກນັກຮົບເຫລົ່ານັ້ນຍັງບໍ່ຮັບຮູ້ຢ່າງເລິກເຊິ່ງເຖິງແນວຄິດສາກົນກຳມາຊີບ, ພວກເຂົາເຫລົ່ານັ້ນຍັງບໍ່ຊຶມຊາບແນວຄິດຫລັກໝັ້ນຂອງເຈຢ່າງຂາດຕົວແລະຕາຍໃຈເທື່ອ, ນອກຈາກນັ້ນແລ້ວໃນກຸ່ມກອງຫລອນຊາວອັຟຣິການັ້ນຍັງມີບາງຄົນທີ່ເຫັນແກ່ຜົນປະໂຫຍດສ່ວນຕົວ, ບໍ່ມີຄວາມຈິງຈັງເທົ່າທີ່ຄວນ. ພະຍາດໃນຮ່າງກາຍກໍເປັນອຸປະສັກໜັກໜ່ວງສຳລັບເຂົາຕື່ມອີກ, ດ້ວຍເຫດດັ່ງນັ້ນພວກເຂົາຈຶ່ງໄດ້ຕັດສິນໃຈກັບຄືນກູບາຢ່າງລັບໆ ໃນລະຫວ່າງເດືອນ ມີນາ 1965 .

ຫລັງຈາກນັ້ນ, ເຈກໍໄດ້ສົ່ງນັກປະຕິວັດຈາກກູບາຫລາຍຄົນໄປໂບລີວີເພື່ອປູທາງໃນການໄປຂອງເຂົາແລະເພື່ອຕິດຕໍ່ຫາຜູ້ທີ່ຈະເຂົ້າຮ່ວມຂະບວນການພ້ອມທັງສຳຫລວດພື້ນທີ່ໄວ້ດ້ວຍ .

ໃນລະຫວ່າງເດືອນ ກໍລະກົດ-ກັນຍາ 1966, ເຈໄດ້ທຳການເຝິກແອບອົບຮົມແລະຄັດເລືອກເອົາຜູ້ທີ່ຊິ ຕິດຕາມເຂົາໄປຕໍ່ສູ້ໃນໂບລີວີ .

ຜູ້ທີ່ຖືກຄັດເລືອກໄດ້ນັ້ນມີ 17 ຄົນ, ໃນນັ້ນມີທະຫານຊັ້ນຜູ້ໃຫຍ່ 4 ຄົນ, ມີກຳມະ

ການໃນສູນກາງພັກຄອມມຸຍນິດກູບາ4ຄົນ, ນອກຈາກນັ້ນກໍມີລັດຖະມົນຕີ, ລັດຖະມົນຕີຊ່ວຍ, ອະທິບໍດີ...ງລງ...ພະແນກຕິດຕໍ່ຂອງເຈ ໄດ້ເຂົ້າພົບ *ມາຣີໂອ ມົນເຮ* ເລຂາທິການໃຫຍ່ພັກຄອມມຸຍນິດໂບລີວີເພື່ອຕິດຕໍ່ຂໍຄວາມຮ່ວມມືສະໜັບສະໜູນບໍ່ວ່າດ້ານນະໂຍບາຍກໍຄືດ້ານກຳລັງພົນ.

ຕົກມາຮອດວັນທີ 4 ພະຈິກ 1966, ເຈ ເກວາຣາ ໄດ້ເດີນທາງມາຮອດ ລາປາຊ, ເມືອງຫລວງຂອງປະເທດ ໂບລີວີ ໂດຍໃຊ້ໜັງສືຜ່ານແດນໃນຊື່ *ອາໂດນໂຟ ເມນາ ກົງຊາເລຊ*, ພໍ່ຄ້າສັນຊາດອູຣູກວາຍ.

ຫລັງຈາກນັ້ນ, ເຂົາກໍໄດ້ຈາກຕົວເມືອງໄປສູ່ຈຸດນັດພົບຂອງກຳລັງກອງຫລອນທີ່ໄຮ່ແຫ່ງໜຶ່ງແຄມແມ່ນ້ຳ ນັງກາຮົວສຸ ຢູ່ທາງພາກໃຕ້ຂອງປະເທດໂບລີວີ.ໃນປື້ມບັນທຶກປະຈຳວັນຂອງເຂົານັ້ນຂຽນໄວ້ວ່າ: "ວັນທີ 7 ພະຈິກ 1966 ນີ້ເອງແມ່ນມື້ເລີ້ມຕົ້ນເປີດສັງກາດໃໝ່ຂອງຂະບວນການຕໍ່ສູ້".

ເພື່ອຂ້າເວລາໃນການລໍຄອຍສະມາຊິກຄົນອື່ນໆທີ່ຈະມາສົມທົບນັ້ນ, ເຈ ແລະສະຫາຍຜູ້ມາກ່ອນຈຳນວນໜຶ່ງກໍພາກັນເລີ້ມສຳຫລວດພື້ນທີ່. ພວກເຂົາພະຍາຍາມທີ່ສຸດບໍ່ໃຫ້ຊາວບ້ານຫລືຜູ້ຄົນທີ່ຜ່ານມາແຖບນີ້ພົບເຫັນພວກເຂົາເຈົ້າ. ຍາມໃດພວກເຂົາກໍລີ້ຊ່ອນຕົວຢ່າງລະມັດລະວັງ. ໂດຍສ່ວນຫລາຍແລ້ວພໍຕົກຕອນຄ່ຳມາ, ເຈ ມັກເປີດການໂອ້ລົມກັບບັນດານັກຮົບສະເໝີ, ມີຫລາຍເທື່ອເຂົາໄດ້ແຈ້ງເຈຕະນາລົມຂອງຕົນຕໍ່ນັກຮົບຊາວໂບລີວີຢ່າງເປີດແປນດັ່ງເຂົາໄດ້ອະທິບາຍວ່າ: ເຂົາເອງແລະຄົນຂອງເຂົາບໍ່ໄດ້ເດີນທາງມາເພື່ອຕໍ່ສູ້ແທນປະຊາຊົນໂບລີວີ ພຽງແຕ່ມາຊ່ວຍຊຸກຍູ້ພວກເຂົາເຈົ້າໃນການລຸກຮື້ຂຶ້ນເຮັດສົງຄາມປົດປ່ອຍຊາດເທົ່ານັ້ນ.

"ສະນັ້ນນັກຮົບຊາວໂບລີວີທີ່ໄດ້ເຂົ້າມາຮ່ວມໃນຂະບວນການຕ້ອງຈຳໃສ່ໃຈວ່າ:

ເມື່ອໃດໄລຍະເຝິກ ແອບອົບຮົມຫາກຜ່ານພົ້ນໄປ, ຄວາມຮັບຜິດຊອບຕໍ່ໜ້າທີ່ໃນການນຳພາປະເທດຊາດທັງໝົດຈະຕ້ອງຕົກເປັນພາລະແບກຫາບຂອງພວກເຂົາຢ່າງບໍ່ມີທາງເລືອກ. ສ່ວນພວກເຮົາທີ່ເຫລືອນັ້ນ, ໜ້າທີ່ພວກເຮົາບໍ່ແມ່ນເປັນໜ່ວຍລູກແຕກ. ພວກສະຫາຍພຸ້ນເປັນລູກແຕກ: ພວກເຮົາມີຄວາມສຳຄັນນ້ອຍກວ່ານັ້ນ, ພວກເຮົາເປັນພຽງສະນວນລະເບີດ, ພວກເຮົາເປັນພຽງໄລນ້ອຍໆທີ່ຈະຊຸກຍູ້ໃຫ້ລະເບີດແຕກຂຶ້ນຢ່າງມີປະສິດທິພາບແລະໄດ້ຜົນເທົ່ານັ້ນເອງ".

ໃນເດືອນທຳອິດຂອງການເລີ່ມງານກອງຫລອນນີ້, ເຈໄດ້ບັນທຶກການສຳຫລວດດັ່ງນີ້: "ທຸກສິ່ງທຸກຢ່າງເປັນໄປຢ່າງຮຽບຮ້ອຍດີ, ການມາຮອດຂອງເຮົາບໍ່ເປັນພິລຸດຜິດສັງເກດແຕ່ປະການໃດ"

ນັກຮົບຈຳນວນເຄິ່ງໜຶ່ງກໍມາຮອດຈຸດນັດພົບດ້ວຍດີເຖິງຈະມີການຊັກຊ້າກໍຕາມ. ບໍລິເວນແຫ່ງນີ້ມີສະພາບການສຸດທີ່ອຳນວຍເພາະມັນໄກຈາກບ້ານຄົນ, ປັດສະຈາກຄົນທ່ອງທ່ຽວໄປມາ, ພວກເຮົາສາມາດຕັ້ງຄ້າຍພັກທີ່ນີ້ ດົນປານໃດກໍໄດ້, ໂຄງການສະເພາະໜ້າຂອງພວກເຮົາແມ່ນລໍຄອຍຈຳນວນທີ່ຍັງເຫລືອແລະເພີ່ມທະວີນັກຮົບຊາວໂບລີວີຕື່ມອີກຈັກ 20 ຄົນແລ້ວພວກເຮົາກໍຈະເລີ່ມປະຕິບັດງານທັນທີ. ແຕ່ຕ້ອງເບິ່ງກ່ອນວ່າພຶດຕິການຂອງ *ມາຣິໂອ ມົນເຣ* ຕໍ່ຂະບວນພວກເຮົາຈະເປັນແນວໃດ, ແລະສິ່ງຊອມເບິ່ງຄົນຂອງ *ມອຍເສສ ເກວາຣາ* ວ່າຈະຢູ່ໃນລັກສະນະໃດແທ້. *ມອຍເສສ ເກວາຣາ* ແມ່ນຫົວໜ້າກຸ່ມຄອມມຸຍນິດທີ່ແຍກຕົວອອກມາຈາກພັກຄອມມຸຍນິດໂບລີວີ, ເພື່ອມາຮ່ວມການຕໍ່ສູ້ດ້ວຍກຳລັງອາວຸດກັບກຳລັງກອງຫລອນຂອງເຈ.

ໃນວັນທີ 31 ທັນວາ 1966, ການພົບພໍ້ລະຫວ່າງ *ເຈ* ແລະ *ມາຣິໂອ ມົນເຣ* ມີຂຶ້ນທີ່ຄ້າຍນັງກາຮົວສຸ. ພວກເຂົາເປີກສາຫາລືເຖິງບັນຫາການລຸກຂຶ້ນຕໍ່ສູ້ປົດປ່ອຍຊາດ, *ມົນເຣ* ໄດ້ສະເໜີເງື່ອນໄຂ 2 ຂໍ້ທີ່ ເຈ ບໍ່ສາມາດຮັບເອົາໄດ້ຄື: ເຂົາຢາກເປັນຜູ້ກຳທາງດ້ານການເມືອງແລະການທະຫານ. ຄວາມຍຶດໝັ້ນຕາຍໃຈຂອງ*ເຈ* ແມ່ນການ

ຕໍ່ສູ້ດ້ວຍກຳລັງອາວຸດຈາກຊົນນະບົດເຂົ້າຍຶດຕົວເມືອງ, ຜູ້ນຳ, ຜູ້ບັນຊາກໍຕ້ອງນຳພາການຕໍ່ສູ້ໃນປ່າບໍ່ແມ່ນຈະໄປຕັ້ງສຳນັກງານໃນຕົວເມືອງ, ຊຶ່ມີຊີ້ຕີນບົ່ງຄຳສັ່ງຈາກຫ້ອງການ. ເຈ ໄດ້ບັນທຶກກ່ຽວກັບເລື່ອງນີ້ວ່າ:

"ລັກສະນະຂອງ ມົນເຣ ອາດເຮັດໃຫ້ການຂະຫຍາຍຕົວຂອງກຸ່ມພວກເຮົາຊັກຊ້າໄປ, ແລະອີກປະການໜຶ່ງ, ມັນກໍເປັນການປົດປ່ອຍເຮົາອອກຈາກຄຳໝັ້ນສັນຍາທາງການເມືອງຊຶ່ງໄດ້ໃຫ້ໄວ້ກັບເຂົາໃນເມື່ອກ່ອນ. ວຽກງານຂັ້ນຕໍ່ໄປຂອງເຮົາກໍແມ່ນຕິດຕໍ່ພົວພັນກັບ ມອຍເສສ ເກວາຣາ ເພື່ອດຶງເອົາເຂົາເຂົ້າມາຮ່ວມຂະບວນການແລະສືບຕໍ່ລໍຄອຍນັກຮົບໂບລິວີທີ່ຈະມາສົມທົບຕື່ມອີກ"

ຕົກມາຮອດເດືອນ ມັງກອນ 1967, ເຈ ໄດ້ສະຫລຸບຜົນງານປະຈຳເດືອນດັ່ງນີ້:

"ສິ່ງທີ່ເຮົາຄາດຄະເນໄວ້ລ່ວງໜ້ານັ້ນແມ່ນບໍ່ມີຜິດພາດ. ລັກສະນະທ່າທີຂອງ ມົນເຣ ນັ້ນ, ນອກຈາກຈະບໍ່ເປັນມິດແລ້ວມັນຍັງເປັນການທໍລະຍົດຕື່ມອີກ. ພັກຂອງເຂົາຈະໃຊ້ອາວຸດຕ້ານກັບພວກເຮົາ, ເຮົາບໍ່ຮູ້ດອກວ່າເລື້ອງແບບນີ້ຈະແກ່ຍາວໄປຮອດໃສແຕ່ທີ່ສຳຄັນນັ້ນກໍຄືວ່າສິ່ງດັ່ງກ່າວຈະບໍ່ສາມາດຢັບຢັ້ງແຜນການຂອງພວກເຮົາໄດ້ເປັນອັນຂາດ. ຄົນຂອງເຂົາຜູ້ມີຄວາມຊື່ສັດ, ມີຈິດໃຈໃນການຕໍ່ສູ້ຈິງຈັງໄດ້ເຂົ້າຂ້າງເຮົາແລ້ວ, ເຖິງແມ່ນວ່າພວກເຂົາຈະມີຄວາມຄິດທີ່ຜິດນ້ອຍໃຫຍ່ຫລາຍໜ້ອຍໃນບາງຄັ້ງບາງຄາວກໍຕາມ.ຮອດສູ່ມື້ນີ້, *ມອຍເສສ*ກໍມີການປະພຶດດີທີ່ສຸດເຊັ່ນດຽວກັບຄົນຂອງເຂົາ. ແຕ່ເຮົາຕ້ອງເບິ່ງຕໍ່ໄປວ່າໃນອານາຄົດມັນຈະເປັນແນວໃດ".

ປັດຈຸບັນ, ສັງກາດໃໝ່ແຫ່ງການສູ້ຮົບແບບກອງຫລອນໄດ້ປະກົດຂຶ້ນແລ້ວແລະພວກເຮົາກໍຈະໄດ້ທົດສອບຄວາມສາມາດຂອງຄົນພວກເຮົາ, ເວລາເທົ່ານັ້ນຈະບອກໃຫ້ຮູ້ວ່າກອງຫລອນພວກເຮົາຈະມີບົດບາດຫລາຍສຳໃດໃນການປະຕິວັດໂບລິວີ"

ຕະຫລອດໄລຍະເວລາຊຶ່ງພວກເຂົາໄດ້ເຄື່ອນໄຫວໃນບໍລິເວນປ່າຕຶບດົງໜາຜາຊັນແຖບນີ້, ພວກເຂົາໄດ້ທຳການສຳຫລວດພູມີປະເທດ, ສ້າງຄ້າຍທີ່ໝັ້ນຊົ່ວຄາວແລະສ້າງບ່ອນເກັບມ້ຽນສະບຽງອາຫານແບບປິດລັບ.

ມາຮອດເດືອນກຸມພານີ້ເຈໄດ້ຕີລາຄາການເຄື່ອນໄຫວຂອງພວກເຂົາດັ່ງນີ້:

"ການເດີນທາງໃນໄລຍະໄກຜ່ານພົ້ນໄປດ້ວຍດີ. ແຕ່ສິ່ງທີ່ສ້າງຄວາມສະຫລົດໃຈແກ່ພວກເຮົາກໍຄືການສູນເສຍສະຫາຍບັງຈາມິນ. ເຂົາໄດ້ຕາຍດຶກນ້ຳເພາະລອຍນ້ຳບໍ່ເປັນ, ເປັຢູ່ທາງຫລັງກໍຫນັກ, ພວກເຮົາເອງກໍບໍ່ສາມາດຊ່ອຍໄດ້ເພາະກະແສນ້ຳມັນແຮງຫລາຍ. ຄົນຂອງເຮົາສ່ວນໃຫຍ່ຍັງອ່ອນແອຢູ່. ໂດຍສະເພາະແມ່ນນັກຮົບ ໂບລິວີ ທີ່ຍັງບໍ່ເດັດດ່ຽວເທົ່າທີ່ຄວນ, ອີກປະການຫນຶ່ງຄວາມອິດເມື່ອຍຫິວໂຫຍພາໃຫ້ພວກເຂົາບໍ່ຫ້າວຫັນເບີກບານປານໃດ"

ການຢູ່ກິນໃນປ່າຂອງພວກເຂົານັ້ນເປັນໄປແບບອຶດຢາກງບໍ່ເປັນປົກກະຕິນອກຈາກຈະອາໄສຊື້ອາຫານການນຳປະຊາຊົນແລ້ວ, ພວກເຂົາກໍແບ່ງກັນອອກໄປໂຫ່ເນື້ອລ່າສັດມາເປັນອາຫານ. ແນວຄິດເຫັນແກ່ຕົວຂອງນັກຮົບໃຫມ່ກໍຍັງມີຢູ່ຄືການລັກອາຫານກະປ໋ອງມາເຊື່ອງໄວ້ກິນຜູ້ດຽວ. ຍ້ອນແນວນັ້ນ, ເຈຈຳເປັນຕ້ອງເອົາໃຈໃສ່ ເລື້ອງລະບຽບວິໄນຂອງທະຫານແລະຄຸນສົມບັດຂອງນັກປະຕິວັດຢ່າງເຄັ່ງຄັດ.

ການປະທະກັນລະຫວ່າງກຳລັງປະຕິວັດແລະທະຫານຝ່າຍລັດຖະບານມີຂຶ້ນໃນທ້ອງເດືອນ ມີນາ. ໃນໄລຍະຕົ້ນຂອງການດັກສະກັດຍິງສັດຕູນັ້ນ, ກຳລັງກອງຫລອນໄດ້ດັບສູນທະຫານປະຕິການ 7 ຄົນ, ໄດ້ຈັບເປັນສະເລີຍ 16 ຄົນ, ຜູ້ຖືກບາດເຈັບມີ 4 ຄົນ. ນອກຈາກນັ້ນພວກເຂົາຍັງຍຶດອາວຸດໄດ້ອີກຢ່າງຫລວງຫລາຍ. ຄົນເຈັບຖືກປິ່ນປົວສະເລີຍຖືກອົບຮົມແລ້ວກໍຖືກປ່ອຍຕົວໄປ, ອັນນັ້ນລະລະບຽບວິໄນ

ຂອງກຳລັງປະຕິວັດ. ພໍແຕ່ການສູ້ຮົບອຸບັດຂຶ້ນ, ຝ່າຍລັດຖະບານກໍເອົາຍົນມາຖິ້ມລະເບີດໄປທົ່ວບໍລິເວນອ້ອມແອ້ມບ່ອນເກີດເຫດ. ແຕ່ກອງຫລອນໄດ້ຫນີຫ່າງຈາກເຂດນັ້ນໄປໄກແລ້ວ.

ໃນໄລຍະນີ້ກຳລັງກອງຫລອນໄດ້ແບ່ງອອກເປັນ 3 ພາກສ່ວນດັ່ງນີ້:

1. ກອງຫນ້າ: ມີສະມາຊິກທັງຫມົດ 11 ຄົນ ,

ໂດຍແມ່ນ *ນີເກລ* ເປັນຫົວຫນ້າ .

2. ກອງຫລັງ : ມີສະມາຊິກທັງຫມົດ 11 ຄົນ ,

ໂດຍແມ່ນ *ຣວາກວິນ* ເປັນຫົວຫນ້າ .

3. ສູນກາງ : ມີສະມາຊິກທັງຫມົດ 19 ຄົນ , ໂດຍແມ່ນ ເຈ ເປັນຫົວຫນ້າ

ອີງໃສ່ຈິດໃຈຂອງກອງປະຊຸມໃນຄືນວັນທີ 25-3-67, ຂະບວນການຂອງພວກເຂົາໃສ່ຊື່ວ່າ: "ກຳລັງປົດປ່ອຍຊາດໂບລີວີ"

ເມື່ອມີການປະທະກັນເກີດຂຶ້ນອັນຫມາຍເຖິງລະຄັງທອງຂອງຂະບວນການຕໍ່ສູ້ປົດປ່ອຍຊາດໄດ້ດັງກ້ອງກັງວານຂຶ້ນກຸ່ມປະຕິການຜູ້ກຳອຳນາດກໍອົກສັ່ນຂວັນເສຍໄປຕາມໆກັນ. *ບາຣຽງໂຕສ*, ປະທານາທິບໍດີປະເທດໂບລີວີກໍມີຄຳສັ່ງໃຫ້ກຳລັງທະຫານບຸກເຂົ້າປິດລ້ອມແລະກວາດລ້າງກຳລັງປະຕິວັດ.

ໃນວັນທີ 28-3-67, ວິທະຍຸລາປາຊຸໄດ້ອອກຂ່າວວ່າ: ທະຫານລັດຖະບານ 2.000 ຄົນ ໄດ້ເຂົ້າປິດລ້ອມໃນວົງລັດສະໝີ 20 ຫລັກອ້ອມເຂດເຄື່ອນໄຫວຂອງກອງຫລອນ. ພວກເຂົາຮັດວົງປິດລ້ອມເຂົ້າເລື້ອຍໆພ້ອມທັງໃຊ້ຍົນໄປຖິ້ມລະເບີດນາປານໃສ່ຕື່ມອີກ.

ພໍຕົກມາຮອດເດືອນເມສານັ້ນ, ມີການປະທະກັນ 4 ຄັ້ງ, ແຕ່ລະຄັ້ງສ້າງຄວາມເສຍຫາຍແກ່ຝ່າຍລັດຖະບານເປັນຢ່າງໜັກຄືຖືກດັບສູນ 10 ຄົນ, ຖືກຈັບເປັນສະເລີຍ 36 ຄົນ ໃນຂະນະດຽວກັນນັກຮົບປະຕິວັດກໍເສຍສະຫລະ 2 ຄົນຄື *ຣູບີໂອ* ຫລື ຮ້ອຍເອກ *ຊີ່ວເຣສ ກາໂຢນ*, ອະດີດລັດຖະມົນຕີຊ່ວຍກະຊວງອຸດສາຫະກຳນ້ຳຕານກູບາ ແລະອີກຜູ້ໜຶ່ງແມ່ນ *ໂຣລັງໂດ* ຫລື ຮ້ອຍເອກ *ເອລິເຊໂອ ເຣແຢສ ໂຣດຣີເກສ*, ນັກຮົບທີ່ດີເດັ່ນທີ່ສຸດຜູ້ໜຶ່ງຊຶ່ງ ເຈ ໃຫ້ຄວາມໄວ້ວາງໃຈຫລາຍ, ເຈ ໄດ້ເວົ້າເຖິງເຂົາວ່າ: "ການສູນເສຍ *ໂຣລັງໂດ* ນີ້ສ້າງຄວາມກະທົບກະເທືອນແກ່ເຮົາຫລາຍທີ່ສຸດ ເພາະເຮົາເຄີຍຄິດຈະມອບ ໝາຍວຽກງານການບັງຊາໃນແນວທີ 2 ໃຫ້ເຂົາຢູ່ແລ້ວ"

ສຳລັບການເຄື່ອນໄຫວທົ່ວໄປໃນເດືອນເມສາເຂົາບັນທຶກໄວ້ວ່າ: "ພວກເຮົາຍັງບໍ່ມີນັກຮົບໃໝ່ເຂົ້າມາຮ່ວມຂະບວນການ, ຄວາມສະໜັບສະໜູນເປັນໃຈຂອງຊາວໄຮ່ນາກໍຍັງບໍ່ຄືບໜ້າແຕ່ປະການໃດ, ການສູນເສຍຄົນເຖິງ 3 ຄົນ ໃນເດືອນດຽວໂດຍບໍ່ມີຜູ້ເຂົ້າມາຕື່ມແມ່ນບັນຫາຫຍຸ້ງຍາກບໍ່ນ້ອຍ. ຊ້ຳບໍ່ພໍໂລກໄພໄຂ້ເຈັບຍັງບັງບຽດສຸຂະພາບຂອງນັກຮົບເຮົາຕື່ມອີກ. ເຮົາຈຳເປັນແບ່ງແຍກກຳລັງໃນການເຄື່ອນໄຫວອັນພາໃຫ້ກຳລັງທີ່ມີນ້ອຍຢູ່ແລ້ວຖືກບັ່ນທອນອອກຕື່ມ".

ການຕິດຕໍ່ພົວພັນກັບກອງຫລັງຂອງ*ຮວານວິນ*ກໍຖືກຕັດຂາດ. ສຳລັບຍຸດທະສາດດ້ານທະຫານເຮົາສັງເກດໄດ້ດັ່ງນີ້:

1. ຈົນຮອດດຽວນີ້, ການຄວບຄຸມກວດກາຂອງທະຫານຝ່າຍລັດຖະບານກໍຍັງບໍ່ທັນເຂັ້ມງວດເທື່ອ. ເຖິງ ພວກເຂົາຈະເປັນອຸປະສັກໃນການເຄື່ອນໄຫວແຕ່ກໍບໍ່ໄດ້ໝາຍວ່າພວກເຮົາຈະເຄື່ອນໄຫວບໍ່ໄດ້ແຕ່ຢ່າງໃດ. ທັງນີ້ກໍ

ເພາະພວກເຂົາຍັງບໍ່ເຂັ້ມແຂງ, ຍັງບໍ່ເຄື່ອນທີ່ຫລາຍປານໃດ, ໂດຍສະເພາະການດັກສະກັດຍິງຂອງພວກເຮົາພາໃຫ້ ພວກເຂົາຢ້ານກົວທີ່ຈະບຸກເຂົ້າປ່າເລິກໂດຍບໍ່ຮູ້ພື້ນທີ່.

2. ການສູ້ຮົບດຳເນີນໄປເລື້ອຍໆແລະແມ່ນການຕໍ່ສູ້ໃນ 2 ດ້ານພ້ອມກັນ. ຄືພາຍຫລັງທີ່ມີການເຜີຍແຜ່ບົດຂຽນຂອງເຮົາທີ່ລາຮາວານ, ທຸກຄົນຄົງບໍ່ສົງໃສອີກແລ້ວວ່າເຮົາຕ້ອງຢູ່ທີ່ນີ້. ມັນເປັນສິ່ງແນ່ນອນທີ່ວ່າພວກອາເມຣິກາເໜືອຕ້ອງສົ່ງກຳລັງມາທີ່ນີ້, ໂດຍສະເພາະແມ່ນຍິນເອລີກົບແຕແລະທະຫານ "ໝວກວ້ອມຂຽວ"

3. ກຳລັງທະຫານລັດຖະບານ, ຢ່າງນ້ອຍໜຶ່ງຫລືສອງກອງຮ້ອຍໄດ້ມີການປັບປຸງເຕັກນິກການສູ້ຮົບຂອງພວກເຂົາ.ພວກເຂົາໄດ້ວາງກັບດັກໃສ່ພວກເຮົາແລະພວກເຂົາຍັງມີຄວາມທຸ່ນທ່ຽງເມື່ອປະທະກັບພວກເຮົາ.

4. ການປຸກລະດົມປະຊາຊົນຊາວໄຮ່ນາກໍ່ສຸດທີ່ລຳຄານສັບສົນ, ພວກເຂົາບໍ່ສະແດງທ່າທີຕື່ນເຕັ້ນຫລືຫ້າວຫັນເລີຍ. ເຮົາບໍ່ສາມາດອີງໃສ່ພວກເຂົາເລີຍ.

ຮອດເດືອນທີຫົກຂອງການດຳເນີນສົງຄາມກອງຫລອນ, ມີການປະທະກັນສາມຄັ້ງ, ສ້າງຄວາມເສຍຫາຍແກ່ຝ່າຍລັດຖະບານໜັກໜ່ວງທີ່ສຸດຂະນະທີ່ທາງຝ່າຍກອງຫລອນບໍ່ມີໃຜເສຍຊີວິດເລີຍ. ໜ່ວຍກອງຫລັງຂອງຮວາກວິນຍັງຄົງຂາດການຕິດຕໍ່ກັນຕາມເຄີຍ. ໃນເວລານີ້ຈຳນວນນັກຮົບກອງຫລອນມີ 25 ຄົນ.

ໜ່ວຍກອງຫລອນດັ່ງກ່າວເຖິງຈະບໍ່ມີຊາວນາເຂົ້າຮ່ວມຕໍ່ສູ້ຄຽງບ່າຄຽງໄຫລ່ກັບພວກເຂົາແຕ່ຕົກມາເດືອນນີ້ຊາວໄຮ່ນາເຊົາຢ້ານພວກເຂົາແລ້ວພ້ອມທັງຊົມເຊີຍຜົນງານຂອງພວກເຂົາຕື່ມອີກ, ນັ້ນລະຄືບາດກ້າວທີ່ຈະແກ່ດຶງເອົາຄວາມເຫລື້ອມໃສແລະການສະໜັບສະໜູນຂອງຊາວໄຮ່ນາໃນຂັ້ນຕໍ່ໄປ.

ໃນວັນທີ 1 ກໍລະກົດ, *ບາຣຽງໂຕສ* ໄດ້ໃຫ້ສຳພາດໜັງສືພິມ, ໃນນັ້ນເຂົາໄດ້ກ່າວ

ເຖິງການປະກົດຕົວຂອງ ເຈ ເກວາຣາ ໃນໂບລີວີແລະພ້ອມດຽວກັນເຂົາກໍປະກາດຈະເອົາຊີວິດ ເຈ ໃຫ້ໄດ້ໃນບໍ່ທໍ່ໃດມື້ຂ້າງໜ້າ.

ສະຖິຕິການສູ້ຮົບໃນເດືອນກໍລະກົດນີ້ມີ 3 ຄັ້ງ, ສ້າງຄວາມເສຍຫາຍແກ່ສັດຕູດັ່ງນີ້: ຖືກຂ້າຕາຍ 7 ຄົນ, ຖືກບາດເຈັບ 10 ຄົນ. ສ່ວນກຳລັງປະຕິວັດນັ້ນມີ 3 ຄົນ ຢູ່ໃນສະພາບສູ້ຮົບບໍ່ໄດ້ເພາະຖືກບາດເຈັບ.

ວຽກງານສະເພາະໜ້າຂອງພວກເຂົາໃນເດືອນນັ້ນກໍແມ່ນການຂົນຂວາຍເອົາສະມາຊິກມາຕື່ມແລະຂົນຂວາຍຫາຫວ້ານຢາປົວພະຍາດ.

ນັບແຕ່ໄດ້ດຳເນີນສົງຄາມກອງຫລອນມາຕັ້ງແຕ່ເດືອນທັນວາພຸ້ນ, ເຈ ຕີລາຄາວ່າເດືອນສິງຫາແມ່ນເດືອນທີ່ຫຍຸ້ງຍາກສັບສົນທີ່ສຸດ, ເຂົາບັນທຶກໄວ້ວ່າ: "ນັບໄດ້ວ່າເດືອນສິງຫານີ້ແມ່ນເດືອນທີ່ຂີ້ຮ້າຍກວ່າໝູ່ໝົດຢ່າງບໍ່ຕ້ອງສົງໃສ, ພວກເຮົາໄດ້ສູນເສຍເອກະສານສຳຄັນພ້ອມທັງຢາປົວພະຍາດຊຶ່ງຊຸກເຊື່ອງໄວ້ໃນຂຸມໃຕ້ດິນແຕ່ຖືກສັດຕູຄົ້ນພົບ, ນັບວ່າເປັນການສູນເສຍຍິ່ງໃຫຍ່ທີ່ສຸດຖ້າຈະເວົ້າດ້ານຈິດຕະວິທະຍາ. ນອກຈາກນັ້ນພວກເຮົາຍັງສູນເສຍເພື່ອນຮ່ວມຮົບໄປອີກ 2 ຄົນ ໃນໄລຍະທ້າຍເດືອນໂລກຫືດກໍໄດ້ອາລະວາດເຮົາຢ່າງໜັກໜ່ວງເພາະຂາດຢາລະງັບ, ນັກຮົບຫລາຍຄົນບໍ່ອຸ່ນອຽນນຳສຸຂະພາບຂອງເຮົາ,ນອກຈາກນັ້ນວິທະຍຸຍັງອອກຂ່າວການປະທະລະຫວ່າງທະຫານລັດຖະບານແລະໜ່ວຍກອງຫລັງຂອງ*ຮວາກອີນ*, ເຂົາແຈ້ງວ່າກອງຫລອນຈຳນວນໜຶ່ງຖືກຈັບໄດ້ແລະໄດ້ເປີດເຜີຍຄວາມລັບຫລາຍອັນພາໃຫ້

Tomara BUNKE
(ນາງກອງຫລອນທີ່ຮ່ວມສູ້ກັບເຈທີ່ໂບລີວີ)

ກຸ່ມຂອງພວກເຮົາເສຍຂວັນຫລາຍຄົນ"

ລັກສະນະພິເສດສຳລັບເດືອນນີ້ຄື:ສິນທຳຂອງນັກຮົບຫລຸດຢ່ອນຜ່ອນລົງເລື້ອຍໆ. ພ້ອມດຽວກັນຄວາມທໍລະຫົດອົດທົນ, ຄວາມເດັດດ່ຽວຕໍ່ສູ້ກໍບໍ່ກ້າວໜ້າຂຶ້ນເລີຍ. ມີພຽງ *ອິນຕິ* ແລະ *ໂກໂກ ເປເຣໂດ*, ສອງອ້າຍນ້ອງເທົ່ານັ້ນມີການບຸກໜ້າບືນຕົວຕາມແບບສະບັບຂອງພະນັກງານທະຫານແລະນັກປະຕິວັດຜູ້ເດັດດ່ຽວ.

ສຳລັບສະພາບການໃນເດືອນກັນຍານັ້ນເຄັ່ງຕຶງຂຶ້ນເລື້ອຍໆ, ເພາະທະຫານຝ່າຍລັດຖະບານທະວີຄວາມຮຸນແຮງໃນການປາບປາມກວາດລ້າງກອງຫລອນຍິ່ງຂຶ້ນ. ຈາກການດັກສະກັດຂອງຝ່າຍລັດຖະບານນັ້ນ, ໄດ້ເຮັດໃຫ້ນັກຮົບໃນກຸ່ມຂອງ ເຈເສຍຊີວິດອີກ 3 ຄົນຄື: *ມີເກລ*, *ໂກໂກ* ແລະ *ຈູລີໂອ*.ນອກນັ້ນກໍຍັງມີຜູ້ຫາຍສາບສູນຄື: *ເລໂອນ* ແລະ *ຣູລີໂອ*. ໃນເວລາຕໍ່ມາຄືວັນທີ 3 ຕຸລາ, ວິທະຍຸໄດ້ອອກຂ່າວວ່າພວກເຂົາທັງສອງຖືກຈັບເປັນສະເລີຍ.

ພໍຕົກມາຮອດວັນທີ 6 ຕຸລາ, ວິທະຍຸຊີລີອອກຂ່າວວ່າ: ມີທະຫານປະຕິການຈຳນວນ 1800 ຄົນ ອອກຕິດຕາມກວາດລ້າງກຸ່ມຂອງເຈ. ໃນບັນທຶກປະຈຳຕົວຊຶ່ງເຈມີໂອກາດຂຽນບັນທຶກປະຈຳວັນເປັນເທື່ອສຸດທ້າຍແມ່ນວັນ ທີ 7 ຕຸລາ, ເຂົາຂຽນດັ່ງນີ້: "ເວລາ 11 ເດືອນ ຊຶ່ງພວກເຮົາໄດ້ເລີ່ມປະຕິບັດງານກອງຫລອນມາໄດ້ລຸລ່ວງໄປແລ້ວຢ່າງບໍ່ມີຄວາມຂັດສົນ. ຈົນຮອດ 12 : 30 ໂມງ ຂອງມື້ນີ້ມີຍິງລ້ຽງແບ້ຜູ້ໜຶ່ງຜ່ານເຂົ້າມາໃນເຂດຄ້າຍພັກຊົ່ວຄາວຂອງພວກເຮົາ. ຈຳເປັນພວກເຮົາຕ້ອງໄດ້ຈັບລາວເປັນສະເລີຍ. ຍິງຄົນນັ້ນບໍ່ໄດ້ໃຫ້ຄວາມກະຈ່າງແຈ້ງກ່ຽວແກ່ການທະຫານ, ລາວມີແຕ່ຕອບວ່າບໍ່ຮູ້ຫຍັງໝົດເພາະບໍ່ໄດ້ແວ່ຜ່ານກາຍຄ້າຍທະຫານດົນແລ້ວ.

ລາວບອກສະເພາະເສັ້ນທາງເດີນນັ້ນເອງ. ລາວບອກພວກເຮົາວ່າພວກເຮົາຢູ່ໄກຈາກເມືອງອີເກີຣາປະມານ 4 ຫລັກ ແລະ ປະ ມານ 4 ຫລັກຈາກ ຣາກວາຍ ແລະປະມານ 8 ຫລັກຈາກເມືອງບຸຍກາຣາ. ຈົນຮອດເວລາ 17 : 30 ໂມງ, *ອິນຕີ, ອານີເຊໂຕ* ແລະ *ປາບບະລີໂຕ*ໄດ້ພາກັນໄປສືບຍິງຄົນນັ້ນຮອດເຮືອນຂອງລາວແລ້ວຈຶ່ງຮູ້ໄດ້ວ່າລາວມີລູກສາວຜູ້ໜຶ່ງ

ຄົນຂອງພວກເຮົາໄດ້ເອົາເງິນໃຫ້ສອງແມ່ລູກ 50 ເປໂຊ ເປັນຄ່າຈ້າງບໍ່ໃຫ້ພວກເຂົາປາກໄປປາກມາເລື່ອງພວກເຮົາແຕ່ກໍມີຄວາມເຊື່ອໝັ້ນນ້ອຍເຕັມທີວ່າພວກເຂົາຈະຮັກສາຄວາມລັບໄດ້. ຫລັງຈາກນັ້ນພວກເຮົາກໍເດີນທາງຕໍ່ໄປພາຍໃຕ້ແສງເດືອນສີມົວໆ. ການເດີນທາງຂອງພວກເຮົາເປັນໄປແບບລຳບາກຍາກເຂັນ, ພວກເຮົາໄດ້ປະຮອຍເກີບໄວ້ຕາມເສັ້ນທາງຜ່ານມາ. ຈົນຮອດ 2ໂມງກາງຄືນພວກເຮົາຈຶ່ງຢຸດພັກຜ່ອນ"

ເຈໄດ້ເລີ່ມບັນທຶກເຫດການປະຈຳວັນໃນໂບລີວີນັບຕັ້ງແຕ່ວັນທີ 7 ພະຈິກ 1966 ຈົນຮອດວັນທີ 7 ຕຸລາ 1967 ລວມເປັນເວລາ 332 ວັນ.

ມັນເປັນ 332 ວັນ ແຫ່ງການໃຊ້ຊີວິດແບບກອງຫລອນ

ມັນເປັນ 332 ວັນ ແຫ່ງການຕໍ່ສູ້

ເນື່ອງຈາກ*ແອລຊີໂນ*, ນາຍແພດປະຈຳຄະນະຖືກບາດເຈັບ, ການເດີນທາງຈຶ່ງອາໄສມ້າລໍ, ເຈ ຈຳຕ້ອງເຄື່ອນໄຫວໄປຕາມທາງໃຫຍ່ເຖິງມັນຈະສ່ຽງໄພເຂົາກໍຍອມເພາະມັນບໍ່ມີທາງເລືອກເຂົາເຫັນວ່າຄົນເຈັບຢູ່ໃນສະພາບລຳບາກທີ່ສຸດ. ຕະຫລອດໄລຍະທາງຊຶ່ງເຂົາຜ່ານມາ, ເຂົາຍ່າງຜ່ານບ້ານຄົນໃນຈຳນວນຊາວບ້ານຊຶ່ງພົບເຫັນນັ້ນມີຈຳນວນໜຶ່ງຕ້ອງໄປແຈ້ງຕໍ່ກອງກຳລັງທະຫານປະຕິການແນ່ນອນເພາະຜູ້ຄົນເຫລົ່ານັ້ນຍັງບໍ່ເຂົ້າໃຈແຈ້ງແນວ ທາງນະໂຍບາຍຂອງກຸ່ມກອງຫລອນຈຶ່ງບໍ່ໄດ້ໃຫ້ຄວາມຮ່ວມມືແຕ່ປະການໃດ.

ມື້ໃໝ່ຕໍ່ມາ, ມັນແມ່ນວັນອາທິດທີ 8 ຕຸລາ 1967 .

ການປະທະກັນເກີດມີຂຶ້ນໃນເວລາ 13 : 00 ໂມງ ທີ່ເຂົາບະຣາດາແດນຢູໂຣ

ໜ່ວຍກອງໜລອນຂອງເຈຕົກຢູ່ໃນວົງລ້ອມຂອງສັດຕູຊຶ່ງມາດັກສະກັດຢູ່ກ່ອນແລ້ວ, ກຳລັງປະຕິວັດເປີດການຈູ່ໂຈມເພື່ອຕີຝ່າວົງລ້ອມອອກໄປ. ນັກຮົບທີ່ຄຣຶ່ງບ່າຄຣຶ່ງໄຫລ່ເຈຕໍ່ສູ້ໄດ້ລົ້ມຕາຍລົງຫລາຍຄົນ, ຄຣຶ່ງຂ້າງເຂົານັ້ນມີນາງແພດທີ່ບາດເຈັບ ແລະນັກຮົບຊາວເປຣູຜູ້ໜຶ່ງຊຶ່ງຕົກຢູ່ໃນສະພາບທີ່ໜັກໜ່ວງທີ່ສຸດ.

ສຽງປືນເຮັ່ງຮ້ອນບໍ່ຂາດສາຍ.

ເຈ ພະຍາຍາມສຸດຂີດຍິງສະກັດກັ້ນເພື່ອປ່ອຍໂອກາດໃຫ້ພັກພວກຂອງເຂົາຖອຍໄປຫາທີ່ກຳບັງອັນປອດໄພແຕ່ໃນທີ່ສຸດເຂົາກໍຕົກເປັນເຫຍື່ອຂອງກະສຸນປືນ.

ເຂົາຖືກຍິງທີ່ຂາໂຕ້ແລະກໍບໍ່ສາມາດເໜັງຕີງໄປໄດ້. ແຕ່ມືຂອງເຂົາຍັງສາມາດລັ່ນໄກປືນໄດ້ຢູ່. ເຂົາຍິງຕໍ່ສູ້ຈົນກະທັ້ງປືນແອມ 2 ໃນມືແຕກທະລາຍ, ປືນສັ້ນທີ່ຂັດຢູ່ແອວຂອງເຂົາກໍບໍ່ມີລູກເຂົາໝົດປະຕູທີ່ຈະຕໍ່ສູ້ຕໍ່ໄປອີກແລ້ວ.

ແລ້ວເຂົາກໍຖືກຈັບຈົນໄດ້ພ້ອມກັບນາງແພດແລະນັກຮົບຊາວໂບລິວີຜູ້ໜຶ່ງຊື່ *ວິນລີ* ຫລື *ຊີມອນ ກູບາ*. ສ່ວນຜູ້ທີ່ແຫກວົງລ້ອມອອກໄປໄດ້ນັ້ນມີຈຳນວນ 10 ຄົນ ແລະພວກເຂົາກໍແບ່ງກັນເປັນ 2 ຈຸ, ຈຸທີໜຶ່ງມີນຳກັນ 4 ຄົນ, ພວກເຂົາຫວັງຈະເລັດລອດອອກນອກປະເທດແຕ່ຖືກຈັບໄດ້ໃນວັນທີ 12 ຕຸລາ ແລ້ວຖືກຂ້າຕາຍໝົດ. ສ່ວນຈຸທີ

ສອງມີດ້ວຍກັນ 6 ຄົນ, ສາມາດໜີອອກນອກປະເທດໄປໄດ້ແລະໄດ້ຮັບການຊ່ວຍເຫລືອຈາກ *ຊານວາດໍ ອາເຢັນເດ* , ປະທານປະເທດຊີລີ. ໃນຈຳນວນ 6 ຄົນນັ້ນມີຜູ້ໜຶ່ງຖືກຂ້າຕາຍໃນວັນທີ 13 ພະຈິກ ຄື*ແອນນາໂຕ* ຫລື *ຣູລີໂອລຸຍ ເມັນເດັຊ*.

ພາຍຫລັງຖືກຈັບແລ້ວ, ເຈ ແລະ ນັກຮົບສອງຄົນກໍຖືກພາຕົວໄປຍັງໝູ່ບ້ານຮີກເກີຣາແລະຖືກກັກຂັງໄວ້ໃນຫ້ອງຮຽນຫ້ອງໜຶ່ງຢ່າງໂດດດ່ຽວ.

ເຈ ໄດ້ຮັບບາດເຈັບອາການໜັກສົມຄວນ, ເຂົາປະຕິເສດທີ່ຈະໂອ້ລົມກັບໃຜໆທັງນັ້ນ. ທະຫານຂີ້ເມົາຜູ້ໜຶ່ງມາອໍ້ແອ້ກວນໃຈເຂົາ, ແຕ່ກໍຖືກຝາມືເຂົາຈົນຫງາຍເງີກໄປ.

ກອງປະຊຸມນາຍທະຫານຊັ້ນຜູ້ໃຫຍ່ມີຂຶ້ນທີ່ນະຄອນລາປາຊ. *ບາຣຽງໂຕສ* ແລະ *ໂອວັນໂດ*, ຜູ້ລອງຂອງມັນໄດ້ແຕ່ງຕັ້ງໃຫ້ນາຍທະຫານຊື່ *ມີເກລ ອະໂຢໂຣອາ* ແລະ *ອັນເດຣ ເຊັນນີສ* ເປັນເຈົ້າການໃນການສັງຫານ ເຈ. ນາຍທະຫານທັງສອງກໍມອບພາລະໃຫ້ຄາຕະກອນຊັ້ນນາຍຮ້ອຍຊື່ *ມາຣີໂອ ເຕຣັນ* ເປັນມືເພັດຊະຄາດ. ສຽງປືນດັງກ້ອງຂຶ້ນໃນຫ້ອງຮຽນຕິດກັບຫ້ອງຂອງ ເຈ ເພື່ອນທັງສອງຂອງເຂົາຖືກຂ້າຕາຍເສຍແລ້ວ ແລ້ວເພັດຊະຄາດຜູ້ມຶນເມົານັ້ນກໍໄຂປະຕູຫ້ອງຂັງເຈເຂົ້າມາ.

ມັນອອກຄຳສັ່ງໃຫ້ ເຈ ລຸກຂຶ້ນນັ່ງ. ແຕ່ເຈປະຕິເສດ. ເພັດຊະຄາດຜູ້ນັ້ນຍັງຄົງລັງເລໃຈ, ຕັດສິນໃຈບໍ່ໄດ້ "ຍິງເລີຍ...ບໍ່ຕ້ອງຢ້ານ" ເຈ ເວົ້າຂຶ້ນເປັນການປອບໃຈ.

ເມື່ອເຫັນທະຫານຄົນນັ້ນບໍ່ກ້າຍິງ, ນາຍທັງສອງຂອງມັນກໍຮາຍດ່າສັ່ງເດັດຂາດໃຫ້ຍິງສະເລີຍຄືນນີ້. ຍ້ອນແນວນັ້ນປືນແອມ 3 ຈຶ່ງປ່ອຍກະສຸນອອກມາປານຫ່າຝົນລູກປືນໄດ້ເຈາະເຂົ້າໄປໃນຮ່າງກາຍຂອງເຈນັບແຕ່ທ້ອງລົງຈົນຮອດປາຍຕີນ, ເລືອດອາບໄປທົ່ວພື້ນຫ້ອງຮຽນ. ພວກເຂົາບໍ່ຍິງຫົວແລະໜ້າເອິກຂອງເຂົາກໍເພາະວ່າ, ດ້ານໜຶ່ງແມ່ນເພື່ອໃຫ້ເຂົາຕາຍຊ້າໆ, ຕາຍແບບທໍລະມານ, ດ້ານໜຶ່ງແມ່ນເພື່ອປິດອຳການລອບສັງຫານຂອງພວກເຂົາ.

ຮ່າງກາຍຂອງເຂົາຖືກເຈາະເປັນຮູເຂົ້າໄປດ້ວຍລູກກະສຸນປານຮັງເຜິ້ງເຂົາສຸດທີ່

ເຈັບປວດທາລຸນທາຫຍັງປຽບບໍ່ໄດ້. ທະຫານຊັ້ນນາຍສິບຜູ້ໜຶ່ງທົນເບິ່ງເຫດການບໍ່ໄດ້ຈຶ່ງຫລູບເຂົ້າໄປໃຊ້ປືນທັນລິຍິງຊ້ຳ ຈົນເຈຂາດໃຈຕາຍຄາທີ່ ສອງຄຳສຸດທ້າຍທີ່ເຈຈົ່ມພຶມພຳອອກມາກ່ອນສິ້ນໃຈກໍຄື... "ອາໄລດາ...ຟິແດນ" ເຖິງ ເຈ ເກວາຣາ ຈະເປັນຊາກສົບໄປແລ້ວແຕ່ກໍບໍ່ໝາຍຄວາມວ່າພວກປະຕິການຈະເຊົາສວ່າງຫາຍຢ້ານກົວອິດທິພົນຂອງເຂົາເລີຍ. ຮ່າງຄີງທີ່ປັດສະຈາກວິນຍານຂອງເຂົານັ້ນສ້າງຄວາມຫວາດຫວັ່ນແກ່ສັດຕູຍິ່ງກວ່າຕອນເຂົາຍັງມີຊີວິດອີກຊ້ຳ. ນາຍທະຫານໂບລີວີຜູ້ໜຶ່ງໄດ້ອອກປາກວ່າ: "ບາງທີຄົນທີ່ຕາຍແລ້ວອາດເປັນໜ້າຢ້ານກວ່າຕອນເຂົາມີຊີວິດຢູ່"

ໃນຕອນແລງຂອງວັນດຽວກັນນັ້ນ, ແມ່ຍິງຜູ້ໜຶ່ງມາສ່ວຍໜ້າໃຫ້ສົບຄົນຕາຍ, ນາງເວົ້າວ່າ : "ໂອ: ເຂົາສະຫງ່າງາມແທ້ໆ, ເຊິ່ງຄືວ່າແມ່ນພະເຢຊູຈັ່ງຊັ້ນລະ"

ສັດຕູຕົວຮ້າຍກາດຂອງເຂົາຜູ້ນີ້, ເຖິງແມ່ນຈະຂາດໃຈຕາຍໄປແລ້ວແຕ່ກໍ່ແຮງຕື່ມຄວາມເປັນໜ້າຢ້ານຕື່ມອີກ. ລູກກະສຸນຫລາຍສິບລູກທີ່ເຈາະເຂົ້າໄປໃນທົ່ວຮ່າງຄີງຂອງເຂົາເປັນຮູໂກນຈົກວິກປ່ອຍໃຫ້ໂລຫິດສີແດງເຂັ້ມລິນໄຫລອອກມາ, ເປື້ອນເປີໄປທົ່ວພື້ນຫ້ອງຮຽນ. ເຂົາຕາຍໄປໄດ້ຫລາຍນາທີແລ້ວແຕ່ປານນັ້ນມັນກໍຍັງບໍ່ສາສົມແກ່ຫົວໃຈອັນໂຫດຫ້ຽມຂອງພວກປະຕິການເລີຍ. ຊາວບ້ານຜູ້ຢູ່ໃກ້ໝູ່ບ້ານອີກເກີຣາໄດ້ແຈ້ງວ່າ, ໃນວັນດຽວກັບມື້ທີ່ເຈຖືກສັງຫານນັ້ນ, ມີຍົນເອລີກົບແຕຂອງທະຫານ*ບາຣຽງໂຕສ*ລຳໜຶ່ງໄດ້ບິນໃນໄລຍະສູງອ້ອມແອ້ມໝູ່ບ້ານແຖບນັ້ນແລະໄດ້ຖິ້ມຊາກສົບຂອງຄົນຜູ້ໜຶ່ງລົງມາ. ຫລາຍຄົນຄາດຄະເນວ່າອາດແມ່ນຊາກສົບຂອງ ເຈ ເກວາຣາ ກໍເປັນໄດ້ພາຍຫລັງການຕາຍຂອງເຂົາ, *ໂຣແບກໂຕ*ນ້ອງຊາຍຂອງເຂົາກັບທະນາຍຄວາມກໍເດີນທາງມາແຕ່ອາກຊັງຕິນເພື່ອເອົາສົບອ້າຍແຕ່ຕ້ອງຜິດຫວັງເມື່ອນາຍພົນ*ໂອວັນໂດ ກັນເດຍ* ບອກວ່າ: ສົບຖືກເຜົາແລ້ວ ເຖິງຢ່າງໃດວິລະຊົນປະຕິວັດຂອງປະ

ຊາຊົນຜູ້ທຸກຍາກ, ຜູ້ຖືກກົດຂີ່ຂູດຮີດກໍເສຍສະຫລະໄປແລ້ວ.

ເຈ ! "ເສືອແມວ" ຕົວຮ້າຍກາດສຳລັບພວກກົດຂີ່ຂົ່ມເຫັງປະຊາຊົນ !

ເຈ ! ສັດຕູໂຕໂຫດຫ້ຽມຂອງພວກຈັກກະພັດ !

ເຈ ! ຜູ້ເຄີຍຖືກນັກສືບ ເຊ ອິ ອາ ລອບສັງຫານຫລາຍໆເທື່ອ !

ເຈ ! ຜູ້ທີ່ມີລາງວັນຄ່າຫົວ 50.000 ຫລຽນຄືລາງວັນສຳລັບຜູ້ຈັບ ເຈ ເກວາຣາ ໄດ້ບໍ່ວ່າຈັບຕາຍຫລືຈັບເປັນ !

ເຖິງແມ່ນວ່າ ເຈ ຈະເສຍຊີວິດໄປແລ້ວກໍຕາມ, ກໍບໍ່ໝາຍຄວາມວ່າການຕໍ່ສູ້ປົດປ່ອຍຊາດຈະດັບມອດໄປນຳ ກົງກັນຂ້າມການເຜົາໄໝ້ໂຕເອງຂອງ ເຈ ເກວາຣາ ໄດ້ເປັນປະທີບອັນສະຫວ່າງສະໄຫວສ່ອງແສງເສັ້ນທາງແຫ່ງການຕໍ່ສູ້.

ພາຍຫລັງທີ່ໄດ້ລີ້ໄພໃນຕ່າງປະເທດບໍ່ດົນ, *ອິນຕິ ເປເຣໂດ* ຜູ້ນຳນັກຮົບຊາວໂບລິວີຜູ້ໜຶ່ງກໍກັບຄືນສູ່ປ່າ ເຂົ້າໃນໂບລິວີອີກໃໝ່ເພື່ອສືບຕໍ່ພາລະກິດປົດປ່ອຍຊາດທີ່ໄດ້ເລີ່ມເຮັດມາແລ້ວແຕ່ຍັງຄ້າງຄາຢູ່.

ໃນວັນທີ 10 ມັງກອນ 1969, *ອິນຕິ* ໄດ້ອອກຖະແຫລງການສະບັບໜຶ່ງມີເນື້ອຄວາມວ່າ:

"ສົງຄາມກອງຫລອນໃນໂບລິວີຍັງບໍ່ຕາຍ. ມັນເປັນພຽງການເລີ່ມຕົ້ນເທົ່ານັ້ນ ການສູນເສຍຊີວິດໂດຍເອົາຄືນບໍ່ໄດ້ຂອງເພື່ອນສະຫາຍເຮົາຫລາຍຄົນ, ລວມທັງພັນຕີ ແອກແນສະໂຕ ເຈ ເກວາຣາ ແລະ ນັກຮົບຜູ້ອື່ນໆນັ້ນປຽບສະເໝືອນພາຍຸຮ້າຍກະແທກໃສ່ໝາກຫົວໃຈຂອງພວກເຮົາ. ແຕ່ເຫດການອັນເຈັບປວດນີ້ບໍ່ໄດ້ເຮັດໃຫ້ພວກເຮົາເສຍຂວັນເສີຍແມ່ນແຕ່ນ້ອຍດຽວ, ກົງກັນຂ້າມມັນເປັນການເພີ່ມທະວີຄວາມກ້າແກ່ນແໜ້ນໜຽວແລະຄວາມລະມັດລະວັງຕື່ມຂຶ້ນໃນການຕໍ່ສູ້ປະຕິວັດ.

ເປົ້າໝາຍຂັ້ນສຸດທ້າຍແລະມີພຽງປະການດຽວກໍຄືການປົດປ່ອຍອາເມລິກາລາຕິນທັງທະວີບ. ມັນເປັນບ້ານເກີດຂອງພວກເຮົາຊຶ່ງຖືກແບ່ງແຍກອອກເປັນຕ່ອນເລັກຕ່ອນນ້ອຍເຖິງຊາວສາທາລະນະລັດ.

ເຮົາເຊື່ອໝັ້ນວ່າຄວາມຝັນຂອງໂບລີວີແລະ ເຈ ເກວາຣາ ທີ່ຕ້ອງການໂຮມອາເມຣິກາລາຕິນທາງດ້ານການເມືອງແລະພູມີສາດຈະບັນລຸຄວາມສຳເລັດໄດ້ໂດຍການປຸກລະດົມມວນຊົນຂຶ້ນມາເຮັດການຕໍ່ສູ້ດ້ວຍກຳລັງອາວຸດເທົ່ານັ້ນ". ໃນເວລາຕໍ່ມາ, *ອິນຕິ ເປເຣໂດ* ຜູ້ສືບທອດພາລະກິດຂອງ ເຈ ເກວາຣາ ກໍເປັນອີກຜູ້ໜຶ່ງທີ່ຕ້ອງພົບກັບຈຸດຈົບແຫ່ງຊີວິດຄືເຂົາຖືກຈັບໄດ້ໃນຂະນະເຄື່ອນໄຫວໃນນະຄອນລາປາຊແລ້ວຫລັງຈາກນັ້ນກໍຖືກຂ້າຕາຍດ້ວຍນ້ຳມືຂອງພວກປະຕິການໂບລີວີຕີນມືຂອງຈັກກະພັດອາເມຣິກາ.

ຟີແດນ ກາສໂຕຣ ໄດ້ໃຫ້ຄວາມຄິດຄວາມເຫັນກ່ຽວກັບຄວາມຫລົ້ມເຫລວຂອງ ເຈ ເກວາຣາ ໃນໂບລີວີດັ່ງນີ້:

"ການກໍ່ສ້າງສົງຄາມກອງຫລອນນັ້ນ ມັນຮຽກຮ້ອງເຖິງກຽດແລະຈິດສຳນຶກຂອງແຕ່ລະຄົນ. ເຈ ຊຳນານດີໃນການຈັບໃຫ້ຖືກເສັ້ນປະສາດທີ່ອ່ອນໄຫວທີ່ສຸດຂອງພວກນັກປະຕິວັດ. ເຈ ບໍ່ໄດ້ຖືວ່າການຕໍ່ສູ້ໃນໂບລີວີນີ້ເປັນເຫດການອິດສະຫລະ

ແຕ່ແມ່ນສ່ວນໜຶ່ງຂອງຂະບວນການປະຕິວັດປົດປ່ອຍຊາດ ຊຶ່ງໃນບໍ່ຊ້າກໍຈະລາມໄປໃນບັນດາປະເທດຕ່າງໆຂອງທະວີບອາເມຣິກາລາຕິນ. ຈຸດປະສົງຂອງເຂົາແມ່ນຢາກກໍ່ຕັ້ງຂະບວນການຕໍ່ສູ້ທີ່ມີຄວາມຍຶດໝັ້ນໃນແນວຄິດທີ່ບໍ່ຢາກແບ່ງແຍກແຕ່ປະການໃດແລະກໍເປັນຂະບວນການທີ່ຈະເຕົ້າໂຮມເອົານັກຕໍ່ສູ້ທັງຫລາຍທີ່ມີຈຸດປະສົງຢາກຕໍ່ສູ້ເພື່ອການປົດປ່ອຍໂບລີວີແລະປະຊາຊົນຜູ້ຖືກຈັກກະພັດໜີບເຕັງທັງໝົດອາເມຣິກາລາຕິນເຂົາຫວັງໄວ້ວ່າຈະໃຫ້ສົງຄາມກອງຫລອນໃນໂບລີວີນີ້ເປັນໂຮງຮຽນຂອງນັກປະຕິວັດທັງຫລາຍ.

ສາຍເຫດອັນໜຶ່ງຊຶ່ງພາໃຫ້ເຂົາຕ້ອງພົບກັບຄວາມຫລົ້ມເຫລວກໍຄືຄວາມຂັດແຍ່ງລະຫວ່າງພັກຄອມມຸຍນິດໂບລີວີໂດຍມີ ມົນເຣ ເປັນຕົວຕັ້ງຕົວຕີ. ເຈ ບໍ່ໄດ້ຫລີງເຫັນຜົນປະໂຫຍດສ່ວນຕົວໃດໆກ່ຽວກັບການກຳຕຳແໜ່ງຜູ້ບັນຊາ. ເຂົາບໍ່ໄດ້ສະແຫວງຫາກຽດຕິຍົດໃດໆທັງນັ້ນ. ເຂົາມີຄວາມເຊື່ອໝັ້ນຕາຍໃຈວ່າການຕໍ່ສູ້ປະຕິວັດແບບກອງຫລອນນີ້ແມ່ນລັກສະນະພື້ນຖານໃນການປະຕິບັດງານເພື່ອປົດປ່ອຍປະຊາຊົນຊາວອາເມຣິກາລາຕິນ. ການບັນຊາດ້ານການທະຫານແລະດ້ານການເມືອງຕ້ອງເປັນອັນດຽວກັນແລະວິທີທາງການຕໍ່ສູ້ກໍມີແຕ່ດຳເນີນສົງຄາມກອງຫລອນເທົ່ານັ້ນ, ບໍ່ແມ່ນຈະຕັ້ງສຳນັກງານຢູ່ໃນເມືອງ, ບົ່ງຄຳສັ່ງມາຈາກຫ້ອງການ. ເຂົາຈະບໍ່ຍອມປ່ອຍຄວາມຮັບຜິດຊອບໃຫ້ຄົນສະໜອງເປົ່າວ່າງ. ສະໜອງຂີ້ເລື່ອຍເປັນເດັດຂາດ"

ນອກຈາກສິ່ງດັ່ງກ່າວແລ້ວຄວາມຮຸນແຮງຂອງໂລກຫືດທີ່ຂາດຢາລະງັບໄດ້ສ້າງຄວາມທາລຸນລຳບາກແກ່ ເຈ ຫລາຍທີ່ສຸດ. ຍາມໃດເຂົາກໍສູ້ຊົນທົນທານ, ຍາມໃດເຂົາພະຍາຍາມຢູ່ເໜືອພະຍາດອັນນັ້ນ. ຈິດໃຈຂອງເຂົາແມ່ນບໍ່ຜິດຫຍັງກັບເຫລັກກັບຂາງ.

ການກະທຳຂອງເຂົາບໍ່ໄດ້ຫລຸດຢ່ອນຜ່ອນລົງຍ້ອນຄວາມທາລຸນຂອງໂລກດັ່ງກ່າວນັ້ນເສີຍ.

ການດັກສະກັດຂອງທະຫານຂອງຝ່າຍລັດຖະບານທີ່ຣິກເກີຣານັ້ນເປັນພຽງໄຊຊະ

24/VII

ນະຄັ້ງດຽວຂອງພວກເຂົາແລະກໍເປັນຈັງຫວະທີ່ວ່າ ເຈ ຕ້ອງສ່ຽງໄພທີ່ສຸດຄື: ເຂົາເອົາຊີວິດຂອງເຂົາເປັນປະກັນກັບຄວາມສຸກສະບາຍຂອງໝູ່ຄູ່ທີ່ປ່ອຍໄຊ. ເຂົາບໍ່ເສຍດາຍຊີວິດຂອງເຂົາເລີຍຖ້າແມ່ນເພື່ອຄວາມສຸກຂອງຜູ້ອື່ນ. ເຖິງ ເຈ ຈະຕາຍໄປມັນກໍບໍ່ເປັນເລື້ອງທີ່ໜ້າແປກໃຈເລີຍ.

ເຈ ມີຄວາມເຫັນວ່າການຕາຍໃນການສູ້ຮົບເປັນເລື້ອງທຳມະດາສາມັນແລະກໍບໍ່ສາມາດເຮັດໃຫ້ຂະບວນການຕໍ່ສູ້ເປັນອຳມະພາດໄປໄດ້ຢ່າງເດັດຂາດ, ເຂົາເຄີຍເວົ້າໃນຈົດໝາຍສົ່ງເຖິງອົງການ 3 ທະວີບວ່າ:

"ການເຄື່ອນໄຫວຂອງພວກເຮົາທັງໝົດແມ່ນສຽງຮ້ອງປະກາດເຮັດເສິກກັບຈັກກະພັດ. ບໍ່ວ່າຄວາມ ຕາຍຈະເກີດຂຶ້ນກັບເຮົາຢູ່ບ່ອນໃດກໍຕາມ, ມັນຕ້ອງເປັນສິ່ງທີ່ພວກເຮົາຍິນດີຮັບເອົາ. ຂໍພຽງແຕ່ສຽງຮ້ອງອັນນັ້ນໄດ້ແຜ່ດັງກັງວານໄປຮອດຫູຂອງຄົນອື່ນໆ. ເພື່ອພວກເຂົາຈະໄດ້ເດ່ມືເຂົ້າມາກຳເອົາປືນຂອງເຮົາແລ້ວສືບຕໍ່ດຳເນີນການຕໍ່ສູ້ຕໍ່ໄປ. ນະທີ່ໃດກໍຕາມ, ເມື່ອຄວາມຕາຍຈະກາຍເປັນເລື້ອງອັນໜ້າຕື່ນເຕັ້ນແລະຈຳເປັນສຳລັບເຮົາຂໍໃຫ້ມັນເປັນການຕາຍທີ່ມີປະໂຫຍດແກ່ມວນມະນຸດ, ການຕາຍເຊັ່ນນັ້ນຈະເປັນການຮຽກຮ້ອງແລະເສີມຂະຫຍາຍການຕໍ່ສູ້ຂອງພວກເຮົາ, ມັນຈະຊຶມຊາບເຂົ້າໄປໃນແນວຄິດຈິດໃຈຂອງຄົນອີກຈຳນວນຫລວງຫລາຍ.

ແລ້ວມືຂອງພວກເຂົາເຫລົ່ານັ້ນກໍຈະຍື່ນອອກມາກຳປືນຕໍ່ສູ້ແທນເຮົາເຂົາຈະລັ່ວປືນໃສ່ສັດຕູຂອງເຮົາ.

ສຽງປືນທີ່ຮ່ຳຮ້ອງດັງກ້ອງກັງວານນັ້ນປຽບສະເໝືອນສຽງພະຊັກອະນິຈາຕໍ່ໜ້າຂຸມຝັງສົບຂອງເຮົາ ຄົນໜຶ່ງຕາຍໄປ, ຫລາຍສິບຄົນລຸກຂຶ້ນມາແທນ.

ເມື່ອຄົນຂອງປະຊາຊົນຜູ້ໜຶ່ງລົ້ມຕາຍໄປ, ປະຊາຊົນອີກຫລາຍຄົນຈະຕ້ອງລຸກຂຶ້ນມາແທນ. ກົງລໍ້ອັນຊົງພະລັງຂອງປະຫວັດສາດບໍ່ສາມາດແລະຈະບໍ່ຖືກບັງຄັບໃຫ້ຢຸດໄດ້ເມື່ອຜູ້ນຳລົ້ມຕາຍລົງ. ນັກຮົບກອງຫລອນທຸກ ຄົນຕ້ອງພ້ອມທີ່ຈະຕາຍ, ບໍ່ແມ່ນເພື່ອປ້ອງກັນອຸດົມຄະຕິແຕ່ເພື່ອເຮັດໃຫ້ອຸດົມຄະຕິເປັນຈິງຂຶ້ນ"

ODIO
MUERTE
AL
ERIALISMO
ODIO
A MUERTE
AL
IMPERIALISMO

7

ການຕາຍຂອງເຈເຮັດໃຫ້ໂລກສັ່ນສະເທືອນ

ຊື່ສຽງອັນດີເດັ່ນຂອງ ເຈ ເກວາຣາ ນັ້ນເປັນທີ່ຮູ້ຈັກກັນໝົດໃນໝູ່ນັກຮຽນນັກສຶກສາທົ່ວທະວີບອາເມຣິກາລາຕິນ, ຍາມໃດເຂົາກໍເປັນເປົ້າໝາຍໃນສາຍຕາຂອງຊາວໜຸ່ມ, ຍ້ອນແນວນັ້ນ, ພາຍຫລັງທີ່ຂ່າວການຕາຍຂອງເຂົາຖືກເປີດເຜີຍອອກມາ, ກະແສຄື້ນແຫ່ງການເຄື່ອນໄຫວຂອງຂະບວນນັກສຶກສາໄດ້ລະບາດໄປທົ່ວໂລກ ພວກເຂົາໄດ້ໂຮມຊຸມນຸມປະທ້ວງ, ໄວ້ອາໄລ, ເດີນຂະບວນ, ບຸກສະຖານທູດແລະສະຖານກົງສຸນຕ່າງໆຂອງຈັກກະພັດອາເມຣິກາແລະໂບລິວີ, ນອກຈາກນັ້ນກໍມີການອອກຖະແຫລງການ, ຫວ່ານໃບປິວໄປທົ່ວທັງທະວີບ.

ທີ່ປະເທດອາກຊັງຕິນ, ບ້ານເກີດເມືອງນອນຂອງເຂົານັ້ນ, ຂະບວນນັກສຶກສາດຸເດືອດຮຸນແຮງສົມຄວນ. ເຊັ່ນໃນວັນທີ 22 ພະຈິກ, ມີການຊຸມນຸມຂອງເຫລົ່ານັກສຶກສາທີ່ບໍລິເວນອະນຸສາວະລີເມືອງວິນລາໂດມີນີໂກພວກເຂົາໄດ້ຍິງປືນໃຫຍ່ເກົ່າແກ່ຫລາຍບາດເພື່ອເປັນການໄວ້ອາໄລເຖິງດວງວິນຍານຂອງ ເຈ ເກວາຣາ, ຂະບວນຈະສະຫລາຍໄປກໍຕໍ່ເມື່ອຖືກກໍາລັງເຈົ້າໜ້າທີ່ປາບປາມ.

ຊື່ຂອງ ເຈ ຖືກນໍາໄປໃສ່ສະຖານທີ່ຕ່າງໆເຊັ່ນວ່າ: ສວນສາທາລະນະ, ໂຮງຮຽນ, ຫໍສະມຸດ, ຫ້ອງຮຽນຖະໜົນແລະອື່ນໆ. ໃນມະຫາວິທະຍາໄລ, ຕາມກໍາແພງ, ຕາມຝາປະທາຍ, ຕາມຝາຫ້ອງນອນ ຫລາຍໆແຫ່ງໃນຫລາຍໆປະເທດມີຮູບຂອງ ເຈ ແຂວນໄວ້ພ້ອມທັງຄໍາຂວັນເປັນຫລາຍໆພາສາຂຽນວ່າ "ເຈ ຍັງມີຊີວິດຢູ່" ໃນປະເທດໂບລິວີ, ບ່ອນທີ່ ເຈ ເສຍຊີວິດນີ້, ພວກນັກສຶກສາຄຽດແຄ້ນທີ່ສຸດ, ພວກເຂົາກ່າວປະກາດວ່າ "ແອຣ ແນສະໂຕ ເຈ ເກວາຣາ ແມ່ນພົນລະເມືອງ, ແມ່ນຜູ້ຮັກຊາດ

ຂອງປະເທດໂບລີວີ" ເຫດການສຳຄັນອີກອັນໜຶ່ງທີ່ເກີດຂຶ້ນໃນປະເທດບະເຣຊິນຄື: ໃນວັນທີ 12 ທັນວາ 1967 ຊຶ່ງເປັນວັນມອບປະກາສະນີຍະບັດທີ່ສະຖາບັນແພດສາດໃນເມືອງມີນາສເຊແຣ, ບັນດານັກສຶກສາກວ່າ 3.000 ຄົນ ພ້ອມພາກັນລຸກຢືນຂຶ້ນໃນທີ່ປະຊຸມແລະຮ້ອງຄຳຂວັນເປັນຫລາຍໆນາທີວ່າ: "ນາຍແພດນັກປະຕິວັດແອຣເນສໂຕ ເຈ ເກວາຣາ ແມ່ນຜູ້ນຳຊາວອາເມລິກາທັງໝົດ" ແມ່ນກະທັ້ງຢູ່ໃນສະຫະລັດອາເມຣິກາເອງ, ອົງການຈັດຕັ້ງຊາວໜຸ່ມຫລາຍອົງການເຊັ່ນວ່າ "ເສືອດຳ" ແລະອື່ນໆ, ໄດ້ເອົາໃບໜ້າແລະອຸດົມການຂອງ ເຈ ເປັນສັນຍາລັກໃນການຕໍ່ສູ້ຂອງພວກເຂົາ. ພວກເຂົາຕໍ່ຕ້ານ ການຮຸກຮານຫວຽດນາມແລະດຳເນີນການປະທ້ວງຄວາມອະຍຸຕິທຳຂອງສັງຄົມແລະພວກກຳອຳນາດບໍ່ວ່າປະເທດດ້ອຍພັດທະນາຫລືປະເທດທີ່ເຂັ້ມແຂງທາງອຸດສະຫະກຳກໍຄືປະເທດຫົວເມືອງຂຶ້ນແລະປະເທດນາຍທຶນຕ່າງໆ ເຈ ໄດ້ກາຍເປັນສັນຍາລັກແຫ່ງຄວາມເປັນທຳ, ແຫ່ງການຕໍ່ສູ້ເພື່ອຄວາມເປັນທຳ, ແຫ່ງການຕໍ່ສູ້ທີ່ດຸເດືອດຮຸນແຮງ

ຂ່າວສານອາເມລິກາຊື່ "ຢູເອສນິວແອນເວີນຣີພອດ" ໄດ້ອອກບົດນຳບົດໜຶ່ງຄື "ເຈ ເກວາຣາ ຜູ້ຖືກບູ ຊາລະບາດທົ່ວໄປ", ມີຕອນໜຶ່ງບົດນຳໄດ້ເວົ້າວ່າ: "ມື້ລາງ ເຈ ເກວາຣາ ພອມເປັນແປ້ນງັດອັນແຂງແກ່ນແກ່ການຂະບົດຂອງພວກຊາວໜຸ່ມໃນທົ່ວໂລກ, ນັກປະຕິວັດຊາວອາກຊັງຕິນຜູ້ນີ້, ເຄີຍໄດ້ຊ່ວຍ ຟີແດນ ກາສໂຕຣ ປົດປ່ອຍກູບາແລະຕໍ່ມາຖືກຂ້າຕາຍລະຫວ່າງດຳເນີນການຕໍ່ສູ້ໃນໂບລີວີ. ຈົນເຂົາໄດ້ກາຍເປັນວິລະຊົນຂອງກຸ່ມ "ພວກຝ່າຍຊ້າຍໃໝ່".

ລຸຍຊຽງ ແມກຊິເອ ນັກວິເຄາະຂ່າວຊາວຝຣັ່ງເສດຜູ້ໜຶ່ງໄດ້ຂຽນບົດຄວາມທີ່ມີຊື່ວ່າ: "ການປະຕິວັດວັດທະນະທຳໃນປາຣີກ່ຽວແກ່ການເຄື່ອນໄຫວຂອງນັກສຶກສາ" ໄວ້ດັ່ງນີ້: "ພວກເຮົາສາມາດຢັ້ງຢືນໄດ້ວ່າບົດບາດຄັ້ງສຸດທ້າຍແລະການຕາຍຂອງ ເຈ ໃນປ່າຂອງປະເທດໂບລີວີນັ້ນເປັນກຳລັງແຮງຊຸກຍູ້ການຂະບົດແລະຄວາມຮຸນແຮງດຸເດືອດຂອງພວກນັກສຶກສາຊຶ່ງມີເງື່ອນໄຂສະດວກຢູ່ແລ້ວຢ່າງຫລວງຫລາຍ

ບໍ່ວ່ານັກສຶກສາໃນປາຣີ, ແບກແລງ, ນິວຢອກ, ມາດຣິດ, ໂຣມ, ລ້ວນແຕ່ຍົກສູງຮູບພາບຂອງ ເຈ ເກວາຣາ, ພວກເຂົາຖືວ່າ ເຈ ແມ່ນ "ບິດາແຫ່ງການຂະບົດທັງປວງ" ເຊັ່ນດຽວກັບນັກສຶກສາປະເທດເອກວາດໍຊື່ງໄດ້ປະກາດຢ່າງເດັດດ່ຽວວ່າ "ຕໍ່ໜ້າການສູນເສຍ ເຈ ອັນເປັນເຫດກະທົບກະເທືອນເຖິງຄວາມຮູ້ສຶກໃນສ່ວນເລິກຂອງຫົວໃຈເຮົານັ້ນພວກເຮົາຂໍປະກາດວ່າຮູບໃບໜ້າທີ່ຝັງໃຈຂອງວິລະຊົນປະຕິວັດຊາວອາເມຣິກາຜູ້ນີ້ຍັງຈະຝັງເລິກໃນແນວຄິດຈິດໃຈພວກເຮົາ. ເຂົາຈະກາຍເປັນສັນຍາລັກ, ເປັນຜູ້ຊີ້ນຳ, ເປັນແບບຢ່າງຂອງເຍົາວະຊົນລາຕິນອາເມຣິກາສືບໄປ. ການເສຍສະຫລະທີ່ຫລີກບໍ່ພົ້ນຂອງເຂົານັ້ນ, ກໍບໍ່ແຕກຕ່າງຫຍັງກັບການສູນເສຍນັກປົດປ່ອຍຊາດຜູ້ຍິ່ງໃຫຍ່ອື່ນໆແມ່ນຈະບໍ່ສາມາດຢັບຢັ້ງການຕໍ່ສູ້ປະຕິວັດໄດ້ເປັນເດັດຂາດ".

ອົງການນັກສຶກສາທະວີບອາເມຣິກາລາຕິນໄດ້ປະກາດເອົາວັນທີ 8 ຕຸລາ ເປັນວັນລະລຶກເຖິງ "ວັນຂອງນັກຮົບກອງຫລອນວິລະຊົນ". ໃນຖະແຫລງການທີ່ສົ່ງໃຫ້ສະມາຊິກໃນທົ່ວທະວີບນັ້ນ, ອົງການໄດ້ສະແດງເຈດຈຳນົງທີ່ມີຕໍ່ການສູນເສຍເຈທີ່ວ່າ: "ເຈ ໄດ້ຮັບບາດເຈັບຢ່າງແສນສາຫັດແລ້ວກໍຖືກສັງຫານໂດຍພວກໝາພານທີ່ເຮັດໃຫ້ປິຕຸພູມໂບລີວີຕ້ອງອາບດ້ວຍເລືອດ. ຊາກສົບຂອງເຂົານັ້ນຖືກທຳລາຍດັບສູນໄປແລ້ວເພາະມັນສ້າງຄວາມຫວາດຫວັ່ນເກງກົວແກ່ສັດຕູຍິ່ງກວ່າຕອນມີຊີວິດອີກຊ້ຳ.

ຕົວຢ່າງຂອງ ເຈ ຈະສ້າງຄວາມສະຫວ່າງສະໄຫວທີ່ສຸດແກ່ປິຕຸພູມອາເມລິກາລາຕິນ. ຈັກກະພັດຈະຕ້ອງປະລາໄຊ.

ນັບແຕ່ມື້ນັ້ນຈົນມາຮອດມື້ນີ້, ເຈ ໄດ້ຢູ່ຄຽງຂ້າງແລະຍັງຢູ່ຄຽງຂ້າງພວກເຮົາໃນທຸກໆການຕໍ່ສູ້, "ຖະແຫລງການເວົ້າຕໍ່ໄປວ່າ" ກະໂຕເຈເອງກໍໄດ້ຮັບໂຮມເອົາມູນເຊື້ອແຫ່ງການກະບົດບໍ່ຍອມຈຳນົນ, ມູນເຊື້ອປະຕິວັດແລະ ແນວຄິດສາກົນທັງໝົດຂອງທະວີບພວກເຮົາ, ຍ້ອນແນວນັ້ນເສັ້ນທາງແຫ່ງການຕໍ່ສູ້ຂອງເຂົາຈຶ່ງເປັນແບບຢ່າງອັນສະຫງ່າງາມທີ່ສຸດສຳລັບພວກເຮົາຊາວໜຸ່ມອາເມຣິກາທັງໝົດຜູ້ທີ່ອຸທິດຕົນ

ເພື່ອສັງຄົມ, ດຳເນີນການຕໍ່ສູ້ຈົນຮອດວິນາທີສຸດທ້າຍແຫ່ງຊີວິດເພື່ອມວນມະນຸດ ແມ່ນບໍ່ມີຕາຍຈັກເທື່ອ, ເຖິງຮ່າງກາຍເຂົາຈະດັບສູນໄປແຕ່ເຂົາກໍຍັງຈະນັ່ງຢູ່ໃນ ໝາກຫົວໃຈຂອງນັກຮົບທຸກຄົນ, ນັ່ງໃນທຸກໆບັ້ນຮົບແລະໂດຍສະເພາະຢ່າງຍິ່ງ ແມ່ນຢູ່ໃນໝາກຫົວໃຈຂອງຜູ້ທີ່ບໍ່ຢ້ານໄພອັນຕະລາຍທັງຫລາຍ". ພາຍຫລັງການ ຕາຍຂອງ ເຈ 4 ປີ.

ໃນວັນທີ 1 ເມສາ 1971, ທູດໂບລີວີປະຈຳເຢຍລະມັນຕາເວັນຕົກຖືກຂ້າຕາຍໃນ ບ່ອນເຮັດການ. ເຂົາມີຊື່ວ່າ*ອິນຕາບິນລາ*, ອະດີດນາຍທະຫານຊັ້ນຜູ້ໃຫຍ່, ຜູ້ມີສ່ວນ ພົວພັນໃນການສັງຫານ *ເຈ ເກວາຣາ*. ກ່ອນໜ້າການຄາດຕະກຳນັ້ນ, *ອິນຕາບິນ ລາ* ໄດ້ພົວພັນກັບຍິງຜູ້ໜຶ່ງ. ນາງມີຊື່ວ່າ: *ໂມນີກາ ເອີບາ*, ນາງເປັນສະມາຊິກມູນ ນິທິ ສັງຄົມສົງເຄາະ*ແຊງກາບຣຽນ*. ນາງເຄີຍມີຜົວມາກ່ອນແຕ່ຢ່າຮ້າງກັນແລ້ວ ທັງນີ້ກໍເພາະນາງມັກເຮັດວຽກເພື່ອສັງຄົມແຕ່ຜົວຊ້ຳພັດເຫັນແກ່ຕົວ, ເມື່ອອຸດົມການ ບໍ່ຄືກັນມັນກໍເລີຍຢູ່ນຳກັນບໍ່ໄດ້ນາງໄດ້ຕີຕົວສະໜິດກັບທູດຄົນນີ້ກໍເພື່ອຈະລ້າງຄວາມ ແຄ້ນທີ່ ເຈ ຕ້ອງຖືກສັງຫານຈາກນ້ຳມືອັນໂສໂຄກນີ້ຫລັງຈາກລອບສັງຫານ*ອິນຕາ ບິນລາ*ໄດ້ແລ້ວນາງກໍລັກລອບອອກນອກປະເທດ.

ຂະນະທີ່ລີ້ໄພໃນປະເທດໂບລີວີນັ້ນ, ເລື່ອງທີ່ບໍ່ຄິດກໍເກີດຂຶ້ນ ປະມານ 2 ໂມງຂອງ ຄືນວັນໜຶ່ງ, ທະຫານໂບລີວີຈຳນວນໜຶ່ງໄດ້ໄປປິດອ້ອມບ້ານພັກຂອງນາງ. ເຂົາ ສັ່ງສຽງປະກາດໃຫ້ນາງຍອມມອບຕົວ. ຄຳຕອບຂອງນາງກໍຄື: ປັງ ! ປັງ ! ປັງ !

ສຽງປືນພັນລືແຫກຜ່າຄວາມງຽບສະຫງັດແລະ ຄວາມເຍືອກເຢັນຂອງລາຕີ ອອກມາພວກທະຫານພາກັນແຕກຊະນະໂມ, ປົບຫາທີ່ກຳບັງ.

ເວົ້າແນວໃດລາວກໍບໍ່ຍອມອອກມາ , ພວກເຂົາຈຶ່ງຍິງສຸ່ມສີ່ສຸ່ມຫ້າເຂົ້າໄປທັງປະຕູ ປ່ອງຢ້ຽມແກ້ວແວ່ນຕ່າງໆແຕກກະຈັດກະຈາຍ. ນັ້ນລະອິດທິພົນຂອງກະສູນປານ ຫ່າຝົນ.

ສຽງປືນພັນລືຕອບມາພຽງສອງສາມບາດ.

ອະລຸນຂອງວັນໃໝ່, ບັນຍາກາດໃນເຮືອນງຽບສະຫງັດ ທະຫານພັງປະຕູເຂົ້າໄປພາບທີ່ປະຈັກແກ່ສາຍຕາຂອງພວກເຂົາກໍຄືແມ່ຍິງຜູ້ໜຶ່ງນອນຟູມເລືອດຢ່າງໜ້າສັງເວດ, ມືຂອງນາງຍັງກຳປືນພັນລີບໍ່ວາງ, ທົ່ວຮ່າງຄືງເຕັມແຕ່ຮູກະສູນ, ເລືອດຟົ້ງກະຈາຍໄປທົ່ວທິບທົ່ວແດນ.

ນາງຕາຍໄປດົນແລ້ວແລະນາງກໍຕາຍດ້ວຍຄວາມຄຽດແຄ້ນສັດຕູຢ່າງເຂົ້າກະດູກດຳ, ນາງຕາຍຢ່າງວິລະສະຕີ.

ມີທູດໂປລີວີອີກຜູ້ໜຶ່ງທີ່ປະສົບເຄາະຮ້າຍເຊັ່ນດຽວກັນນີ້ໃນວັນທີ 11-5-76 *ຣວາກອິນ ເຊັນຕາໂນ*, ທູດໂປລີວີປະຈຳກຸງປາຣີ ຖືກລອບຍິງຕາຍຢູ່ຕໍ່ໜ້າສະຖານທູດຂະນະທີ່ເຂົາຍ່າງມາຫາລົດທີ່ຈອດໄວ້ແຄມທາງ. ຣວາກອິນຕາຍບໍ່ຜິດຫຍັງກັບໝາກາງຖະໜົນ, ເລືອດຂອງມັນຟົ້ງກະຈາຍທາໄປທົ່ວພື້ນທາງຍ່າງ.

ມັນຜູ້ນີ້ລະ ອະດີດຜູ້ບັນຊາການທະຫານບົກ

ມັນຜູ້ນີ້ລະ ອະດີດລັດຖະມົນຕີຕ່າງປະເທດແລະກໍແມ່ນມັນຜູ້ນີ້ລະທີ່ເຄີຍ

ນຳກອງທະຫານອອກກວາດລ້າງກຸ່ມກອງຫລອນຂອງ ເຈ ເກວາຣາ .

ຖ້າຫາກມັນມີໂອກາດທົບທວນອະດີດຂອງມັນໃນໄລຍະ 4 ປີ ຜ່ານມານັ້ນມັນຈະພົບເຫັນວ່າໂທດກຳຂອງມັນໃນການທຳລາຍຊີວິດຂອງຄົນປະຊາຊົນຜູ້ໜຶ່ງນັ້ນແມ່ນໃຫ້ອະໄພບໍ່ໄດ້, ໂດຍສະເພາະເຂົາຜູ້ນັ້ນແມ່ນ ເຈ ເກວາຣາ.

ມັນເປັນຜູ້ໜຶ່ງທີ່ມີຄວາມດີຄວາມຊອບໃນຖານະນັກຕ້ານປະຕິວັດ. ຈຶ່ງຖືກແຕ່ງຕັ້ງມາເປັນທູດປະຈຳປາຣີ ຕັ້ງແຕ່ປີ 1963 ວັນທີ 11 ເດືອນ 5 ນັ້ນລະຄືມື້ສຸດທ້າຍແຫ່ງຊີວິດຂອງມັນ.

ຄາດຕະກອນນັ້ນແມ່ນຊາຍໜຸ່ມຜູ້ໜຶ່ງໃສ່ໝວກວ່ອມສີດຳ, ມີດາວສີແດງຕິດໃສ່ໝວກແລະຈິ່ງໜວດ ຈິ່ງເຄົາບໍ່ແຕກຕ່າງຫຍັງກັບ ເຈ ເກວາຣາ.

ຫລັງຈາກການຕາຍນັ້ນຂະບວນການໃຕ້ດິນຂະບວນໜຶ່ງຊື່ "ກອງພົນນ້ອຍ ເຈ" ໄດ້ປະກາດວ່າການສັງຫານທູດໂປລີວີຄັ້ງນີ້ແມ່ນຜົນງານຂອງສະມາຊິກຂະບວນ

ການຜູ້ໜຶ່ງ. ເລື້ອງທັງໝົດທີ່ເກີດຂຶ້ນລ້ວນແຕ່ເປັນໄປຕາມຄຳເວົ້າທີ່ ເຈ ໄດ້ເວົ້າໄວ້ "ເມື່ອຄົນຂອງປະຊາຊົນຜູ້ໜຶ່ງລົ້ມຕາຍລົງປະຊາຊົນອີກຫລາຍຄົນຈະຕ້ອງລຸກຂຶ້ນມາແທນ. ຫລາຍຄົນຈະເດ່ມືເຂົ້າມາກຳປືນຂອງເຮົາແລ້ວຕໍ່ສູ້ກັບສັດຕູຂອງເຮົາ, ເຂົາຈະລ້າງແຄ້ນແທນເຮົາ"

ຄວາມແຄ້ນມັນຕ້ອງລ້າງດ້ວຍຄວາມແຄ້ນ !

ຄວາມຮຸນແຮງແມ່ນຕ້ອງປາບ ດ້ວຍຄວາມຮຸນແຮງ !

ເລືອດມັນຕ້ອງ ລ້າງກັນດ້ວຍເລືອດ !





8

ຄຳກ່າວໄວ້ອາໄລຂອງຟິແດນ ກາສໂຕຣ

ພາຍຫລັງການຕາຍຂອງ ເຈ 10 ວັນ, ຄືໃນຄືນຂອງວັນທີ 18 ຕຸລາ 1967, ສະຫາຍ ຟິແດນ ກາສໂຕຣ, ເລຂາທິການເອກຄະນະກຳມະການສູນກາງພັກຄອມມຸຍນິດກູບາ, ນາຍົກລັດຖະມົນຕີລັດຖະບານປະຕິວັດກູບາ, ໄດ້ກ່າວສູນທອນພິດລະລຶກເຖິງ ເຈ ເກວາຣາ ຕໍ່ທີ່ຊຸມນຸມ. ເນື້ອໃນໂດຍລະອຽດຂອງບົດປາໄສມີດັ່ງນີ້:

<< ສະຫາຍນັກປະຕິວັດທັງຫລາຍ!

ເຮົາໄດ້ພົບກັບ ເຈ ຄັ້ງທຳອິດໃນມື້ຫນຶ່ງຂອງເດືອນ ກໍລະກົດຫລືສິງຫາ ປີ 1955, ແລະດັ່ງທີ່ເຂົາໄດ້ບັນທຶກໃສ່ປຶ້ມເຂົາຄື: ພຽງໃນຄືນດຽວເທົ່ານັ້ນເຂົາໄດ້ກາຍເປັນທະຫານອາສາສະຫມັກທີ່ຈະລົງເຮືອ "ກຣານມາ", ເຖິງແມ່ນວ່າໃນໄລຍະນັ້ນກອງກຳລັງປະຕິວັດພວກເຮົາຍັງຂາດເຂີນແມ່ນກະທັ້ງເຮືອ, ອາວຸດຍຸດໂທປະກອນແລະກຳລັງພົນກໍຕາມ. ຈາກນັ້ນ ເຈ ກໍໄດ້ກາຍເປັນຫນຶ່ງໃນສອງຄົນທຳອິດທີ່ຈົດຊື່ເພື່ອລົງເຮືອ "ກຣານມາ", ສ່ວນອີກຜູ້ຫນຶ່ງແມ່ນ ຣາອູນ. ຫລັງຈາກມື້ນັ້ນ, ວັນເວລາຜ່ານກາຍມາ 12 ປີແລ້ວ.

ມັນເປັນ 12 ປີ ແຫ່ງການຕໍ່ສູ້ ແລະເປັນ 12 ປີ ແຫ່ງຄວາມຫມາຍເປັນປະຫວັດການ. ຕະຫລອດໄລຍະດັ່ງກ່າວນັກຮົບຜູ້ດີເດັ່ນຫລາຍຄົນໄດ້ສູນຫາຍຕາຍໄປແຕ່ພ້ອມດຽວກັນ, ໃນໄລຍະແຫ່ງການປະຕິວັດນີ້, ບຸກຄົນທີ່ດີ ເລີດກໍໄດ້ໂປໂລຂື້ນມາ, ພວກເຂົາໄດ້ຮັບການຂຸບຫລໍ່ຂື້ນມາທ່າມກາງນັກຮົບທັງຫລາຍໃນການປະຕິວັດ. ແລະລະຫວ່າງຄົນພວກນີ້ກັບປະຊາຊົນ, ສາຍສຳພັນແຫ່ງຄວາມຮັກແລະມິດຕະພາບອັນດູດດື່ມໄດ້ມີຄວາມຮັດແຫນ້ນສາມັກຄີຢ່າງເລິກເຊິ່ງເກີນກວ່າຈະພັນລະນາປາໄສ

ອອກມາໄດ້.

ໃນຄ່ຳຄືນມື້ນີ້, ພວກເຮົາຊຸມນຸມກັນເພື່ອພະຍາຍາມລະບາຍຄວາມຮູ້ສຶກໃນໃຈລະດັບໃດລະດັບໜຶ່ງທີ່ມີຕໍ່ເຂົາຊຶ່ງເປັນຜູ້ໜຶ່ງທີ່ໃກ້ຊິດຕິດແທດທີ່ສຸດ, ຮັກແພງທີ່ສຸດ ແລະກໍຄືຜູ້ເລີດກວ່າເພິ່ນໝົດໃນບັນດາສະຫາຍນັກປະຕິວັດພວກເຮົາ. ພວກເຮົາຢາກລະບາຍຄວາມຮູ້ສຶກນຶກຄິດ ຕໍ່ຕົວເຂົາພ້ອມດ້ວຍວິລະຊົນທີ່ຕໍ່ສູ້ຄຽງຂ້າງເຂົາ ແລະລົ້ມລົງພ້ອມກັບເຂົາ, ຊຶ່ງທັງໝົດກໍລ້ວນແຕ່ແມ່ນນັກຮົບສາກົນຂອງເຂົາ, ແມ່ນຜູ້ຊຶ່ງໄດ້ຂຽນປະຫວັດສາດສະຫງ່າງາມສຸດຍອດໂດຍບໍ່ມີວັນຈະຖືກລົບລ້າງໄປໄດ້. ເຈ ແມ່ນຜູ້ໜຶ່ງໃນຈຳນວນທີ່ໃຜເຫັນໃຜກໍມັກທັນທີທັງນີ້ກໍເພາະຄວາມເປັນກັນເອງ ການເປັນຢູ່ແບບງ່າຍໆ, ລັກສະນະທ່າທາງ, ບຸກຄະລິກລັກສະນະ, ທາດແທ້ຈິດໃຈ ທ່າທີເປັນມິດ, ອຸປະນິໄສ ..., ສິ່ງທັງໝົດເຫລົ່ານີ້ເປັນຈຸດເດັ່ນພາໃຫ້ຜູ້ພົບເຫັນພໍອົກພໍໃຈນິຍົມຊົມຊອບໃນທັນທີທັນໃດເຖິງຍັງຈະບໍ່ຮູ້ເຖິງຈຸດດີອື່ນໆອີກ.

ໃນໄລຍະເລີ່ມຕົ້ນນັ້ນ ເຈ ເປັນນາຍແພດປະຈຳຄະນະປະຕິວັດຂອງພວກເຮົາ, ດັ່ງນັ້ນໄມຕີຈິດມິດຕະພາບແລະຄວາມຮູ້ສຶກອັນອົບອຸ່ນຕໍ່ເຂົາຈຶ່ງມີຢ່າງຫລວງຫລາຍພາຍມາກ. ໝາກຫົວໃຈຂອງເຂົາແມ່ນເຕັມປ່ຽມດ້ວຍຄວາມຄຽດແຄ້ນແລະກຽດຊັງລັດທິຈັກກະພັດນິຍົມຢ່າງເຂົ້າກະດູກດຳ. ຄວາມກຽດຊັງອັນນີ້ບໍ່ໄດ້ເກີດມີຂຶ້ນເມື່ອເຂົາມີລະດັບຄວາມຕື່ນຕົວທາງການເມືອງສູງຂຶ້ນເທົ່ານັ້ນເພາະກ່ອນໜ້ານັ້ນເຂົາໄດ້ມີໂອກາດຮູ້ເຫັນເປັນປະຈັກຕາໂຕເອງກ່ຽວກັບການສ້າງກຳທຳຊົ່ວຂອງຈັກກະພັດໃນການແຊກແຊງກິດຈະການພາຍໃນຂອງປະເທດກວາເຕມາລາໂດຍໃຊ້ທະຫານຮັບຈ້າງດຳເນີນການປາບປາມການປະຕິວັດໃນປະເທດນີ້ຢ່າງທາລຸນປ່ວງບ້າ.

ຄືນຄື ເຈ ບໍ່ຕ້ອງການເຫດຜົນລະອຽດລະອໍພໍທີ່ໃດດອກ. ພຽງແຕ່ເຂົາຮູ້ວ່າມີຄົນຕັດສິນໃຈທີ່ຈະຕໍ່ສູ້ກັບສະຖານະການອັນນັ້ນໂດຍມີອາວຸດໃນມື, ກໍຖືວ່າພຽງພໍແລ້ວ ຂໍພຽງແຕ່ຮູ້ວ່າຄົນເຫລົ່ານັ້ນມີຄວາມຄິດຢາກເຮັດການປະຕິວັດຢ່າງແທ້ຈິງແລະມີແນວຄິດຮັກຊາດອັນດູດດື່ມກໍເປັນການພຽງພໍແລ້ວ, ສິ່ງເຫລົ່ານີ້ ເຈ ເຫັນວ່າມັນກາຍ

ຄວາມພໍພຽງໄປອີກຊ້ຳ. ມື້ໜຶ່ງ, ໃນລະຫວ່າງທ້າຍເດືອນ ພະຈິກ 1956, ເຂົາໄດ້ຮ່ວມເດີນທາງມຸ່ງໜ້າສູ່ກູບາຮ່ວມກັບພວກເຮົາ, ເຮົາຍັງຈື່ໄດ້ວ່າການເດີນທາງຄັ້ງນີ້ລຳບາກທີ່ສຸດສຳລັບ ເຈ ເພາະວ່າສິ່ງແວດລ້ອມທີ່ໜີບເຄັ່ງສ້າງຄວາມຫຍຸ້ງຍາກແກ່ການຈັດຕັ້ງແລະກະກຽມການເດີນທາງຄັ້ງນັ້ນພາໃຫ້ເຂົາບໍ່ສາມາດຊອກຊື້ຢາປົວພະຍາດອັນຈຳເປັນຕິດຕົວມາໄດ້.ເຂົາເປັນທຸກທີ່ສຸດເມື່ອຖືກໂຣກຫືດອາລະວາດຢ່າງໜັກໜ່ວງແຕ່ເຂົາກໍບໍ່ໄດ້ຈົ່ມວ່າດ່າຮ້າຍແຕ່ປະການໃດ. ເມື່ອພວກເຂົາມາຮອດຈຸດທີ່ໝາຍ, ພວກເຮົາກໍກ້າວຄັ້ງທຳອິດແລະກໍໄດ້ພົບກັບຄວາມຫຍຸ້ງຍາກຄັ້ງທຳອິດຈາກການກວາດລ້າງປາບປາມຂອງກຸ່ມ*ບາຕິສຕາ*, ພວກທີ່ຂຶ້ນຈາກເຮືອ "ກຣານມາ" ທັງຫລາຍຖືກຕີກະຈັດກະຈາຍແລະ ສາມາດເຕົ້າໂຮມກັນໄດ້ກໍຕໍ່ເມື່ອຫລາຍອາທິດຜ່ານໄປ.

ເຈ ຍັງຄົງສືບຕໍ່ເປັນນາຍແພດປະຈຳຄະນະ.

ພໍກ້າວມາເຖິງຂັ້ນພວກເຮົາສາມາດຍາດເອົາໄຊຊະນະຂັ້ນທຳອິດ, ເຈ ໄດ້ກາຍເປັນນັກຮົບແລ້ວພ້ອມດຽວກັນຍັງເປັນນາຍແພດເໝືອນເດີມ.

ເມື່ອມີໄຊໃນການຮົບຄັ້ງທີສອງ, ເຈ ບໍ່ພຽງແຕ່ມີຊື່ວ່າເປັນນັກຮົບເທົ່ານັ້ນແຕ່ຍັງເປັນນັກຮົບຜູ້ດີເດັ່ນອີກດ້ວຍ. ເຂົາໄດ້ສະແດງອອກຊຶ່ງຄວາມສາມາດຈົນຕໍ່ມາໄດ້ກາຍເປັນຄຸນລັກສະນະທາງທະຫານປະຈຳຕົວຂອງເຂົາໃນການສູ້ຮົບຕະຫລອດເວລາຕໍ່ມາ. ກຳລັງປະຕິວັດຂອງພວກເຮົາເຕີບໃຫຍ່ຂະຫຍາຍຕົວຂຶ້ນນຳສູ່ນີ້ແລະກໍໄດ້ປະເຊີນຜ່ານຜ່າການສູ້ຮົບຄັ້ງສຳຄັນຍິ່ງໃນເວລານັ້ນ. ການກະກຽມເພື່ອບຸກໂຈມຕີໃນເທື່ອຕໍ່ມານັ້ນ. ສະຖານະການ ຫຍຸ້ງຍາກສັບສົນເຕັມທີ, ຂ່າວທີ່ໄດ້ຮັບມາກໍມີຂໍ້ຜິດພາດຫລາຍກະແສ. ເວລານັ້ນແມ່ນພວກເຮົາວາງແຜນໂຈມຕີຄ້າຍແຫ່ງໜຶ່ງຕັ້ງຢູ່ແຄມຝັ່ງທະເລໂດຍແມ່ນຍາມຮຸ່ງອາລຸນຂອງວັນໜຶ່ງ. ແຕ່ປະກົດຢ່າງບໍ່ຄາດຄິດຄືມີກຳລັງຂອງສັດຕູຈຳນວນໜຶ່ງຢູ່ດ້ານຫລັງຂອງພວກເຮົາບໍ່ໄກພໍທີ່ໃດ. ເມື່ອສະພາບການເຄັ່ງຮ້ອນສັບສົນຄືແນວນີ້ມັນ ຮຽກຮ້ອງໃຫ້ຄົນຂອງພວກເຮົາໃຊ້ຄວາມ

ພະຍາຍາມສຸດຂີດ. ສະຫາຍ *ຣວນ ອານ໌ເນດາ* ຖືກມອບຫມາຍໃຫ້ເຮັດຫລ້ອນຫນ້າທີ່ອັນຫຍຸ້ງຍາກທີ່ສຸດອັນຫນຶ່ງໃນຄັ້ງນີ້ແຕ່ອີກດ້ານຫນຶ່ງຂອງພວກເຮົານັ້ນຍັງຂາດການປ້ອງກັນອັນຈະເປັນຊ່ອງຫວ່າງແຫ່ງໄພອັນຕະລາຍທີ່ຍິ່ງໃຫຍ່ທີ່ສຸດ. ໃນຖານະທີ່ເປັນນາຍແພດປະຈຳຄະນະຢູ່ນັ້ນ ເຈ ໄດ້ຂໍຮ້ອງ ໃຫ້ຈັດຄົນໃຫ້ເຂົາຈັກສອງສາມຄົນພ້ອມດ້ວຍປືນກົນຫນຶ່ງກະບອກ, ແລ້ວໃນຊົ່ວໄລຍະເວລາບໍ່ທໍ່ໃດວິນາທີເຂົາກໍວາງແຜນຢ່າງວ່ອງໄວ, ບຸກໂຈມຕີສັດຕູໃນດ້ານນັ້ນແລະເຂົາກໍເຮັດສຳເລັດຫນ້າທີ່ໃນການແກ້ໄຂບັນຫາສະເພາະ ຫນ້າຢ່າງສະຫງ່າງາມທີ່ສຸດ.

ການປະຕິບັດງານໃນຄັ້ງນັ້ນເຂົາບໍ່ພຽງແຕ່ເປັນນັກຮົບທີ່ດີເດັ່ນເທົ່ານັ້ນຫາກຍັງເປັນນາຍແພດຜູ້ສຳຄັນອີກດ້ວຍ. ເມື່ອການສູ້ຮົບສ້ຽງສຸດລົງເຂົາກໍຮັບຫນ້າທີ່ປິ່ນປົວສະຫາຍຜູ້ບາດເຈັບເຊັ່ນດຽວກັບສະເລີຍເສິກ. ເມື່ອສຳຫລວດເບິ່ງການເສຍຫາຍຕ່າງໆແລ້ວ, ພວກເຮົາກໍຍຶດອາວຸດໄດ້ຈຳນວນຫລວງຫລາຍແລະພວກເຮົາຈຳຕ້ອງຟ້າວຖອນຈາກທີ່ນັ້ນຢ່າງຮີບດ່ວນເພາະສະຖານະການບໍ່ອຳນວຍ, ແຕ່ພວກເຮົາບໍ່ສາມາດເອົາຜູ້ບາດເຈັບໄປນຳໄດ້, ເມື່ອເປັນແນວນັ້ນ ເຈ ຈຶ່ງອາສາສະຫມັກຢູ່ປິ່ນປົວຜູ້ບາດເຈັບຕໍ່ໄປ. ພວກເຮົາໄດ້ປະນັກຮົບຈຳນວນຫນຶ່ງຢູ່ກັບເຂົາ. ແລ້ວ ເຈ ກໍໄດ້ເອົາໃຈໃສ່ປິ່ນປົວບົວລະບັດແລະຊ່ວຍຊີວິດຄົນເຈັບໃຫ້ພົ້ນໄພແລ້ວຈຶ່ງໄດ້ພ້ອມກັນຕິດຕາມພວກເຮົາມາໃນເວລາຕໍ່ມາ. ຈາກເວລານັ້ນເປັນຕົ້ນມາ,ເຂົາກໍໄດ້ຮັບການຍົກຍ້ອງໃນຖານະເປັນຜູ້ນຳທີ່ກ້າຫານແລະມີສະມັດຖະພາບ. ເປັນແບບຢ່າງຂອງວິລະຊົນໂດຍແທ້ ຊຶ່ງເຖິງແມ່ນວ່າເຂົາຈະປະເຊີນຫນ້າກັບພາລະແບກຫາບອັນຫນັກຫນ່ວງເຂົາກໍຂັນອາສາບໍ່ໄດ້ລໍຖ້າໃຫ້ມີການຂໍຮ້ອງກ່ອນແຕ່ປະການໃດ.

ປະກົດການອັນດີເດັ່ນຂອງເຂົາອີກຄັ້ງຫນຶ່ງກໍແມ່ນທີ່ແອນຢູເວີໂຣ, ກຳລັງປະຕິວັດອັນຫນຸ່ມນ້ອຍຂອງພວກເຮົາຕ້ອງສ່ຽງໄພທີ່ສຸດເພາະຖືກຊາວນາບາງຄົນທັກທລັງ, ໄປສື່ຂ່າວໃຫ້ທະຫານຂອງບາຕິສຕາຊຶ່ງເອົາຍົນມາຖິ້ມລະເບີດໃສ່ທີ່ພັກຂອງພວກເຮົາ. ພວກເຮົາຈຳຕ້ອງປົບລູກລະເບີດຢ່າງສ່ຽງໄພທີ່ສຸດ. ພວກເຮົາເດີນທາງມາໄລ



ຍະໜຶ່ງຈຶ່ງສະເດືອກໄດ້ວ່າຊາວນາຊຶ່ງມາຮ່ວມຂະບວນຂອງພວກເຮົາໃນໄລຍະເລີ່ມຕົ້ນນັ້ນໄດ້ຂໍລາໄປຢາມຄອບຄົວ, ພວກເຮົາກໍອານຸຍາດໃຫ້ໄປແລະພວກເຂົາກໍໄດ້ເອົາປືນປະຈຳຕົວພວກເຂົາຊຸກເຊື່ອງໄວ້. ຈຳເປັນທີ່ສຸດພວກເຮົາຕ້ອງກັບໄປຊອກຄົ້ນຫາປືນຈຳນວນນັ້ນໃຫ້ໄດ້ເພາະປືນເປັນປັດໄຈສຳຄັນທີ່ສຸດໃນການຕໍ່ສູ້. ແລ້ວ ເຈກໍອາສາສະໝັກຜ່ານຜ່າລູກລະເບີດກັບຄືນໄປຄົ້ນຫາອາວຸດຈຳນວນນັ້ນແລະເຂົາກໍເຮັດໄດ້ສຳເລັດໃນເວລາອັນສັ້ນໆ. ອັນນີ້ລະຄືຄຸນລັກສະນະພິເສດອັນໜຶ່ງຂອງເຈ, ຄວາມກ້າຫານຍິ່ງໃຫຍ່ຂອງເຂົາພາໃຫ້ເຂົາບໍ່ລັງເລໃຈທີ່ຈະຂານອາສາປະຕິບັດງານທີ່ກັນດານທີ່ສຸດ. ການກະທຳຂອງເຂົາອັນນີ້ເປັນສິ່ງທີ່ໜ້າຍົກຍ້ອງແລະຊົມເຊີຍຫລາຍທີ່ສຸດ. ເຂົາເປັນນັກຮົບທີ່ບໍ່ໄດ້ເກີດໃນປະເທດກູບານີ້ດອກແຕ່ເຂົາມາຕໍ່ສູ້ຄຽງບ່າຄຽງໄຫລ່ກັບພວກເຮົາ, ເຂົາເປັນຄົນທີ່ມີແນວຄິດເລິກເຊິ່ງກວ້າງໄກ, ເຂົາມີຄວາມກະຕືລືລົ້ນຢາກເຂົ້າຮ່ວມການຕໍ່ສູ້ບໍ່ວ່າຈະແມ່ນຢູ່ແຜ່ນດິນຕອນໃດກໍຕາມຊາງໃນທະວີບອາເມຣິການີ້. ເຂົາເປັນນັກສາກົນນິຍົມທີ່ຍິ່ງໃຫຍ່, ຜູ້ເຫັນແກ່ຜົນປະໂຫຍດຂອງຜູ້ອື່ນເທົ່ານັ້ນສ່ວນຕົວເຂົາແລ້ວ, ເຂົາບໍ່ຫລຽວເຫັນຜົນປະໂຫຍດໃດໆທັງນັ້ນ, ເວົ້າໄດ້ວ່າເຂົາຕົກຢູ່ໃນຈຳພວກທີ່ບໍ່ໄດ້ຮັບຜົນປະໂຫຍດອັນໃດໝົດຈາກຄົນອື່ນ. ຄວາມຄິດແລະການກະທຳຂອງເຂົາບໍ່ໄດ້ເລີ່ມຕົ້ນກໍ່ຮ່າງສ້າງຕົວຈາກຜົນປະໂຫຍດສ່ວນຕົວແຕ່ປະການໃດ. ຍາມໃດເຂົາກໍເຕັມໃຈ, ຍາມໃດເຂົາກໍສຸກໃຈທີ່ຈະເຮັດຫລ້ອນໜ້າທີ່ອັນຫຍຸ້ງຍາກທີ່ສຸດ, ສ່ຽງໄພທີ່ສຸດໂດຍບໍ່ລັງເລໃຈຫຍັງໝົດ.

ຍ້ອນເຫດນີ້ລະ, ເຂົາຈຶ່ງໄດ້ຮັບຍົດຊັ້ນພັນຕີແລະ ຕຳແໜ່ງຜູ້ບັນຊາກອງທະຫານ

ແນວທີ່ສອງທີ່ປະຕິບັດງານໃນເຂດສາຍພູມາເອສຕຣາ.

ຍ້ອນແນວນັ້ນມັນຈຶ່ງບໍ່ເປັນການສົງໃສເລີຍວ່າ ຊື່ສຽງຂອງເຂົາກໍໂດ່ງດັງຂຶ້ນຊັກໄວ. ເຂົາໄດ້ຮັບການຍົກຍ້ອງຢ່າງກວ້າງຂວາງວ່າເປັນນັກຮົບທີ່ດີເດັ່ນ, ຜູ້ໄຕ່ຂຶ້ນມາຮອດຂັ້ນສູງສຸດໂດຍຜ່ານການຕໍ່ສູ້ເປັນຂັ້ນໆມາ.

ເຈ ແມ່ນນັກຮົບທີ່ຫາຜູ້ທຽບບໍ່ໄດ້.

ເຈ ແມ່ນຜູ້ນໍາທີ່ຫາຜູ້ປຽບທຽບໄດ້ຍາກ .

ເວົ້າທາງດ້ານການທະຫານແລ້ວ, ເຈ ແມ່ນມີຄວາມສາມາດຢ່າງບໍ່ໜ້າເຊື່ອ. ເຂົາມີຄວາມກ້າຫານຢ່າງບໍ່ໜ້າເຊື່ອ, ເປັນນັກຈູ່ໂຈມດຸເດືອດຢ່າງບໍ່ໜ້າເຊື່ອ, ຖ້າເວົ້າເຖິງຖານະນັກຮົບກອງຫລອນແລ້ວ, ເຂົາມີຄຸນລັກສະນະພິເສດຄືກ້າບຸກລຸກໂຈມຕີສັດຕູ, ກ້າດູໝິ່ນປະໝາດສັດຕູໂດຍບໍ່ຫວາດຫວັ່ນເກງກົວໄພອັນຕະລາຍໃດໆທັງສິ້ນ. ພວກສັດຕູມີຄວາມເຊື່ອໝັ້ນວ່າຫາກສາມາດຂ້າ ເຈ ເກວາຣາ ໄດ້, ໄຊຊະນະກໍເປັນຮູບເປັນຮ່າງຂຶ້ນມາທັນທີເພາະ. ເຈ ແມ່ນອາຈານແຫ່ງສົງຄາມ .

ເຈ ແມ່ນຜູ້ຊ່ຽວຊານໃນດ້ານສິລະປະແຫ່ງການຕໍ່ສູ້ແບບສົງຄາມກອງຫລອນ ແລະເຂົາກໍໄດ້ພິສູດໃຫ້ເຫັນໃນຫລາຍເທື່ອຫລາຍທີ. ແຕ່ໂດຍສະເພາະຢ່າງຍິ່ງ, ເຂົາໄດ້ສະແດງອອກມາໃນສອງຄັ້ງໃຫຍ່ໆ.

ຄັ້ງທີ່ໜຶ່ງແມ່ນຢູ່ໃນການບຸກລຸກໂຈມຕີຊຶ່ງເຂົາເປັນຜູ້ບັນຊາທະຫານພຽງກອງຮ້ອຍໜຶ່ງ, ແຕ່ຊໍ້າພັດຖືກທະຫານສັດຕູເປັນພັນໆໄລ່ຕິດຕາມເພື່ອກວາດລ້າງປາບປາມໃນບໍລິເວນທົ່ງຮາບແລະພູມີປະເທດຊຶ່ງເຂົາບໍ່ເຄີຍຮູ້ຫລືລົງມາກ່ອນເລີຍ ເຂົາບັນຊາກອງທະຫານຮ່ວມກັບຍອດຜູ້ນໍາອີກຜູ້ໜຶ່ງຄື *ກາມີໂລ ຊຽງຟູເອໂກ* ຈົນໃນສຸດທ້າຍແມ່ນກໍາລັງຂອງເຂົາມີໄຊສະຫງ່າງາມສຸດທີ່ໜ້າພາກພູມໃຈ.

ຄັ້ງທີ່ສອງກໍແມ່ນການບັນຊາກໍາລັງພຽງ 300 ຄົນ ເພື່ອເປີດບັ້ນຮົບໃນເຂດແຂວງລາສວີຢາສ, ສໍາຄັນທີ່ສຸດແມ່ນການບຸກຍຶດເມືອງຊັນຕາກລາຣາ ໂດຍໂຈມຕີຄ້າຍ

ທະຫານທີ່ໃຫຍ່ແລະປະກອບດ້ວຍອາວຸດຍຸດໂທປະກອນອັນທັນສະໄໝ, ມີຈຳນວນພົນຫລວງຫລາຍພ້ອມທັງມີທີ່ເປີກສາທາງທະຫານຈາກສະຫະລັດອາເມລິກາຕື່ມອີກ. ວິລະກຳໃຫຍ່ສອງຄັ້ງຊຶ່ງເຂົາສ້າງໄວ້ນີ້, ໄດ້ສ້າງໃຫ້ເຂົາເປັນຜູ້ນຳທີ່ຍອດຢ້ຽມ, ເປັນສາສະດາຈານ, ເປັນຜູ້ຊຳນິຊຳນານໃນສິລະປະສົງຄາມປະຕິວັດຢ່າງແທ້ຈິງ.

ເຖິງປານນັ້ນກໍດີ, ພາຍຫລັງການຕາຍຢ່າງວິລະຊົນແລະມີກຽດອັນສູງສົ່ງຂອງເຂົານັ້ນ , ກໍຍັງມີບາງຄົນ ທີ່ປະຕິເສດສັດຈະທຳ, ປະຕິເສດຄຸນຄ່າສູງສົ່ງແຫ່ງອຸດົມການແລະທິດສະດີກອງຫລອນຂອງເຂົາ.

ອາຈານຜູ້ຊຽວຊານກໍຍ່ອມໜີຈາກຄວາມຕາຍບໍ່ພົ້ນ. ໂດຍສະເພາະຢ່າງຍິ່ງກໍເມື່ອເຂົາຫາກເປັນຜູ້ຊຽວຊານສິລະປະທີ່ອັນຕະລາຍທີ່ສຸດຄື ສິລະປະຂອງການຕໍ່ສູ້ປະຕິວັດ. ແຕ່ສິ່ງທີ່ບໍ່ຕາຍໄປນຳເຂົານັ້ນກໍແມ່ນສິລະປະຊຶ່ງເຂົາໄດ້ທຸ່ມເທຊີວິດຈິດໃຈສ້າງໃຫ້ເປັນຈິງຂຶ້ນມານັ້ນເອງ, ອັນນັ້ນລະຄືສິລະປະຊຶ່ງເຂົາໄດ້ອຸທິດສະຕິປັນຍາແລະຄວາມສະຫລາດຫລັກແຫລມທັງໝົດ.

ຈະມີຫຍັງເປັນເລື່ອງແປກໃຈເມື່ອຜູ້ບັນຊາການຜູ້ໜຶ່ງລົ້ມຕາຍລົງໃນຂະນະທຳການຕໍ່ສູ້.

ມັນເປັນທຳມະດາແຕ່ສິ່ງທີ່ເປັນໜ້າປະຫລາດໃຈນັ້ນແມ່ນຢູ່ທີ່ວ່າເຂົາບໍ່ໄດ້ລົ້ມຕາຍລົງໃນຫລາຍໆບັ້ນຮົບທີ່ກັນດານທີ່ສຸດໃນໄລຍະຜ່ານມາ, ໃນລະຫວ່າງທີ່ດຳເນີນການຕໍ່ສູ້ປະຕິວັດຂອງເຂົາ, ແລະກໍມີຫລາຍຄັ້ງມັນຈຳເປັນທີ່ຈະຕ້ອງຈອງເຂົາໄວ້ບໍ່ໃຫ້ເຂົາຮົບໃນບ່ອນທີ່ບໍ່ມີຄວາມສຳຄັນປານໃດ, ທັງນີ້ກໍເພາະບໍ່ຢາກສຽງໄພໂດຍບໍ່ຄຸ້ມຄ່າຖ້າສູນເສຍເຂົາໄປ. ແລ້ວໃນບັ້ນຮົບບັ້ນໜຶ່ງໃນຈຳນວນບັ້ນຮົບຫລາຍໆບັ້ນຊຶ່ງເຂົາໄດ້ຜ່ານມາ, ເຂົາກໍໄດ້ສິ້ນຊີວິດ.

ພວກເຂົາຍັງຂາດພະຍານຫລັກຖານຢ່າງພຽງພໍທີ່ຈະເລົ່າເຫດການຕ່າງໆທີ່ເກີດຂຶ້ນກັບເຂົາໃນການຕໍ່ສູ້ຄັ້ງນັ້ນເພື່ອຈະວາດພາບໄດ້ຢ່າງຖືກຕ້ອງວ່າເຂົາໄດ້ສະແດງບົດບາດອັນດີເລີດຍິ່ງໃຫຍ່ຫລາຍສຳໃດ. ແຕ່ເຮົາຂໍຢ້ຳອີກເທື່ອໜຶ່ງວ່າໃນຖານະນັກ

ຮົບກອງຫລອນຄົນໜຶ່ງນັ້ນ, ເຂົາມີຄວາມກ້າຫານແລະຄວາມກ້າຫານນີ້ກໍເຮັດໃຫ້ເຂົາບໍ່ຢ້ານໄພອັນຕະລາຍແລະປະໝາດຄວາມກັນດານທັງໝົດ.

ດ້ວຍເຫດນີ້, ມັນຈຶ່ງເປັນການຍາກທີ່ພວກເຮົາຈະເຫັນພ້ອມກັບເຂົາໃນເລື່ອງນີ້, ເນື່ອງຈາກເຮົາໄດ້ພິຈາລະນາເຫັນວ່າຊີວິດຂອງເຂົາ, ປະສົບການຂອງເຂົາ, ຄວາມສາມາດໃນການເປັນຜູ້ນຳທີ່ປີຊາສາມາດຂອງເຂົາ, ຊື່ ສຽງໂດ່ງດັງຂອງເຂົາແລະທຸກສິ່ງທຸກຢ່າງທີ່ມີຄວາມໝາຍຍິ່ງໃຫຍ່ໃນຊີວິດຂອງເຂົານັ້ນ, ມັນມີຄຸນຄ່າສູງທີ່ສຸດຢ່າງປຽບທຽບບໍ່ຕິດ, ອາດເວົ້າໄດ້ວ່າມັນມີລາຄາຍິ່ງກວ່າໂຕເຂົາເອງຊ້ຳ.

ການກະທຳທີ່ອົງອາດກ້າຫານຂອງເຂົາແມ່ນໄດ້ຮັບອິດທິພົນຊຸກຍູ້ຢ່າງເລິກເຊິ່ງຈາກຄວາມຄິດທີ່ວ່າຄຸນຄ່າຂອງຄົນຜູ້ໜຶ່ງແມ່ນຂື້ນຢູ່ກັບການພົວພັນກັບປະຫວັດສາດ.

ຄວາມຄິດອີກອັນໜຶ່ງນັ້ນແມ່ນເມື່ອຄົນຂອງປະຊາຊົນຜູ້ໜຶ່ງລົ້ມລົງໄປ, ປະຊາຊົນອີກຫລາຍຄົນຈະຕ້ອງລຸກຂື້ນມາແທນແລະກົງລໍ້ອັນຊົງພະລັງຂອງປະຫວັດສາດບໍ່ສາມາດແລະຈະບໍ່ຖືກບັງຄັບໃຫ້ຢຸດໝູນໄດ້ເມື່ອຜູ້ນຳລົ້ມລົງແລະຄວາມຄິດເຫລົ່ານີ້ກໍເປັນຄວາມຈິງຢ່າງບໍ່ຕ້ອງສົງໃສ. ມັນໄດ້ສະແດງອອກໃຫ້ເຫັນຄວາມເຊື່ອໝັ້ນຂອງເຂົາຕໍ່ມວນມະນຸດ, ຕໍ່ອຸດົມການ, ຕໍ່ຕົວຢ່າງອັນດີເລີດຂອງເຂົາ.

ເຖິງຢ່າງໃດກໍດີ, ພວກເຮົາມີຄວາມປາຖະໜາຢ່າງແຮງກ້າທີ່ຈະເຫັນເຂົາມີຊີວິດຢູ່ໃນຖານະຜູ້ຖາກຖາງ, ບຸກເບີກທາງໄປສູ່ໄຊຊະນະ, ຢາກເຫັນໄຊຊະນະສະຫວ່າງສະໄຫວພາຍໃຕ້ການນຳພາຂອງເຂົາ, ເນື່ອງຈາກຄົນທີ່ມີ ປະສົບການ, ມີສະຕິປັນ

ຍາ, ມີຄວາມສາມາດຂະໜາດເຂົານັ້ນແມ່ນຫາຍາກແສນຍາກ.

ພວກເຮົາມີຄວາມເຂົ້າໃຈຢ່າງເລິກເຊິ່ງເຖິງຄຸນຄ່າຈາກຕົວຢ່າງອັນລ້ຳເລີດຂອງເຂົານັ້ນ. ພວກເຮົາຍອມ ຮັບຢ່າງຕາຍໃຈວ່າຫລາຍຄົນຈະຍົກ ເຈ ຂື້ນເປັນແບບຢ່າງໃນການຜ່ານຜ່າອຸປະສັກຂອງການຕໍ່ສູ້. ເຮົາເຊື່ອແນ່ວ່າຈະຕ້ອງມີ ເຈ ອີກຫລາຍຄົນເກີດຂື້ນໃນໝູ່ປະຊາຊົນເພາະ ເຈ ຢູ່ໃນໝາກຫົວໃຈຂອງພວກເຂົາຕະຫລອດເວລາ ມັນບໍ່ແມ່ນເລື້ອງງ່າຍທີ່ຈະຊອກຫາຄົນໆໜຶ່ງທີ່ພຣບພ້ອມດ້ວຍຄຸນງາມຄວາມດີ, ດ້ວຍສິນທຳເໝືອນດັ່ງເຈ, ມັນ ບໍ່ແມ່ນຂອງງ່າຍສຳລັບໃຜຜູ້ໜຶ່ງທີ່ຈະມີຄຸນລັກສະນະທ່າທາງເໝືອນ ເຈ.

ເຮົາຂໍເວົ້າວ່າເຂົາເປັນບຸກຄົນຜູ້ໜຶ່ງໃນຈຳພວກທີ່ຍາກທີ່ສຸດຈະເຂົ້າແຂ່ງຂັນແລະເອົາຊະນະໄດ້. ແຕ່ເຮົາກໍ ຂໍເວົ້າຕື່ມອີກວ່າແບບຢ່າງຂອງຄົນຄືເຂົານັ້ນແມ່ນສາມາດຫລໍ່ຫລອມຄົນຈຳນວນຫລວງຫລາຍໃຫ້ເປັນເໝືອນໂຕເຂົາເອງໄດ້.

ໃນຕົວຂອງ ເຈ ນັ້ນ, ພວກເຮົາບໍ່ພຽງແຕ່ຍົກຍ້ອງຊົມເຊີຍເຂົາໃນຖານະນັກຮົບເທົ່ານັ້ນແຕ່ຍັງມີຄວາມຊົມເຊີຍເຂົາໃນຖານະບຸກຄົນຜູ້ສາມາດປະກອບກິດຈະການໃຫຍ່ໄດ້ດີຕື່ມອີກ. ເຊັ່ນວ່າເຂົາໄດ້ນຳພາຄົນພຽງຍ່ອມນ້ອຍດຳເນີນການຕໍ່ສູ້ເອົາຊະນະທະຫານ ບາຕິສຕາ ຊຶ່ງມີທັງທີ່ເປິກສາຈາກສະຫະລັດ, ມີອາວຸດຍຸດທະພັນອັນທັນສະໄໝສົ່ງມາຊ່ອຍໂດຍພວກຈັກກະພັດແລະປະເທດເພື່ອນມິດໃກ້ຄຽງອີກດ້ວຍ. ຖ້າພວກເຮົາຫາກປິດເບິ່ງໃນໜ້າເຈັ້ຍຂອງປະຫວັດສາດ, ກໍຄ້າຍກັບວ່າພວກເຮົາຈະບໍ່ພົບກໍລະນີອື່ນໃດຊຶ່ງຜູ້ນຳຂອງຄົນຍ່ອມນ້ອຍດຳເນີນການຕໍ່ສູ້ອັນມີຄວາມໝາຍຍິ່ງໃຫຍ່ເປັນປະຫວັດການສາມາດເອົາຊະນະກອງທັບທີ່ເຂັ້ມແຂງດັ່ງເຊັ່ນກໍລະນີຂອງເຈ. ມັນສະທ້ອນເຖິງຄວາມເຊື່ອໝັ້ນໃນຕົວຂອງເຂົາເອງ, ເຊື່ອໝັ້ນໃນກຳລັງແຮງຂອງປະຊາຊົນ, ເຊື່ອໝັ້ນໃນຕົວຂອງບຸກຄົນທີ່ຮ່ວມຂະບວນການຕໍ່ສູ້. ສິ່ງທັງໝົດເຫລົ່ານີ້ອາດຈະຄົ້ນພົບໄດ້ໃນປະຫວັດສາດ. ແຕ່ຈະໃຫ້ເທົ່າທຽມກັບຄວາມເຊື່ອຂອງເຈນັ້ນແມ່ນບໍ່ມີເລີຍ.

ແລ້ວເຂົາກໍລົ້ມລົງ, ພວກສັດຕູເຊື່ອວ່າການຕາຍຂອງເຂົານັ້ນຈະເຮັດໃຫ້ຄວາມຄິດທິດສະດີກອງຫລອນແລະທັດສະນະກ່ຽວກັບການຕໍ່ສູ້ປະຕິວັດດ້ວຍກຳລັງອາວຸດຂອງເຂົານັ້ນປະລາໄຊລົງ. ແຕ່ສິ່ງທີ່ພວກເຂົາເຮັດໄດ້ ສຳເລັດຢ່າງບັງເອີນຢ່າງໂຊກດີນັ້ນກໍພຽງແຕ່ທຳລາຍຮ່າງກາຍຂອງເຂົາ. ສິ່ງທີ່ພວກເຂົາເຮັດໄດ້ນັ້ນກໍພຽງແຕ່ແມ່ນການໄດ້ຮັບຜົນປະໂຫຍດໂດຍບັງເອີນອັນໃດອັນໜຶ່ງຊຶ່ງພວກສັດຕູສາມາດມີໄດ້ໃນໄລຍະແຫ່ງການຕໍ່ສູ້. ພວກເຂົາບໍ່ຮູ້ດອກວ່າຄວາມໂຊກດີມີລາບໃນການຂ້າເຈນັ້ນຈະຊິດຊອຍໃຫ້ຜົນປະໂຫຍດແກ່ພວກເຂົາໄປຮອດໃສແຕ່ສິ່ງທີ່ແນ່ນອນນັ້ນກໍຄືວ່າໃນແຕ່ລະບັ້ນຮົບນັ້ນ ເຈ ໄດ້ສະແດງອອກຊຶ່ງຄວາມກ້າຫານ, ດູໝິ່ນສັດຕູ, ສ່ຽງໄພກັບສັດຕູແລະສິ່ງເຫລົ່ານີ້ລະຢູ່ເໜືອການຕາຍຂອງເຂົາ.

ເລື່ອງເຊັ່ນນີ້ເກີດມີຢູ່ຄືກັນໃນສົງຄາມກູ້ຊາດຂອງພວກເຮົາ. ໃນການຕໍ່ສູ້ທີ່ໂດສຣີໂອສ, ພວກສັດຕູໄດ້ຂ້າ *ໂຮເຊ ມາຣຕີ*, ນັກຕໍ່ສູ້ກູ້ຊາດຂອງພວກເຮົາ. ໃນບັ້ນຮົບ ປຸນຕາປະຣາວາ, ສັດຕູໄດ້ຂ້າ *ອັນໂຕນີໂອ ມາເຊໂອ*, ນັກຕໍ່ສູ້ຜູ້ໄດ້ຜ່ານກວ່າຮ້ອຍບັ້ນຮົບ, ຜູ້ນຳນັບບໍ່ຖ້ວນ, ນັກຮົບຜູ້ຮັກຊາດນັບບໍ່ຖ້ວນ, ໃນສົງຄາມຕໍ່ສູ້ກູ້ຊາດ, ຖືກຂ້າຕາຍໃນການຕໍ່ສູ້ເພື່ອປົດປ່ອຍປະເທດເຮົາ. ແຕ່ເຖິງຢ່າງນັ້ນກໍດີມັນກໍບໍ່ໄດ້ໝາຍຄວາມວ່າການຕໍ່ສູ້ເພື່ອເທດຜົນອັນຖືກຕ້ອງຂອງຊາວກູບາຈະຖືກດັບສູນໄປ... ບໍ່ເລີຍ, ຄວາມຕາຍຂອງເຈນັ້ນເປັນມໍລະສຸມໃຫຍ່ຊຶ່ງກະທົບກະເທືອນເຖິງຂະບວນການຕໍ່ສູ້ທັງນີ້ກໍເພາະວ່າພວກເຮົາໄດ້ສູນເສຍຍອດຜູ້ນຳທີ່ຊຳນິຊຳນານແລະຊົງຄຸນວຸດທິ. ແຕ່ພວກທີ່ຄຸຍໂມ້ໂອ້ອວດວ່າໂຕມີໄຊນັ້ນແມ່ນຫລົງຜິດເສຍແລ້ວ. ພວກເຂົາຄິດຜິດຖະໜັດວ່າການຕາຍຂອງເຈຄືການຕາຍຂອງແນວຄິດອຸດົມການ, ຍຸດທະວິທີ, ທິດສະດີກອງຫລອນ, ທັດສະນະຫລັກໝັ້ນແລະບົດຮຽນຂອງເຂົາກໍຈະຕາຍໄປນຳສຳລັບຄົນຜູ້ໜຶ່ງທີ່ລົ້ມລົງ, ໃນຖານະທີ່ເຂົາເປັນຄົນເອົາເປັນເອົາຕາຍ, ເປັນຜູ້ປະເຊີນໜ້າກັບລູກກະສຸນຕະຫລອດເວລາ, ທັງເປັນນັກຮົບ, ເປັນຜູ້ນຳນັ້ນແມ່ນເຂົາຈະຕ້ອງມີອຳນາດອິດທິພົນຫລາຍຂື້ນນັບພັນໆເທື່ອຢູ່ເໜືອພວກທີ່ມອບຄວາມຕາຍໃຫ້

ເຂົາໄດ້ຍ້ອນຄວາມໂຊກດີພຽງຄັ້ງດຽວ.

ເຖິງຢ່າງໃດກໍດີ, ນັກປະຕິວັດທັງຫລາຍຈະປະເຊີນໜ້າກັບການສູນເສຍຄັ້ງນີ້ແນວໃດ?

ຖ້າຫາກ ເຈ ສາມາດອອກຄວາມຄິດຄວາມເຫັນກ່ຽວກັບເລື່ອງນີ້ເດ. ເຂົາຈະວ່າແນວໃດ?

ເຈ ໄດ້ອອກຄວາມຄິດຄວາມເຫັນໄວ້ແລ້ວກ່ຽວກັບການຕາຍຂອງນັກຮົບຜູ້ໜຶ່ງ. ເຂົາໄດ້ອອກຄວາມຄິດຄວາມເຫັນໃນກອງປະຊຸມເພື່ອສ້າງຄວາມສາມັກຄີໃນທະວີບອາເມຣິກາລາຕິນ. ເຂົາມີຄວາມເຫັນວ່າ: ຖ້າຫາກຄວາມຕາຍເກີດຂຶ້ນກັບເຂົາ, ບໍ່ວ່າຢູ່ແຫ່ງພື້ນຕຳບົນໃດກໍຕາມ, ມັນຈະຕ້ອງເປັນສິ່ງທີ່ຕ້ອງຍິນດີຕ້ອນຮັບເອົາ, ຕາບໃດສຽງຮຽກຮ້ອງແລະ ປ່າວປະກາດການຕໍ່ສູ້ຂອງເຂົານັ້ນຫາກດັງກ້ອງກັງວານເຂົ້າໄປໃນຫູຂອງໃຜຜູ້ໜຶ່ງ. ຜູ້ຊຶ່ງຈະເດ່ມືເຂົ້າມາກຳເອົາປືນຂອງເຂົາເພື່ອດຳເນີນການຕໍ່ສູ້ສືບໄປ. ແຕ່ສຽງເອີ້ນປຸກໃຈໃຫ້ຕໍ່ສູ້ຂອງເຂົານັ້ນບໍ່ມີພຽງຫູດຽວເທົ່ານັ້ນທີ່ໄດ້ຍິນແຕ່ຫາກມີນັບລ້ານໆຫູແລະກໍບໍ່ມີພຽງມືດຽວເທົ່ານັ້ນທີ່ຈະເດ່ເຂົ້າມາກຳປືນແຕ່ຫາກແມ່ນລ້ານໆມືທີ່ຈະກຳປືນຕໍ່ສູ້.

ຜູ້ນຳໃຫມ່ຫລາຍໆຄົນຈະໂປ່ໂລຂຶ້ນມາ. ບຸກຄົນທີ່ໄດ້ຍິນສຽງເອີ້ນແລະໄດ້ເດ່ມືເຂົ້າມາກຳປືນນັ້ນກໍຕ້ອງການໃຫ້ມີຜູ້ນຳພາແລະຜູ້ທີ່ຈະເປັນຜູ້ນຳນັ້ນຕ້ອງແມ່ນຜູ້ທີ່ໂປ່ໂລຂຶ້ນມາຈາກຖັນແຖວປະຊາຊົນເຊັ່ນດຽວກັບຜູ້ນຳຫລາຍຄົນຊຶ່ງລ້ວນແຕ່ແມ່ນໝາກຜົນຂອງການປະຕິວັດ.

ພວກທີ່ເດ່ມືເຂົ້າມາກຳປືນນັ້ນຄົງບໍ່ມີໂອກາດໄດ້ຜູ້ນຳທີ່ມີຄວາມສາມາດເໝືອນເຈແຕ່ຜູ້ນຳທີ່ເກີດໃຫມ່ແມ່ນຕ້ອງຫລໍ່ຫລອມຕົນຂຶ້ນມາໂດຍຜ່ານການຕໍ່ສູ້, ໃກ້ຊິດຕິດແທດກັບນັກຮົບທັງຫລາຍ. ພວກເຮົາກໍບໍ່ໄດ້ຮູ້ສຶກວ່າການຕາຍຂອງເຂົານັ້ນຈະສ້າງຄວາມສັ່ນສະເທືອນເຖິງພາກປະຕິບັດຂອງຂະບວນການເຄື່ອນໄຫວຕໍ່ສູ້ປະຕິວັດໃນທັນທີທັນໃດໂລດດອກແລະກໍບໍ່ແມ່ນວ່າການຕາຍອັນນັ້ນຈະສົ່ງຜົນສະທ້ອນທີ່ຊຸກຍູ້

ເພິ່ນທະວີການຕໍ່ສູ້ໂລດກໍບໍ່ວ່າ.

ການທີ່ ເຈ ຈັບປືນຂຶ້ນມາໃໝ່ອີກເທື່ອໜຶ່ງເພື່ອຕໍ່ສູ້ນັ້ນເຂົາກໍບໍ່ໄດ້ຫລີງເຫັນໄຊຊະນະໃນກະທັນທັນໂລດດອກ. ເຂົາບໍ່ໄດ້ຄິດຈະເອົາຊະນະຢ່າງໄວວາຕໍ່ກຳລັງຂອງພວກກຳອຳນາດແລະພວກຈັກກະພັດ. ໃນຖານະທີ່ເຂົາເປັນນັກຕໍ່ສູ້ຜູ້ມີປະສົບການນັ້ນ, ເຂົາໄດ້ກະກຽມແຜນການຕໍ່ສູ້ອັນຍາວນານບໍ່ວ່າ 5 ປີ, 10 ປີ, 15 ປີ ຫລື 20 ປີກໍຕາມຊ່າງຖ້າຫາກວ່າມີຄວາມຈຳເປັນ. ເຂົາພ້ອມທີ່ຈະຕໍ່ສູ້ຕະຫລອດໄລຍະເວລາ 5 ປີ, 10 ປີ, 15 ປີ, 20 ປີ ຫລື ຈົນຊົ່ວຊີວິດຂອງເຂົາກໍເປັນໄດ້.

ແຕ່ຫາກວ່າປະກົດການຕົວຈິງໃນປັດຈຸບັນໄດ້ສະແດງໃຫ້ເຫັນເຖິງອິດທິພົນແລະຜົນສະທ້ອນຈາກການຕາຍຂອງເຂົາຢ່າງຍິ່ງໃຫຍ່, ມັນແມ່ນອິດທິພົນຂອງແບບຢ່າງອັນດີເດັ່ນ, ມັນແມ່ນອິດທິພົນທີ່ບໍ່ມີກຳລັງອັນໃດຈະເອົາຊະນະໄດ້. ພວກທີ່ພະຍາຍາມປະຕິເສດປະສົບການແລະຄວາມສາມາດໃນການນຳພາຂອງເຂົານັ້ນແມ່ນບໍ່ມີຄວາມໝາຍແມ່ນໄຮ້ຄ່າ!.

ເຈ ເປັນຜູ້ບັນຊາການທະຫານທີ່ດີເລີດ!.

ແຕ່ໃນເມື່ອພວກເຮົາຍັງຈື່ຈຳເຂົາໄດ້ດີເມື່ອພວກເຮົາຄິດເຖິງ ເຈ, ພວກເຮົາຊ້ຳພັດບໍ່ຄິດເລີກເຖິງຄຸນສົມບັດແລະຄວາມສາມາດທາງການທະຫານຂອງເຂົາເລີຍ. ເຮັດແນວນັ້ນແມ່ນບໍ່ຖືກ!.

ການເຮັດເສິກສົງຄາມແມ່ນສິ່ງທີ່ມີຄວາມໝາຍຕາຍບໍ່ເປັນ, ແມ່ນສິ່ງທີ່ບໍ່ມີຈຸດຈົບຈຸດອາວະສານ!. ສົງຄາມແມ່ນເຄື່ອງມືຂອງນັກປະຕິວັດທັງຫລາຍ!.

ສິ່ງສຳຄັນແມ່ນການປະຕິວັດ. ສິ່ງສຳຄັນແມ່ນເຫດຜົນເພື່ອເຮັດການປະຕິວັດ, ແນວຄິດປະຕິວັດ, ແມ່ນເປົ້າໝາຍຂອງການປະຕິວັດ, ແມ່ນຄວາມຮູ້ສຶກສຳນຶກແບບປະຕິວັດແລະສິນທຳປະຕິວັດ!.

ຍ້ອນຕົກຢູ່ໃນຫ້ອງແຫ່ງຄວາມຄິດອັນນີ້, ຫ້ອງແຫ່ງຄວາມຮູ້ສຶກອັນນີ້, ຫ້ອງແຫ່ງສິນທຳປະຕິວັດອັນນີ້, ຫ້ອງແຫ່ງຄວາມຮູ້ແຈ້ງແທງ

ຊ່ອດອັນນີ້. ໂດຍທ່າງເຫັນຜົວເຜີນຕໍ່ຄຸນສົມບັດແລະຄວາມສາມາດທາງການທະຫານຂອງເຂົາ, ພວກເຮົາຈຶ່ງຮູ້ສຶກວ່າການສູນເສຍທີ່ຍັບເຍີນຈາກການຕາຍຂອງເຂົານັ້ນແມ່ນມີຄວາມໝາຍຍິ່ງໃຫຍ່ຕໍ່ຂະບວນການປະຕິວັດ.

ທັງນີ້ກໍເພາະວ່າ ເຈ ມີບຸກຄະລິກລັກສະນະອັນພິເສດທີ່ຫລໍ່ຫລອມຂຶ້ນມາດ້ວຍຄຸນສົມບັດຊຶ່ງແອບແຝງເອົາສິ່ງດີໆໄວ້ຢ່າງຫລວງຫລາຍຄືນອກຈາກເຂົາຈະເປັນນັກປະຕິວັດທີ່ຫາຜູ້ລື່ນບໍ່ໄດ້ແລ້ວ, ເຂົາຍັງເປັນບຸກຄົນຊຶ່ງມີແນວຄິດສະຕິປັນຍາສະຫລາດຫລັກແຫລມທັງເຫັນກວ້າງມອງໄກ, ເປັນນັກຄິດທີ່ສ້ຽມແຫລມເລິກເຊິ່ງ. ລວມຄວາມວ່າໃນໂຕຂອງເຂົານັ້ນມີທັງວິນຍານຂອງນັກຄິດແລະວິນຍານຂອງນັກປະຕິວັດໄປພ້ອມກັນ. ບໍ່ພຽງເທົ່ານັ້ນບຸກຄະລິກລັກສະນະຂອງເຂົາຍັງໄດ້ປະກອບດ້ວຍຄຸນສົມບັດແບບປະຕິວັດຢ່າງຄົບຖ້ວນສົມບູນ, ຄືເປັນບຸກຄົນທີ່ພຽບພ້ອມສົມບູນທີ່ສຸດ. ເປັນບຸກຄົນທີ່ເຕັມປ່ຽມດ້ວຍກຽດສັກສີແລະຈົງຮັກພັກດີທີ່ສຸດ. ເປັນບຸກຄົນທີ່ມີຄວາມທ່ຽງທຳ, ທຸ່ນທ່ຽງ, ຮອບຄອບທີ່ສຸດ.ເປັນບຸກຄົນທີ່ມີກິລິຍາມາລະຍາດອັນປັດສະຈາກຮອຍເປື້ອນເປິ.

ດ້ວຍຄຸນສົມບັດອັນນີ້, ພວກເຮົາເວົ້າໄດ້ວ່າເຂົາເປັນຕົວຢ່າງທີ່ດີເລີດຂອງນັກປະຕິວັດ. ຕາມທຳມະດາເມື່ອຄົນຜູ້ໜຶ່ງຕາຍໄປເພິ່ນຕ້ອງກ່າວສູນທອນພິດເພື່ອຊີ້ແຈ້ງເຖິງຄຸນສົມບັດຂອງເຂົາ, ແຕ່ນ້ອຍໜັກນ້ອຍໜາໃນໂອກາດເຊັ່ນນີ້, ເພິ່ນຈະໄດ້ກ່າວເຖິງຄົນຜູ້ໜຶ່ງຊຶ່ງເລີດດ້ວຍຄວາມເປັນທຳ, ເລີດກວ່າເພິ່ນດ້ວຍຄວາມຖືກຕ້ອງຊັດ ເຈນເຊັ່ນກໍລະນີຂອງ ເຈ, ທັງນີ້ກໍເພາະ ເຈ ເປັນແບບຢ່າງອັນປະເສີດທີ່ສຸດດ້ານ

ຄຸນສົມບັດສິນທຳປະຕິວັດ: ນອກຈາກນັ້ນແລ້ວ, ເຂົາຍັງມີຄຸນລັກສະນະອັນອື່ນອີກນອກເໜືອໄປຈາກ ຄຸນລັກສະນະໃນການໃຊ້ຄວາມຄິດແລະການປະພຶດຕົນແລະກໍບໍ່ແມ່ນຄຸນລັກສະນະທີ່ຊຸບຫລໍ່ມາຈາກປະສົບການ, ຈາກການຕໍ່ສູ້ແຕ່ຫາກແມ່ນຄຸນລັກສະນະຂອງໝາກຫົວໃຈ, ຂອງສັນດານແຕ່ເກີດຂອງເຂົາເອງ. ເຂົາເປັນຄົນທີ່ມີມະນຸດສະທຳແລະມີຄວາມຮູ້ສຶກອ່ອນໄຫວຫລາຍທີ່ສຸດ: ຍ້ອນແນວນັ້ນ, ເມື່ອພວກເຮົາຄິດເຖິງຊີວິດຂອງເຂົາພວກເຮົາຈຶ່ງເວົ້າວ່າເຂົາເປັນຄົນທີ່ລ້ຳເລີດກວ່າເພິ່ນໝົດ, ເຂົາສາມາດຮວມເອົາລັກສະນະຂອງນັກປະຕິວັດ, ນັກຄິດ, ນັກປະຕິວັດຜູ້ບໍລິສຸດຜຸດຜ່ອງດ້ວຍສິນທຳປະຈຳໃຈແລະຄວາມຮູ້ສຶກທີ່ຮັກຄວາມເປັນທຳທີ່ສຸດ, ປະກອບກັບລັກສະນະທ່າທາງທີ່ແຂງແກ່ນຄືເຫລັກ, ມີການປະພຶດທີ່ທຸ່ນທ່ຽງໝັ້ນໜວນຮວດຂາງມີຄວາມທົນທານໜັກແໜ້ນຫາຜູ້ລື່ນບໍ່ໄດ້:.

ດ້ວຍເຫດນີ້, ສິ່ງທີ່ເຂົາປະໄວ້ໃຫ້ຄົນຮຸ່ນຫລັງນັ້ນ, ບໍ່ແມ່ນມີພຽງບົດຮຽນຈາກປະສົບການຫລືຄວາມຮູ້ແຈ້ງແທງຊອດຂອງນັກຮົບທີ່ດີເທົ່ານັ້ນແຕ່ພ້ອມດຽວກັນຍັງມີໝາກຜົນແຫ່ງສະຕິປັນຍາອັນສ້ຽມແຫລມຕື່ມອີກ:. ເຂົາໄດ້ຂຽນພາສາຂອງເຮົາດ້ວຍຄວາມຊຳນິຊຳນານຂັ້ນອາຈານ. ບົດເລົ່າເລື່ອງຂອງເຂົາສົງຄາມຂອງເຂົາກໍແມ່ນມີຄວາມສຳຄັນຍິ່ງ. ຄວາມຄິດອັນເລິກເຊິ່ງຂອງເຂົາກໍແມ່ນມີຊີວິດຊີວາທີ່ສຸດ:.

ສິ່ງທີ່ເຂົາຂຽນອອກມາ, ບໍ່ມີອັນໃດທີ່ບໍ່ໃຫ້ສາລະ, ບໍ່ມີອັນໃດທີ່ບໍ່ເລິກເຊິ່ງແນບນຽນແລະພວກເຮົາກໍບໍ່ຕ້ອງສົງໃສເລີຍວ່າບົດຂຽນເຫລົ່ານັ້ນກໍຈະປະກອບເປັນເອກະສານກ່ຽວກັບແນວຄິດປະຕິວັດທີ່ສຳຄັນທີ່ສຸດ, ເປັນຕຳລາເກົ່າແກ່ໃຫ້ຮ່ຳຮຽນຄົ້ນຄວ້າສືບໄປ. ຖ້າຫາກບໍ່ມີຄວາມພະຍາຍາມ, ບໍ່ມີຜົນງານຂອງເຂົາສ້າງໄວ້ແລ້ວ, ຊາວໂລກກໍຈະບໍ່ໄດ້ຄົ້ນພົບບົດຮຽນອັນມີຄ່າມະຫາສານເຫລົ່ານີ້ເລີຍ:.

ຕະຫລອດໄລຍະເວລານາທີເດືອນປີທີ່ເຂົາໄດ້ຮັບໃຊ້ຊາດພວກເຮົານັ້ນ, ເຂົາເປັນຜູ້ອອກແຮງງານທີ່ບໍ່ຮູ້ຈັກອິດເມື່ອຍ. ເຂົາບໍ່ມີມື້ພັກຜ່ອນແມ່ນແຕ່ມື້ດຽວ.

ຕຳແໜ່ງໜ້າທີ່ຫລວງຫລາຍຖືກມອບໝາຍໃຫ້ເຂົາເຊັ່ນວ່າ: ປະທານທະນາ

ຄານແຫ່ງຊາດ, ອະທິບໍດີກົມວາງແຜນແຫ່ງຊາດ, ລັດຖະມົນຕີກະຊວງອຸດສະຫະກຳ ຜູ້ບັນຊາການທະຫານປະຈຳພາກ, ຫົວໜ້າຄະນະຜູ້ແທນໄປຢ້ຽມຢາມສັນທະວະໄມຕີຕ່າງປະເທດເພື່ອເປີກສາຫາລືດ້ານການເມືອງ, ເສດຖະກິດແລະມິດຕະພາບ ໆລໆ. ບໍ່ມີວຽກງານອັນໃດທີ່ເຂົາຈະເຮັດບໍ່ຫລ້ອນ.

ບໍ່ວ່າສິ່ງໃດຫາກແມ່ນເຮັດດ້ວຍນ້ຳມືຂອງເຂົາແລ້ວແມ່ນດີເດັ່ນທັງນັ້ນ.

ໃນຖານະຕົວແທນປະເທດກູບາເຂົ້າຮ່ວມກອງປະຊຸມຕ່າງໆ, ເຂົາເຮັດໄດ້ດີບໍ່ແຕກຕ່າງຫຍັງກັບການບັນຊາກອງທະຫານຫລື ການນຳພາກຳມະກອນເຮັດວຽກກໍດີ. ສຳລັບ ເຈ ນັ້ນບໍ່ມີເລີຍຄຳເວົ້າມື້ພັກຜ່ອນ ບໍ່ມີເລີຍຊົ່ວໂມງຫວ່າງພຽງຊົ່ວໂມງດຽວເພື່ອພັກຜ່ອນ ຖ້າພວກເຮົາຫລຽວເບິ່ງປ່ອງຢ້ຽມຫ້ອງເຮັດການຂອງເຂົານັ້ນ, ເຮົາຈະເຫັນແສງສະຫວ່າງສາດສ່ອງອອກມາຕະຫລອດເວລາອັນເດິກດື່ນຂອງກາງຄືນ. ເຂົາຍາດເວລາຈາກການພັກຜ່ອນຫລັບນອນນັ້ນມາຮ່ຳຮຽນຄົ້ນຄວ້າຫລືເຮັດວຽກການອື່ນໆ. ໃນເມື່ອເຂົາເປັນນັກສຶກສາທຸກງບັນຫາ, ເຂົາຈຳຕ້ອງເປັນນັກອ່ານທີ່ບໍ່ຈັກອິດເມື່ອຍ ເຂົາມີຄວາມຫິວໂຫຍໃນການສະແຫວງຫາຄວາມຮູ້ຄວາມກ້າວໜ້າ ເຂົາໄດ້ແບ່ງມື້ພັກຈາກວຽກງານໃນຄະນະລັດຖະບານເພື່ອອາສາສະໝັກເຮັດວຽກໂດຍບໍ່ໄດ້ຮັບຄ່າຕອບແທນ. ເຂົາໄດ້ເປັນແບບຢ່າງ, ເປັນຜູ້ຊຸກຍູ້, ຜູ້ປຸກລະດົມໃນເລື່ອງການອາສາສະໝັກເຮັດວຽກຢ່າງມີປະສິດທິພາບທີ່ສຸດ, ປະຊາຊົນຫລາຍໝື່ນຫລາຍແສນຄົນໄດ້ຮັບຜົນສະທ້ອນອັນນັ້ນຈາກເຂົານັບມື້ນັບຫລາຍຂຶ້ນຊັກໄຊ້. ໃນຖານະນັກປະຕິວັດ, ນັກປະຕິວັດຄອມມຸຍນິດ. ນັກຄອມມຸຍນິດທີ່ແທ້ຈິງ, ເຂົາມີຄວາມເຫລື້ອມໃສຈິງຮັກພັກດີຢ່າງຫລວງຫລາຍຕໍ່ຄຸນຄ່າທາງສິນທຳ, ຕໍ່ຄຸນຄ່າຂອງຈິດສຳນຶກແຫ່ງຄວາມເປັນຄົນຜູ້ໜຶ່ງ. ດັ່ງນັ້ນພວກເຮົາກໍສາມາດເວົ້າໄດ້ວ່າເຂົາມີສາຍຕາອັນສະຫວ່າງຢ່າງຍິ່ງກ່ຽວກັບບໍ່ເກີດແຫ່ງສິນທຳເພື່ອກໍ່ສ້າງລັດທິຄອມມຸຍນິດໃນສັງຄົມມະນຸດ.

ພວກເຮົາເຊື່ອໝັ້ນວ່າຜົນງານຂອງເຂົາສ້າງໄວ້ຈະເປັນແສງສະຫວ່າງສາດສ່ອງ

ບໍ່ຈາງຫາຍໃຫ້ກັບການປະຕິວັດກຸຍບາແລະການປະຕິ ວັດຂອງທະວີບອາເມຣິກາລາຕິນຕະຫລອດຮອດຊາວໂລກທັງມວນ.

ພວກຈັກກະພັດປະສົບໄຊຊະນະໃນການສັງຫານນັກຮົບກອງຫລອນໃນການຕໍ່ສູ້. ພວກຈັກກະພັດປະສົບໂຊກໄຊໃນການຖືກເອົາຊີວິດຂອງຄົນຜູ້ລ້ຳເລີດໃນການປະຕິບັດວຽກງານແຕ່ບາງທີພວກຈັກກະພັດອາດບໍ່ຮູ້ ຫລືທຳທ່າບໍ່ຮູ້ວ່ານັກປະຕິບັດງານທີ່ດີເດັ່ນນັ້ນເປັນພຽງພາກສ່ວນຫນຶ່ງຊຶ່ງປະກອບເຂົ້າໃນບຸກຄະລິກລັກສະນະຂອງນັກຮົບຜູ້ນັ້ນ.

ຖ້າຈະເວົ້າເຖິງຄວາມໂສກເສົ້າເສຍໃຈອາໄລອາວອນແລ້ວພວກເຮົາບໍ່ພຽງແຕ່ເສົ້າສະຫລົດໃຈຍ້ອນສູນເສຍນັກປະຕິບັດງານຜູ້ຫນຶ່ງເທົ່ານັ້ນ, ແຕ່ຫາກເສຍໃຈທີ່ສູນເສຍຄົນຜູ້ຫນຶ່ງທີ່ດີເລີດດ້ວຍສິນທຳປະຈຳໃຈ, ພວກ ເຮົາເສົ້າໃຈເພາະສູນເສຍຄົນທີ່ມີຫົວໃຈເຕັມປ່ຽມດ້ວຍມະນຸດສະທຳ, ພວກເຮົາເສົ້າໃຈເພາະສູນເສຍມັນສະຫມອງອັນນັ້ນ, ພວກເຮົາເສົ້າສະຫລົດໃຈເມື່ອຄິດເຖິງຕອນເຂົາຕາຍນັ້ນເຂົາມີອາຍຸພຽງ 39 ປີ, ພວກເຮົາເສົ້າສະຫລົດໃຈທີ່ບໍ່ໄດ້ຮັບຫມາກຜົນເພີ່ມເຕີມຈາກຜົນງານອັນລ້ຳເລີດຂອງເຂົາໃຫ້ຫລວງຫລາຍຍິ່ງໃຫຍ່ໄປກວ່ານີ້ອີກ.

ພວກເຮົາມີຄວາມຮູ້ສຶກວ່າເປັນການສູນເສຍທີ່ຍິ່ງໃຫຍ່ຂະຫນາດດຽວກັນກັບຂະບວນການປະຕິວັດຂະບວນຫນຶ່ງ. ແຕ່ສິ່ງດັ່ງກ່າວນີ້ລະແມ່ນຈຸດອ່ອນຂອງພວກຈັກກະພັດ, ພວກເຂົາຄິດວ່າການທຳລາຍຮ່າງກາຍຂອງຄົນຜູ້ຫນຶ່ງຄືການດັບສູນແນວຄິດຂອງຄົນຜູ້ນັ້ນ. ການທຳລາຍຮ່າງກາຍຂອງເຈ ກໍຄືການດັບສູນແນວຄິດຂອງ

ເຈ. ການທຳລາຍສິນທຳຂອງ ເຈ ກໍຄືການດັບສູນຕົວຢ່າງຂອງ ເຈ. ພວກເຂົາຖືວ່າການຄາດຕະກຳສະເລີຍເສິກທີ່ບາດເຈັບເປັນເລື່ອງທຳມະດາ.ພວກເຂົາໄດ້ກະຈາຍຂ່າວການຄາດຕະກຳນັ້ນໂດຍບໍ່ຫວັ່ນວິຕົກຕໍ່ທາງສຽງຂອງຊາວໂລກ.

ພວກເຂົາໄດ້ສະແດງອອກຊຶ່ງທາດແທ້ອັນເປື່ອຍເຍື່ອຍເຊື່ອຍຊາແບບໂຈນນັກປຸ້ນ, ແບບພວກກຳອຳນາດທີ່ປ່າເຖື່ອນໂລເລ, ແບບພວກທະຫານຮັບຈ້າງທີ່ຖືວ່າການສັງຫານສະເລີຍ, ສັງຫານນັກຮົບປະຕິວັດທີ່ຖືກບາດເຈັບແມ່ນສິດທິອັນຊອບທຳ, ແມ່ນສິ່ງທີ່ຖືກຕ້ອງແລະຮ້າຍແຮງໄປກວ່ານັ້ນພວກເຂົາຍັງປ່າວປະກາດໃຫ້ຮູ້ວ່າເຂົາເຮັດແບບໃດ, ທາລຸນສ່ຳໃດກັບນັກຮົບຜູ້ຫນ້າສົງສານນັ້ນ. ພວກເຂົາຄິດບໍ່ເຖິງເລີຍວ່າການເຮັດກັບເຂົາແນວນັ້ນມັນຈະສັ່ນສະເທືອນຫນ່ວຍໂລກທັງຫນ່ວຍຂະຫນາດໃດ, ແມ່ນແຕ່ພວກເຂົາເອງເຂົາຍັງບໍ່ແນ່ໃຈວ່າການທຳລາຍເຜົາໄຫມ້ຮ່າງກາຍຂອງເຂົານັ້ນແນວຄິດແລະແບບຢ່າງຂອງເຂົາຈະວອດວາຍໄປນຳຫລືບໍ່.

ເຈ ໄດ້ເສຍສະລະເພື່ອປົກປັກຮັກສາຜົນປະໂຫຍດ, ຮັກສາເຫດຜົນອັນຖືກຕ້ອງຂອງປະຊາຊົນຜູ້ຖືກກົດຂີ່ຂູດຮີດໃນທະວີບອາເມຣິກາ.

ເຈ ໄດ້ຕາຍໄປເພື່ອປົກປ້ອງຜົນປະໂຫຍດຂອງຜູ້ທຸກຍາກປາກຫມອງ, ຜູ້ຖືກຕັດສິດປະຊາທິປະໄຕໃນໂລກອັນນີ້ແລະການປະພຶດທີ່ເປັນແບບຢ່າງແລະບໍ່ເຫັນແກ່ຕົວຂອງເຂົາໃນການປ້ອງກັນເຫດຜົນອັນຊອບທຳອັນນີ້ແມ່ນສັດຕູຕົວຮ້າຍກາດທີ່ສຸດຂອງເຂົາກໍຍັງບໍ່ກ້າປະຕິເສດ.

ກ່ອນຫນ້າປະຫວັດສາດມີຫລາຍຄົນປະພຶດຕົນເຫມືອນກັບ ເຈ ຫມາຍຄວາມວ່າອຸທິດຕົນເພື່ອປ້ອງກັນສິດຜົນປະໂຫຍດອັນຊອບທຳຂອງຜູ້ຖືກກົດຂີ່ຫນີບເຕັງແລະໃນແຕ່ລະວັນລຸລ່ວງໄປນັ້ນພວກເຂົາຕ່າງກໍກໍ່ຮ່າງສ້າງຕົວຂຶ້ນໃນຫມາກຫົວໃຈຂອງປະຊາຊົນແລ ພະຍາຍາມທີ່ຈະເອົາຊະນະຈິດໃຈປະຊາຊົນໃຫ້ນັບມື້ນັບໃຫຍ່ຂຶ້ນເລື້ອຍໆ. ພວກທີ່ເປັນສັດຕູຂອງຈັກກະພັດທັງຫລາຍເລີ່ມມອງເຫັນຄວາມສຳຄັນຂອງເລື້ອງນີ້ຂຶ້ນມາແດ່ແລ້ວແລະພວກເຂົາກໍໄດ້ປະຈັກແຈ້ງຈາກເຫດແຫ່ງການຕາຍຂອງ ເຈ ວ່າ

ການຕາຍຂອງ ເຈ ບໍ່ຜິດແຜກແຕກຕ່າງຫຍັງກັບໃນພິດຊີ່ງຫວ່ານລົງດິນ, ເພື່ອຈະເຮັດໃຫ້ເກີດວິລະຊົນຫລາຍໆຄົນທີ່ຈະຍ່າງຕາມຮອຍຕີນຂອງ ເຈ, ຫລາຍຄົນຈະຕັດສິນໃຈເອົາແບບຢ່າງຂອງ ເຈ. ແລ້ວພວກເຮົາກໍຮັບຮູ້ຢ່າງຕາຍໃຈວ່າເຫດຜົນແຫ່ງການປະຕິວັດໃນທະວີບນີ້ຈະບໍ່ຖືກພັງທະລາຍສະຫລາຍຕົວໄປຍ້ອນເຫດການອັນໜ້າເສົ້າສະຫລົດໃຈອັນນີ້ຢ່າງເດັດຂາດ. ອີງໃສ່ຄວາມຄິດຄວາມເຫັນແບບປະຕິວັດຂອງປະຊາຊົນເຮົາແລ້ວ, ເຮົາຈະເບິ່ງແລະຕີລາຄາແບບຢ່າງຂອງ ເຈ ແນວໃດ?.

ເຮົາຈະຮູ້ສຶກວ່າໄດ້ສູນເສຍເຂົາຫລືບໍ່?.

ແນ່ນອນທີ່ສຸດ. ພວກເຮົາຈະບໍ່ໄດ້ເຫັນບົດຂຽນຂອງເຂົາອີກ. ເຮົາຈະບໍ່ໄດ້ຍິນສຽງຂອງເຂົາອີກ. ແຕ່ ເຈ ໄດ້ປະຊັບສົມບັດໄວ້ໃຫ້ຊາວໂລກນັ້ນແມ່ນມູນມັງມໍລະດົກອັນລໍ້າຄ່າແລະພວກເຮົາຜູ້ຮູ້ຈັກເຂົາດີນັ້ນກໍແມ່ນໄດ້ຮັບຜົນປະໂຫຍດຈາກເຂົາຫລາຍກວ່າເພື່ອນໝົດ. ເຂົາໄດ້ປະແນວຄິດປະຕິວັດ, ສິນທຳປະຕິວັດ, ລັກສະນະທ່າທາງ, ຄວາມປະພຶດປະຕິບັດ, ຄວາມໝັກແໜ້ນ, ຈິດສຳນຶກໃນການເຮັດວຽກໄວ້ໃຫ້ພວກເຮົາ. ເວົ້າລວມແລ້ວ, ເຂົາໄດ້ປະແບບຢ່າງສວຍງາມໄວ້ໃຫ້ພວກເຮົາ. ຕົວຢ່າງຂອງ ເຈ ຈະຕ້ອງເປັນແບບສະບັບສຳລັບປະຊາຊົນເຮົາ. ຕົວ ຢ່າງຂອງ ເຈ ຈະຕ້ອງເປັນແບບສະບັບທາງອຸດົມການສຳລັບປະຊາຊົນເຮົາ, ຖ້າຈະໃຫ້ລະບາຍຄວາມຮູ້ສຶກວ່າຕົນປາຖະໜາຢາກໃຫ້ນັກຮົບປະຕິວັດ, ນັກຕໍ່ສູ້, ຄົນຂອງພວກເຮົາຄືໃຜນັ້ນພວກເຮົາຈະອ້າປາກເວົ້າຢ່າງບໍ່ລັງເລໃຈວ່າ "ຕ້ອງໃຫ້ພວກເຂົາເປັນເໝືອນ ເຈ".

ຖ້າຈະໃຫ້ລະບາຍຄວາມຮູ້ສຶກທີ່ວ່າ: ຕົນປາຖະໜາຢາກໃຫ້ຄົນຮຸ່ນຕໍ່ໄປໃນອະນາຄົດເປັນເໝືອນໃຜນັ້ນພວກເຮົາຈະເວົ້າວ່າ "ຕ້ອງໃຫ້ພວກເຂົາເປັນເໝືອນ ເຈ".

ຖ້າຈະໃຫ້ລະບາຍຄວາມຮູ້ສຶກທີ່ວ່າ: ຢາກໃຫ້ເຍົາວະຊົນພວກເຮົາສຶກສາອົບຮົມວິທີໃດພວກເຮົາຈະຮ້ອງຂຶ້ນຢ່າງບໍ່ລັງເລໃຈວ່າ "ພວກເຮົາຕ້ອງການໃຫ້ພວກເຂົາສຶກສາອົບຮົມຕາມແນວຄິດທິດທາງຂອງ ເຈ".

ຖ້າພວກເຮົາຕ້ອງການແບບສະບັບຂອງຄົນຜູ້ໜຶ່ງຊຶ່ງບໍ່ແມ່ນຄົນໃນຍຸກຂອງພວກ

ເຮົາແຕ່ແມ່ນຄົນຂອງຍຸກໃໝ່ໃນອະນາຄົດເຮົາຂໍເວົ້າດ້ວຍຄວາມຮູ້ສຶກຈາກສ່ວນເລິກຂອງຫົວໃຈວ່າແບບສະບັບອັນນັ້ນແມ່ນປັດສະຈາກຮອຍເປື້ອນເປິໃນການປະພຶດ, ປາສະຈາກຮອຍດ່າງດຳໃນການປະຕິບັດງານເພາະອັນນັ້ນແມ່ນແບບສະບັບຂອງ ເຈ.

ຖ້າຈະໃຫ້ລະບາຍຄວາມຮູ້ສຶກທີ່ວ່າຢາກໃຫ້ລູກຫລານພວກເຮົາຄືກັບໃຜຜູ້ໜຶ່ງພວກເຮົາຕ້ອງເວົ້າເປັນສຽງດຽວກັນຢ່າງສຸດອົກສຸດໃຈຂອງນັກປະຕິວັດຜູ້ຫ້າວຫັນວ່າ "ພວກເຮົາຕ້ອງໃຫ້ພວກເຂົາເຫລົ່ານັ້ນເປັນເໝືອນ ເຈ".

ເຈ ກາຍເປັນແບບຢ່າງຊື່ງທຸກຄົນຄວນຮ່ຳຮຽນເອົາ, ບໍ່ສະເພາະແຕ່ປະຊາຊົນເຮົາທີ່ນັ້ນແຕ່ຫາກແມ່ນປະຊາຊົນທຸກແຫ່ງຫົນໃນທະວີບອາເມຣິກາລາຕິນ.

ເຈ ໄດ້ນຳເອົາແນວຄິດຂອງລັດທິມາກ-ເລນິນກັບຄືນສູ່ຄວາມສົດໃສບໍລິສຸດສູ່ຄວາມຮູ້ສຶກປະຕິວັດທີ່ຍິ່ງໃຫຍ່ອີກເທື່ອໜຶ່ງ.

ໃນຍຸກຂອງພວກເຮົານີ້ບໍ່ມີບຸກຄົນໃດສາມາດຍົກສູງແນວຄິດສາກົນນິຍົມໃຫ້ທຽມທັນລະດັບຂອງ ເຈ ແລະຕະຫລອດອະນາຄົດ; ເມື່ອແບບຢ່າງຂອງແນວຄິດສາກົນ

ກໍາມາຊີບອັນໜຶ່ງຖືກຄົ້ນພົບແບບຢ່າງອັນນັ້ນມັນຢູ່ສູງເໜືອເພີ່ນໜົດອັນນັ້ນລະຈະແມ່ນແບບຢ່າງຂອງ ເຈ.

ທຸງຊາດຕ່າງໆ, ຄວາມເສື່ອມເສຍຕ່າງໆ, ຄວາມຮັກຊາດເກີນຂອບເຂດແລະຄວາມເຫັນແກ່ຕົວໄດ້ສູນສິ້ນໄປໝົດແລ້ວຈາກແນວຄິດຈິດໃຈຂອງເຈແລະເຂົາເອງກໍ່ພ້ອມທີ່ຈະຖອກເລືອດອັນແດງເຂັ້ມບໍລິສຸດຂອງເຂົາໃຫ້ໄຫລຫລັ່ງທົ່ວເທບໍ່ຂາດສາຍໃນທັນທີທັນໃດເພື່ອປະຊາຊົນບໍ່ວ່າຊາດໃດ, ເພື່ອເພດຜົນອັນເປັນທໍາຂອງປະຊາຊົນບໍ່ວ່າຢູ່ແຫ່ງຫົນໃດ.

ຍ້ອນແນວນັ້ນເລືອດສີແດງຂອງເຂົາຈຶ່ງໄດ້ໄຫລອາບປັດຖະພີຂອງພວກເຮົາເມື່ອຕອນເຂົາໄດ້ຮັບບາດເຈັບໃນການຕໍ່ສູ້ຕ່າງໆແລະເລືອດຂອງເຂົາກໍໄດ້ໄຫລນອງເທິງດິນແດນຂອງປະເທດໂບລີວີເພື່ອໄຖ່ໂທດໃຫ້ຜູ້ຖືກກົດຂີ່ຂູດຮີດຜູ້ຖືກຂົ່ມເຫັງເຕັງເຕົາ

ເລືອດອັນນັ້ນໄດ້ລິນໄຫລເພື່ອຜົນປະໂຫຍດເພື່ອຄວາມຢູ່ດີກິນດີຂອງຜູ້ຖືກກົດຂີ່ຂົ່ມເຫັງທັງໝົດ.

ເລືອດອັນນັ້ນໄດ້ຟົ້ງກະຈາຍອອກມາເພື່ອປະຊາຊົນຂອງທະວີບອາເມຣິກາທັງໝົດແລະເພື່ອປະຊາຊົນຊາວຫວຽດນາມທັງໝົດເພາະໃນຂະນະທີ່ດໍາເນີນການຕໍ່ສູ້ໃນໂບລີວີນັ້ນແມ່ນເຂົາຕໍ່ສູ້ທັບມ້າງພວກກໍາອໍານາດປ່າເຖື່ອນແລະຈັກກະພັດ, ເຂົາຮູ້ດີວ່າເຂົາໄດ້ສະແດງອອກຊຶ່ງໄມຕີຈິດມິດຕະພາບແລະຄວາມສາມັກຄີອັນສູງສົ່ງທີ່ສຸດຕໍ່ ຫວຽດນາມດ້ວຍການຕໍ່ສູ້.

ສະນັ້ນພາຍຫລັງພິທີອັນຕື່ນເຕັ້ນມີຊີວິດຊີວາໃນຄືນມື້ນີ້, ພາຍຫລັງການສະແດງອອກຊຶ່ງຄວາມຮັບຮູ້ອັນສູງສົ່ງຢ່າງບໍ່ໜ້າເຊື່ອພ້ອມດຽວກັນນັ້ນຍັງມີຄວາມບໍ່ໜ້າເຊື່ອດ້ານປະລິມານ, ດ້ານລະບຽບວິໄນ, ດ້ານສະຕິອັນນີ້ມນວນອ່ອນຫວານຈິງຮັກພັກດີຕໍ່ກັນມັນກໍ່ສະແດງເຖິງປະຊາຊົນພວກເຮົາມີຄວາມຮູ້ສຶກຕື່ນຕົວສູງເປັນປະຊາຊົນຜູ້ຮູ້ບຸນຄຸນ, ຮູ້ຈັກເຊີດຊູ, ຮູ້ລະລຶກເຖິງຜູ້ຊົງຄຸນງາມຄວາມດີທີ່ເສຍສະຫລະໃນຍຸດທະພູມ, ມັນບອກໃຫ້ພວກເຮົາຮູ້ວ່າປະຊາຊົນພວກເຮົາບໍ່ຫລົງລືມບຸກຄົນທີ່ຮັບໃຊ້

ພວກເຂົາ, ບຸກຄົນຜູ້ສະແດງອອກຊຶ່ງຄວາມສາມັກຄີກັບປະຊາຊົນອື່ນໆ ດ້ວຍການຕໍ່ສູ້ດ້ວຍກຳລັງອາວຸດແລະສະແດງອອກໃຫ້ປະຊາຊົນພວກເຮົາຮູ້ວ່າຈະຍົກສູງຄັນທຸງແລະຫລັກການປະຕິວັດໃຫ້ສູງຍິ່ງໆຂຶ້ນໄປດ້ວຍວິທີໃດ.

ໃນໂອກາດແຫ່ງການລະລຶກເຖິງເຂົານັ້ນຂໍໃຫ້ພວກເຮົາຫມົດທຸກຄົນປະປ່ອຍສະຕິຄວາມຄິດພ້ອມດ້ວຍຄວາມໄຝ່ຝັນປາຖະຫນາໄວ້ກັບອະນາຄົດເຖີດ, ດ້ວຍຄວາມຝັນໄຝ່ຢ່າງຕາຍຕົວວ່າໄຊຊະນະໃນບັ້ນປາຍນັ້ນຈະ ຕ້ອງເປັນຂອງປະຊາຊົນຢ່າງແນ່ນອນ ແລະກໍ່ເວົ້າເຖິງ ເຈ ພ້ອມດ້ວຍວິລະຊົນທີ່ຕໍ່ສູ້ແລະລົ້ມຕາຍຄຽງຂ້າງເຂົານັ້ນວ່າ:

ຍາມໃດກໍ່ມຸ່ງຫນ້າສູ່ໄຊຊະນະ!.

ປິຕຸພູມຫລື ຄວາມຕາຍ! ພວກເຮົາຕ້ອງມີໄຊ!.>>



9

ນັກທິດສະດີສົງຄາມກອງຫລອນ

ເຖິງແມ່ນວ່າຜູ້ຊ່ຽວຊານ ດ້ານການທະຫານຫລາຍຄົນອາດບໍ່ເຫັນພ້ອມກັບແນວທາງການເມືອງແລະການທະຫານຂອງ ເຈ ເກວາຣາ ແຕ່ໂດຍສ່ວນໃຫຍ່ແລ້ວພວກເຂົາຍອມຮັບວ່າ: ທິດສະດີສົງຄາມກອງຫລອນຂອງ ເຈ ເປັນບົດຮຽນທາງຍຸດທະສາດທີ່ຫລັກແຫລມທີ່ສຸດ. ທິດສະດີຂອງເຂົາແມ່ນອີງໃສ່ກຳລັງຍ່ອມນ້ອຍເພື່ອຕີເອົາຊະນະສັດຕູຜູ້ເປັນກອງທັບທີ່ເຂັ້ມແຂງທັນສະໄຫມຮອບດ້ານ. ເຈ ຂຽນຕຳລາ "ທິດສະດີສົງຄາມກອງໂຈນ" ຂອງເຂົາໃນລະຫວ່າງ ປີ 1960 ຄຸນຄ່າອັນສູງສົ່ງແລະບົດຮຽນອັນລ້ຳຄ່າຊຶ່ງເຂົາໄດ້ຮິບໂຮມບັນທຶກໄວ້ໃນປຶ້ມເຫລັ້ມນີ້ລ້ວນແລ້ວແຕ່ແມ່ນຫມາກຜົນຈາກນ້ຳເຫື່ອນ້ຳແຮງ, ຈາກປະສົບການອັນສ່ຽງໄພທີ່ສຸດໃນຊີວິດແຫ່ງການຕໍ່ສູ້ພາກສ່ວນຫນຶ່ງຂອງເຂົາ. ຄືມັນແມ່ນບົດຮຽນຊຶ່ງເຂົາຖອດຖອນ, ສຳຫລວດ, ຕີລາຄາຢ່າງຖືກແທດເຫມາະສົມທີ່ສຸດຈາກປ່າເຂົາ, ສາຍພູເຊັຍຣາມາເອສຕຣາ, ຈາກການປະຕິວັດກູບາ. ເວົ້າເຖິງຄວາມຕິດພັນຂອງປະຊາຊົນກູບາແລະການຕໍ່ສູ້ແບບກອງຫລອນນັ້ນ ເຂົາໃຫ້ຄວາມເຫັນດັ່ງນີ້:

"ການປະຕິວັດຂອງກູບາໄດ້ພິສູດເຖິງຄວາມສາມາດຂອງປະຊາຊົນທີ່ໄດ້ປົດປ່ອຍຕົນເອງຈາກເງື້ອມມືຂອງລັດຖະບານທີ່ກົດຂີ່ດ້ວຍການເຮັດສົງຄາມກອງຫລອນ".

ກ່ຽວກັບຫລັກການທົ່ວໄປຂອງສົງຄາມກອງຫລອນນີ້ ເຈເ ທັນວ່າມີເນື້ອໃນຕົ້ນຕໍຢູ່ 3 ປະການຄື:

1. ກຳລັງຂອງປະຊາຊົນ ສາມາດເອົາຊະນະກອງທັບຂອງກຸ່ມກຳອຳນາດໄດ້.

2. ເມື່ອຕັດສິນໃຈຈະເຮັດການປະຕິວັດແລ້ວກໍບໍ່ຈຳເປັນຕ້ອງລໍຖ້າໃຫ້ເງື່ອນໄຂຫລືສະພາບການເພື່ອເຮັດການປະຕິວັດນັ້ນສຸກງອມສາກ່ອນ ເພາະວ່າພວກເຮົາສາມາດສ້າງສະຖານະການເອງດ້ວຍການປຸກລະດົມປະຊາຊົນລຸກຮືຂຶ້ນຕໍ່ສູ້.

3. ໃນປະເທດດ້ອຍພັດທະນາຕ່າງໆໃນທະວີບອາເມຣິກາລາຕິນ, ຊົນນະບົດເປັນພື້ນຖານທີ່ເຫມາະສົມທີ່ສຸດເພື່ອດຳເນີນການຕໍ່ສູ້ດ້ວຍກຳລັງອາວຸດ.

ໃນຈຳນວນເນື້ອໃນຕົ້ນຕໍທັງສາມຂໍ້ງ ເຈ ໄດ້ສະຫລຸບໄວ້ນີ້, ສອງຂໍ້ທຳອິດໄດ້ສ້າງຄວາມຂັດແຍ່ງຂຶ້ນ. ທັງນີ້ກໍເພາະແນວຄິດຂອງເຂົາອັນໃຫມ່ນີ້ມັນໄດ້ຜິດແຜກແຕກຕ່າງໄປຈາກແນວຄິດຂອງພວກ "ນັກປະຕິວັດຫົວໂບຮານ" ຫລື "ນັກປະຕິວັດຈອມປອມ" ທີ່ເຫັນແຕ່ທ່າຈະຍອມຈຳນົນແລະຍາມໃດກໍຫວາດຫວັ່ນເກງກົວກອງທັບຂອງສັດຕູເພາະເຂົາມີຄວາມເຊື່ອຫມັ້ນເປັນຂອງພວກເຂົາເອງວ່າ "ບໍ່ມີກຳລັງອັນໃດສາມາດເອົາຊະນະກອງ ທັບທີ່ເຂັ້ມແຂງຂອງລັດຖະບານໄດ້!" ເມື່ອມີຄວາມຄິດແນວນັ້ນແລ້ວພວກເຂົາກໍຈຶ່ງໄດ້ແຕ່ນັ່ງກອດເຂົ່າເປົ່າເລັບມືລໍຄອຍໃຫ້ໂອກາດອຳນວຍ, ຄອງຖ້າໃຫ້ສະພາບການສຸກງອມເສຍກ່ອນ. ເວົ້າແນວນັ້ນ, ກໍບໍ່ໄດ້ຫມາຍຄວາມວ່າມີພຽງການຕໍ່ສູ້ດ້ວຍກຳລັງອາວຸດເທົ່ານັ້ນດອກທີ່ສາມາດສ້າງສະຖານະການເພື່ອການປະຕິວັດໄດ້. ເຈ ມີຄວາມເຫັນກ່ຽວກັບເລື່ອງນີ້ວ່າ:

"ຂໍທຸກຄົນຢ່າໄດ້ເຂົ້າໃຈວ່າມີພຽງການເຮັດສົງຄາມກອງຫລອນອັນດຽວເທົ່ານັ້ນຈະສ້າງສະຖານະການໄດ້. ແຕ່ຂໍໃຫ້ຈື່ໃສ່ໃຈວ່າຍັງມີປັດໄຈອີກອັນຫນຶ່ງຊຶ່ງມີສ່ວນຊ່ວຍຊຸກຍູ້ໃຫ້ເກີດການປະຕິວັດແລະເປັນເງື່ອນໄຂອັນຫນຶ່ງອີກເພື່ອກໍ່ສ້າງການເຮັດສົງຄາມກອງຫລອນຂຶ້ນມາ. ສິ່ງທີ່ກ່າວນັ້ນແມ່ນການຕໍ່ສູ້ທາງດ້ານການເມືອງຂອງປະຊາຊົນແບບວ່າເອົາກົດຫມາຍເອົາລັດຖະທຳມະນູນ, ເອົາສະພາເປັນເຄື່ອງມືເພື່ອຄຸມອຳນາດການປົກຄອງ. ການຕໍ່ສູ້ຈະເກີດມີຂຶ້ນແນ່ນອນໃນເມື່ອປະຊາຊົນຫາກຮູ້

ວ່າພວກເຂົາຖືກອຳນາດປາຍປືນຂົ່ມຂູ່ພວກເຂົາຖືກຕັດສິດປະຊາທິປະໄຕ, ພວກເຂົາຖືກຄົນກຸ່ມໜຶ່ງສໍ້ໂກງ. ຄົນກຸ່ມນັ້ນແມ່ນພວກທີ່ໃຊ້ອຳນາດປາຍປືນກົດຂີ່ຂູດຮີດ, ປາບປາມທຳລາຍ, ສໍ້ໂກງຈົນສາມາດຢຽບຄໍປະຊາຊົນເພື່ອຄວ້າເອົາອຳນາດການປົກຄອງໄວ້ໃນກຳມືສິ່ງດັ່ງກ່າວນັ້ນລະຄືການມ້າງເພສັນຕິພາບ. ສິ່ງດັ່ງກ່າວນັ້ນລະຄືເງື່ອນໄຂທີ່ຈະນຳພາໄປສູ່ການຕໍ່ສູ້ດ້ວຍກຳລັງອາວຸດ, ການຕໍ່ສູ້ແບບກອງຫລອນ"

ສຳລັບຂໍ້ທີ່ສາມນັ້ນ ເຈ ຖືວ່າເປັນບັນຫາພື້ນຖານທີ່ສຸດ. ເຂົາມີຄວາມເຫັນວ່າມີແຕ່ຊົນນະບົດເທົ່ານັ້ນເປັນພື້ນທີ່ເໝາະສົມໃນການຕໍ່ສູ້, ເພາະໃນປ່າເຂົາລຳເນົາໄພອັນກວ້າງໃຫຍ່ໄພສານນັ້ນທະຫານລັດຖະບານບໍ່ສາມາດຊອກຮູ້ທຸກຈອກທຸກແຈໄດ້, ມັນຈຶ່ງງ່າຍແກ່ການລີ້ຊ່ອນເພື່ອສ້າງກຳລັງປະກອບອາວຸດເພື່ອຫລອນຕີຝ່າຍລັດຖະບານ. ເຈົ້າຕຳລາເກົ່າແກ່ທັງຫລາຍຫລິງເຫັນແຕ່ການຕໍ່ສູ້ໃນກາງຖະໜົນໃນຕົວເມືອງຊຶ່ງກົງກັນຂ້າມກັບແນວຄິດຂອງ ເຈ ທີ່ເຫັນວ່າການຕໍ່ສູ້ໃນຕົວເມືອງນັ້ນແມ່ນການສ່ຽງໄພທີ່ສຸດ. ທັງນີ້ກໍເພາະວ່າພວກທີ່ດຳເນີນການຕໍ່ສູ້ທາງການເມືອງນັ້ນແມ່ນບໍ່ມີກຳລັງອາວຸດໜູນຫລັງຕ້ອງໄດ້ເຄື່ອນໄຫວຢ່າງລັບໆ, ນອກຈາກນັ້ນກົດໝາຍຮັບປະກັນສິດປະຊາທິປະໄຕແລະອື່ນໆກໍແມ່ນຖືກລົບລູ່ໝົດກ້ຽງພວກເຂົາກໍມີແຕ່ຈະເປັນເປົ້າໝາຍຂອງການຂົ່ມຂູ່ໜີບເຕັງອັນແສນສາຫັດ. ເວົ້າເຖິງເງື່ອນໃນຕົ້ນຕໍສາມປະການນີ້, ເຈ ໄດ້ວິເຄາະອີໃຈແລະໃຫ້ຄວາມກະຈ່າງແຈ້ງເພີ່ມ ເຕີມວ່າ:

"ການຮົບແບບກອງຫລອນແມ່ນການດຳເນີນສົງຄາມຂັ້ນພື້ນຖານຂອງເຫລົ່າປະຊາຊົນເພື່ອປົດແອກຕົນເອງ, ການຮົບນີ້ກໍແມ່ນມີຫລາຍແບບຫລາຍລັກສະນະຜິດແຜກແຕກຕ່າງກັນໄປເຖິງແມ່ນວ່າຈະມີເປົ້າໝາຍໃນການປົດປ່ອຍຊາດອັນດຽວກັນກໍຕາມ. ສິ່ງທີ່ເຫັນເດັ່ນຊັດອີກອັນໜຶ່ງກໍຄືວ່າສົງຄາມຈະຕ້ອງເປັນໄປຕາມກົດເກນແຫ່ງວິທະຍາສາດ, ໃຜຫາກປະຕິເສດກົດເກນອັນນີ້ແມ່ນຈະຕ້ອງປະລາໄຊ. ສົງຄາມກອງຫລອນອັນເປັນການ ຕໍ່ສູ້ຂັ້ນພື້ນຖານນັ້ນກໍແມ່ນຢູ່ໃນກົດເກນດັ່ງກ່າວແຕ່ຄຽງຄູ່ກັນໄປນັ້ນຊ້ຳພັດມີກົດເກນໃໝ່ອີກ, ທັງນີ້ກໍຍ້ອນວ່າສົງຄາມກອງຫລອນມັນ

ມີລັກສະນະພິເສດນັ້ນລະ. ເຖິງແມ່ນວ່າເງື່ອນໄຂທາງພູມີສາດແລະທາງສັງຄົມໃນແຕ່ລະປະເທດຈະເປັນສິ່ງກຳນົດວິທີການແລະລັກສະນະພິເສດຂອງສົງຄາມໃນແຕ່ລະທ້ອງຖິ່ນກໍຈິງແຕ່ນອກນັ້ນມັນກໍຍັງມີຫລັກການຊຶ່ງໃຊ້ໄດ້ທົ່ວໄປໃນການຕໍ່ສູ້ບໍ່ວ່າປະເທດໃດກໍຕາມ".

ທີ່ ເຈ ຖືວ່າເປັນສຳຄັນອີກອັນໜຶ່ງກໍແມ່ນການພະຍາຍາມຊອກຄົ້ນຫາຫລັກການທີ່ສາມາດໃຊ້ໄດ້ທົ່ວໄປອັນນີ້ພ້ອມດ້ວຍຂໍ້ກຳນົດອື່ນໆເພື່ອປະຊາຊົນສາມາດນຳເອົາໄປໝູນໃຊ້ໃນການປົດປ່ອຍຊາດເຂົາເຫັນວ່າສິ່ງເຫລົ່ານັ້ນແມ່ນຈະຕ້ອງຮີບໂຮມທ້ອນໂທມເຂົ້າມາໃຫ້ເປັນທິດສະດີໂດຍການນຳເອົາປະສົບການຈາກພາກປະຕິບັດຕົວຈິງເປັນພື້ນຖານເພື່ອຈະໄດ້ເປັນປະໂຫຍດແກ່ຜູ້ອື່ນ. ເມື່ອເວົ້າເຖິງສົງຄາມນັ້ນບັນຫາທີ່ລືມບໍ່ໄດ້ກໍແມ່ນບັນຫາພົວພັນລະຫວ່າງສົງຄາມແລະນັກຮົບ. ກ່ຽວກັບຄວາມສຳຄັນຂອງນັກຮົບໃນໜ່ວຍກອງຫລອນນັ້ນ ເຈ ໄດ້ໃຫ້ທັດສະນະດັ່ງນີ້:

"ກ່ອນອື່ນຂໍໃຫ້ພວກເຮົາທັງໝົດພິຈາລະນາຄຳຖາມທີ່ວ່າ: ພວກນັກຮົບທີ່ດຳເນີນສົງຄາມກອງຫລອນນັ້ນແມ່ນໃຜເສຍກ່ອນ? ຜູ້ທີ່ກົງກັນຂ້າມກັບພັກເຮົານັ້ນແມ່ນຜູ້ກົດຂີ່ພ້ອມດ້ວຍສະໝູນຂອງມັນຊຶ່ງລ້ວນແຕ່ແມ່ນທະຫານອາຊີບ, ມີອາວຸດດີແລະລະບຽບວິໄນດີທັງໄດ້ຮັບການຊ່ວຍເຫລືອຈາກຕ່າງປະເທດກໍຄືຈາກລະບອບການປົກຄອງແບບຫ້ອງການທີ່ເປັນເຄື່ອງມືຂອງພວກກົດຂີ່ນີ້. ຜູ້ທີ່ຢູ່ອີກຝ່າຍໜຶ່ງກໍຄືປະຊາຊົນຂອງຊາດຫລືທ້ອງຖິ່ນທີ່ລຸກຮືຂຶ້ນຕໍ່ສູ້. ຂໍ້ສຳຄັນແມ່ນຕ້ອງໃຫ້ກຳໄດ້ວ່າສົງຄາມກອງຫລອນແມ່ນສົງຄາມມວນຊົນ, ແມ່ນສົງຄາມປະຊາຊົນ. ໜ່ວຍກອງຫລອນນັ້ນແມ່ນແກນສານແມ່ນກອງໜ້າປະກອບອາວຸດຂອງປະຊາຊົນແລະກຳລັງແຮງຂອງໜ່ວຍກອງຫລອນນີ້ກໍແມ່ນອີງໃສ່ມາຈາກປະຊາຊົນນັ້ນເອງ. ຈົ່ງຢ່າໄດ້ຕີລາຄາວ່າໜ່ວຍກອງຫລອນແມ່ນດ້ອຍກວ່າກອງທັບສັດຕູເນື່ອງຈາກການຂາດເຂີນອຸປະກອນສົງຄາມພຽງເທົ່ານັ້ນ. ສົງຄາມກອງຫລອນແມ່ນຖືກນຳມາໃຊ້ໂດຍຝ່າຍທີ່ໄດ້ຄວາມສະໜັບສະໜູນອຸ້ມຊູຈາກປະຊາຊົນຜູ້ບໍ່ມີອາວຸດຍຸດທະພັນພຽງພໍໃນ

ການຕໍ່ສູ້ກັບພວກກົດຂີ່ຂູດຮີດສິ່ງທີ່ຈຳເປັນທີ່ສຸດອັນໜຶ່ງກໍແມ່ນນັກຮົບກອງຫລອນຕ້ອງຍາດເອົາການຊຸດຊ່ວຍຂອງປະຊາຊົນໃນທ້ອງຖິ່ນໃຫ້ໄດ້ຢ່າງເດັດຂາດ. ຖ້າຈະປຽບທຽບໜ່ວຍກອງຫລອນພວກເຮົາໃສ່ກັບກຸ່ມນັກປຸ້ນພວກໜຶ່ງມັນກໍມີສິ່ງທີ່ຄ້າຍຄືກັນດັ່ງນີ້... ພວກເຂົາກໍມີການເຄົາລົບຫົວໜ້າ, ມີຄວາມກ້າຫານຮູ້ພູມີປະເທດແລະກໍຮູ້ຍຸດທະວິທີທີ່ຈະນຳໄປໃຊ້ເປັນຢ່າງດີຄືກັນພຽງແຕ່ວ່າພວກເຂົາຂາດການອຸ້ມຊູຂອງປະຊາຊົນແລະສິ່ງທີ່ຫລີກບໍ່ພົ້ນນັ້ນກໍຄືພວກເຂົາຈະຕ້ອງຖືກຈັບແລະຖືກດັບສູນໂດຍພວກເຈົ້າໜ້າທີ່ຢ່າງບໍ່ຕ້ອງສົງໃສ". ຕໍ່ຄຳຖາມທີ່ວ່າ "ນັກຮົບກອງຫລອນຕໍ່ສູ້ຍ້ອນເຫດອັນໃດ?". ເຈ ໃຫ້ຄວາມເຫັນວ່າ:

"ເມື່ອເຮົາຫາກວິໄຈເບິ່ງວິທີປະຕິບັດງານຂອງໜ່ວຍກອງຫລອນພ້ອມດ້ວຍລັກສະນະການຕໍ່ສູ້ແລະເຂົ້າໃຈພື້ນຖານຂອງມັນໃນມວນຊົນຄັກແນ່ແລ້ວເຮົາກໍສາມາດແກ້ບັນຫາໄດ້ຢ່າງຖືກຕ້ອງເວົ້າໃຫ້ສຸດແລ້ວນັກຮົບກອງຫລອນແມ່ນນັກປະຕິຮູບສັງຄົມ. ເຂົາຈັບປືນຂື້ນມາຕໍ່ສູ້ຕາມຄຳຮ່ຽກຮ້ອງຂອງຜູ້ຖືກກົດຂີ່, ທີ່ຖືກໜີບເຕັງ, ເຂົາ

ທຳການຕໍ່ສູ້ເພື່ອປ່ຽນແປງລະບອບສັງຄົມທີ່ບໍ່ເປັນທຳ, ເພື່ອດຶງພີ່ນ້ອງຮ່ວມຊາດທີ່ບໍ່ໄດ້ຕໍ່ສູ້ດ້ວຍກຳລັງອາວຸດອອກຈາກຄວາມທຸກຍາກປາກໝອງແລະຄວາມຊົ່ວຊ້າປ່າເຖື່ອນຈາກການກະທຳຂອງພວກກຳອຳນາດ. ເຂົາເປີດບັ້ນຮົບອັນຮຸນແຮງຕ້ານກັບເງື່ອນໄຂຕ່າງໆຂອງສະຖາບັນການປົກຄອງແລະເທົ່າທີ່ໂອກາດອຳນວຍໃຫ້ນັ້ນເຂົາກໍໄດ້ອຸທິດຕົນເພື່ອທັບມ້າງຮູບປັ້ນຂອງສະຖາບັນເຫລົ່ານີ້. ເມື່ອພວກເຮົາຫາກຄົ້ນຄວ້າເລິກເຖິງຍຸດທະວິທີສົງຄາມກອງຫລອນແລ້ວພວກເຮົາກໍຈະເຫັນບົດບາດຂອງນັກຮົບກອງຫລອນກວ້າງໄກໄປກວ່ານັ້ນອີກ... ຄືນັກຮົບກອງຫລອນທຸກຄົນຕ້ອງຮູ້ພື້ນທີ່ເຂດຊົນນະບົດເປັນຢ່າງດີ, ເຂົາຕ້ອງຮູ້ດີເສັ້ນທາງເຂົ້າອອກທັງໝົດຕະຫລອດເສັ້ນທາງເພື່ອຫລົບໜີ, ເຂົາຕ້ອງມີຄວາມສາມາດໃນການເຄື່ອນໄຫວຢ່າງຄ່ອງແຄ້ວ, ຕ້ອງຮູ້ບ່ອນລີ້ຊ່ອນກຳບັງແລະສິ່ງທີ່ຂາດບໍ່ໄດ້ນັ້ນກໍຄືວ່ານັກຮົບກອງຫລອນທຸກຄົນຕ້ອງອີງໃສ່ການອູ້ມຊູຂອງປະຊາຊົນ".

ເງື່ອນໄຂທັງໝົດຊຶ່ງ ເຈ ໄດ້ວາງໄວ້ນີ້ແມ່ນຮຽກຮ້ອງພື້ນທີ່ໃນການປະຕິບັດງານອັນກວ້າງຂວາງແລະມີພົນລະເມືອງນ້ອຍ, ຕໍ່ໜ້າສະພາບການເຊັ່ນນີ້, ນັກຮົບກອງຫລອນ, ໃນຖານະນັກປະຕິຮູບສັງຄົມນັ້ນ, ກ່ອນອື່ນໝົດແມ່ນເຂົາຕ້ອງປ່ຽນແປງສິດທິໃນກຳມະສິດທີ່ດິນແບບເກົ່າ, ນັກຮົບກອງຫລອນຕ້ອງຍົກບັນຫາທີ່ດິນຂຶ້ນເປັນບັນຫາຕົ້ນຕໍແລະພ້ອມດຽວກັນເຂົາຕ້ອງເປັນນັກປະຕິວັດການກະເສດຕື່ມອີກ. ເວລາໃດ ເຈ ກໍເນັ້ນໜັກເຖິງສິດຜົນປະໂຫຍດຂອງຊາວໄຮ່ນາສ່ວນຫລວງຫລາຍ, ເຂົາເພີ່ມເຕີມວ່າ: "ນັກຮົບກອງຫລອນທຸກຄົນຕ້ອງຫລິງເຫັນແລະແນໃສ່ຄວາມຮຽກຮ້ອງຕ້ອງການຂອງຊາວໄຮ່ນາສ່ວນໃຫຍ່. ຕ້ອງຮັບຮູ້ວ່າພວກເຂົາຕ້ອງການຢາກມີທີ່ດິນໄວ້ຄຸ້ມຄອງ, ພວກເຂົາຢາກເປັນເຈົ້າຂອງໃນປັດໃຈການຜະລິດ, ເປັນເຈົ້າຂອງສັດສາວາສິ່ງຕ່າງໆ, ພວກເຂົາຢາກໄດ້ມາຊຶ່ງທຸກສິ່ງທຸກຢ່າງອັນທີ່ພວກເຂົາໄຝ່ຝັນຫາມາດົນແລ້ວ, ພວກເຂົາຢາກໄດ້ທຸກຢ່າງທີ່ຈຳເປັນໃນການດຳລົງຊີວິດຕະຫລອດຮອດດິນຕອນໜຶ່ງເພື່ອຈະຂຸດຂຸມຝັງໂຕເຂົາເອງນັ້ນເຂົາກໍຕ້ອງການມີໄວ້

ເປັນກຳມະສິດ".

ເຈ ໃຫ້ຂໍ້ສັງເກດວ່າສົງຄາມກອງຫລອນນີ້ມີ 2 ແບບ: ແບບທີ 1 ແມ່ນການຕໍ່ສູ້ເພື່ອສ້າງກຳລັງທັບອັນແຂງແກ່ນເຊັ່ນກໍລະນີຂອງນັກຮົບຊາວອູກະແຣນໃນສະຫະພາບໂຊວຽດ, ແບບທີຫນຶ່ງນີ້ແມ່ນບໍ່ໄດ້ຢູ່ໃນການວິເຄາະຂອງ ເຈ ເພາະ ເຈ ເນັ້ນຫນັກໃສ່ແບບທີ 2 ຊຶ່ງແມ່ນກຸ່ມປະກອບອາວຸດຕັດສິນໃຈຕໍ່ສູ້ກັບພວກກຳອຳນາດຊຶ່ງຈະແມ່ນພວກລ່າຫົວເມືອງຂຶ້ນຫລືບໍ່ກໍຕາມ, ກຸ່ມປະກອບອາວຸດພວກນີ້ແມ່ນອີງໃສ່ຊົນນະບົດແຫ່ງດຽວເທົ່ານັ້ນເປັນຖານທີ່ຫມັ້ນເພື່ອດຳເນີນການຕໍ່ສູ້ທັງສອງແບບນີ້, ບໍ່ວ່າອຸດົມການເພື່ອຕໍ່ສູ້ຈະແຕກຕ່າງເປັນໄປແນວໃດກໍຕາມ ແຕ່ສຳລັບທາງດ້ານເສດຖະກິດນັ້ນແມ່ນເພື່ອຈຸດປະສົງອັນດຽວກັນຄືຄວາມຕ້ອງການໃນກຳມະສິດທີ່ດິນແມ່ນແຕ່ການປະຕິວັດໃນ ປະເທດຈີນຂອງເຫມົາແລະການປະຕິວັດຕາມແນວທາງຂອງໂຮຈິມິນໃນຫວຽດນາມກໍຢູ່ໃນກົດເກນອັນນີ້. ເຈ ຖືວ່າສົງຄາມກອງຫລອນນີ້ສາມາດທີ່ຈະພັດທະນາເຕີບໃຫຍ່ຂະຫຍາຍຕົວເປັນສົງຄາມທີ່ມີລັກສະນະຫລັກຫມັ້ນຄັກ ແນ່, ອັນນີ້ແມ່ນອີງໃສ່ຄວາມເດັດດ່ຽວຮຸນແຮງຂອງການຕໍ່ສູ້ທີ່ນັບມື້ນັບແຜ່ຜາຍຂະຫຍາຍຕົວສົງຄາມກອງຫລອນນີ້ແມ່ນຈຸດເລີ່ມຕົ້ນ, ແມ່ນສັນຍານເຕືອນລ່ວງຫນ້າຂອງສົງຄາມທີ່ມີລັກສະນະຫລັກຫມັ້ນຄັກແນ່ເຖິງແມ່ນມັນຈະມີລັກສະນະພິເສດຂອງມັນກໍຕາມ. ຍ້ອນແນວນັ້ນຈຶ່ງເວົ້າໄດ້ວ່າຫລັກການພື້ນຖານລະແມ່ນວ່າຖ້າບໍ່ມີການເປີດບັ້ນຮົບ, ການຕໍ່ສູ້ການປະທະຂະຫນາດນ້ອຍຕ່າງໆແລ້ວ, ໄຊຊະນະກໍແຮ່ງຢູ່ໄກຈາກຄວາມເປັນຈິງ. ຫລາຍຄົນໄດ້ໃຊ້ຄຳຈຳກັດຄວາມທີ່ບໍ່ຖືກຕ້ອງເຫມາະສົມວ່າ "ນັກຮົບກອງຫລອນແມ່ນນັກບວດຂອງສົງຄາມ". ອັນນີ້ກໍແມ່ນສະແດງອອກໃຫ້ຮູ້ຈັກປະກົດການດ້ານຄຸນນະພາບໃນການຕັ້ງສະມາທິ, ດ້ານການຫັກຫລັງ, ດ້ານການປະກົດຕົວໂດຍສັດຕູບໍ່ຄາດຄິດອັນເປັນປັດໄຈສຳຄັນທີ່ສຸດອັນນີ້ແມ່ນນັກບວດແບບພິເສດ. ເຈ ມີຄວາມເຫັນວ່າສົງຄາມແມ່ນການຕໍ່ສູ້ທີ່ຄູ່ຕໍ່ສູ້, ຕ່າງຝ່າຍຕ່າງກໍມຸ່ງຫມາຍຢາກທຳລາຍດັບສູນກັນ. ຄຽງຄູ່ກັບການໃຊ້ກຳລັງນັ້ນພວກເຂົາກໍຈະໃຊ້ກົນ

ອຸບາຍ, ຍຸດໂທບາຍຕ່າງໆອັນຈະພາໃຫ້ບັນລຸເປົ້າໝາຍຫລາຍຄືນໄດ້ໝື່ນປະໝາດ, ດູຖູກການ "ຕີແລ້ວແລ່ນ" ເຈ ມີຄວາມເຫັນວ່າຈະເວົ້າແບບນັ້ນກໍແມ່ນຖືກຕ້ອງ... ແຕ່...

"ຕີແລ້ວແລ່ນ... ຄອຍຖ້າ... ລີ້ຊ່ອນກຽມໂຈມຕີແລ້ວກໍຕີແລະແລ່ນໜີອີກ... ແລະເຮັດແບບນັ້ນເປັນປະຈຳລຽນຕິດເພື່ອບໍ່ໃຫ້ສັດຕູໄດ້ມີໂອກາດພັກຜ່ອນ. ໃນນັ້ນມັນກໍອາດມີຄຸນນະພາບໃນແງ່ລົບຄືລັກສະນະໃນການຖອນ, ການຫລີກເວັ້ນທີ່ຈະປະທະຢ່າງພະເຊີນໜ້າກັບສັດຕູ".

ທິດສະດີຂອງ ເຈ ນີ້ກໍແມ່ນບໍ່ນອກເໜືອໄປຈາກຫລັກການທົ່ວໄປຂອງສົງຄາມກອງຫລອນຊຶ່ງຕ້ອງລົງທ້າຍດ້ວຍຄວາມຕ້ອງການໄຊຊະນະແລະດັບສູນສັດຕູ. ດ້ວຍເຫດນີ້ເຂົາຈຶ່ງເຫັນວ່າສົງຄາມກອງຫລອນນີ້ບໍ່ສາມາດຄວ້າເອົາໄຊຊະນະໃນບັ້ນປາຍຢ່າງເດັດຂາດດ້ວຍຕົວມັນເອງ, ແຕ່ເປັນພຽງຜ່ານໜຶ່ງຂອງສົງຄາມຊຶ່ງຈະພັດທະນາຕົວໄປຍິ່ງໆຈົນກຳລັງກອງຫລອນກໍກາຍເປັນກຳລັງທະຫານຫລວງທີ່ສົມ

ບູນແບບແລະເມື່ອຮອດເວລານັ້ນສັດຕູກໍຈະຖືກພິສິດຢ່າງເດັດຂາດ, ໄຊຊະນະເດັດຂາດກໍຈະມີຂຶ້ນໄດ້ໃນສົງຄາມກອງຫລອນນັ້ນ ເຈ ຖືເປັນຄວາມສຳຄັນຍິ່ງແມ່ນນັກຮົບແຕ່ລະຄົນ ເຂົາເວົ້າເພີ່ມເຕີມອີກວ່າ:

"ເຊັ່ນດຽວກັບນາຍທະຫານຊັ້ນນາຍພົນ ຂອງກຳລັງທະຫານຫລວງທີ່ທັນສະໄໝ ຊຶ່ງບໍ່ສົມຄວນຈະລົ້ມຕາຍຕໍ່ໜ້າພົນທະຫານຂອງເຂົາ. ນັກຮົບກອງຫລອນຊຶ່ງເປັນນາຍພົນໄປໃນຕົວນັ້ນ, ກໍບໍ່ຈຳເປັນຈະໃຫ້ລົ້ມຕາຍໃນທຸກໆບັ້ນຮົບດອກ. ເຂົາທຸກຄົນແມ່ນພ້ອມທີ່ຈະເສຍສະຫລະແຕ່ການເສຍສະຫລະນັ້ນແມ່ນມີຜົນດີຫລວງຫລາຍແກ່ສົງຄາມກອງຫລອນຄືນັກຮົບກອງຫລອນທຸກຄົນຕ້ອງພ້ອມທີ່ຈະຕາຍ... ບໍ່ແມ່ນເພື່ອປ້ອງກັນອຸດົມຄະຕິຂອງເຂົາດອກແຕ່ຫາກເພື່ອເຮັດໃຫ້ອຸດົມຄະຕິຂອງເຂົາເປັນຈິງຂຶ້ນມາ!".

ຄຸນສົມບັດແລະຄຸນນະພາບເຫລົ່ານີ້ລະອັນພາໃຫ້ນັກຮົບກອງຫລອນທຸກຄົນດີເລີດດ້ວຍຄວາມສາມາດ, ເຖິງແມ່ນຈະມີຈຳນວນນ້ອຍແຕ່ກໍເປັນຈຳນວນທີ່ເລີດລ້ຳດ້ວຍອະນຸພາບອັນຈະເຮັດໃຫ້ກຳລັງທີ່ເປື່ອຍເຍື່ອຍເຊື່ອຍຊາຫລວງຫລາຍຂອງສັດຕູປະລາໄຊໃນທຸກບັ້ນຮົບ. ກ່ຽວກັບຍຸດທະສາດຂອງສົງຄາມກອງຫລອນນັ້ນ, ເຈ ມີທັດສະນະຫລັກໝັ້ນເດັດດ່ຽວຕາມແບບສະບັບຂອງເຂົາເອງ ເຂົາມີຄວາມເຫັນກ່ຽວກັບເລື່ອງນີ້ວ່າ: "ໃນປະມວນຊັບວິຊາການຂອງສົງຄາມກອງຫລອນນັ້ນ, ຍຸດທະສາດນັ້ນແມ່ນເຂົ້າໃຈວ່າແມ່ນການສຶກສາວິໄຈເປົ້າໝາຍຕ່າງໆໂດຍອີງຕາມສະພາບການທາງທະຫານແລະເຂົ້າໃຈແຈ້ງເສັ້ນທາງທີ່ຈະນຳໄປສູ່ການບັນລຸເປົ້າໝາຍດັ່ງກ່າວ".

"ຖ້າຈະໃຫ້ຖືກຕ້ອງຕາມການຕີລາຄາທາງຍຸດທະສາດຕາມທັດສະນະຂອງໜ່ວຍກອງຫລອນແລ້ວ. ຈຳເປັນທີ່ສຸດຕ້ອງສຶກສາວິໄຈຢ່າງເລິກເຊິ່ງເຖິງພື້ນຖານກ່ຽວກັບແບບວິທີການປະຕິບັດງານຂອງຝ່າຍສັດຕູ. ຖ້າຫາກວ່າເປົ້າໝາຍໃນຂັ້ນສຸດທ້າຍແມ່ນການທຳລາຍດັບສູນກຳລັງຂອງສັດຕູແລ້ວມັນກໍແມ່ນກໍລະນີທີ່ສັດຕູຕ້ອງ

ປະເຊີນກັບສົງຄາມກາງເມືອງແລະພວກເຂົາກໍຈະດຳເນີນການກວາດລ້າງປາບປາມນັກຮົບກອງຫລອນທັນທີ. ກົງກັນຂ້າມນັ້ນນັກຮົບກອງຫລອນຕ້ອງສຶກສາຄົ້ນຄວ້າກ່ຽວກັບກຳລັງດ້ານປັດໄຈຕ່າງໆຂອງພວກເຂົາທີ່ຈະໃຊ້ທຳລາຍພວກເຮົາສິ່ງດັ່ງກ່າວນັ້ນມີກຳລັງທະຫານ, ການເຄື່ອນທີ່, ການອູ້ມຊູຂອງປະຊາຊົນ, ອາວຸດຍຸດໂທປະກອນແລະຄວາມສາມາດໃນການນຳພາຊຶ່ງພວກເຮົາພໍຈະຕີລາຄາໄດ້ ພວກເຮົາຕ້ອງເຮັດໃຫ້ຍຸດທະສາດຂອງພວກເຮົາຖືກແທດເຫມາະສົມກັບສະພາບຕົວຈິງໂດຍອີງຕາມພື້ນຖານການສຶກສາວິໄຈດັ່ງກ່າວແລະຈື່ຈຳຝັງໃຈວ່າເປົ້າຫມາຍຂັ້ນສຸດທ້າຍຂອງພວກເຮົາແມ່ນເຮັດໃຫ້ສັດຕູປະລາໄຊ".

ເຈ ມີຄວາມເຫັນວ່າເປົ້າຫມາຍດ້ານຍຸດທະສາດທັງຫມົດນັ້ນແມ່ນຕ້ອງສຶກສາຄົ້ນຄວ້າໃຫ້ລະອຽດເລິກເຊິ່ງຈົນກະທັ້ງເປົ້າຫມາຍຂັ້ນສຸດທ້າຍກໍຕ້ອງວາງໄວ້ລ່ວງຫນ້າເຖິງແມ່ນວ່າໃນການພັດທະນາຕົວຂອງສົງຄາມໄປເລື້ອຍໆນັ້ນມັນກໍອາດບໍ່ຖືກແທດເຫມາະສົມກໍຕາມແຕ່ເປົ້າຫມາຍອັນນັ້ນກໍຕ້ອງຖືກດັດແປງໃຫ້ຖືກແທດເຫມາະສົມກັບສະພາບຕົວຈິງບໍ່ໄດ້ຂາດ.

ເຂົາຖືວ່າຫນ້າທີ່ສຳຄັນຂອງນັກຮົບກອງຫລອນໃນຕອນເລີ່ມຕົ້ນນັ້ນແມ່ນການຮັກສາຊີວິດຂອງຕົນໃຫ້ລອດພົ້ນຈາກການດັບສູນທຳລາຍ. ຫລັງຈາກນັ້ນພວກເຂົາກໍຈະສ້າງເຄີຍກັບການດຳລົງຊີວິດແບບໃຫມ່ເທື່ອເລັກເທື່ອນ້ອຍແລະມີຄວາມຊຳນິຊຳນານໃນການຫລີກເວັ້ນໄພອັນຕະລາຍຈາກການກວາດລ້າງປາບປາມຕ່າງໆ.

ເມື່ອສາມາດຮັກສາກຳລັງກອງຫລອນບໍ່ໃຫ້ຖືກດັບສູນໄດ້ແລ້ວ, ຄວາມເຂັ້ມແຂງດ້ານຄຸນນະພາບກໍຄືຄວາມສາມາດແມ່ນຈະເພີ່ມພູນຂຶ້ນ, ມັນຈະສະແດງໃຫ້ສັດຕູເຫັນວ່າຫມົດຫົນທາງທີ່ຈະທຳລາຍພວກເຂົາໄດ້, ກຳລັງທີ່ເຕົ້າໂຮມແຂງແກ່ນຂອງກອງຫລອນກໍຈະສາມາດຫັນທິດທາງການໂຈມຕີຂອງສັດຕູແລະເຮັດໃຫ້ສັດຕູອ່ອນແອລົງເລື້ອຍໆ. ກ່ຽວກັບເລື່ອງນີ້ ເຈ ເວົ້າຕື່ມວ່າ:

"ການກຸກກວນແມ່ນຕ້ອງເຮັດໄປເລື້ອຍໆພວກສັດຕູທີ່ຢູ່ໃນວົງລັດສະຫມີເຂດປະຕິ

ບັດງານຂອງເຮົານັ້ນແມ່ນຈະໃຫ້ມັນນອນຫລັບສະບາຍບໍ່ໄດ້... ປ້ອມດ່ານຕ່າງໆຂອງມັນແມ່ນຕ້ອງຖືກໂຈມຕີແລະດັບສູນຢ່າງເປັນລຳດັບ. ບໍ່ວ່າຍາມໃດແມ່ນເຮັດໃຫ້ພວກເຂົາຮູ້ສຶກວ່າຕົນຖືກປິດລ້ອມຢູ່ພໍປານນັ້ນ. ໃນບໍລິເວນປ່າແລະບ່ອນຜີບໍ່ຫອງຄົນບໍ່ຫຽວນັ້ນການກຸກກວນອັນນີ້ແມ່ນຕ້ອງເຮັດທັງກາງເວັນແລະກາງຄືນ, ໃນບໍລິເວນທີ່ໂລ່ງແຈ້ງຊຶ່ງໜ່ວຍລາດຕະເວນຂອງສັດຕູເຂົ້າອອກສະບາຍນັ້ນແມ່ນໃຫ້ດຳເນີນງານພຽງໃນຍາມກາງຄືນເທົ່ານັ້ນ. ເພື່ອຈະເຮັດໄດ້ສິ່ງທັງໝົດນີ້ ຕ້ອງແມ່ນໃຫ້ມີການຕິດແທດພົວພັນອູ້ມຊູຈາກປະຊາຊົນແລະໃຫ້ຮູ້ພື້ນທີ່ຢ່າງລະອຽດຖີ່ຖ້ວນ. ພ້ອມກັນນັ້ນສິ່ງສຳຄັນອີກອັນໜຶ່ງກໍແມ່ນວ່າຜູ້ທີ່ຈະເປັນນັກຮົບກອງຫລອນນັ້ນແມ່ນຕ້ອງມີຄວາມຮັບຮູ້ແລະເຊື່ອໝັ້ນຕາຍໃຈວ່າປະຊາຊົນຕ້ອງມີໄຊໃນບັ້ນປາຍ... ບໍ່ມີກຳລັງໃດໆຈະສາມາດເອົາຊະນະປະຊາຊົນໄດ້". ເມື່ອເວົ້າເຖິງຍຸດທະວິທີຕ່າງໆຂອງສົງຄາມກອງຫລອນນັ້ນ ເຈ ໄດ້ອະທິບາຍວ່າ:

"ໃນຄວາມໝາຍທາງທະຫານນັ້ນ, ຍຸດທະວິທີຕ່າງໆນີ້ ແມ່ນແບບວິທີພາກປະຕິບັດເພື່ອບັນລຸເປົ້າໝາຍໃຫຍ່ທາງຍຸດທະສາດ. ໃນອີກຄວາມໝາຍໜຶ່ງນັ້ນຍຸດທະວິທີນີ້ແມ່ນສິ່ງທີ່ຈະຕື່ມເຕີມໃຫ້ຍຸດທະສາດສົມບູນຍິ່ງຂື້ນແລະໃນອີກດ້ານໜຶ່ງຍຸດທະວິທີນີ້ແມ່ນມີກົດເກນສະເພາະຢູ່ພາຍໃນຕົວຂອງມັນເອງຍິ່ງຂື້ນໃນແງ່ທີ່ວ່າມັນເປັນວິທີການ. ຍຸດທະວິທີແມ່ນມີການປ່ຽນແປງ, ມີຄວາມຄ່ອງແຄ້ວອ່ອນນວນກວ່າເປົ້າໝາຍຂັ້ນສຸດທ້າຍແລະມັນກໍຈະຖືກປັບປຸງໃຫ້ຖືກແທດເໝາະກັບການກະທຳຂອງສັດຕູ".

ລັກສະນະພື້ນຖານຂອງກຳລັງກອງຫລອນນັ້ນ ເຈ ບອກວ່າແມ່ນການເຄື່ອນທີ່ຢ່າງວ່ອງໄວ, ເພາະສິ່ງນີ້ມັນຈະເຮັດໃຫ້ໜ່ວຍກອງຫລອນເຄື່ອນຍ້າຍຈາກຈຸດໂຈມຕີໄປໃຫ້ໄກແສນໄກໃນບໍ່ທໍ່ໃດນາທີແລະຖ້າຫາກຈຳເປັນພຽງໃນເວລາບໍ່ທໍ່ໃດຊົ່ວໂມງນັ້ນພວກເຂົາສາມາດໜີອອກຈາກເຂດໜຶ່ງໆໄດ້ທັງເຮັດໃຫ້ແນວຮົບປ່ຽນໂສມໜ້າໃໝ່ແລະຫລີກເວັ້ນຈາກການປິດລ້ອມຕ່າງໆໄດ້ເປັນຢ່າງດີ.

"ການເຄື່ອນທີ່ໃນຕອນກາງຄືນກໍແມ່ນຄຸນລັກສະນະສຳຄັນອີກປະການໜຶ່ງຂອງໜ່ວຍກອງຫລອນຊຶ່ງສາມາດພາໄປສູ່ຈຸດໝາຍທີ່ຈະໂຈມຕີໄດ້ລ່ວງໜ້າແລະເມື່ອມີອັນຕະລາຍຈາກການພັກຫລັງທີ່ລະຍຶດເກີດຂຶ້ນກໍຈະໄດ້ເຄື່ອນຍ້າຍໄປທີ່ແຫ່ງໃໝ່ໄດ້".

ຍ້ອນວ່າໜ່ວຍກອງຫລອນມີກຳລັງນ້ອຍກວ່ານັ້ນລະພວກເຂົາຈຶ່ງຕ້ອງໂຈມຕີແບບບໍ່ໃຫ້ຮູ້ສຶກຕົວ. ປະໂຫຍດໃຫຍ່ຫລວງທີ່ໄດ້ຮັບກໍຄືນັກຮົບກອງຫລອນສາມາດນຳຄວາມເສຍຫາຍໃຫ້ແກ່ສັດຕູໄດ້ໂດຍປັດສະຈາກຄວາມເສຍຫາຍ. ໃນການຕໍ່ສູ້ລະຫວ່າງຝ່າຍໜຶ່ງຊຶ່ງມີຄົນຮ້ອຍຄົນກັບຝ່າຍໜຶ່ງຊຶ່ງມີຄົນພຽງສິບຄົນສະນັ້ນຄວາມເສຍຫາຍລະຫວ່າງສອງຝ່າຍນັ້ນຈະເອົາມາປຽບທຽບກັນບໍ່ໄດ້ເມື່ອແຕ່ລະຝ່າຍມີຄົນຕາຍເກີດຂຶ້ນ.

"ເມື່ອຝ່າຍສັດຕູມີຄວາມເສຍຫາຍກໍອາດທົດແທນໄດ້ແລະກໍຈະມີຜົນກະທົບກະເທືອນພຽງໜຶ່ງສ່ວນຮ້ອຍເທົ່ານັ້ນແຕ່ສຳລັບໜ່ວຍກອງຫລອນນັ້ນແມ່ນຈະຕ້ອງອາໄສເວລາດົນນານເພື່ອຈະຊອກຄົນຜູ້ໜຶ່ງມາທົດແທນຜູ້ທີ່ສູນເສຍໄປຜູ້ໜຶ່ງນັກຮົບຜູ້ມີຄວາມສາມາດດີເດັ່ນ ກໍມັກເສຍຊີວິດລວມຢູ່ດ້ວຍແລະນັ້ນກໍໃຫ້ຄວາມກະທົບກະເທືອນເຖິງສິບສ່ວນຮ້ອຍຂອງກອງກຳລັງ".

ໜ້າທີ່ສຳຄັນຂັ້ນຕໍ່ມາອີກຂອງນັກຮົບກອງຫລອນກໍແມ່ນວ່າເມື່ອເພື່ອນຮ່ວມຮົບຜູ້ໜຶ່ງລົ້ມຕາຍລົງ, ເຮົາຈະຕ້ອງເອົາປັດໄຈສຳຄັນໃນການຕໍ່ສູ້ນີ້ກັບຄືນມາໃຫ້ໄດ້ແລະນອກນັ້ນປືນແລະກະສຸນຂອງນັກຮົບທີ່ເສຍຊີວິດກໍຕ້ອງເອົາຄືນມາໃຫ້ໝົດ.

ຄວາມສຳຄັນອີກປະການໜຶ່ງນັ້ນກໍແມ່ນການຮັກສາກະສຸນໃຫ້ດີ, ພ້ອມດ້ວຍການໃຊ້ກໍແມ່ນໃຫ້ເປັນປະໂຫຍດທີ່ສຸດ. ເຈ ໄດ້ເວົ້າເຖິງວິທີສັງເກດສຽງປືນໄວ້ວ່າ: "ໃນການຕໍ່ສູ້ລະຫວ່າງທະຫານກອງທັບກັບໜ່ວຍກອງຫລອນເຮົາສາມາດສັງເກດໄດ້ວ່າສຽງປືນທີ່ລັ່ນອອກມານັ້ນແມ່ນຂອງຝ່າຍໃດ... ການຍິງແບບຫູດັບຕັບໄໝ້ນັ້ນແມ່ນລັກສະນະຂອງສັດຕູແລະການຍິງແບບປະຫຍັດແຕ່ຖືກເປົ້າໝາຍນັ້ນແມ່ນຂອງໜ່ວຍກອງຫລອນ. ແຕ່ກໍມີກໍລະນີພິເສດເມື່ອຄາວຈຳເປັນຕ້ອງໃຊ້ກະສຸນຢ່າງ



ຫລວງຫລາຍເຊັ່ນວ່າ ການຍິງສະກັດກັ້ນການຕິດຕາມຂອງສັດຕູ, ຍິງປ້ອງກັນຈຸດສຳຄັນອື່ນໆນັ້ນພວກເຮົາກໍຫລີກເວັ້ນການປະຫຍັດບໍ່ໄດ້ຄືກັນ".

ເມື່ອເວົ້າເຖິງນັກຮົບກອງຫລອນໃນຖານະນັກປະຕິຮູບສັງຄົມນັ້ນ ເຈ ມີຄວາມເຫັນດັ່ງນີ້: "ນັກຮົບກອງຫລອນນັ້ນແມ່ນຜູ້ໃຝ່ຝັນຫາອິດສະຫລະພາບເຊັ່ນດຽວກັບປະຊາຊົນທົ່ວໄປ... ແລະກໍແມ່ນເຂົາເປັນຜູ້ເລີ່ມດຳເນີນການຕໍ່ສູ້ດ້ວຍກຳລັງອາວຸດ, ສະຖາປະນາຕົວເອງເປັນແນວໜ້າປະກອບອາວຸດຂອງປະຊາຊົນທີ່ດຳເນີນການຕໍ່ສູ້ແບບຮຸນແຮງ ພາຍຫລັງທີ່ເຄີຍຕໍ່ສູ້ແບບສັນຕິວິທີ, ແບບການເມືອງມາກ່ອນແລ້ວ... ຈາກຈຸດເບື້ອງຕົ້ນຂອງການຕໍ່ສູ້ນັ້ນເຂົາມີຄວາມຕັ້ງໃຈທີ່ຈະທັບມ້າງຄຳສັ່ງທີ່ບໍ່ເປັນທຳແຕ່ຕໍ່ມາກໍປ່ຽນແນວຄິດມາເປັນການປ່ຽນແປງລົບລ້າງສິ່ງເກົ່າໆດ້ວຍສິ່ງໃໝ່ໆ".

ແຕ່ເມື່ອມາເບິ່ງສະພາບການເປັນຢູ່ແລ້ວແມ່ນປະເທດດ້ອຍພັດທະນາ, ແມ່ນທ້ອງຖິ່ນຫລ້າຫລັງເປັນເບົ້າຫລໍ່ຫລອມແນວຄິດແຫ່ງການຕໍ່ສູ້ຂອງພວກເຮົາ, ເມື່ອເປັນແນວນັ້ນໃນໄລຍະແຫ່ງການຕໍ່ສູ້ໄລຍະນີ້ພວກເຮົາຕ້ອງຊູຄຳຂວັນການປະຕິຮູບທີ່ດິນ.

ການກໍ່ສ້າງໂຄງຮ່າງຂອງສັງຄົມກໍແມ່ນການປ່ຽນແປງກ່ຽວກັບກຳມະສິດທີ່ດິນນັ້ນເອງ".

"ນັກຮົບກອງຫລອນ, ໃນຖານະນັກປະຕິຮູບສັງຄົມນັ້ນບໍ່ແມ່ນພຽງແຕ່ຈະເປັນຕົວຢ່າງໃນຊີວິດຕົວຈິງສຳລັບປະຊາຊົນເທົ່ານັ້ນແຕ່ຍັງຕ້ອງອົບຮົມແນວຄິດການເມືອງພ້ອມແນະນຳຊີ້ແຈ້ງເທົ່າທີ່ເຂົາຮູ້ແລະສິ່ງທີ່ເຂົາປາຖະ ໜາຈະເຮັດເມື່ອເຖິງເວລາອັນຄວນ, ເຂົາຈະຕ້ອງເຮັດໃຫ້ສິ່ງທີ່ເຂົາຮຽນມານັ້ນ ເກີດເປັນປະໂຫຍດ. ເມື່ອສົງຄາມດຳເນີນໄປເປັນເດືອນເປັນປີເຮັດໃຫ້ທຸກຄົນເຊື່ອໝັ້ນໃນການຕໍ່ສູ້ຍິ່ງຂຶ້ນມັນກໍເຮັດໃຫ້ເຂົາມີຄວາມຮຸນແຮງດຸເດືອດຍິ່ງຂຶ້ນ".

"ເມື່ອອາວຸດຊຶ່ງພວກເຂົາໃຊ້ມີປະສິດທິພາບຫລາຍຂຶ້ນ... ໃນຂະນະດຽວກັນຄວາມຫວັງຂອງປະຊາຊົນກໍກາຍເປັນສ່ວນໜຶ່ງຂອງແນວຄິດຈິດໃຈຂອງເຂົາແລະໃນຂະນະທີ່ເຂົາໄດ້ເຂົ້າເຖິງຄວາມຍຸຕິທຳແລະຄວາມຈຳເປັນຢ່າງຍິ່ງໃນລະດັບຂັ້ນຕ່າງໆຂອງການປ່ຽນແປງຊຶ່ງເຂົາຮູ້ດີເຖິງຄວາມສຳຄັນຂອງມັນໃນທາງທິດສະດີມາແລ້ວແຕ່ບໍ່ໄດ້ປະຕິບັດກັນຢ່າງຈິງຈັງທັນທີທັນໃດ".

ສຳລັບຄວາມພົວພັນທາງສັງຄົມນັ້ນ ເຈ ເຫັນວ່າມັນຈະຕ້ອງປ່ຽນໄປຕາມການເຕີບໃຫຍ່ຂະຫຍາຍຕົວຂອງສົງຄາມ, ແຕ່ໃນຕອນເລີ່ມຕົ້ນ, ຄວາມພະຍາຍາມທີ່ຈະປ່ຽນແປງກົດລະບຽບໃດໆແມ່ນອາດເປັນໄປບໍ່ໄດ້... ເຂົາ ເວົ້າຕໍ່ໄປດັ່ງນີ້: "ຊາວນາຈະຕ້ອງໄດ້ຮັບການຊ່ວຍເຫລືອທາງດ້ານວິທະຍາການ, ດ້ານເຕັກນິກ, ດ້ານສິນທຳແລະວັດທະນະທຳ. ນັກຮົບກອງຫລອນຕ້ອງເປັນສະເໝືອນພະເຈົ້າອົງໜຶ່ງທີ່ລົງມາໃນບໍລິເວນແຖບນີ້ເພື່ອຊ່ວຍເຫລືອຄົນທຸກແລະກໍ່ກວນຄວາມສຸກຂອງຄົນຮັ່ງເທື່ອລະເລັກເທື່ອລະນ້ອຍໃນຕອນຕົ້ນຂອງສົງຄາມນີ້ຖ້າເປັນໄປໄດ້, ແຕ່ສົງຄາມອັນນີ້ຈະຕ້ອງດຳເນີນໄປຕາມເສັ້ນທາງຂອງມັນຢ່າງບໍ່ຢຸດຢັ້ງຄວາມຂັດແຍ່ງຈະຮຸນແຮງຂຶ້ນເລື້ອຍໆ, ຈຸດເດືອດຈະມາເຖິງເມື່ອຜູ້ມີສັດທາໃນການປະຕິວັດໃນຕອນຕົ້ນນັ້ນຕີໂຕເຂົ້າມາເຮັດການປະຕິວັດຢ່າງຈິງຈັງກາຍເປັນຜູ້ຕໍ່ຕ້ານທີ່ເຂັ້ມແຂງຢ່າງເດັດດ່ຽວ

ແລະພວກເຂົາກໍຈະຄຽງບ່າຄຽງໄຫລ່ ປະຊາຊົນໃນການຕໍ່ສູ້ . ໃນໄລຍະດັ່ງກ່າວນັກຮົບກອງຫລອນຕ້ອງຮັບພາລະໜ້າທີ່ແບກຫາບຄວາມຮັບຜິດຊອບຕໍ່ປະຊາຊົນ, ລົງໂທດຜູ້ທໍລະຍົດຢ່າງຍຸຕິທໍາເລື່ອງກໍາມະສິດໃນຊັບສິນສ່ວນຕົວນັ້ນຕ້ອງອີງໃສ່ຄວາມຮຽກຮ້ອງຕ້ອງການຂອງສັງຄົມທີ່ພວກເຂົາເປັນຢູ່ຄືຕົວຢ່າງຜູ້ມີດິນແລະສັດລ້ຽງຫລາຍເກີນຂອບເຂດທີ່ຈໍາເປັນສໍາລັບການດໍາລົງຊີວິດປະຈໍາວັນຢ່າງອີ່ມໜໍາສໍາລານນັ້ນຈໍາເປັນຕ້ອງຢຶດເປັນຂອງສ່ວນລວມແລ້ວແບ່ງປັນໃຫ້ປະຊາຊົນຢ່າງສະເໝີພາບກັນແລະສົມຄວນທີ່ສຸດຕ້ອງໃຫ້ຄ່າຕອບແທນແກ່ຜູ້ທີ່ມອບຊັບສິນສ່ວນຕົວເປັນປະໂຫຍດແກ່ສັງຄົມ".

ພໍກ້າວມາເຖິງຂໍ້ທີ່ວ່ານັກຮົບກອງຫລອນໃນຖານະນັກຕໍ່ສູ້ນັ້ນ ເຈ ໄດ້ໃຫ້ຄວາມຄິດຄວາມເຫັນດີເດັ່ນຫລາຍອັນ. ເຂົາບອກວ່າ... ຊີວິດແລະວຽກງານຂອງນັກຮົບກອງຫລອນນັ້ນຖ້າຈະເວົ້າທົ່ວໄປແລ້ວຕ້ອງປະກອບດ້ວຍຄຸນສົມບັດທາງຮ່າງກາຍ, ມັນສະໝອງແລະທາງສິນທໍາເປັນລໍາດັບກັນໄປ. ທັງນີ້ກໍເພື່ອປັບໂຕໃຫ້ເຂົ້າກັບສະພາບທີ່ເປັນຢູ່ແລະເຮັດຫລ້ອນທຸກໜ້າທີ່ຊື່ງຖືກມອບໝາຍໃຫ້. ຕໍ່ຄໍາຖາມທີ່ວ່ານັກຮົບກອງຫລອນຄວນເປັນຄົນປະເພດໃດ? ເຈ ໄດ້ຕອບເປັນຄໍາທໍາອິດວ່າ... ຕ້ອງເປັນຄົນທີ່ອາໄສຢູ່ໃນແຖບນັ້ນ, ເພື່ອຈະໄດ້ມີຜູ້ຊິດຊ່ວຍເຫືອກູນແລະເຂົາຈະຮູ້ພູມີປະເທດເຂດນັ້ນລະອຽດດີ.

"ນັກຮົບກອງຫລອນຕ້ອງແມ່ນນັກຕໍ່ສູ້ຜູ້ມີຄວາມສາມາດໃນຍາມກາງຄືນໄດ້ດີແລະເຂົາຕ້ອງມີຄຸນສົມບັດພິເສດສາມາດສະໜອງຄວາມຕ້ອງການຂອງການຕໍ່ສູ້, ເຂົາຕ້ອງມີຄວາມຫລັກແຫລມແລະມີຄວາມສາມາດເດີນທາງຜ່ານທົ່ງຮາບຫລືພູດອຍເພື່ອໂຈມຕີສັດຕູຢ່າງບໍ່ໃຫ້ຮູ້ສຶກຕົວແລະໃຫ້ເຫັນແຈ້ງຄວາມສໍາຄັນຂອງການປະກົດຕົວຢ່າງທີ່ສັດຕູບໍ່ຄາດຄິດ, ເຂົາຕ້ອງດໍາເນີນການຕໍ່ສູ້ຕໍ່ໄປເລື້ອຍໆໂດຍບໍ່ປ່ອຍຊ່ອງຫວ່າງໃຫ້ສັດຕູເຫັນຈຸດອ່ອນທາງຝ່າຍຕົນແລະຮູ້ຈັກສວຍໂອກາດໃນລັກສະນະທີ່ເປັນຈຸດອ່ອນສ່ວນຕ່າງໆຂອງສັດຕູ... ການໂຈມຕີກໍໃຫ້ຄືກັບລົມພາຍຸ, ຄືລົມຫົວ

ກຸດຫົວຂາດທີ່ທຳລາຍທຸກສິ່ງທຸກຢ່າງ, ບໍ່ປ່ອຍໃຫ້ສິ່ງໃດເຫລືອຄ້າງຄາໄວ້ນອກເໜືອໄປຈາກສະພາບການດ້ານຍຸດທະວິທີທີ່ຈຳເປັນແກ່ການຕັດສິນຜູ້ຕ້ອງຫາຢ່າງໃດກໍດີ, ເຂົາຕ້ອງເຮັດກັບສະເລີຍເສິກເໜືອນນັກບຸນຜູ້ໜຶ່ງແລະເຄົາຣົບສົບຜູ້ເສຍສະຫລະ. ທະຫານສັດຕູທີ່ຖືກບາດເຈັບຕ້ອງໄດ້ຮັບການປິ່ນປົວເປັນຢ່າງດີ, ພວກສະເລີຍທີ່ບໍ່ມີໂທດກຳໃຫຍ່ຫລວງແມ່ນຕ້ອງຖືກປ່ອຍໂຕໄປພາຍຫລັງທີ່ໄດ້ຮັບການອົບຮົມແລ້ວ... ການກັກກຸມຄຸມຂັງສະເລີຍໄວ້ນັ້ນແມ່ນອັນຕະລາຍທີ່ສຸດຕາບໃດເຮົາບໍ່ມີທີ່ໝັ້ນແຂງແກ່ນຈົນວ່າສັດຕູຕີບໍ່ແຕກ... ນອກຈາກສະເລີຍທີ່ຂັງໄວ້ນັ້ນຈະເປັນໄພແກ່ພວກເຮົາແລ້ວກໍຍັງເປັນໄພຕໍ່ປະຊາຊົນໃນເຂດຍຶດຄອງຂອງພວກເຮົາຕື່ມອີກເພາະເຂົາຈະເອົາລາຍລະອຽດຕ່າງໆໄປລາຍງານຕໍ່ສັດຕູເມື່ອຖືກປ່ອຍໂຕໄປ, ນັກຮົບກອງຫລອນທຸກຄົນແມ່ນພ້ອມທີ່ຈະເສຍສະຫລະ, ການປະກົດຕົວທີ່ບໍ່ຈຳເປັນນັ້ນຄວນງົດເວັ້ນ. ອີກປະການໜຶ່ງແມ່ນລະວັງທີ່ສຸດບໍ່ໃຫ້ຖືກປິດລ້ອມ ເພາະນອກຈາກຈະພາໃຫ້ສູນເສຍນັກຮົບແລ້ວ, ມັນຍັງຈະເຮັດໃຫ້ເສຍຂວັນອ່ອນກຳລັງໃຈແກ່ຜູ້ທີ່ເຫລືອຕື່ມອີກ. ການຮັກສາຄວາມລັບນັ້ນແມ່ນຖືວ່າເປັນບັນຫາສຳຄັນຄືກັນ".

ກ່ຽວກັບຄຸນສົມບັດທາງດ້ານຮ່າງກາຍນັ້ນ, ເຈ ມີຄວາມເຫັນວ່າ: "ນັກຮົບກອງຫລອນຈະຕ້ອງເປັນຄົນບໍ່ເມື່ອຍໄວ, ເຖິງຈະອິດເມື່ອຍອ່ອນເພຍສຸດຂີດແລ້ວກໍຕາມເຂົາກໍຕ້ອງມີຄວາມສາມາດບຸກບືນໄປໄດ້ອີກຄັ້ງໜຶ່ງ. ຄວາມເຊື່ອໝັ້ນຕົວເອງຂອງເຂົາຢ່າງເລິກເຊິ່ງນັ້ນຕ້ອງສະແດງອາການອອກມາໃນສີໜ້າ, ເຂົາຕ້ອງສາມາດສູ້ຊົນທົນທານຈົນໄປຮອດເປົ້າໝາຍຊຶ່ງຫົວໜ້າກຳນົດໄວ້. ນັກຮົບກອງຫລອນຕ້ອງມີຄວາມອົດທົນແໜ້ນໜາຮອທີ່ສຸດຕໍ່ຄວາມ ຫຍຸ້ງຍາກນາງປະການເຊັ່ນທົນຕໍ່ການອົດອາຫານ, ອົດນ້ຳ, ຂາດບ່ອນພັກພາອາໄສປົກກະຕິ, ຮ້າຍແຮງໄປກວ່ານັ້ນແມ່ນທົນທານຕໍ່ໂລກໄພໄຂ້ເຈັບຫລືບາດແຜຊຶ່ງຕ້ອງຮັກສາກັນຕາມທຳມະຊາດປັດສະຈາກການຊ່ວຍເຫລືອຈາກໝໍຜ່າຕັດຄົນໃດ. ເພາະຂືນໄປຫ່ຽວຊອກປົວໂຕໃນບ້ານຄົນຢູ່ນັ້ນກໍອາດຖືກສັດຕູຄຸບຄໍທັນທີ".



ເຈ ມີຄວາມເຫັນຕະຫລອດໄລຍະແຫ່ງການດຳລົງຊີວິດແບບນັກຮົບກອງຫລອນ, ເຫດການທີ່ໜ້າສົນໃຈທີ່ສຸດອັນຈະເພີ່ມລົດຊາດແລະຄວາມມ່ວນຊື່ນຕື່ນເຕັ້ນໃນແຕ່ລະກ້າວຂອງຊີວິດກໍຄືການຕໍ່ສູ້... ສົງຄາມ! ນອກຈາກ ນັ້ນແລ້ວການຮ່ວມດຳລົງຊີວິດແບບຊັດເຊພະເນຈອນຂອງນັກຮົບກອງຫລອນແຕ່ລະຄົນນັ້ນ, ນອກຈາກມັນຈະເຮັດໃຫ້ແຕ່ລະສະຫາຍຮັກແພງເຂົ້າໃຈກັນດີແລ້ວ, ມັນກໍອາດເກີດມີສັດຕູຄູ່ອາຄາດຢູ່ໃນກຸ່ມກໍເປັນໄປໄດ້ຖ້າບໍ່ມີການແກ້ໄຂຢ່າງຖືກຕ້ອງເໝາະສົມ. ຍ້ອນແນວນັ້ນ, ໃນໄລຍະເລີ່ມຕົ້ນນັ້ນການສຶກສາອົບຮົມເຖິງເປົ້າໝາຍທາງສັງຄົມຂອງການຕໍ່ສູ້ແມ່ນມີຄວາມສຳຄັນຍິ່ງ, ນອກນັ້ນການຊຸບຫລໍ່ຂວັນນັກຮົບໃຫ້ກ້າແກ່ນແຫນ້ນຫນຽວກໍ່ຈຳເປັນຄືກັນ.

ຕົວຢ່າງຂອງຜູ້ເສຍສະລະຜູ້ດີເດັ່ນນັ້ນ, ຜູ້ເປັນຫົວໜ້າຕ້ອງຍົກຂຶ້ນມາເວົ້າແລະສຳຄັນທີ່ສຸດການເລື່ອນຍົດເລື່ອນຊັ້ນກໍໃຫ້ອີງໃສ່ຄວາມກ້າຫານຄວາມສາມາດແລະຈິດໃຈເສຍສະຫລະ. ນັກຮົບກອງຫລອນນີ້ບໍ່ແມ່ນສະເພາະເຈາະຈົງໃສ່ແຕ່ຜູ້ຊາຍເທົ່ານັ້ນ,

ແມ່ຍິງກໍມີບົດບາດສຳຄັນທີ່ສຸດຄືກັນ. ກ່ຽວກັບເລື່ອງນີ້ ເຈ ໄດ້ເວົ້າໄດ້ວ່າ: "ແມ່ຍິງມີຄວາມສາມາດໃນການເຮັດວຽກທີ່ຫຍຸ້ງຍາກລຳບາກໄດ້ຄືກັນເຂົາສາມາດຕໍ່ສູ້ຄຽງບ່າຄຽງໄຫລ່ຜູ້ຊາຍໄດ້. ບັນຫາເລື່ອງເພດຈະບໍ່ເປັນຂໍ້ຫຍຸ້ງຍາກໃດໆໝົດ. ໃນຊີວິດຂອງນັກຮົບທີ່ແສນທໍລະມານ, ຜູ້ຍິງໄດ້ເປັນເພື່ອນຮ່ວມທາງທີ່ໄດ້ນຳເອົາຄຸນສົມບັດທີ່ສົມກັບເພດຂອງເຂົາໄປນຳ, ແຕ່ເຂົາກໍສາມາດເຮັດວຽກຄືກັບຜູ້ຊາຍ, ເຂົາອາດຈະອ່ອນແອກວ່າແຕ່ກໍບໍ່ໝາຍຄວາມວ່າເຂົາບໍ່ມີຄວາມອົດທົນສ່ຳຜູ້ຊາຍເຂົາສາມາດຕໍ່ສູ້ຄືດຽວກັບຜູ້ຊາຍໃນເວລາທີ່ກຳນົດໃຫ້. ວຽກງານສຳຄັນໆທີ່ນັກຮົບຍິງສາມາດເຮັດໄດ້ດີອີກກໍມີຄືການສືບຄວາມລັບ, ການສົ່ງຂ່າວຄາວ, ການເປັນແມ່ຄົວ, ເປັນຄູປະຊາສຶກສາ, ເປັນຜູ້ເຜີຍແຜ່ແນວຄິດການເມືອງ, ເປັນນາງພະຍາບານ, ຈົນເຖິງຂັ້ນໜ່ວຍກອງຫລອນມີເຂດທີ່ໝັ້ນມີໂຮງງານອຸດສະຫະກຳນ້ອຍຕ່າງໆເພື່ອສະໜອງຄວາມຕ້ອງການດ້ານວັດຖຸຕ່າງໆເຊັ່ນ: ຜ້າແພ, ເກີບ, ກະສຸນປືນ, ສະບຽງອາຫານແລະອື່ນໆຜູ້ຍິງກໍສາມາດເປັນກຳມະກອນໃນໂຮງງານໄດ້ດີທີ່ສຸດ".

ນອກຈາກການສູ້ຮົບຕ່າງໆແລ້ວ ເຈ ຍັງເຫັນວ່າການກໍ່ວິນາດສະກຳມີຄວາມສຳຄັນຫລາຍທີ່ສຸດ, ອັນນີ້ກໍແມ່ນອາວຸດໃນການທຳລາຍເຄື່ອງມືຂອງກຸ່ມກຳອຳນາດໃຫ້ເປັນອຳມະພາດ ແລະສ້າງຄວາມວຸ້ນວາຍແກ່ຝ່າຍສັດຕູ ເຊັ່ນວ່າການທຳລາຍເສັ້ນທາງ, ຂົວ, ໂຮງຈັກໂຮງງານແລະສະຖານທີ່ຕ່າງໆເຂົາຖືວ່າການກໍ່ວິນາດສະກຳນີ້ມີ 2 ຊະນິດຄື: ການກໍ່ວິນາດສະກຳໃນລະດັບຊາດແລະໃນລະດັບທ້ອງຖິ່ນ. ການກໍ່ວິນາດສະກຳລະດັບຊາດມີເປົ້າໝາຍໃຫຍ່ຢູ່ທີ່ການທຳລາຍເສັ້ນທາງຄົມມະນາຄົມ, ສ່ວນລະດັບທ້ອງຖິ່ນນັ້ນແມ່ນກະທຳຕໍ່ເສັ້ນທາງໃນການສູ້ຮົບ. ນອກຈາກຫລັກການທົ່ວໄປພ້ອມທັງຍຸດທະສາດ, ຍຸດທະວິທີຕ່າງໆແລ້ວທິດສະດີສົງຄາມກອງຫລອນຂອງ ເຈ ກໍໄດ້ໃຫ້ລາຍລະອຽດຕ່າງໆກ່ຽວແກ່ການຈັດຕັ້ງ,ການສ້າງໂຮງງານອຸດສະຫະກຳຂະໜາດນ້ອຍໃນເຂດຍຶດຄອງ, ຕະຫລອດຮອດວຽກງານການປຸກລະດົມອົບຮົມແນວຄິດທິດສະດີແກ່ໝູ່ປະຊາຊົນ, ລົງເລິກໄປກວ່ານັ້ນທິດສະດີ



ຂອງ ເຈ ຍັງໄດ້ແນບນຳເຖິງຄຸນລັກສະນະຂອງນັກຮົບທີ່ດີ, ຕະຫລອດຮອດການດຳລົງຊີວິດແບບອັດຕະຄັດໃນປ່າ, (ການສືບຄວາມລັບ)ແລະການແນະນຳເລື່ອງເຄື່ອງສຳພາລະອັນຈຳເປັນໃນຊີວິດປະຈຳວັນ ໆລໆ... ສິ່ງສຳຄັນອີກປະການໜຶ່ງນັ້ນແມ່ນບັນຫາການປະຕິວັດແນວຄິດເຂົາເຫັນວ່າແນວຄິດໃນການປະຕິວັດນັ້ນກໍຕ້ອງແຜ່ຂະຫຍາຍໄປຢ່າງກວ້າງຂວາງເທົ່າທີ່ຊິເປັນໄປໄດ້. ການເຜີຍແຜ່ນັ້ນແມ່ນຕ້ອງອີງໃສ່ພະນັກງານສອງປະເພດ. ປະເພດໜຶ່ງແມ່ນພະນັກງານພົນລະເຮືອນທີ່ປຸກລະດົມນອກເຂດປົດປ່ອຍສ່ວນປະເພດສອງແມ່ນພະນັກງານນັກຮົບຊຶ່ງດຳເນີນວຽກງານໃນເຂດປົດປ່ອຍ.

"ສົງຄາມກອງຫລອນຈະຕ້ອງດຳເນີນໄປຕາມກົດເກນຊຶ່ງອຳນາດມາຈາກກົດເກນທົ່ວໄປຂອງສົງຄາມທຳມະດາຫລືມີລັກສະນະພິເສດໃນຕົວຂອງມັນເອງແຕ່ຖ້າຫາກມີຄວາມຕັ້ງໃຈທີ່ຈະເລີ່ມການຕໍ່ສູ້ທີ່ນອກປະເທດຫລືໃນຊົນນະບົດພາຍໃນປະເທດມັນກໍຕ້ອງເລີ່ມຈາກການເຄື່ອນໄຫວຂອງກຸ່ມນ້ອຍໆທີ່ມີການວາງແຜນເປັນຢ່າງດີໂດຍທີ່ສະມາຊິກບໍ່ໄດ້ຮັບການເປີດເຜີຍຕົວ. ແນ່ນອນການເຄື່ອນໄຫວໃນບັ້ນຕົ້ນຈະບໍ່ໄດ້ຮັບການສະໜັບສະໜູນອູ້ມຊູຈາກມວນຊົນແລະກຳລັງພົນຂັ້ນຕົ້ນກໍມີພຽງ 30 ຫາ 50 ຄົນ ແຕ່ກໍເຫັນພຽງພໍແລ້ວທີ່ຈະເລີ່ມສົງຄາມກອງຫລອນ. ການໃຊ້ປືນກໍຕ້ອງໃຫ້ເປັນຊະນິດດຽວກັບຂອງສັດຕູເພື່ອສະດວກໃນການຫາກະສຸນ. ນອກຈາກນັກຮົບຈະມີອຸດົມການມີສິນ ທຳອັນດີເລີດແລ້ວເຂົາຕ້ອງມີຮ່າງກາຍທີ່ເຂັ້ມແຂງໜັ້ນໜຽວທີ່ສຸດ. ໂດຍທຳມະຊາດແລ້ວໄຊຊະນະຄັ້ງສຸດທ້າຍນັ້ນບໍ່ແມ່ນໄຊຊະນະທີ່ແທ້

ຈິງ. ໄຊຊະນະທີ່ແທ້ຈິງນັ້ນຈະເກີດຂຶ້ນໄດ້ກໍຕໍ່ເມື່ອກອງທັບຂອງສັດຕູຖືກທຳລາຍລົງຢ່າງງ່າຍດາຍ ພ້ອມດຽວກັນອຳນາດການປົກຄອງຕ່າງໆຂອງລະບອບຂູດຮີດກໍຕ້ອງຖືກໂຄ່ນລົ້ມຫມົດກ້ຽງ. ການເຝິກສອນທິດສະດີປະຕິວັດແລະອຸດົມການແກ່ນັກຮົບ, ແກ່ປະຊາຊົນນັ້ນຄືພື້ນຖານທີ່ສຳຄັນແກ່ຄວາມປອດໄພຂອງຊາດທັງໃນໄລຍະສັ້ນແລະໄລຍະຍາວ. ທີ່ກ່າວມາແລ້ວນັ້ນເປັນການອະທິບາຍທັດສະນະຂອງຜູ້ບັງຄັບບັນຊາດ້ວຍຄວາມເຄົາຣົບຕໍ່ນະໂຍບາຍທີ່ຖືກປະຕິບັດໃນສະພາບການຂອງປະເທດກູບາມາແລ້ວແລະຊີ້ໃຫ້ເຫັນໄພອັນຕະລາຍຈາກການຮຸກຮານຂອງຕ່າງຊາດ, ຈາກສະພາບການຂອງໂລກຍຸກໃຫມ່ໃນປາຍປີ 1959 ຫາຕົ້ນປີ 1960, ມັນຊີ້ໃຫ້ເຫັນສັດຕູຕະຫລອດຮອດການວິເຄາະແລະຕີລາຄາຢ່າງຮອບຄອບແລະບໍ່ເກງກົວສິ່ງໃດ, ເວົ້າອີກຢ່າງຫນຶ່ງກໍຄືເຮົາບໍ່ແມ່ນພວມສ້າງທິດສະດີສຳລັບແນະນຳປະເທດອື່ນໆກ່ຽວກັບສິ່ງທີ່ເຮັດມາແລ້ວ, ແຕ່ເຮົາກຳລັງສ້າງທິດສະດີທີ່ໄດ້ເຮັດມາແລ້ວໂດຍປະເທດອື່ນໆເພື່ອນຳມາຫມູນໃຊ້. ໃນການປ້ອງກັນຊາດຂອງພວກເຮົາເອງ".

10

ນັກທິດສະດີປະຕິວັດ

"ໃນການປະຕິວັດທີ່ແທ້ຈິງທຸກຄົນຕ້ອງຍອມຮັບວ່າແມ່ນບ່ອນຊຶ່ງພວກເຮົາເສຍສະຫລະທຸກສິ່ງທຸກຢ່າງໂດຍບໍ່ຫວັງ, ບໍ່ຄອງຄອຍໃນສິ່ງຕອບແທນດ້ານວັດຖຸອັນໃດທັງນັ້ນ. ເມື່ອເປັນແນວນັ້ນຈຸດຍືນຂອງນັກປະຕິວັດຊັ້ນແນວໜ້າຈຶ່ງຈະສະຫງ່າງາມແລະໜ້າເຫລື້ອມໃສທີ່ສຸດ. ຖ້າໃຜຜູ້ໜຶ່ງຫາກຕັດສິນໃຈທີ່ຈະອຸທິດຕົນເພື່ອການປະຕິວັດແລ້ວ, ເຂົາຈະບໍ່ໄດ້ຮັບອະນຸຍາດໃຫ້ຫຍຸ້ງກ່ຽວນຳວັດຖຸອັນໃດອັນໜຶ່ງຊຶ່ງລູກຊາຍຢາກໄດ້, ເຂົາຈະຕ້ອງບໍ່ກັງວົນສົນໃຈວ່າເມຍຈະນຸ່ງສິ້ນຂາດໜ້າຜ້າຂາດຫລັງ. ບໍ່ຫ່ວງວ່າເກີບລູກຈະເກົ່າ, ຈະຂາດ. ບໍ່ຫ່ວງວ່າຄອບຄົວຈະຂາດເຂີນເຄື່ອງໃຊ້ໄມ້ສອຍແນວໃດກໍຕາມ. ຖ້າບໍ່ດັ່ງນັ້ນເຂົາກໍຈະປ່ອຍຊ່ອງວ່າງໃຫ້ເບັ້ຍຂອງການສໍ້ໂກງຄວາມໂລບມາກແຕກໜໍ່ກໍ່ແໜງຂຶ້ນໃນສະໝອງຂອງເຂົາ. ນັກປະຕິວັດທີ່ແທ້ຈິງແມ່ນຕ້ອງຕົກຢູ່ພາຍໃຕ້ອຳນາດອັນຍິ່ງໃຫຍ່ທີ່ສຸດຂອງຄວາມຮັກ. ນັກປະຕິວັດຊັ້ນແນວໜ້າພວກເຮົາຕ້ອງກໍ່ສ້າງແນວຄິດທີ່ເຕັມປ່ຽມດ້ວຍຄວາມຮັກຄືຄວາມຮັກທີ່ມີຕໍ່ປະຊາຊົນ, ຄວາມຮັກໃນເຫດຜົນອັນຖືກຕ້ອງເປັນທຳ. ຈຶ່ງເຮັດໃຫ້ສິ່ງດັ່ງກ່າວເຫລົ່ານີ້ໂຮມເຂົ້າເປັນຄວາມຮັກອັນດຽວກັນຢູ່ໃນແນວຄິດຂອງນັກປະຕິວັດຢ່າລືມອີກວ່າຜູ້ທີ່ຈະເປັນນັກປະຕິວັດຊັ້ນແນວໜ້າໄດ້ຕ້ອງແມ່ນຜູ້ມີມະນຸດສະທຳ, ມີຄວາມຍຸຕິທຳແລະສັດຈະທຳ. ເຂົາຕ້ອງຫລີກເວັ້ນການມົວເມົາແຕ່ນຳຫລັກການຫລາຍເກີນໄປຈົນເຮັດໃຫ້ເຂົາແຍກຕົວອອກຈາກມະຫາຊົນ. ເຮົາຕ້ອງຕໍ່ສູ້ທຸກວັນນາທີເພື່ອຄວາມຮັກໃນມະນຸດສະທຳຂອງເຮົາຈະກາຍເປັນຄວາມຊິນເຄີຍໃນການກະທຳຢ່າງຈິງຈັງ.

ເມື່ອເຮົາຈະອຸທິດຊີວິດທັງຊີວິດໃຫ້ກັບການປະຕິວັດແລ້ວກໍບໍ່ຄວນຈະເປັນຫ່ວງເປັນໃຍຢູ່ກັບບັນຫາຄອບຄົວຫລືສິດຜົນປະໂຫຍດສ່ວນຕົວ.

ທຸກຄົນຕ້ອງເຂົ້າໃຈວ່າ, ການຕໍ່ສູ້ບົນເສັ້ນທາງປະຕິວັດນັ້ນ ສິ່ງຕອບແທນສຳລັບໄຊຊະນະບໍ່ແມ່ນເງິນຕາຫລືຊັບສົມບັດມະຫາສານ, ແຕ່ມັນໝາຍເຖິງການປົດປ່ອຍມວນຊົນຈຳນວນຫລວງຫລາຍອອກຈາກການກົດຂີ່ຂູດຮີດຊຶ່ງກັນແລະກັນແລະຈະໄດ້ມີຊີວິດໃຫມ່ພາຍໃຕ້ສັງຄົມຂອງປະຊາຊົນຢ່າງສົມບູນ.

ພວກເຮົາຊາວສັງຄົມນິຍົມແມ່ນຜູ້ມີອິດສະຫລະພາບຫລາຍກວ່າເພິ່ນທັງນີ້ກໍເພາະພວກເຮົາຄົບຖ້ວນກວ່າເພິ່ນ. ພວກເຮົາຄົບຖ້ວນກວ່າເພິ່ນກໍເພາະພວກເຮົາມີອິດສະຫລະພາບຫລາຍກວ່າເພິ່ນ! ຄວາມສຸກສະບາຍໃນຊີວິດເປັນສິ່ງຈູງໃຈໃຫ້ຄົນມີຈິດໃຈອຸ່ນອຮູນແລະຄົງໝັ້ນໄດ້ເປັນຢ່າງດີແຕ່ຢ່າລືມວ່າຫາກນັກປະຕິວັດມີຄວາມສະໜຸກສຸກສະບາຍສຳລັບຊີວິດໃນສັງຄົມເທົ່າໃດ, ແນວຄິດຂອງເຂົາກໍຈະຄອນແຄນບໍ່ແນ່ນອນຍິ່ງຂຶ້ນ. ນັກປະຕິວັດຕ້ອງແມ່ນຜູ້ທີ່ມີອຸດົມຄະຕິກ້າແກ່ນແຫນ້ນໜາຮູວແລະອຸດົມຄະຕິຂອງເຂົານັ້ນຈະຕ້ອງງ່າຍໆກົງໄປກົງມາ, ບໍ່ສະຫລັບຊັບຊ້ອນແຕ່ຕ້ອງເປັນສິ່ງສາມາດເຮັດໃຫ້ເຫັນຈິງເຫັນຈັງ, ເປັນສິ່ງທີ່ແນ່ນອນແລະຈະແຈ້ງວ່າຄົນສາມາດເຮັດໃຫ້ບັນລຸຄວາມເປັນຈິງຂຶ້ນມາໄດ້. ແລ້ວພວກເຂົາກໍຈະບໍ່ລັງເລໃຈແມ່ນແຕ່ນ້ອຍດຽວທີ່ຈະເສຍສະຫລະຊີວິດເພື່ອໃຫ້ໄດ້ມັນມາ.

ເພື່ອຈະໄດ້ສິ່ງໃດສິ່ງໜຶ່ງມາແມ່ນພວກເຮົາຕ້ອງໄດ້ຍາດເອົາມາຈາກມືຂອງຜູ້ອື່ນ, ສະນັ້ນເຈດຈຳນົງຂອງພວກເຮົາກໍຕ້ອງປະກາດອອກມາຢ່າງເປີດແປນແລະຄວາມເວົ້າແຕ່ລະຄວາມກໍບໍ່ໃຫ້ຊ້ອນເງື່ອນແນວໃດແນວໜຶ່ງອັນຈະພາໃຫ້ການຕີຄວາມໝາຍຜິດພ້ຽນໄປເປັນອື່ນ. ຕົວຢ່າງຖ້າພວກເຮົາຢາກໄດ້ມາຊຶ່ງອຳນາດອະທິປະໄຕຂອງຊາດແນ່ນອນທີ່ສຸດພວກເຮົາກໍຕ້ອງໄດ້ຍາດເອົາຈາກເງື້ອມມືຂອງພວກນາຍທຶນຜູກຂາດ".

ທັງໝົດນີ້ລ້ວນແຕ່ແມ່ນແນວຄິດຈິດໃຈແມ່ນອຸດົມການອັນກ້າແກ່ນແຫນ້ນໜາຮູວ

ຊຶ່ງ ເຈ ເກວາຣາ ໄດ້ລະ ບາຍອອກມາໃນທີ່ນີ້ມັນອາດຈະເປັນທິດສະດີກໍແມ່ນຢູ່ແຕ່ກ່ອນຈະໄດ້ທິດສະດີອັນນີ້ມາກໍແມ່ນວ່າມັນໄດ້ຜ່ານການທົດສອບໃນພາກປະຕິບັດຕົວຈິງມາຫລາຍຄັ້ງຫລາຍໜົນ, ຫລາຍຜູ້ຫລາຍຄົນ, ຫລາຍທີ່ຫລາຍທາງມາແລ້ວ. ແລະກໍແມ່ນຍ້ອນຄວາມຖືກແທດເໝາະສົມ, ຄວາມສາມາດເຮັດໃຫ້ເປັນຈິງໄດ້ນັ້ນລະທິດສະດີຂອງ ເຈ ເກວາຣາ ເຫລົ່ານີ້ຈຶ່ງມີຄຸນຄ່າແລະມີຄວາມສຳຄັນຫລາຍທີ່ສຸດ ປະສົບການແລະບົດຮຽນຊຶ່ງປະກອບເປັນທິດສະດີອັນລ້ຳເລີດຂອງເຂົານັ້ນສ່ວນໃຫຍ່ກໍແມ່ນໄດ້ມາໂດຍຜ່ານການຕໍ່ສູ້ອັນລຳບາກກາກກຳລະອິດລະອ້ຣວຢູ່ໃນປ່າເຂົາລຳເນົາລຳເນົາໄພທີ່ສາຍພູມາເອສຕຣາ, ເວົ້າລວມກໍແມ່ນຈາກການປະຕິວັດກູບາ. ການປະຕິວັດຂອງປະເທດກູບາໄດ້ໃຫ້ການສຶກສາ, ໄດ້ຊຸບຫລໍ່ອຸດົມການຂອງເຂົາໃຫ້ມີນ້ຳໜັກມີຄວາມເດັດດ່ຽວໝັ້ນໜຽວຂຶ້ນມາ. ເຈ ໄດ້ອະທິບາຍແນວຄິດອຸດົມການຂອງການປະຕິວັດກູບາໄວ້ດັ່ງນີ້:

"ຫລາຍຄົນມີຂໍ້ຂັດແຍ່ງກັບພວກເຮົາເນື່ອງຈາກພວກເຮົາບໍ່ມີທິດສະດີປະຕິວັດ, ພວກເຂົາອ້າງເອົາຄຳເວົ້າຂອງ ເລນິນ ທີ່ວ່າ: "ຂະບວນການປະຕິວັດບໍ່ອາດສາມາດມີຂື້ນໄດ້ຖ້າຫາກປັດສະຈາກທິດສະດີປະຕິວັດ" ແຕ່ຖ້າຈະໃຫ້ເໝາະສົມທີ່ສຸດຕ້ອງເວົ້າວ່າ: ທິດສະດີປະຕິວັດອັນໝາຍເຖິງສັດຈະທຳທາງສັງຄົມນັ້ນແມ່ນຢູ່ເໜືອຫລັກສູດໃດໆທັງໝົດໝາຍຄວາມວ່າເພິ່ນສາມາດເຮັດການປະຕິວັດຖ້າເພິ່ນຫາກເຂົ້າໃຈແຈ້ງເຫດການຕົວຈິງ ທາງປະຫວັດສາດ ແລະຮູ້ຈັກໝູນໃຊ້ກຳລັງທີ່ເປັນຕົ້ນຕໍຂອງການປະຕິວັດເຖິງຈະບໍ່ມີທິດສະດີປະຕິວັດກໍຕາມ. ມັນກໍເປັນທຳມະດາທີ່ສຸດເມື່ອເຮົາມີຄວາມຮູ້ແຈ້ງແທງຊອດທາງທິດສະດີແລ້ວພວກເຮົາກໍຈະເຂົ້າໃຈບັນຫາດີກວ່າພ້ອມທັງຈະບໍ່ຕົກຢູ່ໃນຄວາມຫລົງຜິດທີ່ຮ້າຍແຮງໃນກໍລະນີທີ່ທິດສະດີຮຽນມານັ້ນຖືກແທດກັບຄວາມເປັນຈິງ. ເພິ່ນອາດຈະຖາມວ່າພວກເຮົາແມ່ນຊາວມາກຊິດຫລືບໍ່. ລັກສະນະຄຳຕອບຂອງພວກເຮົາຄົງບໍ່ແຕກຕ່າງຫຍັງກັບນັກຟີສິກຜູ້ຊຶ່ງຖືກຖາມວ່າເປັນລູກສິດຂອງນິວຕັນຫລືບໍ່ດັ່ງນັ້ນກໍແມ່ນນັກຊີວະວິທະຍາຊຶ່ງຖືກ

ຖາມວ່າເຂົາແມ່ນຜູ້ສືບທອດແນວຄິດຂອງປາສະເຕີຫລືບໍ່?ນັບຕັ້ງແຕ່ມີ*ກາຣ໌ລມາກຊ໌* ນັກປະຕິວັດມາ, ກໍມີກຸ່ມການເມືອງຊຶ່ງມີແນວຄິດກ້າແກ່ນແຫນ້ນຫນຽວຊຶ່ງອີງໃສ່ຄໍາສອນຂອງ*ມາກຊ໌ແລະອັງແກນ*, ນໍາເອົາມາຫມູນໃຊ້ວິວັດພັດທະນາໄປດັ່ງ*ເລນິນ*, *ເຫມົາເຈີຕຸງ*ແລະພວກເພິ່ນກໍໄດ້ເພີ່ມຄວາມຮັ່ງມີແກ່ທິດສະດີມາກຊິດຂຶ້ນຕື່ມ.

ສໍາລັບການປະຕິວັດກູບານີ້ແມ່ນກໍາເອົາຈຸດທີ່*ມາກຊ໌*ວາງວິທະຍາສາດເພື່ອກໍາເອົາປືນປະຕິວັດຂຶ້ນມາ. ມັນກໍາເອົາຈຸດນີ້ບໍ່ແມ່ນມີເຈດຈໍານົງແນວຄິດແກ້ແຕ່ປະການໃດ, ບໍ່ແມ່ນເພື່ອຕໍ່ສູ້ກັບສິ່ງທີ່ມາກຊ໌ວາງໄວ້ແລະກໍບໍ່ແມ່ນຈະສະຖາປານາ "*ມາກ*ອັນບໍລິສຸດອ້ອຍຊ້ອຍ", ມີພຽງແຕ່ວ່າຕາບເທົ່າທຸກວັນນີ້*ມາກຊ໌*ນັກວິທະຍາສາດວາງໂຕຢູ່ນອກເຫນືອຈາກປະຫວັດສາດ, ໄດ້ສຶກສາແລະທໍານາຍອະນາຄົດ. ຫລັງຈາກນັ້ນ, *ມາກຊ໌*ໃນຖານະນັກປະຕິວັດໃນປະຫວັດສາດກໍດໍາເນີນການຕໍ່ສູ້, ໃນຖານະນັກປະຕິວັດໃນພາກຕົວຈິງທີ່ດໍາເນີນການຕໍ່ສູ້ໄປນັ້ນແມ່ນພວກເຮົາພຽງແຕ່ປະຕິບັດຕາມກົດເກນຊຶ່ງ*ມາກຊ໌*ນັກວິທະຍາສາດສອນໄວ້ແລະພວກເຮົາກໍຍຶດຫມັ້ນໃນແນວທາງແຫ່ງການກະບົດອັນນີ້ເພື່ອຕໍ່ຕ້ານກັບກົງຈັກອໍານາດແບບເກົ່າໂດຍອີງໃສ່ກໍາລັງປະຊາຊົນແລະກໍວາງເປົ້າຫມາຍການຕໍ່ສູ້ຂອງພວກເຮົາໃສ່ຄວາມຢູ່ດີມີສຸກຂອງປະຊາຊົນ, ທັງຫມົດນັ້ນແມ່ນພວກເຮົາລ້ວນແຕ່ຫມູນໃຊ້ໃຫ້ຖືກຕ້ອງຕາມຄໍາສອນຂອງ*ມາກຊ໌*. ຫມາຍຄວາມວ່າຫລັກການຂອງ *ມາກຊ໌* ໄດ້ນອນຢູ່ໃນເຫດການຕ່າງໆຂອງການປະຕິວັດຂອງພວກເຮົາ". ເມື່ອຍ້ອນມາເຖິງຍຸດທະວິທີແລະຍຸດທະສາດຂອງການປະຕິວັດອາເມຣິກາລາຕິນນັ້ນ ເຈ ໄດ້ໃຫ້ຄວາມກະຈ່າງແຈ້ງວ່າ:

"ຍຸດທະວິທີແລະຍຸດທະສາດແມ່ນສ່ວນປະກອບຂັ້ນພື້ນຖານຂອງສິລະປະທາງສົງຄາມ, ແຕ່ຫາກວ່າສົງຄາມແລະການເມືອງແມ່ນຜູກຮັດເຂົ້າກັນດ້ວຍຜົນປະກົດລວມຄືການຊອກຫາເປົ້າຫມາຍຂັ້ນສຸດທ້າຍຊຶ່ງຖ້າບໍ່ແມ່ນການດັບສູນສັດຕູໃນການຕໍ່ສູ້ແລ້ວກໍຕ້ອງແມ່ນການຍຶດອໍານາດທາງການເມືອງ. ບໍ່ມີຈັກເທື່ອເປົ້າຫມາຍທາງຍຸດທະວິທີແລະຍຸດທະສາດຈະເປັນສິ່ງຕາຍຕົວ. ບາງຄັ້ງເປົ້າຫມາຍທາງຍຸດທະວິທີກໍ

ກາຍເປັນເຄື່ອງປະກອບທີ່ສຳຄັນຂອງຍຸດທະສາດແລະກົງກັນຂ້າມໃນກໍລະນີອື່ນອີກ ເປົ້າໝາຍທາງຍຸດທະສາດກໍກັບກາຍເປັນພຽງແຕ່ສ່ວນປະກອບດ້ານຍຸດທະວິທີ.

ການຍຶດອຳນາດແມ່ນເປົ້າໝາຍຍຸດທະສາດທີ່ຫລີກບໍ່ພົ້ນຂອງກຳລັງປະຕິວັດ ແລະທຸກສິ່ງທຸກຢ່າງທັງໝົດຕ້ອງຂື້ນຕໍ່ກົດເກນບົ່ງບອກໄວ້ອັນນີ້. ການຍຶດອຳນາດ ແມ່ນເປົ້າໝາຍທົ່ວໂລກຂອງກຳລັງປະຕິວັດ. ກຳໂຊກຊາຕາກຳຂອງອະນາຄົດ ແມ່ນສ່ວນປະກອບຍຸດທະສາດຂອງການປະຕິວັດ. ການທ່ອງຄຶງໃຫ້ກາລະເວລາຢຸດ ຢູ່ບ່ອນເກົ່າປັດຈຸບັນແມ່ນຍຸດທະສາດຊຶ່ງພວກປະຕິການໃນທົ່ວໂລກເຮັດຕໍ່ພວກເຮົາ ທັງນີ້ກໍເພາະພວກເຂົາຕົກຢູ່ໃນທ່າຮັບ.

ໃນສູ້ນີ້ທະວີບອາເມຣິກາແມ່ນພູເຂົາໄຟ. ມັນຍັງບໍ່ລະເບີດອອກມາແຕ່ມີຄວາມ ສັ່ນສະເທືອນໃຕ້ດິນຊີ້ບອກໃຫ້ຮູ້ລ່ວງໜ້າແລ້ວວ່າມັນຈະລະເບີດອອກມາ. ແນ່ນອນ ທີ່ສຸດພູໄຟອາເມຣິການີ້ແມ່ນບໍ່ໄດ້ຕັດຂາດຈາກຂະບວນການຕ່າງໆທີ່ພວມຟົດເດືອດ ໃນທົ່ວໂລກປັດຈຸບັນຊຶ່ງແມ່ນສະໄໝແຫ່ງການປະທະກັນລະຫວ່າງສອງກຳລັງທີ່ມີ ແນວຄິດປະຕິປັກກັນໃນປະຫວັດສາດ.

ທະວີບອາເມຣິກາ, ອັຟຣິກາ, ອາຊີແລະໂອເຊອານີແມ່ນພາກສ່ວນຊຶ່ງມີກຳລັງ ເສດຖະກິດຖືກທັບປຸ້ນຈາກການກະທຳຂອງຈັກກະພັດ. ແຕ່ຫາກວ່າການກະທຳໃນ ແຕ່ລະທະວີບນັ້ນແມ່ນມີລັກສະນະຕ່າງກັນ. ຮູບການກົດຂີ່ຂູດຮີດດ້ານເສດຖະກິດ ຂອງຈັກກະພັດ, ນັກລ່າເມືອງຂື້ນແບບເກົ່າແລະແບບໃໝ່ຊຶ່ງນຳມາໃຊ້ໂດຍປະເທດ ມະຫາອຳນາດນາຍທຶນເອີລົບນັ້ນ, ນອກຈາກຈະປະເຊີນໜ້າກັບຂະບວນການຕໍ່ສູ້ ປົດປ່ອຍຊາດໃນທະວີບອັຟຣິກາແລະໂອເຊອານີແລ້ວ, ຍັງປະທະກັບການແຊກຊຶມ ຂອງທຶນຈັກກະພັດອາເມຣິກາເໜືອຕື່ມອີກ.

ຖະແຫລງການສະບັບທີ່ສອງຂອງລາຮາວານ, ເວົ້າຕອນໜຶ່ງວ່າປັດຈຸບັນນີ້, ການປະຕິວັດແມ່ນຫລີກບໍ່ພົ້ນໃນຫລາຍປະເທດຂອງທະວີບອາເມຣິກາລາຕິນບໍ່ແມ່ນ ວ່າມັນເປັນໄປຕາມຄວາມຮຽກຮ້ອງຕ້ອງການຂອງໃຜຜູ້ໜຶ່ງແຕ່ມັນຫາກຂື້ນຢູ່ກັບສະ

ພາບໃນການກົດຂີ່ຂູດຮີດຊົ່ວຊາວອາເມຣິກາອາໄສຢູ່, ຂຶ້ນຢູ່ກັບຈິດສຳນຶກໃນການປະຕິວັດຂອງມວນຊົນ, ຂຶ້ນຢູ່ກັບວິກິດການທົ່ວໂລກຂອງຈັກກະພັດແລະຂຶ້ນຢູ່ກັບຂະບວນການຕໍ່ສູ້ຮອບຈັກກະວານຂອງພວກທີ່ຖືກກົດຂີ່. ພວກເຮົາສາມາດລົງທ້າຍດ້ວຍຄຳເວົ້າທີ່ວ່າຖ້າມີຄວາມຕັດສິນໃຈທີ່ຢາກໃຫ້ລະບົບສັງຄົມໃນທະວີບອາເມຣິກາຖືກຕ້ອງເປັນທຳແລ້ວແມ່ນພວກເຮົາຕ້ອງກຳປືນຕໍ່ສູ້. ມັນເປັນທຳມະດາຢູ່ວ່າກຳລັງທີ່ກ້າວໜ້ານັ້ນບໍ່ໄດ້ສະເພາະເຈາະຈົງໃສ່ແຕ່ການປະຕິວັດດ້ວຍອາວຸດ, ເຂົາຕ້ອງພະຍາຍາມຈົນສຸດຄວາມສາມາດເພື່ອບັນລຸເປົ້າໝາຍໂດຍສັນຕິວິທີ. ເພື່ອຈະປົດປ່ອຍຊາດຈາກແອກແຫ່ງການກົດຂີ່ຂູດຮີດໄດ້ແມ່ນຈະຕ້ອງໄດ້ຖອກເທສາຍທານແຫ່ງໂລຫິດ.

ເລືອດຂອງປະຊາຊົນແມ່ນມູນມໍລະດົກທີ່ປະເສີດເລີດລ້ຳທີ່ສຸດແຕ່ສົມຄວນທີ່ຈະໃຊ້ຈ່າຍມັນໄປໃນປັດຈຸບັນເພື່ອຈະໄດ້ມີມັນສາສົມໄວ້ໃນຄັງໃນອະນາຄົດ, ເຖິງແມ່ນການຕໍ່ສູ້ນັ້ນຈະເປັນໄປແບບສັນຕິວິທີຫລືບໍ່ກໍຕາມແຕ່ສິ່ງທີ່ແນ່ນອນນັ້ນລະແມ່ນວ່າຄູ່ຕໍ່ສູ້ທັງສອງຝ່າຍແມ່ນຈະຕ້ອງຢືນໜ້າຕໍ່ໜ້າໃນຖານະຜູ້ກົດຂີ່ຂູດຮີດກັບຜູ້ຖືກກົດຂີ່ຂູດຮີດ. ຕາບໃດຜູ້ກົດຂີ່ຂູດຮີດຍັງເຫລືອຢູ່ແມ່ນແຕ່ຄົນໜຶ່ງກໍຕາມ, ໄຟແລະເລືອດຍັງຈະຄົງມີຢູ່ຕໍ່ໄປ. ການຕໍ່ສູ້ລະຫວ່າງກຳລັງປະຊາຊົນແລະກຳລັງຣຸກຣານນັ້ນຕ້ອງແມ່ນການຕໍ່ສູ້ທີ່ເອົາເປັນເອົາຕາຍອີ່ຫລີ. ຢາກເຮັດໃຫ້ການປະຕິວັດຂອງທະວີບອາເມຣິກາລາຕິນເປັນຈິງຂຶ້ນມາໄດ້ນັ້ນເຮົາຈະເຮັດແນວໃດ? ຖະແຫລງການສະບັບທີ່ສອງຈາກ ລາຮາວານ ບອກວ່າ: ສິ່ງທີ່ຢູ່ເໜືອເສດຖະກິດໃນປະເທດຂອງເຮົາແມ່ນຄວາມດ້ອຍພັດທະນາທາງອຸດສາຫະກຳແລະກະເສດລັກສະນະສັກດີນາ. ນອກຈາກກຳມະກອນໃນຕົວເມືອງຈະພົບກັບເງື່ອນໄຂການເປັນຢູ່ທີ່ຫຍຸ້ງຍາກແລ້ວ, ປະຊາຊົນໃນຊົນນະບົດກໍຖືກກົດຂີ່ຂົ່ມເຫັງຄືກັນ. ແມ່ນສະພາບແວດລ້ອມນັ້ນລະທີ່ເຮັດໃຫ້ປະຊາຊົນໃນຊົນນະບົດຜູ້ທຸກຍາກປະກອບເປັນກຳລັງປະຕິວັດທີ່ເຂັ້ມແຂງ. ຈົ່ງຈື່ໃສ່ໃຈວ່າການຕໍ່ສູ້ກັບຈັກກະພັດນິຍົມນັ້ນ, ເຮົາບໍ່ອາດຈະຫລີກເວັ້ນຄວາມຮຸນແຮງໄດ້ເລີຍ

ຈົນກວ່າຈະກຳຈັດພວກມັນໃຫ້ດັບສູນສ້ຽງໄປ, ເພື່ອໄຊຊະນະທີ່ແທ້ຈິງກໍຈຳເປັນຕ້ອງຫລີກເວັ້ນໄຊຊະນະທີ່ໄຮ້ປະໂຫຍດ. ການຕໍ່ສູ້ຢູ່ຫ້ອງຖະຫນົນກັບລະເບີດນ້ຳຕາຫລືການເດີນຂະບວນປະທ້ວງນັ້ນບໍ່ແມ່ນວິທີທີ່ຖືກຕ້ອງເພື່ອຈະປົດປ່ອຍຕົວເອງອອກຈາກເງື້ອມມືຂອງຈັກກະພັດນິຍົມ.

ໄຊຊະນະໃນການຕໍ່ສູ້ກັບຈັກກະພັດນິຍົມນັ້ນ ບໍ່ແມ່ນສິ່ງທີ່ຍາກແສນຍາກຈົນເຫລືອວິໄສ, ຄວາມຈິງມັນເປັນ ພຽງພາບລວງຕາເທົ່ານັ້ນ, ຖ້າພວກເຮົາຫາກເລີ່ມລົງມືປະຕິບັດທັນທີດ້ວຍການຮີບໂຮມຄົນຈາກໜຶ່ງເປັນສອງ, ຈາກສອງເປັນສາມຕໍ່ໆໄປແລ້ວໃນທີ່ສຸດພວກເຮົາຕ້ອງປະສົບຜົນສຳເລັດ. ປັດຈຸບັນອາດເປັນໄລຍະແຫ່ງການຕໍ່ສູ້ແຕ່ອະນາຄົດແມ່ນໄຊຊະນະຂອງພວກເຮົາ.

ສົງຄາມປະຕິວັດຂອງປະຊາຊົນຈະຕ້ອງມີໄຊໃນບັ້ນປາຍຕາມທິດສະດີຂອງສົງຄາມປະຊາຊົນຊີ້ບອກວ່າ:

ຕໍ່ສູ້! ຫລົ້ມເຫລວ!
ຕໍ່ສູ້ອີກ! ຫລົ້ມເຫລວອີກ!
ຕໍ່ສູ້ອີກ! ຈົນກວ່າຈະໄດ້ຮັບໄຊຊະນະ!

ກ່ຽວກັບການສ້າງສັງຄົມນິຍົມນັ້ນ ເຈ ມີຄວາມຄິດຄວາມເຫັນຫລາຍສິ່ງຫລາຍແນວດັ່ງນີ້: "ການສ້າງສັງຄົມນິຍົມບໍ່ແມ່ນມີແຕ່ເຮັດວຽກເທົ່ານັ້ນແລະການສ້າງສັງຄົມນິຍົມກໍບໍ່ແມ່ນມີແຕ່ຍົກລະດັບການເມືອງເທົ່ານັ້ນແຕ່ຫາກແມ່ນທັງການເຮັດວຽກແລະການຍົກລະດັບແນວຄິດການເມືອງໄປພ້ອມໆກັນຫມາຍຄວາມວ່າ ເປັນການຜະລິດວັດຖຸສິ່ງຂອງແລະຊຸບຫລໍ່ແນວຄິດການເມືອງໄປພ້ອມດຽວ. ການອາສາສະຫມັກເຮັດວຽກບໍ່ໄດ້ເປັນພຽງປັດໄຈເພື່ອເພີ່ມພູນຜະລິດຜົນໃຫ້ໄດ້ຫລາຍຂຶ້ນເທົ່ານັ້ນ, ແຕ່ຍັງເປັນພະລັງກົດດັນຊຸກຍູ້ຄວາມກ້າວຫນ້າຂອງລະບອບສັງຄົມນິຍົມຕື່ມອີກ. ສຳລັບການດຳລົງຊີວິດໃນສັງຄົມອັນໃຫມ່ນີ້, ຂະບວນການປະຕິວັດພາຍໃນຈິດໃຈຫລືຈິດສຳນຶກທີ່ຖືກມອມເມົາຈາກລະບອບເກົ່ານັ້ນ, ບໍ່ພຽງແຕ່ອາໄສການສຳ

ມະນາ, ຮ່ຳ ຮຽນການເມືອງເທົ່ານັ້ນ. ຫາກຍັງຕ້ອງອາໄສການຕໍ່ສູ້ທີ່ເປັນລະບົບ ແລະມີເໜດຜົນຫລາຍກວ່ານັ້ນອີກ, ໂດຍປັດສະຈາກການແຍກບຸກຄົນອອກຈາກ ມວນຊົນ, ຮວມທັງການສ້າງຄວາມສອດຄ່ອງຕໍ່ການປ່ຽນແປງລະບົບກົນໄກຂອງ ສັງຄົມເກົ່າສູ່ສັງຄົມໃໝ່ອີກ, ຈຶ່ງຈະສາມາດເຮັດໃຫ້ຄົນມີສ່ວນປະກອບເຂົ້າໃນກົງ ຈັກໃໝ່ຂອງສັງຄົມດ້ວຍຄວາມຮູ້ສຶກຕື່ນຕົວຢ່າງຖືກຕ້ອງແທ້ຈິງ".

ກ່ຽວກັບຄວາມສຳຄັນຂອງກຳມະກອນໃນລະບອບສັງຄົມນິຍົມນັ້ນເຂົາເວົ້າວ່າ: "ພື້ນຖານຂອງການປະຕິວັດສັງຄົມນິຍົມພວກເຮົາແມ່ນຊົນຊັ້ນກຳມະກອນ. ເມື່ອປະ ຊາຊົນພວກເຮົາຫາກຕັດສິນໃຈທີ່ຈະກໍ່ສ້າງລະບອບສັງຄົມນິຍົມພາຍໃນປະເທດ ແລ້ວ, ສິ່ງທີ່ຂາດບໍ່ໄດ້ກໍແມ່ນການຜະເດັດການກຳມະຊີບ, ໝາຍຄວາມວ່າຜະເດັດ ການປະຊາທິປະໄຕຂອງຊົນຊັ້ນກຳມະກອນໃນທຸກງລະດັບຂອງວຽກງານ ພາຍໃນ ປະເທດ. ແຕ່ສຳຄັນທີ່ສຸດແມ່ນຕ້ອງຂະຈັດປັດເຂັ່ຍພະຍາດຮ້າຍແຮງຊະນິດໜຶ່ງຄື ລັດທິອາດຍາສິດ, ບົ່ງຄຳສັ່ງຈາກຫ້ອງການ, ຊຶ່ງສະແດງອອກໃນຮູບການຫ່າງເຫີນ ຈາກມວນຊົນ, ແບບລັດທິຄຳພີ, ແບບລັດທິພາກສ່ວນ. ສິ່ງເຫລົ່ານີ້ລະຈະພາໃຫ້ຊາວ ກຳມະກອນແບ່ງແຍກແຕກແຫງຈາກກົງຈັກການຜະລິດ. ອີກປະການໜຶ່ງການ ແຂ່ງຂັນກັນສ້າງຜົນງານຕ້ອງເປັນພື້ນຖານຕົ້ນຕໍໃນການຍົກລະດັບຄວາມຕື່ນຕົວ ແບບສັງຄົມນິຍົມ, ໃນຄວາມສຳເລັດດ້ານການຜະລິດຜົນແລະໃນການຜະລິດລວມ ໝົດ. ການແຂ່ງຂັນກັນສ້າງຜົນງານແມ່ນແນວໃດແທ້? ການແຂ່ງຂັນກັນສ້າງຜົນ ງານກໍແມ່ນການແຂ່ງຂັນທຳມະດາສາມັນອັນໜຶ່ງແຕ່ກໍຫາກແມ່ນການແຂ່ງຂັນທີ່ ມີເປົ້າໝາຍພິເສດກວ່າ. ຄືເປົ້າໝາຍໃນການເຮັດໃຫ້ສູນກາງແຮງງານທຸກບ່ອນ, ໂຮງຈັກໂຮງງານທຸກແຫ່ງ, ໜ່ວຍການຜະລິດທຸກໜ່ວຍເຂັ້ມແຂງສົມບູນຍິ່ງຂຶ້ນ ແລະເພື່ອເປັນການອອກໜ້າການກໍ່ສ້າງລະບອບສັງຄົມນິຍົມຕາມແນວທາງທີ່ດີ ກວ່າແລະໄວກວ່າ. ສຳຄັນທີ່ສຸດໃນການແຂ່ງຂັນສ້າງຜົນງານນີ້ແມ່ນເຮົາຕ້ອງຕອບ ແທນຜູ້ດີເດັ່ນແລະສິ່ງສຳຄັນອີກອັນໜຶ່ງກໍແມ່ນວ່າສິ່ງຕອບແທນນັ້ນຕ້ອງເປັນດ້ານ

ຈິດໃຈຄືຜູ້ດີເດັ່ນຕ້ອງໄດ້ຮັບຄຳຍ້ອງຍໍຊົມເຊີຍ. ຈະເຮັດໄດ້ແນວນັ້ນແມ່ນພວກເຮົາຕ້ອງສ້າງຄວາມຕື່ນຕົວທີ່ກະຕືລືລົ້ນຂອງເຂົາທີ່ຢາກອອກໜ້າໝູ່, ຢາກດີເດັ່ນກວ່າໝູ່ຕະຫລອດເວລາ, ສ່ວນການຕອບແທນດ້ວຍວັດຖຸນັ້ນກໍເຮັດໄດ້ໃນບາງກໍລະນີ, ບາງເງື່ອນໄຂ", ນອກເໜືອໄປຈາກນັ້ນແລ້ວພະນັກງານຂອງລັດກໍແມ່ນມີຄວາມສຳຄັນຫລາຍທີ່ສຸດ.

"ພະນັກງານແມ່ນບຸກຄົນທີ່ໄດ້ຮັບການເຝິກຝົນຫລໍ່ຫລອມດ້ານແນວຄິດການເມືອງຢ່າງພຽງພໍ, ເຂົາຕ້ອງສາມາດຕີຄວາມໝາຍຢ່າງຖືກຕ້ອງທຸກມະຕິຄຳສັ່ງແລະນະໂຍບາຍຂອງພັກແລະລັດ. ເວົ້າທາງດ້ານການຈັດຕັ້ງແລ້ວເຂົາຕ້ອງຮູ້ຈັກໃຊ້ປະຊາທິປະໄຕຮວມສູນ. ເຂົາຕ້ອງຖືວ່ານະໂຍບາຍຂອງພັກກໍຄືແມ່ນໜ້າທີ່ຂອງເຂົາເອງແລະກໍຄືໜ້າທີ່ຊຶ່ງເຂົາຈະຕ້ອງເຜີຍແຜ່ໃຫ້ມວນຊົນຮັບເອົານຳເຊັ່ນກັນ. ເຂົາຕ້ອງຮູ້ຈັກເບິ່ງແລະແກ້ໄຂບັນຫາຂອງ ປະຊາຊົນຢ່າງຖືກຕ້ອງເພື່ອໃຫ້ປະຊາຊົນຮູ້ແຈ້ງແທງຊອດທຸກບັນຫານັ້ນເພື່ອຄວາມກ້າວໜ້າຂອງການປະຕິວັດ. ເຂົາຕ້ອງເຜີຍແຜ່, ແກ້ໄຂ, ໂຕ້ຖຽງແລະພະເຊີນໜ້າທຸກບັນຫາໂດຍເອົາຊີວິດຂອງເຂົາເປັນປະກັນ. ເຂົາຕ້ອງເປັນຜູ້ມີຫົວຄິດປະດິດສ້າງ, ເປັນຜູ້ຮູ້ຈັກໝູນໃຊ້ທຸກມະຕິຄຳສັ່ງຢ່າງຖືກຕ້ອງຄ່ອງແຄ້ວແລະໄດ້ຜົນດີ. ການກໍ່ສ້າງພະນັກງານນີ້ແມ່ນເປັນໄປໃນຊີວິດປະຈຳວັນແຕ່ຖ້າຈະໃຫ້ເໝາະສົມທີ່ສຸດແລ້ວກໍຕ້ອງມີໂຮງຮຽນອົບຮົມແນວຄິດໂດຍມີຄູສອນຜູ້ດີເດັ່ນດ້ານແນວຄິດແລະການປະພຶດທີ່ເປັນແບບຢ່າງອັນດີ. ການຫລໍ່ຫລອມແນວຄິດການເມືອງນັ້ນບໍ່ແມ່ນວ່າມີແຕ່ຮ່ຳຮຽນທິດສະດີມາກສິດເທົ່ານັ້ນແຕ່ມັນຍັງຮຽກຮ້ອງໃຫ້ພະນັກງານທຸກຄົນມີຄວາມຮັບຜິດຊອບຕໍ່ການກະທຳທຸກຢ່າງຂອງເຂົາຕື່ມອີກ, ພ້ອມທັງຕ້ອງມີກົດລະບຽບເພື່ອບັງຄັບແລະລົງໂທດຜູ້ເຮັດຜິດ, ຜູ້ໃຊ້ສິດອຳນາດເກີນຂອບເຂດ. ເພື່ອຮັບປະກັນໄຊຊະນະແລະເພື່ອສ້າງຄວາມເຂັ້ມແຂງແກ່ການປະຕິວັດນັ້ນ, ມັນຮຽກຮ້ອງໃຫ້ພວກເຮົາມີພະນັກງານຫລາຍປະເພດ. ເຊັ່ນວ່າພະນັກງານການເມືອງ, ຜູ້ຊຶ່ງເປັນຜູ້ຊຸກຍູ້ທຸກການຈັດຕັ້ງມະຫາຊົນ, ເປັນຜູ້ຊີ້

ທາງໃຫ້ການຈັດຕັ້ງໄປຖືກປ່ອງລ່ອງຖືກແປວ, ຖືກທິດທາງນະໂຍບາຍຂອງພັກ. ນອກນັ້ນກໍມີພະນັກງານທະຫານ, ຊຶ່ງພວກເຮົາເລືອກເຟັ້ນມາຈາກນັກຮົບຜູ້ຜ່ານເສິກສົງຄາມມາແລ້ວ. ນອກຈາກນັ້ນອີກພວກເຮົາຕ້ອງມີພະນັກງານເສດຖະກິດຊຶ່ງທຸ່ມເທໃສ່ວຽກງານການວາງແຜນແລະການຈັດຕັ້ງທີ່ຫຍຸ້ງຍາກສັບສົນຂອງລັດສັງຄົມນິຍົມໃນໄລຍະແຫ່ງການກໍ່ສ້າງໃຫມ່. ຫນ້າທີ່ຂອງພະນັກງານນັ້ນບໍ່ວ່າຈະຢູ່ແນວຮົບດ້ານໃດກໍຕາມລ້ວນແຕ່ແມ່ນອັນດຽວກັນ. ພະນັກງານແມ່ນເຄື່ອງຈັກແມ່ໃນທຸກງານຈັກແນວຄິດຂອງພັກປະຕິວັດ ຄວາມຫມາຍຂອງ "ພະນັກງານນັ້ນແມ່ນຜູກພັນກັບຄຳວ່າເສຍສະຫລະຢ່າງແຫນ້ນແຟ້ນ. ໃນຖານະທີ່ເຂົາເປັນຜູ້ນຳພາດ້ານແນວຄິດເຂົາຕ້ອງເປັນແບບຢ່າງອັນດີ, ເປັນຜູ້ຊຸກຍູ້ມວນຊົນໃຫ້ເປັນແນວຫນ້າຂອງການປະຕິວັດໃຫ້ໄດ້". ໃນການປະຕິວັດປົດປ່ອຍຊາດກໍຄືການສ້າງຕັ້ງລະບອບສັງຄົມນິຍົມຊາວຫນຸ່ມແມ່ນກ້ອນກຳລັງແຮງແມ່ນແກ່ນສານສຳຄັນທີ່ສຸດ. ກ່ຽວກັບເລື່ອງນີ້ ເຈ ໄດ້ເວົ້າວ່າ:

"ເຍົາວະຊົນແມ່ນດິນດາກພື້ນຖານເພື່ອປັ້ນຜົນງານຂອງພວກເຮົາໃນນັ້ນພວກເຮົາໄດ້ເອົາຄວາມຫວັງຍິ່ງໃຫຍ່ຝາກໄວ້ກັບເຂົາແລະພວກເຮົາກໍໄດ້ກະກຽມເຂົາໄວ້ເປັນຜູ້ສືບທອດຍົກສູງຄັນທຸງປະຕິວັດຕໍ່ຈາກມືຂອງພວກເຮົາ. ຊາວຫນຸ່ມຕ້ອງເປັນແນວຫນ້າຂອງຂະບວນການ. ພວກເຂົາຕ້ອງເປັນຜູ້ທຳອິດທີ່ຈະເສຍສະຫລະຫາກວ່າການປະຕິວັດຮຽກຮ້ອງໂດຍບໍ່ຄຳນຶງວ່າການເສຍສະຫລະນັ້ນຈະມີມາໃນຮູບແບບໃດ. ພວກເຂົາຕ້ອງເປັນຜູ້ທຳອິດທີ່ອາສາສະຫມັກປ້ອງກັນຊາດ. ການຈັດຕັ້ງຂອງຊາວຫນຸ່ມແມ່ນຂໍກຸນແຈທີ່ໄຂຊ່ອງທາງທຸກມະຕິຄຳສັ່ງຈາກຂັ້ນເທິງ. ຫາກຂາດການຈັດຕັ້ງແລ້ວແມ່ນຫມົດຄວາມຫມາຍຊາວຫນຸ່ມ, ຊາວຫນຸ່ມແມ່ນເປັນຜູ້ມີຫົວຄິດປະດິດສ້າງ. ຊາວຫນຸ່ມທີ່ບໍ່ອອກຫົວຄິດປະດິດສ້າງນັ້ນແມ່ນບົກພ່ອງ, ແມ່ນຜິດປົກກະຕິ. ຊາວຫນຸ່ມຕ້ອງມອງເຫັນຈຸດອ່ອນຂອງຕົນແລ້ວນຳມາແກ້ໄຂປັບປຸງແປງເພື່ອໃຫ້ເຂັ້ມແຂງຂຶ້ນໄປ. ຊາວຫນຸ່ມຕ້ອງອອກແຮງສ້າງອະນາຄົດຊຶ່ງມີການອອກແຮງງານເປັນ



ສິ່ງທີ່ມີກຽດສູງທີ່ສຸດຂອງມະນຸດ, ມີການອອກແຮງງານເປັນຄວາມພໍໃຈຂອງມະນຸດ, ມີການອອກແຮງງານທີ່ໃຊ້ຫົວຄິດປະດິດສ້າງສຸດຂີດ, ແລະທຸກຄົນກໍເຫັນຄວາມສຳຄັນໃນການອອກແຮງງານຂອງຕົນແລະຂອງຄົນອື່ນໃນການຊຸກຍູ້ສັງຄົມໃຫ້ກ້າວໜ້າຍິ່ງໆຂຶ້ນໄປ. ຊາວໜຸ່ມໃນລະບອບສັງຄົມນິຍົມນີ້, ກ່ອນອື່ນໝົດຕ້ອງມີຄວາມພາກພູມໃຈທີ່ໄດ້ເປັນຊາວໜຸ່ມຄອມມູຍນິດ. ຂະນະດຽວກັນເຂົາຕ້ອງມີຄວາມຮູ້ສຶກເປັນຫ່ວງທີ່ສຸດຕໍ່ສັງຄົມຊຶ່ງພວກເຂົາພວມສ້າງສັນຢູ່. ອີກປະການໜຶ່ງ, ຊາວໜຸ່ມຄອມມູຍນິດຕ້ອງມີຄວາມຮູ້ສຶກອ່ອນໄຫວຕໍ່ທຸກບັນຫາ, ມີຄວາມຮູ້ສຶກຕໍ່ຄວາມອະຍຸຕິທຳເກີດຂຶ້ນ. ເຂົາຕ້ອງຄັດຄ້ານຢ່າງເດັດດ່ຽວຕໍ່ຄວາມອະຍຸຕິທຳ, ຊຶ່ງບໍ່ວ່າໃຜຈະເປັນຜູ້ເຮັດຂຶ້ນກໍຕາມ. ເຂົາຕ້ອງສໍ້ຖາມທຸກບັນຫາທີ່ບໍ່ເຂົ້າໃຈ. ໂອ້ລົມຖົກຖຽງສອບຖາມທຸກບັນຫາທີ່ບໍ່ແຈ້ງ. ປະກາດສົງຄາມກັບທຸກສິ່ງທີ່ມີລັກສະນະຕາຍຕົວແຂງກະດ້າງຍາມໃດເຂົາກໍຕ້ອງເປີດກວ້າງທົດລອງຫາສິ່ງໃໝ່ໆ,ເພື່ອສ້າງປະສົບການອັນດີເດັ່ນແກ່ສັງຄົມມະນຸດ. ຍາມໃດຊາວໜຸ່ມຄອມມູຍນິດຕ້ອງມີຄວາມຮູ້ສຶກຢາກຢູ່ແຖວໜ້າຕໍ່ສູ້ເພື່ອໃຫ້ໄດ້ເປັນຜູ້ອອກໜ້າແລະຮູ້ສຶກບໍ່ເປັນສຸກເມື່ອໄດ້ຢູ່ບ່ອນອື່ນນອກເໜືອຈາກບ່ອນນັ້ນ. ພວກຊາວໜຸ່ມໃນການຈັດຕັ້ງ, ຊາວໜຸ່ມຄອມມູຍນິດຕ້ອງເປັນແວ່ນແຍງ, ເປັນແບບຢ່າງແກ່ຊາວໜຸ່ມມະຫາຊົນ. ຜູ້ເປັນຄົນແທ້ຈິງນັ້ນຕ້ອງຮູ້ສຶກເຈັບປວດເມື່ອເຫັນໃຜຜູ້ໜຶ່ງຖືກຕົບໜ້າ".

ນັກການເມືອງທັງຫລາຍກໍຄື ເຈ ເກວາຣາ ເອງ, ລ້ວນແຕ່ຮັບຮູ້ຄວາມອຶດທຸກອຶດຍາກລຳບາກກາກກຳຂອງໄລຍະຂ້າມຜ່ານ. ເພາະລະບອບສັງຄົມນິຍົມບໍ່ແມ່ນສິ່ງອະພິນິຫານທີ່ນີລະມິດເອົາໄດ້, ການສ້າງສັນສັງຄົມນິຍົມກໍບໍ່ແມ່ນຈະເຮັດໄດ້ໃນມື້ໜຶ່ງຍາມດຽວ...

ພາຍຫລັງເສິກສົງຄາມ ... ທີ່ຍືດເຍື້ອຍາວນານມາຫລາຍປີພາຍຫລັງຊຶ່ງລົມພາຍຸໃຫຍ່ໄດ້ພັດຕີປີ້ປົ່ນມະຫາສຸດຢ່າງດຸເດືອດຮຸນແຮງ, ຄື້ນຟອງນ້ຳໄດ້ກະທົບກະແທກຝັ່ງກະຈາຍຕະຫລອດໄລຍະແຫ່ງການຕໍ່ສູ້... ມື້ຊຶ່ງລົມພາຍຸຈາງຫາຍໄປນັ້ນບໍ່ແມ່ນ

ມີຊື່ງຄື້ນສະໜຸດຈະສະງົບງຽບລົງໃນທັນທີທັນໃດ... ມັນຕ້ອງອາໄສເວລາອີກໄລຍະໜຶ່ງເພື່ອປັບປຸງຕົວເອງ... ກໍ່ສ້າງຕົວເອງ.

"ຈຳເປັນເຫລືອເກີນທີ່ປະເທດພາຍຫລັງການເຮັດເສີກສົງຄາມຈະຕ້ອງປະເຊີນກັບພາວະເງິນເຟີ້ສິນຄ້າຖີບຕົວຂຶ້ນສູງແລະການວ່າງງານເພາະສິ່ງເຫລົ່ານີ້ລ້ວນແມ່ນຜົນເສຍຫາຍຊຶ່ງຖືກຊັດທອດມາຈາກລະບອບເກົ່າ, ລັດຖະບານຊຸດເກົ່າຊຶ່ງມີໜີ້ສິນຖົມຫົວຢູ່ແລ້ວ. ຕົກມາຮອດການປ່ຽນລະບອບ, ປ່ຽນລັດຖະບານຊຸດໃໝ່ໝາກຜົນຈາກການສໍ້ໂກງ. ການຂູດຮີດຂອງພວກເຂົາໄດ້ແຕກດອກອອກໝາກມາປານດອກເຫັດໃນລະດູຝົນ. ການແກ້ໄຂເລື່ອງຫຍຸ້ງຍາກນີ້ແມ່ນມີສອງທາງອັນໝາຍເຖິງລັດຖະບານແລະປະຊາຊົນຊຶ່ງຄືປາກັບນ້ຳນັ້ນຕ້ອງເຂົ້າໃຈເຊິ່ງກັນແລະກັນ. ລັດຖະບານຕ້ອງຮີບຮ້ອນຕໍ່ວຽກງານກະສິກຳແລະອຸດສາຫະກຳ "ຫົວໃຈ" ຂອງປະເທດຊາດ. ລັດຕ້ອງສຽບຂາດຜະເດັດການກັບພວກເສດເຫລືອປະຕິການຜູ້ຫວັງທຳລາຍກົງຈັກການປົກຄອງໃໝ່. ສຳຄັນທີ່ສຸດປະຊາຊົນຕ້ອງຢູ່ກິນຢ່າງປະຢັດມັດທະຍັດໄປກ່ອນປະຊາຊົນທັງຫລາຍຕ້ອງອອກເຫື່ອເທແຮງເພີ່ມພູນຜະລິດຜົນສ້າງສາພັດທະນາປະເທດຊາດບ້ານເມືອງດ້ວຍຄວາມອົດທົນເສຍສະຫລະ, ດ້ວຍຈິດໃຈຮັກຊາດອັນດູດດື່ມ, ດ້ວຍຄວາມເຫັນກວ້າງມອງໄກຕໍ່ອານາຄົດຂອງພວກລູກຫລານຕໍ່ໄປ".

11

ນັກສາກົນນິຍົມ ຊຶນຊັ້ນກຳມາຊີບ

ຈິດໃຈທີ່ຮັກຄວາມເປັນທຳ, ຄວາມຄິດທີ່ຮັບຜິດຊອບຕໍ່ຄວາມທຸກຍາກປາກໝອງ, ຄວາມທາລຸນຊື່ງປະຊາຊົນຜູ້ທຸກຍາກແລະຖືກກົດຂີ່ຂູດຮີດບໍ່ວ່າເຊື້ອຊາດໃດຊົນຊາດໃດ, ບໍ່ວ່າແຫ່ງຫົນໃດໄດ້ຮັບນັ້ນເປັນພື້ນຖານແນວຄິດສາກົນກຳມາຊີບອັນຍິ່ງໃຫຍ່ຂອງ ເຈ ເກວາຣາ.

ຈິດໃຈອັນນັ້ນແມ່ນເຂົາໄດ້ສະແດງອອກມາດ້ວຍການປະພຶດປະຕິບັດໃນຊີວິດປະຈຳວັນຂອງເຂົາ. ໃນບົດຂຽນ, ບົດບັນທຶກ, ສູນທອນພົດຕ່າງໆຂອງເຂົາກໍແມ່ນຍຶດໝັ້ນຢູ່ໃນແນວຄິດອັນນີ້ແລະສຳຄັນຍິ່ງກວ່ານັ້ນແມ່ນເຂົາເອົາການຕໍ່ສູ້ດ້ວຍກຳລັງອາວຸດກັບຈັກກະພັດເປັນຄັນທຸງລັດທິສາກົນນິຍົມອັນດີເລີດຂອງເຂົາ.

"ບ່ອນໃດເຮົາສາມາດຕໍ່ສູ້ເພື່ອປົດປ່ອຍຜູ້ຖືກກົດຂູດຮີດບ່ອນນັ້ນລະຄືປິຕຸພູມຂອງເຮົາ, ໃນການຕໍ່ສູ້ຢ່າງເອົາເປັນເອົາຕາຍນັ້ນແມ່ນບໍ່ມີຊາຍແດນຂີດຂັ້ນ. ພວກເຮົາບໍ່ສາມາດຈະຢູ່ເສີຍເມີຍເມື່ອມີສິ່ງໃດສິ່ງໜຶ່ງເກີດຂື້ນໃນພາກສ່ວນໃດພາກສ່ວນໜຶ່ງຂອງໂລກ, ໄຊຊະນະຕໍ່ຈັກກະພັດຂອງປະເທດໃດກໍຕາມ, ແມ່ນໄຊຊະນະຂອງພວກເຮົາ, ເຊັ່ນດຽວກັບຄວາມປະລາໄຊຂອງປະເທດໃດກໍຕາມຕໍ່ຈັກກະພັດກໍແມ່ນຄວາມປະລາໄຊຂອງເຮົາທຸກຄົນ. ການປະຕິບັດລັດທິສາກົນກຳມາຊີບບໍ່ພຽງແຕ່ເປັນໜ້າທີ່ຂອງປະເທດທີ່ພວມຕໍ່ສູ້ເພື່ອອະນາຄົດອັນຮັບປະກັນໄດ້ເທົ່ານັ້ນ. ແຕ່ຍັງເປັນສິ່ງທີ່ຫລີກເວັ້ນບໍ່ໄດ້ຕື່ມອີກ.

ຖ້າຫາກຈັກກະພັດອາເມຣິກາຫລືຈັກກະພັດໂຕອື່ນໆ, ເພີ່ມທະວີການກົດຂີ່ປະເທດ

ນ້ອຍດ້ອຍພັດທະນາທັງຫລາຍ ຕັກກະວິທະຍາພື້ນຖານກໍແມ່ນຮຽກຮ້ອງໃຫ້ມີຄວາມສຳພັນລະຫວ່າງປະເທດດ້ອຍພັດທະນາແລະບັນດາປະ ເທດສັງຄົມນິຍົມ, ຖ້າມອງບໍ່ເຫັນຂໍ້ອ້າງທີ່ຈະສາມັກຄີກັນນັ້ນກໍໃຫ້ຄິດວ່າພວກເຮົາແມ່ນຕໍ່ສູ້ກັບສັດຕູໂຕດຽວກັນຄືຈັກກະພັດ.

ປະເທດທຸກຍາກຈະຫລຸດພົ້ນອອກຈາກສະພາບດ້ອຍພັດທະນາໄດ້ກໍມີແຕ່ລົບລ້າງການຍອມຈຳນົນ, ການຂື້ນຕໍ່ປະເທດຈັກກະພັດແລະຈະເຮັດໄດ້ແນວນັ້ນກໍມີແຕ່ຕໍ່ສູ້ດ້ວຍກຳລັງອາວຸດ. ເວົ້າແນວນັ້ນກໍບໍ່ໄດ້ຫມາຍຄວາມວ່າພວກເຮົາບໍ່ຕ້ອງການສັນຕິພາບດອກ, ແມ່ນຍ້ອນຢາກໄດ້ມາຊຶ່ງສັນຕິພາບອັນແທ້ຈິງຊົ່ວກາລະນານນັ້ນລະພວກເຮົາຈິ່ງຕໍ່ສູ້. ການຢູ່ຮ່ວມກັນໂດຍສັນຕິນັ້ນມັນກໍມີເງື່ອນໄຂແລະຂອບເຂດຂອງມັນ, ການທີ່ພວກເຮົາຍຶດຫມັ້ນ "ການຢູ່ຮ່ວມກັນໂດຍສັນຕິລະຫວ່າງປະເທດຕ່າງໆນັ້ນ" ມັນບໍ່ໄດ້ຮວມເຖິງການຢູ່ຮ່ວມກັນໂດຍສັນຕິລະຫວ່າງປະເທດທີ່ຂູດຮີດກັບປະເທດທີ່ຖືກຂູດຮີດຫລືລະຫວ່າງປະເທດທີ່ກົດຂີ່ກັບປະເທດທີ່ຖືກກົດຂີ່ນັ້ນດອກ. ລັດທິສາກົນກຳມາຊີບ. ນອກຈາກຈະເປັນສິ່ງສຳຄັນແລ້ວຍັງເປັນຫນ້າທີ່ຈຳເປັນຂອງການປະຕິວັດ! ຜູ້ທີ່ເປັນຄົນຢ່າງແທ້ຈິງນັ້ນຕ້ອງຮູ້ສຶກເຈັບປວດເມື່ອເຫັນໃຜຜູ້ຫນຶ່ງຖືກຕົບຫນ້າ!".

ເຈ ມີຄວາມຄິດທີ່ວ່າຊາຍແດນຂອງປະເທດຫນຶ່ງໆບໍ່ແມ່ນຢູ່ທີ່ເສັ້ນຂີດກັ້ນລະຫວ່າງປະເທດຫນຶ່ງກັບປະເທດ ຫນຶ່ງນັ້ນດອກ. ຊາຍແດນທີ່ແທ້ຈິງແມ່ນຂີດກັ້ນລະຫວ່າງປະເທດທີ່ກົດຂີ່ຂູດຮີດກັບປະເທດທີ່ຖືກກົດຂີ່ຂູດຮີດ, ລະຫວ່າງປະເທດຈັກກະພັດລ່າເມືອງຂື້ນກັບປະເທດດ້ອຍພັດທະນາແລະຫົວເມືອງຂື້ນຊຶ່ງຖືກບຸກລຸກຮຸກຮານ "ພວກເຮົາເວົ້າບໍ່ໄດ້ດອກວ່າປະຊາຊົນທີ່ກຳປືນຕໍ່ສູ້ໃນສູ້ມື້ນີ້ຈະໄດ້ຮັບການປົດປ່ອຍໃນເວລາໃດແຕ່ກົງກັນຂ້າມພວກເຮົາຮູ້ແຈ້ງແລະເຊື່ອຫມັ້ນວ່າໃນທີ່ສຸດອິດສະຫລະພາບຈະຕ້ອງເປັນຂອງພວກເຂົາທັງຫມົດ. ນອກນັ້ນພວກເຮົາຍັງຮູ້ອີກວ່າການຕໍ່ສູ້ຂອງພວກເຂົາຍິ່ງດຸເດືອດຮຸນແຮງ, ລະອຽດລະອໍຽວແລະເດັດດ່ຽວສ່ຳໃດໄລຍະເວ

Che & Mao (China)

ລາຊຶ່ງພວກເຂົາຈະໄດ້ຮັບການປົດປ່ອຍນັ້ນກໍຍິ່ງຈະສັ້ນເຂົ້າ. ລັກສະນະ, ວິທີການ, ແລະໄລຍະແຫ່ງການຕໍ່ສູ້ນັ້ນແມ່ນຂຶ້ນຢູ່ກັບກຳລັງຂອງມະຫາຊົນເປັນຜູ້ຕັດສິນ" .

ເຈ ມີຄວາມກຽດຊັງຈັກກະພັດນິຍົມຢ່າງເຂົ້າກະດູກດຳ, ຍາມໃດເຂົາກໍຮຽກຮ້ອງໃຫ້ປະເທດ, ປະຊາຊົນທີ່ຖືກກົດຂີ່ຂູດຮີດຈົມຈົມເລິກໃນຄວາມທຸກຍາກລຳບາກ, ສາມັກຄີກັນ, ກົມກຽວກັນລຸກຂຶ້ນຕໍ່ສູ້ກັບຈັກກະພັດ, ສັດຕູລວມຂອງຊາວໂລກທັງມວນ. ຍາມໃດເຂົາກໍຊົມເຊີຍສະໜັບສະໜູນການຕໍ່ສູ້ຂອງປະເທດຕ່າງໆບໍ່ວ່າລາວ, ກຳ ປູເຈຍ, ຫວຽດນາມກໍຄືປະເທດດ້ອຍພັດທະນາແລະຫົວເມືອງຂຶ້ນອື່ນໆໃນທະວີບອາຊີ, ອັຟຣິກາແລະອາເມຣິກາລາຕິນ. ນອກຈາກຄວາມສະໜັບສະໜູນຊຶ່ງສະແດງອອກໃນສູນທອນພົດ, ບົດຖະແຫລງການອື່ນໆແລ້ວເຂົາຍັງເອົາຊີວິດຂອງເຂົາຜູກມັດໄວ້ກັບການຕໍ່ສູ້ຂອງຫລາຍໆປະເທດເພື່ອທຳລາຍສັດຕູໂຕຮ້າຍກາດຂອງເຂົາເພື່ອສະແດງອອກຊຶ່ງຈິດໃຈສາກົນກຳມາຊີບອັນສູງສົ່ງ.

"ປະຊາຊົນທັງຫລາຍທີ່ດຳເນີນການຕໍ່ສູ້ກັບຈັກກະພັດນັ້ນກໍແມ່ນການຂຸດຂຸມຝັງ

ສິບຈັກກະພັດນັ້ນເອງ. ຍ້ອນແນວນັ້ນພວກເຂົາຈຶ່ງຄວນໄດ້ຮັບການອູ້ມຊູສະໜັບສະໜູນແລະຄຳຍ້ອງຍໍຊົມເຊີຍຈາກພວກເຮົາ. ຈະທຳການຕໍ່ສູ້ນັ້ນກໍຄວນຄິດໃຫ້ມັນຄັກ ແລະໃຫ້ມີຄວາມສຸກງອມເຖິງທີ່ສຸດແລ້ວເມື່ອລົງມືທຳການຕໍ່ສູ້ກໍໃຫ້ຕໍ່ສູ້ຈົນສຸດກົກສຸດປາຍ. ໄຊຊະນະກໍແມ່ນໃຫ້ເດັດຂາດຮອບດ້ານ".

ໃນລະຫວ່າງສັບປະດາສາມັກຄີກັບພາກໃຕ້ຫວຽດນາມໃນລະຫວ່າງເດືອນທັນວາ 1963 ນັ້ນ, ເຈ ໄດ້ກ່າວປາໄສຕອນໜຶ່ງວ່າ: "ເມື່ອພວກເຮົາຊູຄັນທຸງຂອງຂະບວນການປະຕິວັດພາກໃຕ້ຫວຽດນາມຂຶ້ນດ້ວຍຄວາມຕື່ນເຕັ້ນນັ້ນ, ບໍ່ແມ່ນວ່າຢາກສະແດງເຖິງແນວຄິດສາກົນກຳມາຊີບເທົ່ານັ້ນ, ແລະກໍບໍ່ແມ່ນຢາກສະແດງອອກຊຶ່ງຈິດໃຈອັນເປັນທຳຊຶ່ງການປະຕິວັດຫລໍ່ຫລອມໃຫ້ເທົ່ານັ້ນແຕ່ຫາກແມ່ນຍ້ອນວ່າແນວຮົບດ້ານນີ້ແມ່ນມີຄວາມສຳຄັນທີ່ສຸດສຳລັບ ທະວີບອາເມຣິກາພວກເຮົາທີ່ຫວຽດນາມນັ້ນ, ໄດ້ມີການກໍ່ສ້າງນັກຮົບທີ່ດີເດັ່ນຊຶ່ງມື້ໜຶ່ງອາດຈະເປັນແບບສະບັບສຳລັບນັກ

Che & Yuri Gagarine (USSR)

ຮົບພວກເຮົາ. ສະພາບແວດລ້ອມບອກໃຫ້ພວກເຮົາຮູ້ວ່າ: ເຖິງຈັກກະພັດຈະໃຊ້ການຮຸກຮານໃນຮູບໃດກໍຕາມ, ຜົນສຸດທ້າຍໄຊຊະນະຈະຕ້ອງເປັນຂອງຊາວພາກໃຕ້ຫວຽດນາມ ແລະການໂຮມຫວຽດນາມທັງສອງພາກເຂົ້າກັນ".

ທີ່ກອງປະຊຸມໃຫຍ່ຄັ້ງທີ່ 19 ຂອງສະຫະປະຊາຊາດນັ້ນ ເຈ ໄດ້ກ່າວສູນທອນພົດຕາງໜ້າປະເທດກູບາ ໃນວັນທີ່ 11 ທັນວາ 1964ເຂົາໄດ້ກ່າວປະນາມໂທດກຳຂອງຈັກກະພັດອາເມຣິກາຢ່າງໜັກໜ່ວງດຸເດືອດທີ່ສຸດ.

ເຂົາເວົ້າໃນຕອນໜຶ່ງວ່າ:

ເຮົາຂໍຢ້ຳຄືນອີກເທື່ອໜຶ່ງວ່າ: ສັນຕິພາບໃນໂລກຈະບໍ່ເກີດມີຢ່າງເດັດຂາດໃນເມື່ອວ່າການຢູ່ຮ່ວມກັນໂດຍສັນຕິນັ້ນຂຶ້ນຕໍ່ພົວພັນກັບປະເທດມະຫາອຳນາດ. ການຢູ່ຮ່ວມກັນໂດຍສັນຕິນັ້ນແມ່ນຕ້ອງປະຕິບັດກັບທຸກປະເທດໂດຍບໍ່ຈຳກັດຂະໜາດ, ບໍ່ຈຳກັດການພົວພັນທາງປະຫວັດສາດລະຫວ່າງປະເທດໃດປະເທດໜຶ່ງແລະກໍບໍ່ຈຳກັດວ່າຈະມີບັນຫາຂັດແຍ່ງໃນສະໄໝໃດສະໄໝໜຶ່ງລະຫວ່າງສອງປະເທດ. ປັດຈຸບັນນີ້ຫລັກການຢູ່ຮ່ວມກັນໂດຍສັນຕິຊຶ່ງພວກເຮົາໝາຍມຸ່ງນັ້ນແມ່ນຖືກລ່ວງລະເມີດຫລາຍຂໍ້ເຊັ່ນ: ກໍລະນີລາຊະອານາຈັກກຳປູເຈຍ, ປະເທດທີ່ມີນະໂຍບາຍເປັນກາງແລະບໍ່ເຂົ້າຂ້າງຈັກກະພັດອາເມຣິກາເຫນືອ, ກໍແມ່ນຖືກບຸກລຸກຮຸກຮານຢ່າງດຸເດືອດຈາກຖານທັບອາເມຣິກາເຫນືອໃນພາກໃຕ້ຫວຽດນາມ. ປະເທດລາວ, ປະເທດຊຶ່ງຖືກແບ່ງແຍກກໍເປັນເປົ້າໝາຍການແຊກແຊງຂອງຈັກກະພັດໃນທຸກຮູບແບບ, ປະຊາຊົນລາວຖືກຂ້າຕາຍຈາກລູກແຕກລູກບົມຈັກກະພັດນັບບໍ່ຖ້ວນ, ສັນຍາເຊີແນວຖືກລະເມີດ, ເຂດປົດປ່ອຍຕົກຢູ່ໃນພາວະອັນຕະລາຍທີ່ສຸດເພາະພວກຈັກກະພັດໝາຍຈະດັບສູນຊູ່ຍາມ.

ຫວຽດນາມພາກໃຕ້ຖືກແຊກແຊງ, ຕັ້ງເປັນຖານທີ່ໝັ້ນເພື່ອເຮັດເສິກກັບພາກເຫນືອ ໆລໆ. ຫລັກການຢູ່ຮ່ວມກັນໂດຍສັນຕິນີ້ແມ່ນຕ້ອງຕີຄວາມໝາຍອະທິບາຍຢ່າງຈະແຈ້ງບໍ່ແມ່ນຈະເວົ້າແບບຊ້ອນເງື່ອນຄືຜ່ານມາ.

ໃນຖານະທີ່ເປັນຊາວມາກສິດນັ້ນພວກເຮົາກຳນົດໄດ້ວ່າການຢູ່ຮ່ວມກັນໂດຍສັນຕິລະຫວ່າງປະເທດຕ່າງໆນັ້ນບໍ່ໄດ້ໝາຍເອົາວ່າການຢູ່ຮ່ວມກັນໂດຍສັນຕິລະຫວ່າງປະເທດທີ່ກົດຂີ່ຂູດຮີດກັບປະເທດທີ່ຖືກກົດຂີ່ຂູດຮີດ.

ພີແດນເຄີຍເວົ້າໄວ້ວ່າ: "ຕາບໃດປັດຊະຍາແຫ່ງການຢໍ່າຍີປີ້ປິ້ນບຸກລຸກຮຸກຮານຍັງບໍ່ຖືກທຳລາຍ, ຕາບນັ້ນປັດຊະຍາແຫ່ງການເຮັດເສິກສົງຄາມກໍບໍ່ສ້ຽງສຸດເຊັ່ນດຽວກັນ".

ນອກຈາກປັດຊະຍາແຫ່ງການບຸກລຸກຮຸກຮານຈະບໍ່ຖືກທຳລາຍແລ້ວມັນຍັງເຕີບໃຫຍ່ຂະຫຍາຍຕົວອອກໄປຕື່ມອີກ. ຮ້າຍແຮງໄປກວ່ານັ້ນຍັງມີຄົນຈຳພວກໜຶ່ງອ້າງເອົາຊື່ອົງການສະຫະປະຊາຊາດໄປສ້າງຄວາມວອດວາຍແກ່ປະຊາຊົນຊາວຄອງໂກ, ລວມທັງການຄາຕະກຳເຖື່ອນ*ລູມູມບາ*ຕື່ມອີກ. ທັງໝົດລ້ວນແຕ່ແມ່ນຍ້ອນມີເປື້ອນເລືອດຂອງຈັກກະພັດ. ຕ້ອງລ້າງແຄ້ນໃຫ້ການຄາຕະກຳໃນຄອງໂກຄັ້ງນີ້, ທຸກຄົນຜູ້ເປັນອິດສະຫລະໃນທົ່ວໂລກຈົ່ງກຽມລ້າງແຄ້ນໃຫ້ແກ່ການຄາຕະກຳໃນຄອງໂກຄັ້ງນີ້, ພວກເຮົາເຫັນພ້ອມກັບການລົດກຳລັງອາວຸດທັງໝົດໃນທົ່ວ ໂລກ. ໃນນັ້ນລວມທັງອາວຸດນິວເຄຼຍແລະການທົດລອງຕ່າງໆ. ຜືນແຜ່ນດິນອັນຄົບຖ້ວນຂອງແຕ່ລະປະເທດນັ້ນຕ້ອງຖືກເຄົາຣົບແລະຕ້ອງຢັບຢັ້ງມືທີ່ກຳປືນຂອງຈັກກະພັດ, ພຽງແຕ່ອາວຸດດ້ານຂໍ້ຜູກມັດທາງສັນຍານັ້ນກໍແມ່ນວ່າອັນຕະລາຍພໍແຮງແລ້ວ, ພວກເຮົາເຊື່ອວ່າຖ້າກອງປະຊຸມນີ້ບັນລຸເປົ້າໝາຍ, ມັນຈະເປັນກອງປະຊຸມທີ່ສຳຄັນທີ່ສຸດໃນປະຫວັດສາດສົງຄາມມະນຸດແຕ່ກໍໜ້າເສຍດາຍທີ່ບໍ່ມີທາງທີ່ຈະເປັນໄປໄດ້, ມັນຍາກຫລາຍເຕັມທີ. ອາດຈະເປັນໄປໄດ້ຖ້າຫາກມີສາທາລະນາລັດປະຊາຊົນຈີນເຂົ້າເປັນສະມາຊິກຂອງອົງການ.

ບັນຫາການແນະນຳເອົາສາທາລະນະລັດປະຊາຊົນຈີນເຂົ້າເປັນສະມາຊິກນີ້ຢ່າໄດ້ຖືວ່າເປັນການເຂົ້າມາໃໝ່ເລີຍ, ແຕ່ໃຫ້ຖືວ່າແມ່ນການມອບໝາຍສິດທິອັນຊອບທຳແກ່ສາທາລະນະລັດປະຊາຊົນຈີນສາດົກກວ່າ. ເກາະໃຕ້ຫວັນຂອງ *ຈຽງໄຄເຊັກ* ນັ້ນບໍ່ສົມຄວນຈະເປັນສະມາຊິກຂອງອົງການສະຫະປະຊາຊາດເລີຍ. ຜູ້ຕາງໜ້າຈອມປອມນີ້ແມ່ນຕ້ອງຂັບໄລ່ອອກໄປເຖີດ, ແລ້ວເອົາຕົວແທນທີ່ແທ້ຈິງຂອງປະຊາຊົນເຂົ້າມາ, ພວກເຮົາຕ້ອງການຢາກສ້າງສັງຄົມນິຍົມ, ພວກເຮົາປະກາດຄວາມສາມັກຄີກັບທຸກໆຄົນທີ່ຕໍ່ສູ້ເພື່ອສັນຕິພາບ, ພວກເຮົາຖືລັກສະນະຂອງບັນດາປະເທດບໍ່ຮ່ວມກຸ່ມເຖິງແມ່ນພວກເຮົາຈະເປັນມາກສິດ-ເລນິນນິດກໍຕາມ, ທັງນີ້ກໍເພາະພວກບໍ່ຮ່ວມກຸ່ມກໍຕໍ່ສູ້ກັບພວກເຮົາ. ພວກເຮົາຕ້ອງການສັນຕິພາບ, ພວກເຮົາຕ້ອງການ

ການດຳລົງຊີວິດທີ່ດີກວ່າເພື່ອປະຊາຊົນພວກເຮົາ, ຍ້ອນແນວນັ້ນພວກເຮົາຈຶ່ງບໍ່ສາມາດສະໜອງຄວາມຕ້ອງການອັນຊົ່ວຊ້າປ່າເຖື່ອນຂອງຈັກກະພັດອາເມຣິກາໄດ້. ພວກເຮົາຮູ້ດີວ່າມັນຢາກໃຫ້ພວກເຮົາຊື້ສັນຕິພາບອັນນີ້ດ້ວຍລາຄາແພງທີ່ສຸດ. ພວກເຮົາຂໍຕອບວ່າລາຄາອັນນັ້ນເຖິງຈະສູງປານໃດມັນກໍບໍ່ເໜືອໄປກວ່າລາຄາຂອງກຽດແລະສັກສີດອກ.

ກູບາຂໍປະກາດອີກເທື່ອໜຶ່ງເຖິງສິດທິທີ່ຈະມີອາວຸດຈຳເປັນໃນດິນແດນຂອງມັນແລະມັນກໍບໍ່ຮັບຮູ້ໃຫ້ອຳນາດໃດໆໃນແຜ່ນດິນອັນນີ້ເຖິງວ່າອຳນາດນັ້ນຈະໃຫຍ່ຫລືນ້ອຍເທົ່າໃດກໍຕາມທີ່ຈະເຂົ້າມາລ່ວງລ້ຳເຂດນ້ຳແດນດິນແລະນ່ານຟ້າຂອງມັນ.

ພວກເຮົາເຂົ້າໃຈດີວ່າໃນປັດຈຸບັນທັນດ່ວນນີ້ກອງປະຊຸມຍ່ອມບໍ່ສາມາດຕອບສະໜອງຄຳຮຽກຮ້ອງໃດໆໄດ້ແຕ່ກໍໃຫ້ຮູ້ແຈ້ງວ່າລັດຖະບານສະຫະລັດອາເມຣິກາກໍບໍ່ແມ່ນຜູ້ປົກປັກຮັກສາສັນຕິພາບໄດ້ຄືກັນ, ມັນຍັງສືບຕໍ່ກົດຂີ່ຂູດຮີດປະຊາຊົນທັງຫລາຍໃນໂລກພ້ອມທັງປະຊາຊົນຈຳນວນຫລວງຫລາຍໃນປະເທດມັນເອງ. ບັນດາຜູ້ແທນທັງຫລາຍ, ກູບາ, ເປັນອິດສະຫລະ, ເປັນເຈົ້າຕົນເອງ, ບໍ່ມີສາຍໂສ້ອັນໃດຜູກກູບາໄວ້ກັບຜູ້ອື່ນ, ດິນແດນກູບາເປັນອິດສະຫລະຈາກການລົງທຶນຂອງຕ່າງຊາດ. ບໍ່ມີນາຍເໜືອຫົວຜູ້ໃດຈະສາມາດຫັນປ່ຽນທິດທາງການເມືອງຂອງມັນ, ກູບາສາມາດແຫງນໜ້າເວົ້າຢ່າງສະຫງ່າຜ່າເຜີຍຕໍ່ກອງປະຊຸມ ແລະສະແດງອອກຊຶ່ງຄວາມເປັນຈິງຕາມສັນຍາຊຶ່ງເຂົາໃສ່ໃຫ້ວ່າ: "ດິນແດນອິດສະຫລະຂອງທະວີບອາເມ

Che & Pan America forum

ຣິກາ" . ຕົວຢ່າງຂອງພວກເຮົາຈະແຕກດອກອອກໜາກລາມໄປທົ່ວທະວີບດັ່ງທີ່ມັນປະກົດໃຫ້ເຫັນໃນປະເທດກວາເຕມາລາ, ໂກລົມບີແລະທີ່ເວເນຊູເອນລາ. ສົມກັບຄຳຖະແຫລງການສະບັບທີສອງຈາກລາຮາວານທີ່ເວົ້າວ່າ: "ບໍ່ມີປະຊາຊົນພວກໃດທີ່ເປັນຄົນອ່ອນແອຢູ່ອາເມຣິກາລາຕິນນີ້, ທັງນີ້ກໍເພາະພວກເຂົາປະກອບສ່ວນເຂົ້າໃນຄອບຄົວໃຫຍ່ຊຶ່ງມີລູກເຖິງສອງຮ້ອຍລ້ານຄົນຊຶ່ງປະສົບກັບຄວາມທຸກຍາກອັນດຽວກັນ, ມີຄວາມຮູ້ສຶກອັນດຽວກັນ, ມີສັດຕູໂຕດຽວກັນ, ມີອະນາຄົດສົດໃສອັນດຽວກັນແລະໄດ້ຮັບຄວາມສາມັກຄີຈາກທຸກຄົນທີ່ສຸດຈະຫລີດໃນໂລກອັນນີ້".

ພາຍຫລັງການກ່າວສູນທອນພິດອັນດຸເດືອດຮຸນແຮງທີ່ສຸດດັ່ງນີ້, ກໍມີຜູ້ແທນຂອງປະເທດໂກສະຕາຣິກາ, ນິກາຣາກວາ, ເວເນຊູເອນລາ, ໂກລົມບີ, ປານາມາ, ແລະສະຫະລັດອາເມຣິກາຂຶ້ນໂຕ້ຕອບ, ຕ້ານຍັນ, ກ່າວປະນາມກູບາວ່າແຊກແຊງກິດຈະການພາຍໃນປະເທດອື່ນ. ເຈ ເກວາຣາ ຈຶ່ງຖືກອະນຸຍາດໃຫ້ຂຶ້ນແກ້ການປະນາມອີກ ເທື່ອໃຫມ່ເຂົາເວົ້າຕອນຫນຶ່ງວ່າ:

"ພວກເຮົາມີຄວາມເຊື່ອໝັ້ນຕາຍໃຈວ່າການປະຕິວັດບໍ່ແມ່ນສິນຄ້າທີ່ຈະສົ່ງອອກນອກປະເທດໄດ້ . ການປະຕິວັດທັງຫລາຍແມ່ນເກີດມີມາຈາກຖັນແຖວປະຊາຊົນ. ການປະຕິວັດລະເບີດຂື້ນເມື່ອມີການກົດຂີ່ຂູດຮີດຂອງລັດຖະບານ. ເຊັ່ນກໍລະນີຂອງລັດຖະບານໂກສະຕາຣິກາ, ນິກາຣາກວາ, ປານາມາແລະເວເນຊູເອນລາທີ່ເຮັດກັບປະຊາຊົນພວກເຂົາ. ເມື່ອການປະຕິວັດເກີດຂື້ນ, ພວກເຮົາກໍສາມາດຊ່ອຍເຫລືອເຂົາ, ໂດຍສະເພາະຢ່າງຍິ່ງກໍແມ່ນດ້ານຈິດໃຈ. ເວົ້າແນວນັ້ນກໍບໍ່ແມ່ນວ່າພວກເຮົາອ້າງເຫດຜົນໃຫ້ໂຕຖືກຕ້ອງຕໍ່ຫນ້າກອງປະຊຸມອັນນີ້ດອກ, ພຽງແຕ່ວ່າມັນແມ່ນເຫດການເປັນວິທະຍາສາດຊຶ່ງເຂົາຮັບຮູ້ກັນມາດົນແລ້ວ".

ຕໍ່ຄຳກ່າວຫາຂອງບັນດາປະເທດເຫລົ່ານັ້ນກ່ຽວກັບເຊື້ອຊາດຂອງ ເຈ ເຂົາຈຶ່ງແກ້ໄປວ່າ: "ແນ່ນອນທີ່ສຸດ, ມັນເປັນໄປໄດ້ທີ່ສຳນຽງຂອງເຮົາຈະເປັນຊາວອາກຊັງຕິນ ເຮົາເກີດຢູ່ປະເທດອາກຊັງຕິນ, ມັນບໍ່ແມ່ນຄວາມລັບຫຍັງຫມົດ, ເຮົາເປັນຊາວກູ

Che & Ben Bella (Algerian Leader)

ບາແລະຊາວອາກຊັງຕິນພ້ອມດຽວກັນ ແລະຖ້າຫາກວ່າເຂດແຄ້ວນແດນດິນທີ່ສວຍສົດງົດງາມຂອງອາເມຣິກາລາຕິນບໍ່ຫວງຫ້າມ, ເຮົາກໍຈະມີຄວາມຮູ້ສຶກວ່າໂຕເອງເປັນຜູ້ຮັກຊາດຂອງທະວີບອາເມຣິກາລາຕິນອີກຊ້ຳ, ເຮົາຢາກເປັນຜູ້ທີ່ຮັກຊາດທີ່ສຸດຂອງປະເທດໃດກໍໄດ້ໃນທະວີບອາເມຣິກາລາຕິນ. ເມື່ອໂອກາດອຳນວຍແລ້ວ, ເຮົາເອງກໍພ້ອມທີ່ຈະສະຫລະຊີວິດເພື່ອປົດປ່ອຍປະເທດໃດປະເທດໜຶ່ງໃນອາເມຣິກາລາຕິນໂດຍບໍ່ຂໍສິ່ງໃດສິ່ງໜຶ່ງຈາກໃຜທັງນັ້ນ, ບໍ່ຮຽກຮ້ອງເອົາຫຍັງໝົດບໍ່ຂູດຮີດໃຜໝົດ".

ການຕໍ່ຕ້ານຈັກກະພັດນິຍົມແມ່ນລົມຫາຍໃຈຂອງ ເຈ ເກວາຣາ, ບໍ່ວ່າຢູ່ໃນບົດຂຽນ, ບົດໂອ້ລົມຫລືສູນທອນພົດ, ຍາມໃດເຂົາກໍປະກາດເປັນສັດຕູ,ປະກາດດັບສູນຈັກກະພັດນິຍົມຢ່າງເປີດແປນຈະແຈ້ງ, ມີຫລາຍຕອນໃນສູນທອນພົດຊຶ່ງກ່າວໃນກອງປະຊຸມທີ່ປະເທດອານເຊຣີ, ຊຶ່ງເຂົາປະນາມຈັກກະພັດອາເມຣິກາຢ່າງເຈັບແສບທີ່ສຸດ:

"ຕາບໃດຈັກກະພັດນິຍົມຍັງມີຢູ່ມັນກໍໝາຍເຖິງອຳນາດໃນການຂົ່ມຂູ່ປະເທດອື່ນກໍຍັງມີຢູ່ຄືກັນ. ອຳນາດຂົ່ມຂູ່ອັນນີ້ມີຊື່ວ່າ: "ລັດທິລ່າຫົວເມືອງຂຶ້ນແບບໃໝ່" ລັດທິລ່າຫົວເມືອງຂຶ້ນແບບໃໝ່ນີ້ຖືກຳເນີດທຳອິດ ແມ່ນໃນອາເມຣິກາໃຕ້ຕໍ່ມາກໍລາມໄປທົ່ວທະວີບ ແລະຂະຫຍາຍຕົວແຊກຊຶມເຂົ້າໄປໃນທະວີບອາຊີແລະອັຟຣິກາ. ຮູບການແຊກຊຶມແລະການແຜ່ຂະຫຍາຍຕົວຂອງມັນນັ້ນຜິດແປກແຕກຕ່າງກັນໄປ. ແບບທີໜຶ່ງນັ້ນແມ່ນລັກສະນະຮຸນແຮງສົດໆເຊັ່ນພວກເຂົາເຮັດໃນປະເທດຄອງໂກ

Che & Tito (Yougoslavia)

ອີກແບບໜຶ່ງແມ່ນລຶກລັບ, ແຊກຊຶມເຂົ້າໄປໃນບັນດາປະເທດທີ່ປົດປ່ອຍໂດຍເອົາການເມືອງເປັນອາວຸດແລະຮັກສາໄວ້ຊຶ່ງພວກນາຍທຶນແຫ່ງຊາດ, ພ້ອມທັງພວກນາຍທຶນຂູດຮີດກໍມີການເກາະກິນນຳຜົນປະໂຫຍດທີ່ກ່ຽວພັນເຖິງການຜູກຂາດການປົດປ່ອຍລັກສະນະນີ້ແມ່ນເທົ່າກັບເສີມສ້າງຄືງໄວ້ຊຶ່ງການກົດຂີ່ຂູດຮີດແລະການຄວບຄຸມບີບເຕັງຂອງຈັກກະພັດ".

ກ່ຽວກັບການຜະລິດອາວຸດເພື່ອເປັນສິນຄ້າສ້າງຮັ່ງຄູນມີນັ້ນ ເຈ ເຫັນວ່າບໍ່ຖືກຕ້ອງທີ່ສຸດ, ດັ່ງຕອນໜຶ່ງໃນສູນທອນພົດນັ້ນເຂົາເວົ້າວ່າ: "ໃນໂລກຂອງພວກເຮົານີ້ອາວຸດປືນບໍ່ສົມຄວນຈະເປັນສິນຄ້າ. ມັນສົມຄວນທີ່ຈະສົ່ງໃຫ້ຜູ້ທີ່ຕ້ອງການມີໄວ້ເພື່ອປົກປັກຮັກສາສັນຕິພາບຂອງເຂົາຕາມຈຳນວນທີ່ຈຳເປັນແລະເທົ່າທີ່ເປັນໄປໄດ້. ແມ່ນອີງໃສ່ຈິດໃຈສາກົນກຳມາຊີບອັນນີ້ລະສະຫະພາບໂຊວຽດແລະສາທາລະນະລັດປະຊາຊົນຈີນຈຶ່ງຊີດຊ່ອຍດ້ານອາວຸດແກ່ພວກເຮົາ. ເພື່ອຕອບໂຕ້ການແຊກແຊງຂອງຈັກກະພັດອາເມຣິກາຕໍ່ຫວຽດນາມຫລືຄອງໂກນັ້ນ, ສົມຄວນທີ່ສຸດທີ່ຈະຕ້ອງສົ່ງອຸປະກອນສົງຄາມຊຶ່ງປະເທດອ້າຍນ້ອງຕ້ອງການແລະໂດຍສົ່ງຄວາມສາມັກຄີຂອງພວກເຮົາໄປນຳໂດຍບໍ່ມີເງື່ອນໄຂ".

ໃນສູນທອນພົດອັນນີ້ເຂົາກໍນ້ອມທ້າຍດ້ວຍຄຳເວົ້າທີ່ວ່າ: "ເຮົາຂໍລື້ມຄືນວ່າປະຊາຊົນຂອງຫລາຍປະເທດພວມຖອກເລືອດເນື້ອເຫື່ອໄຄເພື່ອໃຫ້ໄດ້ມາຊຶ່ງສິດອຳນາດອະທິປະໄຕ, ໃນທີ່ນີ້ກໍຄືໃນກອງປະຊຸມອື່ນໆຊຶ່ງບໍ່ວ່າຈະໄຂຂຶ້ນຢູ່ໃສ, ເຮົາຂໍສະແດງຄວາມຄຳນັບຕໍ່ປະຊາຊົນຜູ້ຫ້າວຫັນຂອງຫວຽດນາມ, ລາວ, ກິເນ, ອັຟຣິກາໃຕ້, ປາແລສະຕິນ, ຂໍສະແດງຄວາມຄຳນັບຕໍ່ປະເທດທີ່ຖືກກົດຂີ່ຜູ້ພວມດຳເນີນການຕໍ່ສູ້,

Che & Venezuela President

ພວກເຮົາຈະປ່າວປະກາດໃຫ້ເຂົາໄດ້ຍິນຄຳເວົ້າຖາມມິດຂອງພວກເຮົາ, ພວກເຮົາຈະເດ່ມືໄປຊິດຊ່ອຍແລະໃຫ້ກຳລັງໃຈແກ່ປະຊາຊົນອ້າຍນ້ອງໃນເວເນຊູເອນລາ, ກວາເຕມາລາແລະໂກລົມບີຊຶ່ງພວມດຳເນີນການຕໍ່ສູ້ໃນສູ່ມື້ນີ້ແລະຍາມໃດພວກເຂົາກໍບອກວ່າ "ບໍ່!" ກັບພວກຈັກກະພັດ!".

ໃນບົດຄວາມທີ່ມີຊື່ວ່າ: "ສ້າງຫວຽດນາມທີ່ສອງ, ສາມ ໆລໆ" ເຂົາໄດ້ຢ້ຳເຖິງແນວຄິດສາກົນກຳມາຊີບໄວ້ອີກວ່າ: "ສົມຄວນທີ່ສຸດທີ່ຈະຕ້ອງເຮັດໃຫ້ລັດທິສາກົນກຳມາຊີບອັນແທ້ຈິງນັ້ນແຜ່ຜາຍຂະຫຍາຍຕົວຂຶ້ນເລື້ອຍໆ, ພ້ອມດ້ວຍກອງທັບກຳມາຊີບສາກົນອີກດ້ວຍ. ກອງທັບນີ້ແມ່ນພ້ອມທີ່ຈະທຳການຕໍ່ສູ້ພາຍໃຕ້ຄັນທຸງຊຶ່ງເປັນເຫດຜົນອັນຖືກຕ້ອງເພື່ອໄຖ່ໂທດໃຫ້ກັບສັງຄົມມະນຸດ, ພ້ອມທັງພູມໃຈທີ່ຈະເສຍສະຫລະພາຍໃຕ້ສີສັນວັນນະຂອງປະເທດຫວຽດນາມ, ລາວ, ເວເນຊູເອນລາ, ກວາເຕມາລາ, ກີເນ, ໂບລີວີ, ໂກລົມບີ, ບະເຣຊີນຫລືປະເທດອື່ນໆ".



Ché & Nasser (Egypte)

In a writing career spanning more than 30 years, Mr. Bounthanong Xomxayphol has published 15 books, including short stories, poems, and novels many of which have been translated into Thai, Japanese, French and English. His passion in writing has also inspired him to help the establishment of the young writers club, Lao writers association, and magazines such as Noum Lao, Vannasin, Maeying lao, Siangkhen, Vientiane business social and Visiting Muong Lao. "With two hands and one brain, sacred gifts from the earth and sky, i found a modest happinees in daily reading, writing and traveling", said Mr. Bounthanong. "If there is only one wish in life, i'd like to tell stories, contribute useful ideas and knowledge to society and mankind".

"ໂດຍໄດ້ຮັບຜົນສະທ້ອນຈາກແບບຢ່າງຂອງ ເຈ ເກວາຣາ ບັນດານາຍແພດ ກູບາ ໄດ້ຜ່ານຜ່າອຸປະສັກຮ້ອຍແປດພັນປະການເພື່ອຮັບໃຊ້ປະຊາຊົນແລະການປະຕິວັດລາວຢ່າງຈິງຮັກພັກດີ"

ປະທານໄກສອນ ພົມວິຫານ